ຊຸດມໍລະດົກວຽງຈັນ

ໂຫຣາສາດລາວ

ພາກຕົ້ນ

ໂດຍ ເຈົ້າເພັຊຣາຊ ຣັຕນະວົງສາ

ແປ ແລະຮຽບຮຽງ ໂດຍ
ມະຫາ ສີລາ ວີຣະວົງສ໌

ພາກເສີມ ໂດຍ
ຄໍາສິງ ໂງ່ນວໍຣະຣາທ

ອຸປະຖໍາໂດຍ

ຊຸດມໍລະດົກວຽງຈັນ

ໂຫຣາສາດລາວ

ພາກຕົ້ນ

ໂດຍ ເຈົ້າເພັຊຣາຊ ຣັຕນະວົງສາ

ແປ ແລະຮຽບຮຽງ ໂດຍ ມະຫາ ສີລາ ວີຣະວົງສ໌

ພາກເສີມ: ການທໍາ ອັດຕາຖະເຫຼີງສົກ

ໂດຍ ຄໍາສິງ ໂງ່ນວໍຣະຣາທ

ຈັດພິມໂດຍ

ດອກເກດ
DokkeD

ສໍານັກພິມ ດອກເກດ

ອຸປະຖໍາໂດຍ

ຄ.ພ.ພ

ຊຸດມໍລະດົກວຽງຈັນ

ໂຫຣາສາດລາວ ພາກຕົ້ນ
ໂດຍ ເຈົ້າເພັຊຣາຊ ຣັຕນະວົງສາ ຮຽບຮຽງໂດຍ ສິລາ ວີຣະວົງສ໌
ບັນນາທິການ ກວດແກ້ ໂດຍ ຄຳສິງ ໂງ່ນວໍຣະຣາດ

ພິມຄັ້ງທີ 1
ຈັດພິມໂດຍ ສຳນັກພິມ ດອກເກດ
ຮ່ວມກັບ ໂຄງການພຸດທະສາສະໜາ ເພື່ອການພັດທະນາ (ຄ.ພ.ພ.)

ພິມທີ່ ພະໄຊ ກຣາບຟິກ
ຕາມທະບຽນ: 302 ພຈ 09112010
ຈຳນວນ: 2000 ຫົວ
ນະຄອນຫຼວງວຽງຈັນ, ສ.ປ.ປ.ລາວ

ອອກແບບ ຈັດໜ້າ ໂດຍ: ບໍລິສັດ ດອກເກດ ຈັດພິມຈຳກັດ
ໂທ: (+856 21) 263748, 020 2204895
e-mail: dokked@veetoo.net
www.dokked.com

ດອກເກດ
DokkeD

ຂໍ້ມູນທາງບັນນານຸກົມ ຂອງຫໍສະໝຸດແຫ່ງຊາດ

ເພັຊຣາຊ ຣັຕນະວົງສາ, ເຈົ້າ
ໂຫຣາສາດລາວ ພາກຕົ້ນ / ເຈົ້າເພັຊຣາຊ ຣັຕນະວົງສາ, ແປ ແລະຮຽບຮຽງ ໂດຍ ສິລາ ວີຣະວົງສ໌,
ບັນນາທິການ ໂດຍ ຄຳສິງ ໂງ່ນວໍຣະຣາດ. ພິມຄັ້ງ ທີ 1. -- ວຽງຈັນ:
ສຳນັກພິມ ດອກເກດ ແລະໂຄງການພຸດທະສາສະໜາ ເພື່ອການພັດທະນາ (ຄ.ພ.ພ) 2011.
I - XIV, 199 ໜ້າ ; ພາບປະກອບ, ຕາຕະລາງ; 24 ຊມ (ຊຸດມໍລະດົກວຽງຈັນ)
1. ລາວ -- ໂຫຣາສາດ. I. ສິລາ ວີຣະວົງສ໌. II. ຄຳສິງ ໂງ່ນວໍຣະຣາດ. III. ຊື່ເລື່ອງ.

133.509594 dc--21
ISBN 978-9932-07-014-5

ສາລະບານ

I ຄຳເຫັນຂອງ ທ່ານ ໝູນແກ້ວ ອໍລະບູນ ລັດຖະມົນຕີວ່າການ ກະຊວງຖະແຫຼງຂ່າວ ແລະວັດທະນະທຳ

II ຄຳອະນຸໂມທະນາ ຂອງ ພຣະອາຈານ ເຫວດ ມະເສໄນ

III ຄຳນຳສຳນັກພິມ

IV ຄຳນຳຂອງ ທ່ານ ຄຳສິງ ໂງ່ນ ວໍຣະຣາທ, ຜູ້ແກ້ໄຂ

VIII ຄຳອະທິບາຍຂອງຜູ້ແປ - ຮຽບຮຽງ

IX ຄຳສະເໜີຂອງຜູ້ຂຽນ

XII ຊີວະປະຫວັດຫຍໍ້ ມະຫາອຸປະຣາດ ເພັຊະຣາຊ

XVI ກ່ຽວກັບ ມະຫາສິລາ ວີຣະວົງສ໌

ຕອນທີນຶ່ງ
ສິ່ງທີ່ປະກອບກັບປະຕິທິນ

3 1. ວັນ

ກ. ແຜນມື້

ຂ. ເວລາຕັ້ງຕົ້ນວັນ

ຄ. ມູນເຫດແຫ່ງຄຳວ່າ "ໂມງ" ແລະ ຄຳວ່າ "ທຸ້ມ"

ງ. ຍາມ

9 2. ເດືອນ

ກ. ປັກ

ຂ. ກຳໜົດເວລາ ແລະລຳດັບ ເດືອນຈັນທຣະຄະຕິ

ຄ. ເດືອນຂຶ້ນປີໃໝ່ ແລະລຳດັບ ເດືອນຜິດປົກກະຕິ

ງ. ອະທິກະມາດ (ເດືອນ ແປດ ສອງໜົນ)

ຈ. ອະທິກະວານ (ເດືອນ ເຈັດ ເຕັມ 30 ວັນ)

ສ. ຊື່ເດືອນຕາມດາວນັກຂັດຕະຣືກ

ຊ. ເດືອນສຸຣິຍະຄະຕິ

ຍ. ມະຫາບາທີ

22 3. ຣະດູ

ກ. ຣະດູລາວ

ຂ. ຣະດູຝຣັ່ງ

ຄ. ຫຼັກຕັ້ງຣະດູຝຣັ່ງ

25 4. ປີ

ກ. ປີຝຣັ່ງ (ປີທຣໍປິກ)

ຂ. ປີລາວ

ຄ. ປີອະທິກະສຸຣະທິນ

ງ. ປຽບຫຼັກແຫ່ງກຳໜົດລະຍະ ເວລາປີລາວ

ຈ. ແຜນປີບູຮານ

36 5. ສັກຣາດ
ກ. ພຸດທະສັກຣາດ
ຂ. ມະຫາສັກຣາດ
ຄ. ຈຸລະສັກຣາດ

ຕອນທີສອງ
ຕຳນານດາວ

45 1. ຕຳນານດາວພະເຄາະ
ກ. ພະເຄາະທາງຝຣັ່ງ
ຂ. ຣາສີ
ຄ. ຣາສີແບບຝຣັ່ງ
56 2. ນັກອັດຕະຣືກ
59 3. ອຸປະຣາຄາ

ຕອນທີສາມ
ປະຕິທິນ

66 1. ຄູນສັງຂານ (ທຳອັດຕາຖະເຫຼີງສົກ) ອັດຕາຖະເຫຼີງສົກ ປີຈຸລະສັກຣາດ1312
70 2. ຫາເວລາສັງຂານຂຶ້ນ(ເວລາຖະເຫຼີງສົກ) ມັດທະຍົມ ແລະ ສຳຜຸດພະອາທິດ
76 3. ຫາເວລາສັງຂານໄປ ຫຼື ສັງຂານລ່ວງ

ຕອນທີສີ່
ຄວາມເຫັນກ່ຽວກັບມູນແຫ່ງເກນຕ່າງໆ ແລະ ແຫ່ງວິທີຄູນສັງຂານ

82 1. ຄວາມເຫັນຂອງໂຫນໄທ
83 2. ຄວາມເຫັນຂອງຂ້າພະເຈົ້າ
ກ. ຫໍຣະຄຸນ
ຂ. ກຳມັດຊະພົນ
ຄ. ວິທີຄຳນວນຫໍຣະຄຸນ ແລະກຳມັດຊະພົນ ອີກແບບນຶ່ງ
ງ. ອະວະມານ
ຈ. ມາສະເກນ
ສ. ດິຖີ
ຊ. ອຸດຈະພົນ
ຍ. ວິທີຄຳນວນອຸດຈະພົນແບບຂະເໝນ
ດ. ວາຣະ
95 3. ຄວາມເຫັນກ່ຽວກັບວິທີຄຳນວນຫາເວລາຖະເຫຼີງສົກ
98 4. ຄວາມເຫັນກ່ຽວກັບເກນແລະວິທີຄຳນວນມັດທະຍົມ ແລະ ສຳຜຸດພະອາທິດ
ກ. ມັດທະຍົມພະອາທິດ
ຂ. ວິທີຄຳນວນ ມັດທະຍົມພະອາທິດ
ຄ. ສຳຜຸດພະອາທິດ

ຕອນທີຫ້າ

ປີອະທິກະສຣະທິນ - ອະທິກະມາດ- ອະທິກະວານ ສັງຂານເນົາສອງວັນ

105 1. ປີອະທິກະສຸຣະທິນ

109 2. ປີອະທິກະມາດ

115 3. ປີອະທິກະວານ

ກ. ຫຼັກໃສ່ປີອະທິກະວານທາງໄທ

ຂ. ວິທີຍ້າຍເດືອນ 7 ເຕັມຈາກປີທີ່ເປັນອະທິກະມາດໄປເຂົ້າປີອື່ນ

ຄ. ຕາລາງສຳຫຼັບຫາວັນຂຶ້ນ 1 ຄ່ຳແຫ່ງເດືອນຈັນທຣະຄະຕິ

ງ. ຕາລາງສຳຫຼັບຫາວັນຕົ້ນແຫ່ງເດືອນສຸຣິຍະຄະຕິ

131 4. ສັງຂານເນົາ 2 ວັນ

ຕອນທີຫົກ

ທວາຍມະຫາສັງຂານ

137 1. ທວາຍຕາມວັນ ແລະເວລາຂອງສັງຂານ

ກ. ນາມນາງສັງຂານ

ຂ. ນິທານນາງມະຫາສັງຂານ

140 2. ທວາຍຕາມວັນສັງຂານ

ກ. ວັນສັງຂານໄປ

ຂ. ວັນເນົາ

ຄ. ວັນສັງຂານຂຶ້ນ (ວັນຖະເຫຼີງສົກ)

ງ. ທວາຍເວລາສັງຂານໄປ

142 3. ທວາຍນາກໃຫ້ນ້ຳ-ຝົນ ແລະລົມ

ກ. ນາກໃຫ້ນ້ຳ ແລະຝົນຕາມນາມປີ

ຂ. ເກນພິຣຸນສາດ (ຝົນ)

ຄ. ເກນທາຣາທິຄຸນ

ງ. ທວາຍລົມແຮງຫຼືຄ່ອຍ

145 4. ທວາຍເລື່ອງເຂົ້າ-ຜົນປູກ

ກ. ທັນຍາຫານ(ເຂົ້າ)

ຂ. ທວາຍເລື່ອງການທຳນາ

ຄ. ທວາຍເລື່ອງຜົນປູກ

ງ. ກຳລັງປີ

147 5. ກາລະໂຍກ

ກ. ທຸງໄຊ

ຂ. ອະທິບໍດີ

ຄ. ອຸບາດ

ງ. ໂລກວິນາດ

ຕອນທີເຈັດ

ຄູນສັງຂານ ໂດຍໃຊ້ພຸດທະສັກຣາດ ຫຼື ມະຫາສັກຣາດ

150 1. ໃຊ້ພຸດທະສັກຣາດ

152 2. ໃຊ້ມະຫາສັກຣາດ

156 ພາກເສີມ

ການຄຳນວນປະຕິທິນ

ຄຳເຫັນຂອງລັດຖະມົນຕີວ່າການ
ກະຊວງຖະແຫຼງຂ່າວ ແລະວັດທະນະທຳ

ເປັນທີ່ຮູ້ກັນດີແລ້ວວ່າ ວັດທະນະທຳເປັນປັດໄຈໜຶ່ງ ທີ່ມີສ່ວນສຳຄັນຢູ່ໃນການພັດທະນາສັງຄົມແບບຍືນຍົງໄດ້ ແລະຄວາມຮູ້ທາງ "ໂຫຣາສາດ" ກໍແມ່ນໜຶ່ງໃນສາຂາວິທະຍາສາດ ທີ່ຍັງເປັນທີ່ຕ້ອງການສຳລັບຄົນຮຸ່ນໃໝ່ເພື່ອການສຶກສາຄົ້ນຄວ້າ. ການຮັບຮູ້ສະຕິປັນຍາຂອງບັນພະບຸລຸດ ແລະນຳໃຊ້ໃຫ້ເກີດຜົນປະໂຫຍດແກ່ສ່ວນລວມນັ້ນ ນັບວ່າເປັນສິ່ງທີ່ຄວນໄດ້ຮັບການພັດທະນາ ສົ່ງເສີມ ແລະຂະຫຍາຍໃຫ້ກວ້າງຂວາງທີ່ສຸດ.

ຂ້າພະເຈົ້າເຫັນວ່າ ການຈັດພິມປຶ້ມ "ຕຳລາໂຫຣາສາດ" ຂອງເຈົ້າເພັດຊະຣາດ ຣັດຕະນະວົງສາ ເຫຼັ້ມນີ້ອອກມາໃນປະຈຸບັນ ເຊິ່ງເປັນໄລຍະທີ່ພັກ ແລະລັດຖະບານ ພວກເຮົາກຳລັງເລັ່ງລັດພັດທະນາປະເທດຊາດຂອງພວກເຮົາຢ່າງຮອບດ້ານນີ້ ຈຶ່ງສອດຄ່ອງ ແລະຕອບສະໜອງກັບຄວາມຮຽກຮ້ອງຕ້ອງການທີ່ສຸດ ໂດຍສະເພາະແມ່ນຄວາມຕ້ອງການທາງດ້ານພະລັງວັດທະນະທຳ ທີ່ຈະນຳພາປະຊາຊົນໄປໃນທິດທາງດຽວກັນ ແລະຊ່ວຍໃຫ້ບັນດານັກຄົ້ນຄວ້າ ນັກວິຊາການທັງຫຼາຍມີຄວາມເຂົ້າໃນເລິກເຊິ່ງ ຖືກຕ້ອງຂຶ້ນ ກ່ຽວກັບຄວາມໝາຍ ແລະກົກເຄົ້າການປະຕິບັດຮີດຄອງສ່ວນໜຶ່ງ ທີ່ເປັນວັດທະນະທຳລາວ ເຊັ່ນວ່າ ເປັນຫຍັງລາວເຮົາຈຶ່ງສະຫຼອງປີໃໝ່ໃນກາງເດືອນເມສາ, ການຄິດໄລ່ວັນເດືອນປີ ທາງຈັນທຣະຄະຕິ ແລະສຸຣິຍະຄະຕິ ມີຈຸດຮວມ ແລະສົມທົບກັນແນວໃດ? ຖືກຕ້ອງ ຫຼື ກົງກັບປະຕິທິນສາກົນແນວໃດ? ຫຼັກການໃຊ້ພຸດທະສັກຣາດ, ຈຸລະສັກຣາດ ແລະຄິດຕະສັກຣາດ ມີມາແຕ່ສະໄໝໃດ ແລະໃຜເປັນຜູ້ກໍ່ຕັ້ງຂຶ້ນ...ເຫຼົ່ານີ້ເປັນຕົ້ນ.

ໃນໂອກາດອັນສະຫງ່າລາສີ ສະຫຼອງນະຄອນຫຼວງວຽງຈັນ 450 ປີນີ້, ຂ້າພະເຈົ້າເຫັນວ່າ "ຕຳຣາໂຫຣາສາດ" ເຫຼັ້ມນີ້ ບໍ່ພຽງແຕ່ຈະເປັນສັກຂີພິຍານແຫ່ງຄວາມຈະເລີນກ້າວໜ້າຂອງນະຄອນຫຼວງວຽງຈັນ ໃນອະດີດເທົ່ານັ້ນ ແຕ່ຍັງເປັນສ່ວນໜຶ່ງຂອງຄັງສາງມໍລະດົກທາງວັດທະນະທຳແຫ່ງຊາດນຳອີກດ້ວຍ. ດັ່ງນັ້ນ ຈຶ່ງຂໍສະແດງຄວາມຊົມເຊີຍ ສຳນັກພິມດອກເກດ ແລະ ຄ.ພ.ພ. ທີ່ໄດ້ສະຫຼະທຶນຮອນ ໃສ່ການຈັດພິມປຶ້ມທີ່ມີຄວາມໝາຍ ແລະຄວາມໝາຍສຳຄັນເຫຼັ້ມນີ້ ແລະຂໍສະແດງຄວາມຍ້ອງຍໍຊົມເຊີຍຜົນງານຂອງບັນດານັກປາດອາຈານທັງຫຼາຍ ທີ່ໄດ້ມີຄວາມພາກພຽນພະຍາຍາມຄົ້ນຄວ້າປຶ້ມດັ່ງກ່າວນີ້ ຈົນສຳເລັດ.

ລັດຖະມົນຕີວ່າການ
ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ

ໝູນແກ້ວ ອໍລະບູນ

ຄໍາອະນຸໂມທະນາ

ການຂຽນ, ການແຕ່ງ, ການຮວບຮວມ ແລະຈັດພິມຕໍາຣາວິຊາການຕ່າງໆ ທັງວິຊາການທາງໂລກ ແລະທາງທັມ ໃຫ້ມວນມະນຸດໄດ້ອ່ານ, ໄດ້ສຶກສາ ແລະຄົ້ນຄວ້າ ຖືວ່າໄດ້ໃຫ້ແສງສະຫວ່າງແກ່ໂລກ ຍິ່ງກວ່າແສງພະອາທິດ ແລະແສງພະຈັນ ສົມດັ່ງພາສິດທີ່ພຣະພຸດທະເຈົ້າຕັດໄວ້ວ່າ: "ນັດຖິ ປັນຍາ ສະມາ ອາພາ" ແສງສະຫວ່າງ ສະເໝີດ້ວຍປັນຍາບໍ່ມີ ດັ່ງນີ້ ເນື່ອງໃນໂອກາດທີ່ໜ່ວຍງານ ຄ.ພ.ພ ໄດ້ຈັດພິມຕໍາຣາໂຫຣາສາດ ຂອງສະເດັດເຈົ້າເພັດຊະຣາດ ມະຫາອຸປະຣາດ ທີ່ໄດ້ແຕ່ງເອົາໄວ້ໃນເມື່ອກ່ອນ ເພື່ອສືບສານ ແລະຜັນຂະຫຍາຍມູນເຊື້ອອັນດີງາມໃຫ້ຄົງຢູ່ ສະແດງກະຕັນຍູຮູ້ບຸນຄຸນທ່ານ ຖືວ່າເປັນລູກຫຼານ - ເຫຼນທີ່ດີຂອງແຜ່ນດິນ.

ຕໍາຣາໂຫຣາສາດ ເປັນຕໍາຣາທີ່ເກົ່າແກ່ ແລະເລິກລັບ ເປັນຕໍາຣາທີ່ວ່າດ້ວຍວິຊາໂຫນ, ວິຊາພະຍາກອນດາຣາສາດ ແລະວິຊາພະຍາກອນໂຊກຊະຕາ ແລະກໍເປັນວິຊາໜຶ່ງທີ່ນອນຢູ່ໃນ 18 ສາດ ຂອງຄໍາພີພາມ ປະເທດອິນເດຍໂບຮານ ເຊິ່ງພຣະພຸດທະເຈົ້າກ່ອນສະເດັດອອກບວດກໍໄດ້ສຶກສາຈົບຮອດ 18 ສາດ ມາກ່ອນແລ້ວ ພວກເຮົາຊາວພຸດຍ່ອມຮູ້ດີຈາກປະຫວັດຂອງພະພຸດທະເຈົ້າ ເຊັ່ນ ເມື່ອຄາວທີ່ເຈົ້າຊາຍສິດທັດຖະກຸມານ ປະສູດໃໝ່ໆ ມີລືສີຕົນໜຶ່ງຊື່ອະສິຕະດາບົດ ເຊິ່ງເປັນຜູ້ຄຸ້ນເຄີຍໃນພຣະຣາຊະສໍານັກຂອງ ພຣະເຈົ້າ ສຸດໂທທະນະ ເຂົ້າມາຢ້ຽມພຣະກຸມານ ແລະໄດ້ພຣະຍາກອນວ່າພຣະກຸມານນີ້ໃຫຍ່ຂຶ້ນຈະໄດ້ສະເດັດອອກບວດແລະຕັດສະຣູ້ເປັນສາສະດາເອກໃນໂລກ ຄໍາພະຍາກອນນັ້ນກໍເປັນຈິງ.

ປະເທດລາວເຮົາໄດ້ນັບຖືພຣະພຸດທະສາສະໜາ ລັດທິລັງກາວົງ ເຊິ່ງພຣະເຈົ້າຟ້າງຸ່ມມະຫາຣາດ ໄດ້ນໍາເອົາມາຈາກປະເທດກໍາປູເຈຍໃນປີ ພ.ສ 1902 ຢູ່ໃນປະຫວັດຂອງພຣະເຈົ້າຟ້າງຸ່ມມະຫາຣາດ ແລະສະເດັດເຈົ້າອະນຸວົງ ກໍມີໝໍໂຫນປະຈໍາພຣະຣາຊະສໍານັກ ຖືວ່າ ຕໍາຣາໂຫຣາສາດ ຕິດພັນກັບພຣະຣາຊະສໍານັກ ແລະພຣະພຸດທະສາສະໜາເປັນເວລາຍາວນານ ຈົນກະທັ່ງມາເຖິງສະໄໝຂອງສະເດັດເຈົ້າ ເພັດຊະຣາດ, ຍາພໍ່ ມະຫາສີລາ ວີຣະວົງ ແລະພຣະອາຈານໃຫຍ່ ບົວຄໍາ ວໍຣະເພັດ ກໍໄດ້ສືບມູນເຊື້ອນັ້ນ ມາແຕ່ໃນປັດຈຸບັນນີ້ເຫັນວ່າຜູ່ຮູ້, ຜູ່ເຂົ້າໃຈ, ຜູ່ຊ່ຽວຊານ ແລະຜູ່ສຶກສາຄົ້ນຄວ້າກ່ຽວກັບວິຊາດ້ານນີ້ໄດ້ຫລຸດໜ້ອຍຖອຍລົງເກືອບຈະບໍ່ມີແລ້ວ.

ບັດນີ້ໜ່ວຍງານ ຄ.ພ.ພ ໄດ້ຈັດພິມຕໍາຣາໂຫຣາສາດຄືນໃໝ່ ເພື່ອສືບສານແລະຜັນຂະຫຍາຍ ໃຫ້ຟື້ນຄືນຊີບຂຶ້ນມາ ແລະໃຫ້ຍືນຍົງຄົງຢູ່ຄູ່ກັບຊາດ ແລະພຣະພຸດທະສາສະໜາສືບໄປຊົ່ວກາລະນານ.

ຂ້າພະເຈົ້າໃນນາມຮອງປະທານຜູ້ປະຈໍາການສູນກາງ ອົງການພຸດທະສາສະໜາສໍາພັນລາວ ຂໍຊົມເຊີຍ ແລະອະນຸໂມທະນານໍາໜ່ວຍງານ ຄ.ພ.ພ. ທີ່ໄດ້ຈັດພິມຕໍາຣານີ້ຂຶ້ນຢ່າງສຸດໃຈມານະໂອກາດນີ້ ດ້ວຍ.

ຮອງປະທານຜູ້ປະຈໍາການສູນກາງ ອ.ພ.ສ

ພຣະອາຈານ ເຫວດ ມະເສໄນ.

ຄຳນຳ ສຳນັກພິມ

ທ່ານຜູ້ອ່ານ ທີ່ນັບຖື

ອີກເທື່ອໜຶ່ງ ສຳນັກພິມດອກເກດ ຮູ້ສຶກປາບປື້ມແລະພາກພູມໃຈຢ່າງຍິ່ງທີ່ໄດ້ຈັດພິມຕຳຣາ "ໂຫຣາສາດລາວ ພາກຕົ້ນ" ຜົນງານຍິ່ງໃຫຍ່ເລື່ອງໜຶ່ງຂອງເຈົ້າເພັຊຣາຊ ຣັຕນະວົງສາ ຜູ່ໃຊ້ເວລາສຶກສາຄົ້ນຄວ້າຢູ່ 20 ກວ່າປີ. ຜົນງານນີ້ ພິມອອກຄັ້ງທຳອິດເປັນພາສາໄທໃນປີ 1951 ຄາວພະອົງທ່ານໄປລີ້ໄພການເມືອງຢູ່ໃນປະເທດນີ້. ນີ້ລາງຍາພໍ່ມະຫາສີລາ ວີຣະວົງສ໌ ຜູ້ເຄີຍຄູນສົງການ ແລະເຣັດປະຕິທິນລາວອອກໃຊ້ຮ່ວມກັນກັບພະອົງ ສະໄໝເພິ່ນເປັນອາຈານສອນຢູ່ໂຮງຮຽນສົງປະຣິຍັດຕິທັມທີ່ຂຶ້ນກັບພຸດທະບັນດິດສະພາຈັນທະບຸຣີ ປີ ຄ.ສ.1932 ແລະໄດ້ນຳເອົາວິຊາໂຫຣາສາດ ໂດຍສະເພາະພາກເຣັດປະຕິທິນ ເຂົ້າສອນຢູ່ໃນໂຮງຮຽນ ຕະຫຼອດເວລາທີ່ທ່ານສອນຢູ່. ໃນປີ 1973 ທ່ານມະຫາສີລາ ວີຣະວົງສ໌ ໄດ້ແປແລະຮຽບຮຽງຕຳຣາພາສາໄທອອກໃຫ້ກົມມັດທະຍົມສຶກສາ ທີ່ບັນຈຸວິຊານີ້ເຂົ້າໃນຫຼັກສູດມັດທະຍົມປາຍ. ແຕ່ດ້ວຍວ່າ ວິຊາດັ່ງກ່າວເປັນວິຊາທີ່ຍາກສົມຄວນ ຈຶ່ງບໍ່ມີຜູ້ສືບຕໍ່ສິດສອນເປັນຂະບວນ, ແມ່ນແຕ່ຢູ່ໃນວັດ ການສອນວິຊານີ້ກໍຂາດຫາຍໄປ ຂະນະທີ່ປື້ມຕຳຣາເອງກໍກາຍເປັນຂອງຫາຍາກ ສຳລັບຜູ້ຢາກສຶກສາຄົ້ນຄວ້າ.

ເນື່ອງໃນວາລະອັນເປັນມະຫາມຸງຄຸນທີ່ພັກແລະລັດຖະບານແຫ່ງ ສ.ປ.ປ.ລາວ ສະເຫຼີມສະຫຼອງນະຄອນຫຼວງວຽງຈັນ 450 ປີນີ້ ທາງໂຄງການພຸດທະສາສະໜາ ເພື່ອການພັດທະນາພາຍໃຕ້ການຊີ້ນຳຂອງພະອາຈານໃຫຍ່ ດຣ.ມະຫາ ຊາລີ ກັນຕະສີໂລ ອີປັດສະນາຈານ ແລະຜູ້ຮູ້ທັນໂລກາພິວັດ ແລະເພື່ອສືບທອດເຈດຕະນາລົມຂອງອະດີດນີ້ລາງ ປະທານ ອ.ພ.ສ. ສູນກາງ ພະອາຈານ ມະຫະວິຈິດ ສິງຫະຣາດ ທີ່ໄດ້ກ່າວໄວ້ວ່າ "ພະສົງເປັນຜູ່ໃຫ້ທັງຄວາມຮູ້ ເປັນຜູ່ໃຫ້ທັງຄຳສັ່ງສອນຄົນໃນທາງສັງຄົມ... ໂຫຣາສາດ ອັກສອນສາດ" ມາຈັດພິມໄວ້ໃຫ້ເປັນມໍລະດົກສືບຕໍ່ໄປ. ເຖິງວ່າ ຕຳຣາ ໂຫຣາສາດໃບລານຜູກທີ່ກ່າວເຖິງນີ້(ຄຳພີສຸຣິຍະຍາຕຣ໌ ທີ່ເປັນຂອງວົງກະກູນ ມະຫາ ອຸປະຣາດ ບຸນຄົງ, ອົງບິດາຂອງເຈົ້າເພັຊຣາຊ) ອາດຈະບໍ່ແມ່ນມໍລະດົກຂອງນັກປາດອາຈານວຽງຈັນ ແຕ່ກໍເປັນມໍລະດົກ ແຫ່ງຊາດລາວຢູ່ດີ.

ຂໍຂອບໃຈທ່ານ ຄຳສິງ ໂງ່ນວໍຣະຣາທ ອະດີດເອກອະທິບໍດີ ກົມໄຟຟ້າລາວ ທີ່ໃຊ້ເວລາສຶກສາກວດແກ້ປັບປຸງບ່ອນຜິດພາດໃນຕົ້ນສະບັບເດີມ ດ້ວຍຄວາມອຸດສາຫະພາກພຽນຢູ່ເປັນປີໆ ແລະຂໍຮູ້ບຸນຄຸນເປັນພິເສດຕໍ່ ທ່ານ ໝູນແກ້ວ ອໍລະບູນ ລັດຖະມົນຕີ ວ່າການກະຊວງວັດທະນະທຳ ແລະສະເພາະຢ່າງຍິ່ງ ຄ.ພ.ພ. ທີ່ອຸປະຖຳການຈັດພິມ ເພື່ອໃຫ້ຕຳຣາເຫຼັ້ມນີ້ໄປຮອດໄປເຖິງມືລູກຫລານ ຈານຜູ່ຈະສືບທອດມໍລະດົກລ້ຳຄ່າຕ່ອນນີ້ຕໍ່ໄປ.

ວຽງຈັນ ເດືອນ ມັງກອນ ຄ.ສ. 2011
ດວງເດືອນ ບຸນຍາວົງ
ອຳນວຍການ ສຳນັກພິມດອກເກດ

ຄຳນຳຂອງຜູ່ແກ້ໄຂ

ເມື່ອຫຼາຍປີກ່ອນໜ້ານີ້ ຂ້າພະເຈົ້າເຄີຍໄດ້ອ່ານປຶ້ມ "ໂຫຣາສາດລາວ" ພາກຕົ້ນ ຂອງເຈົ້າຣາຊພາຄີໄນຍເພັຊຣາຊ ສະສາງຕື່ມໂດຍ ມະຫາສິລາ ວີຣະວົງສ໌ ຄ.ສ. 1973 ພຽງແຕ່ບາງໜ້າ ກໍເຫັນວ່າເປັນເລື່ອງທີ່ໜ້າສົນໃຈ.

ພາຍລຸນມາດົນເຕີບ ຄືບໍ່ກີປີມານີ້ ທ່ານ ດຣ. ວິລຽມ ພະໄຊຍະວົງ ໄດ້ກ່າຍປຶ້ມດັ່ງກ່າວໃຫ້ຫົວໜຶ່ງ ແລະປີ ຄ.ສ. 2009 ນີ້ ນ້ອງຮັກ ນາງດວງເດືອນ ບຸນຍາວົງ ໄດ້ມອບປຶ້ມ "ໂຫຣາສາຕຣ໌ລາວ(ພາກປະຕິທິນ) ໂດຍເຈົ້າເພັຊຣາຊ ຣັຕນວົງສາ, ຄ.ສ. 1951" ເປັນພາສາໄທ ໃຫ້ຕື່ມ.

ນອກນັ້ນ ຂ້າພະເຈົ້າມີປຶ້ມວາຣະສານ ເປັນພາສາຝຣັ່ງ ຊຶ່ງພິມເລື່ອງທີ່ກ່ຽວກັບປະຕິທິນລາວ ເຊັ່ນ:

- ວາຣະສານ "France – Asie 1956" ຊຶ່ງໄດ້ພິມຄືນ ຕຳຣາ " Le calendrier Lao" ທີ່ເຈົ້າເພັຊຣາຊ ໄດ້ຮຽບຮຽງໃຫ້ "ນິດສະມາຄົມ ປະເທດລາວ" ພິມໃນປີ ຄ.ສ. 1940 ປີທີ 4 ເຫຼັ້ມທີ ສີ່ ເດືອນສິງຫາ.

- ວາຣະສານ "Bulletin des Amis du Royaume Lao, No 6, 1971," ເຊິ່ງພິມ ເລື່ອງ "Notre calendrier" ຂຽນໂດຍທ້າວ ບຸນສຸກ (Pierre Marie Gagneux).

ຂ້າພະເຈົ້າໄດ້ອ່ານຄືນຫຼາຍຄັ້ງ ຫຼາຍຕ່າວ ແຕ່ກໍບໍ່ເຂົ້າໃຈ ຢ່າງຊັດເຈນໄດ້ ຈົນນ້ອງຮັກນາງດວງເດືອນ ບຸນຍາວົງ ມີຄວາມປະສົງພິມປຶ້ມໂຫຣາສາລາວ ທີ່ກ່າວມາເທິງນີ້ຄືນ ຈຶ່ງຂໍໃຫ້ຂ້າພະເຈົ້າທີ່ໄດ້ອ່ານແດ່ແລ້ວ ມີຄວາມເຫັນ. ດ້ວຍເຫດນີ້ ຂ້າພະເຈົ້າຈຶ່ງໄດ້ຕັ້ງໃຈທວນຄືນ ໂດຍຖືເອົາປຶ້ມໂຫຣາສາດພາສາລາວ ແລະ ໄທ ສອງຫົວເປັນຫຼັກ.

ບາງຈຸດສຳຄັນທີ່ຂຽນລົງໃນປຶ້ມ ແລະວາຣະສານຕ່າງໆທັງໝົດນັ້ນ ມີອັນບໍ່ສອດຄ່ອງກັນ, ບາງຄັ້ງຢູ່ໃນປຶ້ມຫົວດຽວກັນກໍມີບັນຫານີ້ເໝືອນກັນ.ແນ່ນອນທີ່ສຸດ ໂຫຣາສາດເປັນເລື່ອງຍາກຢູ່ໃນຕົວຂອງມັນຢູ່ແລ້ວ ແລະຂ້າພະເຈົ້າກໍບໍ່ມີຄວາມຮູ້ກ່ຽວກັບເລື່ອງດັ່ງກ່າວເລີຍ,ຂ້າພະເຈົ້າກໍຄົງ ຊ່ອຍຫຍັງຫຼາຍບໍ່ໄດ້ ຈຶ່ງຂໍຊັກຊວນຜູ່ທີ່ມີຄວາມຮູ້ໃນດ້ານນີ້ ກະລຸນາສືບຕໍ່ປັບປຸງຕື່ມ.

ດັ່ງນັ້ນ ອັນໃດທີ່ຂ້າພະເຈົ້າເຫັນແນ່ວ່າຄວນແກ້ໄຂບ່ອນໃດ ຂ້າພະເຈົ້າກໍໄດ້ສະເໜີໄປ ແລ້ວ ແລະອັນໃດທີ່ຍັງເຫັນບໍ່ຄັກ ຂ້າພະເຈົ້າກໍຍົກໄວ້ດັ່ງເດີມ ແລະຈະຍົກແຈ້ງໄວ້ໃນວັກທ້າຍ.

ເວົ້າລວມໂດຍສັງເຂບ ຂ້າພະເຈົ້າປາບປຶ້ມໃຈ ແລະອັດສະຈັນໃນຄວາມຮູ້ ຄວາມສະຫຼາດສາມາດຂອງບັນພະບຸລຸດລາວເຮົາຢ່າງແຈບໃຈຕື່ມ ນອກຈາກທອດມອບທີ່ຢູ່ທຳກິນ ທີ່ເຕັມໄປດ້ວຍວັດທະນະທຳອັນດີງາມ ໃຫ້ພວກເຮົາເທົ່າທຸກວັນນີ້ໄດ້ ຫຼັງຈາກການຖືກມ້າງເພທຳລາຍ ຖືກຍົກຍ້າຍຢ່າງໂຫດຫ້ຽມສາລະພັດ ຈົນນັບບໍ່ຖ້ວນ, ເຮົາຍັງມີການດຳລົງຊີວິດ ລ້ຽງດູເນື້ອໜັງມັງສັງ ຮັກສາໄວ້ໄດ້ລັກສະນະພິເສດ ຄືນ້ຳໃຈຄວາມເປັນລາວຢ່າງສະຫງ່າ. ໃນຊຸມປີ 1930-60 ທີ່ເປັນຍຸກຄັບຂັນບັ້ນນຶ່ງໃຕ້ການຄຸ້ມຄອງຂອງຕ່າງຊາດ ເຈົ້າຣາຊພາຄີໄນຍ ເພັຊຣາຊ ຊົງມີຊື່ສຽງເຮືອງນາມທົ່ວແຫ່ງຫົນຈົນທຸກຄົນໃນດິນແດນລາວສັດທາ ເຫຼື້ອມໃສໃນຄວາມສາມາດ ທັ້ງອິດທິພົນສະເພາະຂອງພະອົງໃນຫຼາຍດ້ານ ມາໃນຂະນະນີ້ ພວກເຮົາກໍກຳລັງຊື່ນຊົມແລະຍົກສູງຜົນງານອັນລ້ຳຄ່າກ່ຽວກັບໂຫຣາສາດ ແລະການໄລ່ລຽງຫາວັນຖະເຫຼີງສົກເພື່ອແຕ່ງປະຕິທິນລາວ. ພະອົງໄດ້ຊົງມີຄວາມອົດທົນ ສຶກສາຄົ້ນຫາຄຳພີຕ່າງໆທັງຂອງລາວເອງ ແລະຂອງຕ່າງຊາດ ເພື່ອເຂົ້າໃຈເລິກຄຳພີຂອງລາວເຊິ່ງບັນພະ

ບຸລຸດໄດ້ຂີດແຕ້ມໄວ້ ຫຼືເລົ່າຂານກັນມາ ແຕ່ຕ້ອງຖືກຫຼົງລືມ ຫຼືລະໃຊ້ໄປໃນໄລຍະຍາວນານເຕີບ. ພະອົງໄດ້ຊົງບັນລຸຜົນປະຕິສັງຂອນສິ່ງທີ່ບໍ່ເປັນເອກະພາບກັນໃຫ້ເປັນກົດເກນ ຮຽບຮຽງກົດເກນເຫຼົ່ານັ້ນແຕ່ງເປັນຄຳພີບໍລິບູນ ໃຊ້ໄດ້ຢ່າງດີໃຫ້ແກ່ພວກເຮົາ ດັ່ງຍາພໍ່ມະຫາສິລາໄດ້ຈາລຶກໄວ້ ແລະຂ້າພະເຈົ້າຂໍສະໜັບສະໜູນ ດັ່ງນີ້:

" ພະອົງທ່ານໄດ້ຝາກມໍລະດົກອັນສຳຄັນສ່ວນນຶ່ງ ນອກຈາກມໍລະດົກທາງການເມືອງ ໄວ້ໃຫ້ແກ່ຊາດລາວອີກດ້ວຍ... ຂໍນ້ອມເກົ້າຖວາຍຄວາມເຄົາຣົບແລະລະນຶກເຖິງພະຄຸນ ທີ່ພະອົງໄດ້ມີຕໍ່ປະເທດຊາດ ເປັນຢ່າງສູງໄວ້ໃນທີ່ນີ້ດ້ວຍ"

ບັນພະບຸລຸດໂຫນຂອງເຮົາ ເນື່ອງຈາກບໍ່ມີເຄື່ອງມືອັນເໝາະສົມຊ່ວຍ ອີງໃສ່ແຕ່ສັງເກດການຈົດຈຳປາກົດການທັງປວງ ຊຶ່ງອິດທິພົນລະຫວ່າງເຫຼົ່າດວງດາວ ສະເພາະແມ່ນພະອາທິດ ແລະພະຈັນກັບໂລກເຮົາ, ເພິ່ນເຫັນວ່າເດືອນນຶ່ງ ເຊິ່ງແມ່ນເວລາທີ່ພະຈັນເລື່ອນໄຫຼອ້ອມໂລກໃນ 29ວັນ 12ຊົ່ວໂມງ 44 ນາທີ ແລະ 2,39 ວິນາທີ ເຊິ່ງຊາວຝຣັ່ງເຫັນເປັນ 29 ວັນ 12 ຊົ່ວໂມງ 44 ນາທີ ແລະ 2,86 ວິນາທີ, ຜິດກັນບໍ່ພໍເຄິ່ງວິນາທີເລີຍ ! ຂໍ້ມູນເຊິ່ງໄດ້ຈາກທຳມະຊາດ ເປັນຕົວເລກເສດ ເພື່ອນຳໃຊ້ໃຫ້ສະດວກເພິ່ນກໍຕັດເອົາເປັນຕົວເລກກົມເຕັມ. ຄັນຖືເອົາແຕ່ 29 ມັນກໍຈະບໍ່ພໍກັບຕົວຈິງຫຼາຍກວ່າ 12 ຊົ່ວໂມງ, ຄັນເອົາ 30 ວັນ ມັນກໍລື່ນຕົວຈິງໄປ ບໍ່ຕ່ຳກວ່າ 11 ຊົ່ວໂມງ. ແຕ່ເພິ່ນຄົງສັງເກດເຫັນວ່າ ພະຈັນໂຄຈອນມີຮອບສັ້ນແລະຮອບຍາວ ລຽນກັນໄປຕາມວັນຂ້າງຂຶ້ນ ເດືອນເປັ່ງຕົວອອກເຕັມດວງ ວັນ 15 ຄ່ຳແຕ່ວັນແຮມບາງຄັ້ງ ຫຼັງວັນ 14 ຄ່ຳ ຫຼືບາງຄັ້ງ ຫຼັງວັນ15 ຄ່ຳ ຈຶ່ງປາກົດເຫັນເດືອນອອກໃໝ່, ຄົງຈະເປັນເຊັ່ນນີ້ ໂຫນເຮົາຈຶ່ງນັບລຽງເດືອນໄປເປັນຄູ່ ຄືເດືອນຄີກ 29 ວັນ ແລະເດືອນຄູ່ 30 ວັນ. ເດືອນຄີກມີເວລາຂາດໄປ ເດືອນຄູ່ຊ້ຳພັດຫຼາຍກວ່າຕົວຈິງ. ເມື່ອເອົາສອງເດືອນມາຄວບເປັນຄູ່ກັນ ເວລາຜິດກັບຕົວຈິງນ້ອຍລົງ ແຕ່ຕົວຈິງຍັງຍາວກ່ອນຕົວຕັ້ງເອົາ ປະມານ 1 ຊົ່ວໂມງ 22 ນາທີ ເຊິ່ງສະສົມເອົາໄວ້ ເມື່ອໃດເຖິງ 24 ຊົ່ວໂມງ ກໍຕື່ມ 1 ວັນຕື່ມ.

ສ່ວນທີ່ກ່ຽວກັບປີ ໂຫນເຮົາຖືເອົາເວລາອັນແທ້ຈິງ ທີ່ພະອາທິດເດີນຄົບຮອບນຶ່ງບໍລິບູນເປັນຫຼັກແຫ່ງກຳໜົດຂອບປີ ເຊິ່ງຍາວເຖິງ 365 ວັນ 6 ຊົ່ວໂມງ 12 ນາທີ 36 ວິນາທີ . ເພິ່ນກໍຕ້ອງໄດ້ຕັ້ງປີເປັນປີທີ່ມີຈຳນວນວັນເຕັມມົນຄືກັນ ຈະເອົາຈຳນວນໃດ? ອີກເທື່ອນຶ່ງ ເພິ່ນບໍ່ໄດ້ຄິດຢາກເອົາເທົ່າໃດກໍເອົາ ແຕ່ສັງເກດເຫັນວ່າສ່ວນເສດ 6 ຊົ່ວໂມງ 12 ນາທີ 36 ວິນາທີ ເທົ່າກັບ 0,25875 ວັນ ເຊິ່ງເອົາຄູນໃຫ້ 800 (800 ປີ) ໄດ້ 207 ເຕັມພໍດີ ບໍ່ມີເສດ ! ສະນັ້ນເພິ່ນຈຶ່ງຕັ້ງເອົາ 207 ເປັນຈຳນວນປີ ທີ່ມີ 366 ວັນ ຮຽກກັນວ່າ ປີອະທິກະສຸຣະທິນ (ເນື່ອງຈາກຮວມສ່ວນເສດເຕັມ 24 ແລ້ວ ກໍນັບ 1 ຕື່ມ) ແລະ 800-207 = 593 ປີ ເປັນປີປົກກະຕິສຸຣະທິນ ເຊິ່ງມີ 365 ວັນ. ໃນ 800 ປີ ກໍມີ 292,207 ວັນ (ສອງແສນເກົ້າໝື່ນສອງພັນສອງຮ້ອຍເຈັດວັນ).

ຕົວເລກ 800 ; 207; 292,207 ກໍໄດ້ຍົກຂຶ້ນມາເປັນຕົວເກນ ເຊິ່ງນຳເອົາມາໃຊ້ໃນການຄູນສັງຂານ. ຍັງມີຕົວເລກອື່ນອີກຈຳນວນບໍ່ໜ້ອຍ ເຊິ່ງເພິ່ນຖືເປັນຕົວເກນເພື່ອນຳມາຄູນ ສັງຂານ ໂດຍມີທີ່ມາທີ່ໄປດັ່ງໄດ້ເລົ່າມາແລ້ວທັ້ງສິ້ນ. ໂຫນເຮົາຄົງຈຳຕ້ອງຖືລະບົບຈັນທະຄະຕິ ແລະ ສຸລິຍະຄະຕິ ນຳກັນເພື່ອຄຳນວນຄູນສັງຂານ ເພາະດວງພະຈັນ ແລະ ດວງອາທິດ ພ້ອມດ້ວຍໂລກ ເປັນສິ່ງທຳມະຊາດ ເຊິ່ງອິນຊີຂອງເຮົາຮູ້ສຶກ ສະພາບ ແລະປາກົດການຂອງມັນ ໄດ້ທຸກໄລຍະເວລາ. ຈາກປາກົດການຕົວຈິງເຫຼົ່ານັ້ນ ຈະເອົາມາຈັດລຽງເປັນຮູບປະທຳຢ່າງເປັນຖັນເປັນແຖວ ຈົນກາຍເປັນກົດເກນຢ່າງສອດຄ່ອງອັນເປັນການຫຍຸ້ງຍາກ . ເຈົ້າຣາຊ ພາຄີໄນຍ ເຜັຊຣາຊ ຍັງຊົງຕັດວ່າ ພະອົງໄດ້ສະຫຼະເວລາຊາວ(20)

ປີ ຈຶ່ງຊີງເຂົ້າໃຈ ແລະ ຮຽບຮຽງ ເລື່ອງທີ່ກ່ຽວກັບໂຫຣາສາດລາວ ແລະປະຕິທິນລາວໄດ້ !

ແຕ່ໂຫນລາວເຮົາກໍຍັງສາມາດນໍາເອົາປາກົດການທໍາມະຊາດມາແປເປັນຕົວເລກ ເພື່ອປະດິດຄິດຄົ້ນເປັນສູດເອົາມານໍາໃຊ້ ຊ່ອຍການດໍາລົງຊີວິດ ໃຫ້ສະດວກແລະກ້າວດີຂຶ້ນໄປ. ໂດຍສະເພາະກ່ຽວກັບປະຕິທິນລາວເຮົາ ເພິ່ນນໍາຕົວເກນຕ່າງໆທີ່ເພິ່ນບັນຍັດໄວ້ແລ້ວ ເມື່ອນໍາເອົາມາຄິດໄລ່ຕາມສູດໄດ້ຜົນອອກມາເປັນຕົວເລກເທົ່າໃດ ກໍຕ້ອງເກີດເຫດແບບນັ້ນແບບນີ້, ເຊັ່ນຕົວຢ່າງຖ້າຜົນຂອງການຄິດໄລ່ຕາມສູດດິຖີ ຂອງວັນຖະເຫຼີງສົກ ອອກເປັນເລກ 25 ຂຶ້ນໄປ ຫຼືແຕ່ 0-5 ແລ້ວ ປີທີ່ກ່ຽວຂ້ອງກໍຈະມີເດືອນແປດ(8) ສອງເທື່ອ.

ສິ່ງທີ່ເປັນອັນງຶດງໍ້ອັດສະຈັນ ຕາມຄວາມເຫັນຂອງຂ້າພະເຈົ້າ ເມື່ອເຮົາທໍາການຄິດໄລ່ແລ້ວນໍາເອົາຜົນມາພິມໃສ່ກະດາດ (ເຈົ້າເພັຊຣາຊ ຊົງຄິດໄລ່ດ້ວຍພະຫັດຂອງພະອົງເອງ ບໍ່ຕໍ່າກວ່າ ຊົ່ວໄລຍະ 400 ປີ ແລະຂ້າພະເຈົ້າຄິດໄລ່ດ້ວຍເຄື່ອງ Computer ໃນຊົ່ວໄລຍະແຕ່ ຄ.ສ. 638 ຫາ ຄ.ສ. 2538 ຄື ແຕ່ ຈ.ສ. 0 ເຖິງ ຈ.ສ. 1900 ເປັນໄລຍະ 1900 ປີ) ຕົວເລກກະຊ່າງລຽນກັນຢ່າງມີລະບຽບ ທັງຖືກຕ້ອງກັບມື້ - ເດືອນຂ້າງຂຶ້ນຂ້າງແຮມຈັກຄໍ່າ ປີປົກກະຕິ ຫຼື ອະທິກະສຸຣະທິນ - ປີມີເດືອນ 8 ສອງເທື່ອ (ປີອະທິກະມາດ) - ຫຼືປີອະທິກະວານ - ພ້ອມທັງວັນ ເນົາ ແລະ ໂມງແຫ່ງວັນສັງຂານຂຶ້ນດ້ວຍ - ກວດຄືນໃສ່ຕົວຈິງຜ່ານມາ ກໍເຫັນວ່າສອດຄ່ອງກັນດີ ແລະ ໝັ້ນໃຈວ່າຄົງຈະເປັນແນວນີ້ຕໍ່ໄປ.

ຕາລາງລາຍການດັ່ງກ່າວ ບາງປີກໍມີອັນສັງເກດໃຫ້ສະດຸດຕາໄດ້ວ່າ ດິຖີຕໍ່າກວ່າຕົວຈິງໄປ 1 ບໍ່ສອດຄ່ອງກັບກັບວາຣະ ພຽງແຕ່ຍົກດິຖີຂຶ້ນ 1 ເສັຽທຸກຢ່າງກໍຮຽບຮ້ອຍດີ ສໍາລັບປະຕິທິນປີນັ້ນ ຫຼືບາງທີປີໃດໜຶ່ງ ເປັນທັງອະທິກະມາດ ແລະ ອະທິກະວານ ເອົາອະທິກະວານ ໄປເປັນປີອື່ນກໍໝົດເລື່ອງເໝືອນກັນ. ທຸກສິ່ງທຸກຢ່າງໃນຕາລາງນັ້ນໃຊ້ໄດ້ ເກືອບເຕັມຮ້ອຍເປີເຊັນ ເມື່ອດັດແກ້ບາງປະການບາງເລັກນ້ອຍ ກໍເອົາມາເປັນພື້ນຖານຕົ້ນຕໍຂອງປະຕິທິນໄດ້ແລ້ວ.

ເມື່ອທຸກຢ່າງຮຽບຮ້ອຍດີ ແລະ ໂດຍສະເພາະສອດຄ່ອງກັບທໍາມະຊາດຕົວຈິງຕະຫຼອດມາ ວັນສັງຂານຂຶ້ນຂອງລາວເຮົາ ຫາກບໍ່ຕົກໃສ່ມື້ໃດໂດຍສະເພາະມັນກໍແມ່ນເຫດການເນື່ອງຈາກທໍາມະຊາດແທ້ໆ ຂ້າພະເຈົ້າເຫັນຄວນຮັກສາໄວ້ດັ່ງນີ້ ຕາມບັນພະບຸລຸດຂອງເຮົາ. ວັນຂຶ້ນປີໃໝ່ຂອງເຮົາ ເຖິງວ່າມັນຈະເລື່ອນໄປຖ້າທຽບໃສ່ວັນເດືອນໃນປະຕິທິນຂອງຝຣັ່ງແຕ່ກໍຍັງຖືກຈໍາກັດຢູ່ໃນ ລະຫວ່າງວັນຂຶ້ນ 6 ຄໍ່າເດືອນ 5 ລາວ ແລະ ວັນຂຶ້ນ 5 ຄໍ່າເດືອນ 6 ລາວເທົ່ານັ້ນ. ອັນທີ່ຍົກຂຶ້ນມາວ່າ ເລື່ອງນີ້ ມັນກໍເປັນເລື່ອງທຽບຖານເທົ່ານັ້ນ ແລະ ຝຣັ່ງເອງກໍເຫັນເປັນອັນປະຈັກແລ້ວວ່າຊົ່ວເວລາຂອງປີດ້ານໂຫຣາສາດ ມີການປ່ຽນແປງ ປາກົດແຈ້ງວ່າ ຊົ່ວເວລາຂອງມື້ ຂອງເດືອນ ຍາວນານຂຶ້ນ. ຄືວ່າໂລກເຮົາປິ່ນຮອບຕົວເອງຊ້າລົງປະມານ 17,51 ວິນາທີ ຕໍ່ 100 ປີ ຫຼື ມື້ 1 ຕໍ່ 4300 ປີ. ສະນັ້ນເມື່ອມື້ຍາວອອກ ປີນຶ່ງນຶ່ງກໍຈະມີຈໍານວນມື້ນັບວັນຈະນ້ອຍລົງໄປ !

ຊໍ້າອີກເທື່ອນຶ່ງ ຂ້າພະເຈົ້າໄດ້ຮັບຄວາມຮູ້ຈາກການອ່ານລໍາພີຂອງເຈົ້າເພັຊຣາຊ ຢ່າງຫຼວງຫຼາຍ ຮຽນຮູ້ທັງວິທີການຕັ້ງບັນຫາ ຊອກອົບຂວາຍຫາຂໍ້ມູນ ຈັດຕັ້ງຢ່າງເປັນລະບຽບ ບາດກ້າວການຄິດໄລ່ ວິໄຈຜົນສະຫຼຸບໃຫ້ເປັນກົດເກນ ເພື່ອສະເໜີແນະນໍາຜູ້ອື່ນຕິດຕາມໄດ້ຢ່າງສະດວກສະບາຍຂຶ້ນ. ພະອົງເພິ່ນຊົງລົງເລິກ ຫຼື ພົບສິ່ງທີ່ແປກແມ່ນພຽງແຕ່ນ້ອຍດຽວ ກໍມີຜົນໃສ່ສ່ວນລວມໄດ້ເຊັ່ນ ໃນຊົ່ວລະຍະ 400 ປີທີ່ເພິ່ນໄດ້ຄູນສັງຂານ ເກີດມີ 2 ກໍລະນີເທົ່ານັ້ນ ປາກົດຂຶ້ນ ຄືກໍລະນີ 2 ປີລຽນກັນຊຶ່ງດິຖີເປັນ 24 ກັບ 6. ປີໃດປີນຶ່ງໃນ 2 ປີນັ້ນ ຕ້ອງເປັນອະທິກະມາດ ຊຶ່ງໝາຍວ່າ ສອງດິຖີ ອອກນອກຂອບເຂດທີ່ໄດ້ລະບຸແລ້ວວ່າ ປີທີ່ເປັນອະທິກະມາດຈະຕ້ອງຢູ່ໃນດິຖີ "25 ຫາ 5" ສົມມຸດວ່າ ບໍ່ເຫັນກໍລະນີດັ່ງກ່າວ

ຈຳນວນປີອະທິກະມາດກໍຈະບໍ່ເຖິງ 207 ປີ ໃນຊ່ວງຖານ 800 ປີ! ເມື່ອພະອົງ ໄດ້ພໍ້ຈຸດດັ່ງກ່າວ ພະອົງກໍຊົງລະບຸວິທີຈຳແນກວ່າ ປີໃດເປັນອະທິກະມາດ. ແລະໃນຈຸດນີ້ ຕາມຂ້າພະໄດ້ໄລ່ໃນຊ່ວເວລາ 1900 ປີ ກໍເຫັນແຕ່ 15 ເທື່ອເທົ່ານັ້ນ, ຂ້າພະເຈົ້າ ຍັງບໍ່ແຈບໃຈໃນການທີ່ພະອົງໄດ້ລະບຸວິທີເລືອກເຟັ້ນປີອະທິກະມາດ - ເພາະຖ້າເບິ່ງດິຖີຂອງປີອ້ອມໜ້າຫຼັງສອງປີດັ່ງກ່າວ ຈະເຫັນວ່າປີໃດກໍເປັນອະທິກະມາດໄດ້ ແລ້ວແຕ່ຈະຮັບວ່າປີທີ່ມີດິຖີ ເປັນ6 ຈະໝາຍວ່າສັງຂານຂຶ້ນເດືອນ 5, ດັ່ງນີ້ກໍແມ່ນປີ ຊຶ່ງດິຖີເປັນ 24 ເປັນປີອະທິກະມາດ ຫຼື ແມ່ນເດືອນ 6 ດັ່ງນີ້ກໍຈະແມ່ນປີຊຶ່ງດິຖີເປັນ 6 ເປັນອະທິກະມາດ.

ເຈົ້າເພັຊຣາຊໄດ້ຊົງທວນຄືນວ່າ ແຕ່ບູຮານມີຕາລາງລະບຸປີແລະມື້ໄວ້ ແຕ່ພະອົງບໍ່ຊົງໄດ້ບອກວິທີໃຊ້ ພະອົງຊົງຊອກຫາປີແບບບູຮານໂດຍນັບຍ້ອນຫຼັງເອົາຈາກປີໃດປີນຶ່ງ ຊຶ່ງຮູ້ຊື່ແບບບູຮານຄັກແລ້ວ ຂ້າພະເຈົ້າໄດ້ຊອກຫາໄດ້ຄິດໄລ່ເອົາ ແລ້ວແຕ່ຈະເລືອກເອົາປີຮູບແບບສັກຣາດ ໃດກໍໄດ້ ແລະ ໄດ້ຈັດວາງຕາລາງປີໃໝ່ ຕາມອັນດັບເດີມ ສະເພາະແຕ່ລະສັກຣາດ. ສ່ວນວັນບູຮານນັ້ນຂ້າພະເຈົ້າຍັງຄົ້ນຄວ້າຢູ່ ເພາະຍັງຂາດຂໍ້ມູນອັນຊັດເຈນແທ້ ວ່າວັນໃດ ຢູ່ປີໃດ ເດືອນໃດ ?

ໃນການຄູນສັງຂານແລະໂດຍສະເພາະໃນການຄຳນວນມັດທະຍົມແລະສຳຜຸດພະອາທິດຕ້ອງໄດ້ນັບຈຳນວນສຸຣະທິນ ເຈົ້າເພັຊຣາຊໄດ້ຊົງນັບຕົວຈິງຂຽນລຽນກັນເປັນແຖວໆ ແນ່ນອນມັນຊັດເຈນແທ້ ແຕ່ກໍ່ພາໃຫ້ມີການຫຼົງໄດ້. ຂ້າພະເຈົ້າຊອກຫາສູດທີ່ບອກສຸຣະທິນໄດ້ໄວ ແລະບໍ່ຫຼົງໄດ້ ເຊັ່ນເຮົາຕ້ອງການຮູ້ສຸຣະທິນໃນປີໃດນຶ່ງ ເຮົາກໍຕ້ອງຮູ້ດິຖີຂອງວັນສັງຂານຂຶ້ນຂອງປີນັ້ນ ແລະ ດິຖີຂອງວັນສັງຂານຂອງປີທີ່ຈະມາເຖິງ. ຈາກນັ້ນ ເຮົາກໍຮູ້ໄດ້ ເດືອນຂອງວັນສັງຂານຂຶ້ນ ເປັນ 3 ກໍລະນີ ຄື 1./ເດືອນຫ້າກັບເດືອນຫ້າ 2./ ເດືອນຫ້າກັບເດືອນຫົກ ແລະ 3./ ເດືອນ ຫົກກັບເດືອນຫ້າ ແລ້ວກໍຕີອອກເປັນ 3 ສູດ ແຕ່ລະສູດເຈາະຈົງສະເພາະແຕ່ລະກໍລະນີ.

ປະການສຸດທ້າຍ ກໍຄືເມື່ອທຳການໄລ່ສຳຜຸດພະອາທິດແລ້ວ ເຈົ້າເພັຊຣາຊບໍ່ຊົງໄດ້ເຮັດຕາລາງບອກໂມງສັງຂານຂຶ້ນ ແບບດຽວກັນກັບຕາລາງບອກໂມງສັງຂານໄປ. ທັງນີ້ກໍ່ເພື່ອຢາກ ຮູ້ວ່າໂມງຊຶ່ງຄິດຈາກ "ກຳມັດຊະພົນ" ຖືກຕ້ອງ ຫຼື ບໍ່ !

ມາຮອດຂະນະນີ້ຂ້າພະເຈົ້າຂໍວິ່ງວອນຫາທຸກໆທ່ານທີ່ມີໃຈສັດທາ ຢາກໃຫ້ຜູ້ອອມຂ້າງຮຽນຮູ້ຕື່ມກ່ຽວກັບໂຫຣາສາດ ດາຣາສາດ ແລະ ວິທີເຮັດປະຕິທິນລາວໃຫ້ແຈ້ງ ແລະ ສົມບູນຂຶ້ນຕື່ມຈິ່ງໄດ້ມີຄວາມເຫັນເພີ່ມເຕີມ ສິ່ງທີ່ເຈົ້າເພັຊຣາຊໄດ້ສະສາງຟື້ນຊີບວິຊາດັ່ງກ່າວ ໄດ້ເປັນບາດກ້າວອັນມະຫືມາແລ້ວ.

ຂໍຂອບໃຈທຸກໆທ່ານທີ່ມີໃຈບຸນ ຕອບສະໜອງຄວາມວິ່ງວອນຂອງຂ້າພະເຈົ້າ. ຂໍນ້ອມເກົ້າຖວາຍຄວາມເຄົາຣົບ ແລະ ລະນຶກເຖິງພະຄຸນທີ່ເຈົ້າເພັຊຣາຊຊົງໄດ້ມີຕໍ່ປະເທດຊາດເປັນຢ່າງສູງ ແລະ ພ້ອມນີ້ກໍຂໍບູຊາຄວາມນຶກຄິດນີ້ ແກ່ຍາພໍ່ມະຫາສີລາ ວີຣະວົງສ໌ ດ້ວຍ.

ເດືອນ ກຸມພາ 2010 ທີ່ບ້ານຂຸນຕາ, ນະຄອນຫຼວງວຽງຈັນ

ຄຳສິງ ໂງ່ນວໍຣະຣາທ

ອະດີດເອກອະທິບໍດີ ລັດວິສາຫະກິດໄຟຟ້າລາວ (ປີ 1962-1975)

ຄຳນຳ ຜູ່ແປ - ຮຽບຮຽງ

ແຕ່ກ່ອນເມື່ອຝຣັ່ງຍັງປົກຄອງຣາຊະອານາຈັກລາວຢູ່ (ລະຫວ່າງ ຄ.ສ 1893-1947)ການໃຊ້ປະຕິທິນຂອງລາວຕ້ອງຄອຍຖ້າໃຫ້ປະຕິທິນໄທ ຫຼື ປະຕິທິນຂອງປະເທດຂະເໝນອອກມາເສຽກ່ອນ ແລ້ວລາວຈຶ່ງມາກ່າຍເອົາປະຕິທິນໄທ ຫຼືຂະເໝນນັ້ນ ອອກເປັນຕົວລາວ ໃຊ້ເປັນປະຕິທິນລາວ ທັງນີ້ກໍຍ້ອນບໍ່ມີຜູ່ເຮັດປະຕິທິນ ຫຼື ຄຳນວນເວລາສັງຂານຂຶ້ນປີໃໝ່ນັ້ນເອງ ເມື່ອຂ້າພະເຈົ້າໄດ້ມາເຮັດການຢູ່ນຳສະເດັດເຈົ້າຣາຊພາຄີໄນ ເພັຊຣາຊແລ້ວ ພຣະອົງທ່ານໄດ້ມີຍາ ຖາມຂ້າພະເຈົ້າວ່າເຄີຍເຮັດປະຕິທິນ ຫຼືຄູນສັງຂານເປັນບໍ່ ຂ້າພະເຈົ້າທູນຕອບເພິ່ນວ່າເຄີຍເຫັນແຕ່ຜູ່ອື່ນເຮັດ ແລະກໍໄດ້ສຶກສາແດ່ເລັກນ້ອຍ. ເມື່ອພຣະອົງທ່ານໄດ້ຊາບດັ່ງນີ້ ຈຶ່ງມີຍາໃຫ້ຂ້າພະເຈົ້າລອງຄູນສັງຂານຮ່ວມກັບພຣະອົງທ່ານເບິ່ງ ຕໍ່ຈາກນັ້ນກໍໄດ້ເຮັດເປັນປະຕິທິນລາວໃຊ້ສືບມາ ໂດຍບໍ່ຕ້ອງຄອຍຖ້າປະຕິທິນໄທ ແລະ ຂະເໝນ ນອກຈາກນີ້ ພຣະອົງທ່ານຍັງໄດ້ກຳໜົດເອົາວິທີເລກ ໂຫຣາສາດນີ້ ເປັນຫຼັກສູດນຶ່ງ ສຳຫຼັບສອນໃນໂຮງຮຽນປະຣິຍັດຕິທັມສືບມາ ວິຊາໂຫຣາສາດ ຈຶ່ງກັບຟື້ນຊີວິດຄືນມາແຕ່ເຖິງຢ່າງໃດກໍດີ ຄວາມຮູ້ໃນເລື່ອງໂຫຣາສາດຂອງຂ້າພະເຈົ້ານັ້ນ ມີແຕ່ພຽງໜ້ອຍດຽວ ເພາະຂ້າພະເຈົ້າບໍ່ໄດ້ສຶກສາຄົ້ນຄວ້າຕື່ມອີກ.

ສ່ວນສົມເດັດເຈົ້າເພັຊຣາຊນັ້ນ ພຣະອົງທ່ານໄດ້ຄົ້ນຄວ້າສຶກສາຕະຫຼອດມາຈາກຕຳຣາອັນເປັນຂອງ ລາວ-ໄທ-ຂະເໝນ ແລະຕ່າງປະເທດອີກ ພຣະອົງທ່ານຈຶ່ງມີຄວາມຮູ້ກວ້າງຂວາງໃນເລື່ອງນີ້ເປັນຢ່າງດີ ແລ້ວໄດ້ທ້ອນໂຮມນິພົນຂຶ້ນເປັນຕຳຣາໃນເວລາທີ່ພຣະອົງທ່ານໄປພັກຜ່ອນລີ້ພັຍການເມືອງຢູ່ປະເທດໄທ ໃນລະຫວ່າງ ປີ ຄ.ສ 1945-1957 ທີ່ລ່ວງມາແລ້ວ ແລະຕະຫຼອດທຸກວັນນີ້ ການຄຳນວນສັງຂານ ແລະທຳປະຕິທິນໃຊ້ໃນທາງຣາຊະການຂອງລັດຖະບານ ແຫ່ງຣາຊະອານາຈັກລາວ ກໍໄດ້ໃຊ້ຕຳຣາໂຫຣາສາດລາວ ສະບັບຂອງເຈົ້າເພັຊຣາຊນີ້ເອງເປັນຫຼັກຈຶ່ງນັບວ່າພຣະອົງທ່ານໄດ້ຝາກມໍລະດົກ ອັນສຳຄັນສ່ວນນຶ່ງ ນອກຈາກມໍລະດົກ ທາງການເມືອງໄວ້ ໃຫ້ແກ່ຊາວລາວອີກດ້ວຍ.

ຂ້າພະເຈົ້າໃນຖານະເຄີຍເປັນຂ້າຣາຊການພາຍໃຕ້ບັງຄັບບັນຊາຂອງພຣະອົງ ແລະເປັນຜູ່ໄດ້ຮ່ວມວຽກການໃນດ້ານໂຫຣາສາດນີ້ ຂໍນ້ອມເກົ້າຖວາຍຄວາມເຄົາຣົບ ແລະ ລະນຶກເຖິງພຣະຄຸນທີ່ພຣະອົງໄດ້ມີຕໍ່ປະເທດຊາດ ເປັນຢ່າງສູງໄວ້ໃນທີ່ນີ້ດ້ວຍ.

ມະຫາ ສິລາ ວີຣະວົງສ໌
ທີ່ວຽງຈັນ, ເດືອນເມສາ 1973
(ແປແລະຮຽບຮຽງຈາກຕົ້ນສະບັບພາສາໄທ ພິມໂດຍ ນ. ສະຫວີວັນ ອຶ້ງສຸປຣະເສີດ
ມີນາຄົມ ພສ. 2494 ພິມທີ່ໂຮງພິມ ແສງສິນ, 86 ຊອຍທ່າກາງ ປາກຄອງຕະຫຼາດ)

ຄຳສະເໜີຂອງຜູ່ຂຽນ

ເມື່ອຂ້າພະເຈົ້າ ດຳລົງຕຳແໜ່ງເປັນຜູ່ບັນຊາການ ຜະແໜກປີກຂອງຣາຊະການລາວ ແລະ ເປັນປະທານພຸດທະບັນດິດຕະສະພາຈັນທະບູຣີທີ່ນະຄອນວຽງຈັນນັ້ນ ໄດ້ເຫັນວ່າການຄູນສັງຂານ (ທຳອັດຕາຖະເຫຼີງສົກ) ສຳຫຼັບປະຕິທິນລາວໃນທຸກໆປີ ມີຄວາມຂັດຂ້ອງທີ່ສຸດ ເພາະຄົນຜູ່ທີ່ຮູ້ແຈ່ມແຈ້ງໃນວິຊານີ້ ບໍ່ຄ່ອຍມີ ເລື່ອງນີ້ບໍ່ແມ່ນວ່າເປັນມາແຕ່ປີນຶ່ງ ຫຼື ສອງປີ ເຫັນເປັນດັ່ງນີ້ເປັນເວລາສິບໆປີມາແລ້ວ ການທີ່ຂາດຜູ່ຊຳນານໃນວິຊາໂຫຣາສາດ ເຊິ່ງເປັນວິຊາ ທີ່ບຸພະບຸຣຸດນິຍົມກັນຫຼາຍ ໃນສະໄໝບູຮານນັ້ນ ເຫັນວ່າຈະເປັນຍ້ອນໃນລະຫວ່າງ ສອງສັດຕະວັດກ່ອນນັ້ນ ປະເທດເຮົາໄດ້ຖືກຂ້າເສິກ ມາຍໍ່າຍີ ບ້ານເມືອງແຕກທະລາຍຢູ່ສະເໝີນັ້ນເອງ ໃນເມື່ອປະຊາຊົນພົນລະເມືອງ ບໍ່ມີຄວາມສະຫງົບສຸກຢ່າງນັ້ນ ກໍບໍ່ມີໂອກາດທີ່ຈະດຳເນີນການສຶກສາໄດ້ຕາມປະສົງ ຈຶ່ງເປັນເຫດໃຫ້ເກີດຄວາມຂາດເຂີນທຸກແນວ ໃນວິຊາອັນກ່ຽວກັບປະຕິທິນທີ່ສືບມາແຕ່ບູຮານ ຕົວຢ່າງບໍ່ມີໃຜທີ່ຈະຮູ້ໄດ້ວ່າ ປີເຮົາມີຈຳນວນຈັກວັນແທ້ ຍ້ອນເຫດໃດ ລາງປີຈຶ່ງມີ 13 ເດືອນ (ອະທິກະມາດ) ລາງປີຈຶ່ງມີ ເດືອນເຈັດເຕັມ 30 ວັນ (ອະທິກະວານ) ລາງປີຈຶ່ງຍາວກວ່າປີກະຕິໄປ 1 ມື້ (ອະທິກະສຸຣະທິນ) ແລະ ລາງປີຈຶ່ງມີມື້ເນົາເຖິງ 2 ມື້ ດັ່ງນີ້ເປັນຕົ້ນ.

ເມື່ອຂ້າພະເຈົ້າໄດ້ເຫັນຄວາມຂັດຂ້ອງໃນການຄູນສັງຂານ ແລະການຂາດຄວາມເຂົ້າໃຈໃນຕຳຣາປະຕິທິນຢ່າງນັ້ນ ກໍແຮ່ງມີຄວາມສົນໃຈຢາກສຶກສາວິຊາໂຫຣາສາດບູຮານຂຶ້ນເປັນອັນມາກ ແຕ່ວ່າຈະຫາອາຈານ ຜູ້ທີ່ເຂົ້າໃຈໃນວິຊານີ້ບໍ່ສູ້ຈະມີ ຫຼືຈະເວົ້າວ່າບໍ່ມີເລີຍກໍໄດ້ ຂ້າພະເຈົ້າຈຶ່ງຈຳເປັນໄດ້ຊອກຄົ້ນຮຽນເອົາເອງ ຕາມຕຳຣາຂອງບຸພະບຸລຸດລາວ ຂະເໝນ ແລະ ໄທ ຕຳຣາເຫຼົ່ານັ້ນກໍອາດອຳນວຍຜົນໃຫ້ເປັນຢ່າງດີ ຫາກແຕ່ວ່າໃນຕຳຣາເຫຼົ່ານັ້ນ ບໍ່ໄດ້ອະທິບາຍຕົ້ນເຫດຂອງເກນຕ່າງໆໄວ້ ເຖິງຢ່າງນັ້ນກໍຕາມ ຂ້າພະເຈົ້າກໍຍັງຖືວ່າ ຕຳຣາຂອງສາມຊາດນັ້ນ ຍັງເປັນອາຈານ ຂອງຂ້າພະເຈົ້າເປັນຢ່າງດີ.

ຕຳຣາທັງສາມນັ້ນ ບໍ່ໄດ້ບອກເຖິງມູນເຫດແຫ່ງວິທີຄຳນວນເລກຕ່າງໆ ເຊິ່ງເອົາມາຄຳນວນນັ້ນ ແຕ່ປະການໃດເລີຍ ໂດຍທີ່ສຸດມູນເຫດການແຫ່ງການຄຳນວນ ແລະ ວ່າເຫດໃດຈຶ່ງບວກລົບ/ລຶບ ຄູນ ຫຼື ຫານ ກໍບໍ່ຊີ້ແຈງໄວ້ ມີຊີ້ແຈງໄວ້ກໍພຽງວິທີການຄຳນວນທີ່ນັ້ນ.

ເມື່ອຂ້າພະເຈົ້າຄູນສັງຂານ ເປັນເວລາຫຼາຍປີມາແລ້ວ ແລະເພື່ອປະສົງຢາກເຂົ້າໃຈໃນຄຳພີປະຕິທິນ ຂອງບູຮານ ຈຶ່ງໄດ້ພາກພຽນຄຳນວນອັດຕາຖະເຫຼີງສົກ ແຕ່ປີ ພ.ສ 2432 ເຖິງ ພ.ສ 2831 (400 ປີ) ສຳລັບໄວ້ເປັນເຄື່ອງມືສັງເກດຄວາມເຄື່ອນຍ້າຍ ຈຳນວນອັດຕາຖະເຫຼີງສົກເຫຼົ່ານັ້ນແຕ່ລະປີ ແລະອາໄສການເຄື່ອນຍ້າຍນັ້ນ ເພື່ອພິສູດຫາຈຳນວນເລກຕ່າງໆ ທີ່ຕຳຣາເອົາມາຕັ້ງເປັນເກນໄວ້ທຸກໆຈຳນວນ ແລ້ວຈຶ່ງພະຍາຍາມພິຈາຣະນາຊອກຫາຕົ້ນປາຍສາຍເຫດຂອງເກນ

ເຫຼົ່ານັ້ນ ທັງຊອກຫາເຫດຜົນແຫ່ງວິທີຄໍານວນນັ້ນດ້ວຍ ຄືວ່າ ເປັນດ້ວຍເຫດໃດ ເພິ່ນຈຶ່ງໄດ້ບັນຍັດໃຫ້ເອົາເກນນັ້ນໆໄປ ບວກ ລົບ ຄູນ ຫຼື ຫານ ກັບເກນຕົວອື່ນໆ ດັ່ງນີ້ເປັນຕົ້ນ.

ເມື່ອຂ້າພະເຈົ້າໄດ້ພິສູດມາເປັນເວລາເຫິງນານກວ່າ 20 ປີແລ້ວ ກໍເກືອບຈະເວົ້າໄດ້ວ່າ ຂ້າພະເຈົ້າຮູ້ເຖິງເຫດການ ແລະກົກປາຍຂອງຫຼັກເກນເຫຼົ່ານັ້ນເປັນສ່ວນມາກ ທັງເຂົ້າໃຈໃນວິທີຄໍານວນເລກທີ່ບູຮານບັນຍັດໄວ້ນັ້ນຢ່າງແຈ່ມແຈ້ງຫຼາຍປະການອີກດ້ວຍ ຈຶ່ງຫວັງວ່າ ຄວາມຮູ້ທີ່ຂ້າພະເຈົ້າໄດ້ພົບພໍ້ ແລ້ວດ້ວຍຄວາມພາກພຽນ ພະຍາຍາມ ແລະ ໄດ້ສະຫຼະເວລາມາກວ່າ 20 ປີນັ້ນ ອາດເປັນຜົນແກ່ພີ່ນ້ອງຊາວລາວເຮົາຕໍ່ໄປພາຍໜ້າໄດ້ ເພາະສະນັ້ນຈຶ່ງອົດສາຫະຮຽບຮຽງຕໍາຣານີ້ຂຶ້ນໄວ້ ເພື່ອຄວາມສະດວກ ແກ່ຜູ້ສົນໃຈຢາກສຶກສາ ໂຫຣາສາດ ຂອງບູຮານເຮົາ.

ຕໍາຣານີ້ມີຂໍ້ຄວາມກວ້າງຂວາງ ແລະລະອຽດກວ່າຕໍາຣາ "ປະຕິທິນລາວ" ທີ່ຂ້າພະເຈົ້າໄດ້ຮຽບຮຽງເປັນພາສາຝຣັ່ງ ເຊິ່ງ "ມິດສະມາຄົມປະເທດລາວ" ໄດ້ພິມຂຶ້ນໄວ້ ເມື່ອປີ ພ.ສ 2483 ນັ້ນ (ປີທີ 4 ເຫຼັ້ມທີ 4 ເດືອນສິງຫາ ຄ.ສ 1940) ແຕ່ຢ່າງໃດກໍດີ ໃນຕໍາຣາເຫລັ້ມນີ້ ຂ້າພະເຈົ້າກໍໄດ້ກ່າວເຖິງແຕ່ສ່ວນທີ່ກ່ຽວກັບປະຕິທິນທໍ່ນັ້ນ ບໍ່ໄດ້ກ່າວເຖິງສ່ວນອື່ນໆ ທີ່ມີຢູ່ໃນຕໍາຣາໂຫຣາສາດລາວອີກຫຼາຍປະການ ເຊັ່ນ: ຫຼັກ ເກນ ແລະ ວິທີຄໍານວນມັດທະຍົມ ແລະ ສໍາຜຸດພຣະເຄາະໜ່ວຍອື່ນໆ ຕະຫຼອດວິທີຜູກດວງຊາຕາ ຄໍານວນຫາວັນ ແລະ ເວລາ ທີ່ຈະມີອຸປະຣາຄາ (ອາຄາດສູນຕາເວັນແລະກົບກິນເດືອນ) ເປັນຕົ້ນ ນອກຈາກສໍາຜຸດ ພຣະອາທິດ ແລະພຣະຈັນ.

ເຈົ້າເພັຊຣາຊ ຣັຕະນະວົງສາ
24 ມິນາ 2494 (ຄ.ສ 1951)

ເຈົ້າເພັດຊະລາດ ຣັຕນະວົງສາ



ຊີວະປະຫວັດຫຍໍ້
ມະຫາອຸປະຣາດ ເພັດຊະຣາດ

ຊາຕະ: ວັນທີ 1 ກຸມພາ ຄ.ສ. 1889,

ມໍຣະນະ : 14 ຕຸລາ ຄ.ສ. 1959

ເຈົ້າເພັດຊະຣາດ ປະສູດ ວັນອາທິດ ຍາມແຖໃກ້ທ່ຽງກາງວັນ ເວລາ 10. 30 ນ ເດືອນຍີ່ ແຮມ 12 ຄ່ຳ ປີກັດເປົ້າ ຈ.ສ 1251, ພ.ສ 2432 ທີ່ວັງຫໍຄຳຝ່າຍໜ້າ ໃນລັດຊະການ ເຈົ້າຊີວິດມະຫິນທອນເທພນິພາພອນ (ອຸ່ນຄຳ) ເປັນໂອຣົດອົງທີ 3 ຂອງ ມະຫາອຸປະຣາດບຸນຄົງ ແລະເຈົ້ານາງຄຳຄູ່ມ, ມີອ້າຍນ້ອງຮ່ວມພະບິດາ ແລະຕ່າງມາດາ 23 ຄົນ ໃນນັ້ນຮວມເຈົ້າສຸວັນນະພູມມາ ແລະ ເຈົ້າສຸພານຸວົງ. ທັງສາມພະອົງມີຊີວິດການເມືອງຜູກພັນ ຍູ້ໜູນກັນແລະກັນຢູ່ໃນການຕໍ່ສູ້ ເພື່ອເອກະຣາດຂອງຊາດ ເສຽສະຫຼະຄວາມສຸກສ່ວນພະອົງຕາມແບບຂອງຕົນ.

1. ການສຶກສາ:

ແຕ່ ປີ 1897- ປີ 1903: ບວດຮຽນເປັນສາມະເນນ ຮຽນພາສາລາວ ພາສາບາລີ ແລະເຂົ້າໂຮງຮຽນຝຣັ່ງ ລາວ ທີ່ ຕັ້ງຢູ່ທ້າຍພູສີເມືອງຫຼວງພະບາງ. ປີ 1904 : ສຶກສາທີ່ Collège Chasseloup Laubat ເມືອງໄຊ່ງ່ອນຫວຽດນາມໃຕ້. ປີ 1905 : ສຶກສາທີ່ໂຮງຮຽນອານານິຄົມ *Ecole Coloniale* ແລະ Lycée Montaigne ກຸງປາຣີປະເທດຝຣັ່ງ. ເວລາພັກໂຮງຮຽນທຸກໆປີ ໄດ້ໄປຮຽນພາສາອັງກິດ ທີ່ເມືອງ *Brigton* ປະເທດອັງກິດ ແລະສຶກສາ ດ້ານໂຫຣາສາດນຳ. ວິຊາຕົ້ນຕໍ ທີ່ຮຽນຢູ່ໃນວິທະຍາໄລອານານິຄົມ ແມ່ນວິຊາການປົກຄອງ ປະເພນີສາສະໜາແລະພາສາພື້ນເມືອງ. ປີ 1909 ກັບຄືນມາປະເທດລາວ, ເຮັດວຽກລ່າມແປພາສາຝຣັ່ງ ຕິດຕາມພະບິດາ ແລະເຈົ້າໜ້າທີ່ຝຣັ່ງ ເມືອກວດ ແລະສັນນະສູດພູໄຟໄໝ້ ເມືອງຫົງສາ ຈາກນັ້ນ ກັບຄືນໄປປະເທດຝຣັ່ງ ເພື່ອສຶກສາຕໍ່, ໄດ້ເອົາ ເຈົ້າສຸວັນນະລາດ ແລະເຈົ້າສຸວັນນະພາລົມ ພະອະນຸຊາໄປພ້ອມ.

24/VII
ຫ້າມຈຳໜ່າຍ

2. ຊີວິດ ແລະການຮັບລາຊະການ:

ໃນປີ 1912 ສຳເລັດການສຶກສາແລ້ວ ກັບຄືນບ້ານເກີດເມືອງນອນ ອຸປະສົມບົດເປັນພິກຂຸ ຢູ່ວັດປ່າຟາກຊຽງແມນ, ລາສິກຂາບົດແລ້ວ ອະພິເສກສົມລົດກັບ ເຈົ້າຍິງຄຳແວ່ນ ພະທິດາຂອງພະເຈົ້າສັກກະຣິນ (ຄຳສຸກ) ກັບເຈົ້າຍິງຄຳປິ່ນ. ນັບແຕ່ ປີ 1913 ມາ ຮັບຣາຊະການເປັນລ່າມແປພາສາຝຣັ່ງ, ແປໜັງສື, ຕິດຕາມພະບິດາເຊິ່ງເປັນອຸປະຣາດ ໄປກວດກາວຽກງານທົ່ວປະເທດ ເປັນເຫດໃຫ້ພະອົງໄດ້ຮູ້ເຫັນສະພາບບ້ານເມືອງຫຼາຍ, ໃນທ້າຍປີ ໄດ້ລົງມາຢູ່ວຽງຈັນ. ປີ 1917: ເປັນຜູ້ຊ່ວຍເລຂານຸການ ຜູ່ສຳເລັດລາຊະການ ລະຍະນີ້ ກໍໄດ້ອອກກວດລາຊະການຕາມແຂວງ ທົ່ວເມືອງລາວທຸກປີ ໂດຍໃຊ້ມ້າເປັນພາຫະນະ.

ປີ 1918 ໄດ້ຮັບພະລາຊະໂອງການ ລົງວັນ ທີ 17 ພະຈິກ 1918 ຂອງພະເຈົ້າສີສະວ່າງວົງ ປະທານບັນດາສັກໃຫ້ເປັນເຈົ້າລາຊະພາຄີໄນ ແລະ ປີ 1919, ໄດ້ຮັບພະລາຊະໂອງການເລກທີ 15 ລົງວັນທີ 11 ມາກ 1919 ເປັນຜູ່ສຳເລັດລາຊະການທົ່ວເມືອງລາວ. ໄດ້ຮັບແຕ່ງຕັ້ງເປັນອະທິບໍດີກົມການປົກຄອງລາຊະການລາວ Directeur du bureau des Affaires Indigènes, ໄດ້ວາງກຳນົດກົດລະບຽບສຳລັບການປົກຄອງໃຫ້ຂ້າລາຊະການລາວ ມີຕຳແໜ່ງຍົດ ແລະບັນດາສັກ, ຕັ້ງໂຮງຮຽນກົດໝາຍແລະການປົກຄອງໃຫ້ຊາວໜຸ່ມລາວ. ມີອາຍາ

ໃຫ້ປຸກເຮືອນໃສ່ທີ່ງຕາກແດດ ຄຸ້ມສີຖານເໜືອ 8 ຫຼັງ ສຳລັບໃຫ້ນັກຮຽນພັກຢູ່ແລະອຳລາຊະການລາວ ທີ່ໄປມາໄດ້ພັກເຊົາ(ມ້າງອອກຊຸມປາຍປີ 1990 ແລະປຸກຕຶກໂຮງແຮມໃສ່).

ປີ 1921 ດຳເນີນການໃຫ້ເຈົ້າສຸວັນນະລາດ(ພະອະນຸຊາ)ແປກົດໝາຍລາວ ຊຶ່ງຝຣັ່ງໃຊ້ນັບແຕ່ນັ້ນມາ ເມືອງລາວກໍມີກົດໝາຍຍຸຕິທຳ, ກົດໝາຍແພ່ງ, ກົດໝາຍແພ່ງ ແລະຄ້າຂາຍ, ກົດໝາຍອາຍາເປັນ ພາສາລາວ. ຈັດຕັ້ງສະພາທີ່ປຶກສາລາຊະການພື້ນເມືອງປະເທດລາວ Assemblée consultative indigène du Laos ໃຫ້ເຈົ້າເມືອງ ແລະ ເຈົ້າແຂວງ ໄປເຂົ້າປະຊຸມທີ່ວຽງຈັນປີລະເທື່ອ.

ປີ 1925 ແຕ້ມແຜນທີ່ແມ່ນ້ຳກະດິງ ສຳຫຼວດແຕ່ຍອດນ້ຳເຖິງປາກນ້ຳ, ສະໄໝນັ້ນບໍ່ມີບຸກຄົນໃດສາມາດລ່ອງຕາມແມ່ນ້ຳນັ້ນໄດ້. ໃຊ້ປືນສັງຫານເງືອກ(ງູໃຫຍ່)ໂຕນຶ່ງ ໃຫຍ່ທໍ່ຕົ້ນພ້າວ ຍາວ 5 ແມັດ ແລ້ວເອົາຂຶ້ນໃສ່ກຳປັ່ນປາວີ ຂຶ້ນມາວຽງຈັນ ໃຫ້ຄົນເບິ່ງເປັນທີ່ອັດສະຈັນ.

ປີ 1926 ເດືອນ 5 ບັນຊາການມ້າງແກ້ງ ແລະແປງຄອນນ້ຳຕາມແກ້ງຈັນ, ແກ້ງຫຼວງ ແກ້ງສະຍອກ ໝາຍກ້ອນຕ່າງໆ (balises) ຊຶ່ງເປັນອັນຕະລາຍທີ່ແກ້ງໃໝ່ ເພື່ອອຳນວຍຄວາມສະດວກ ແລະຄວາມປອດໄພໃນການເດີນເຮືອຕາມລຳແມ່ນ້ຳຂອງລະຫວ່າງວຽງຈັນ-ຫຼວງພະບາງ. ປີ1928 ເດືອນ 4(ອາວຣິນ) ທົດລອງເອົາເຄື່ອງຈັກຕິດໃສ່ເຮືອທີ່ເປັນເຮືອຈັກ ແລ່ນຈາກເມືອງວຽງຈັນຂຶ້ນໄປຕາມລຳແມ່ນ້ຳຂອງລະຍະ 230 ໄມ ຜົ້ນແກ້ງ 84 ແກ້ງ ໄປເຖິງເມືອງຫຼວງພະບາງ ຢ່າງປອດໄພ.

ປີ1929 ເດືອນພຶດສະພາ(5) ພາຜູ້ສຳເລັດລາຊະການແລະພັນລະຍາ ກັບນາງ Karpeles ເລຂາທິການພຸດທະບັນດິດສະພາອິນໂດຈີນ ຂີ່ເຮືອຈັກຈາກວຽງຈັນເຖິງເມືອງຫຼວງພະບາງ ທ່ຽວກຸດສິງການແລ້ວລ່ອງກັບຄືນໄປວຽງຈັນ. ໃນປີນີ້ໄດ້ຂໍໃຫ້ຜູ້ສຳເລັດລາຊະການຝຣັ່ງ ບັງຄັບບໍລິສັດເຮືອໂດຍສານຝຣັ່ງ Compagnie des Messageries Pluviales de Cochinchine ສ້າງເຮືອຈັກຄືທີ່ພະອົງຄິດອອກແບບ ແລ້ວເດີນທາງຕາມນ້ຳຂອງແຕ່ວຽງຈັນເຖິງຫຼວງພະບາງ ຂຶ້ນລ່ອງໃຫ້ເປັນປົກກະຕິ ແທນເຮືອທີ່ ບໍ່ໃຫ້ເກນເອົາກຸລີເຮືອໄປແຊວ ໄປທີ່ເຮືອເມຂຶ້ນລ່ອງອີກຕໍ່ໄປເປັນອັນຂາດ.

ປີ1931 ເດືອນ7 ເປັນຫົວໜ້າຄະນະໄປຮ່ວມການວາງສະແດງໃຫຍ່ທີ່ກຸງປາຣີສ Exposition Coloniale Internationale, ເອົາຮາວທຽນຂອງມະຫາອຸປະລາດບຸນຄົງ ທີ່ບູຊາໄວ້ວັດທາດ ແລະສິ່ງຂອງອື່ນໆອັນມີຄ່າ ໄປຮ່ວມວາງສະແດງໃນງານບຸນນີ້.

ປີ 1932 ໄດ້ຮັບແຕ່ງຕັ້ງໄປຮ່ວມກອງປະຊຸມໃຫຍ່ຝ່າຍເສດຖະກິດ ແລະ ການເງິນ ອິນໂດຈີນ Grand Conseil des Interets Economiques et Finances de l''Indochine. ໄດ້ຮັບແຕ່ງຕັ້ງເປັນ "ນາຍົກພຸດທະບັນດິດສະພາປະເທດລາວ" Institut Bouddhique du Laos ຕາມດຳລັດ ລົງວັນທີ 15 ມາກ 1932, ຈັດຕັ້ງລະບຽບສົງ Clergé bouddhique ໃຫ້ມີກອງປະຊຸມສົງ, ເຈົ້າລາຊະຄະນະແຂວງ ເຈົ້າຄະນະເມືອງ, ເຈົ້າຄະນະຕາແສງ ແລະເຈົ້າອາທິການວັດ,ທັງຕັ້ງ ໂຮງຮຽນປະຣິຍັດຕິທັມ(Ecole de Pali) ໃສ່ເມືອງວຽງຈັນແລະແຂວງຕ່າງໆ ໃຫ້ນັກບວດເຂົ້າໄປສຶກສາ ເມື່ອສອບເສັງໄດ້ ກໍຖວາຍປະກາດ ສະນິຍະບັດ, ຄັນຕາລະບັດ ຍົດປ.3. ຮົດສົງແລ້ວ ສົ່ງໄປສຶກສາຕໍ່ທີ່ໂຮງຮຽນປາລີຊັ້ນສູງ Ecole Supérieure de Pali ທີ່ກຸງພະນົມເປັນ ປະເທດກຳພູຊາ, ຕັ້ງຫໍສະໝຸດໃສ່ວັດຈັນ, ຣວບຣວມຄຳພີໃບລານ ໜັງສືລາວ ໄທ ຂະເມນ...., ຈັດພິມໜັງສືໄວຍາກອນລາວແບບຮຽນສຳລັບໂຮງຮຽນປາລີ. ຕັ້ງໂຮງຮຽນສິລະປະສາດລາວ Ecole des Arts laotiens ໃຫ້ພະສົງສາມເນນ ແລະຊາຍໜຸ່ມ ເຂົ້າໄປສຶກສາວິຊາຊ່າງແຕ້ມ ຊ່າງສັບດອກ ຊ່າງຄວັດ ຊ່າງຊ່ຽນ ຊ່າງປັ້ນ ຊ່າງຫຼໍ່ ຊ່າງກໍ່ ຊ່າງໄມ້ ໃຫ້ມີເງິນບຳລຸງການຮຽນ ເມື່ອຮຽນຈົບແລະໄດ້ຮັບໃບປະກາດສະນິຍະບັດແລ້ວສົ່ງໄປປະຈຳຢູ່ທຸກແຂວງ ເພື່ອສ້າງວັດວາອາຣາມ ແລະ ທີ່ຢູ່ອາໄສ.

ປີ 1934 ເດືອນ 5 ຜາບຜີຮ້າຍໜອງເມັກ ເມືອງທຸລະຄົມ ໃຊ້ປືນສັງຫານແຂ້ຕາຍ 20 ຕົວ.

ປີ 1935 ເດືອນມາກ (ສາມ): ຍັຽມຍາມພຸດທະບັນດິດສະພາອານາຈັກຂະເມນ ທີ່ກຸງພະນົມເປັນ ເພື່ອໃຫ້ພຸດທະສາສະໜາ ທັງສອງປະເທດກົມກຽວກັນແລ້ວສົ່ງພະສົງສາມເນນໄປສຶກສາໂຮງຮຽນປາລີຊັ້ນສູງ ທີ່ກຸງພະນົມເປັນ.

ປີ 1936 ປະຕິສັງຂອນ ວັດພຣະແກ້ວ ເມືອງວຽງຈັນ. ປີ 1937 ວັນທີ 2 ຊັງວິເຢ(01): ນຳພາການ ຕັດທາງແຕ່ຫຼັກ 43 ບ້ານໜອງສະໄປ ຫາບ້ານລິ່ງຊັນ ຍາວ 5 ກິໂລແມັດ ແລະສ້າງຂົວອ້າມຫ້ວຍສານ.

ປີ 1939 ໄດ້ຮັບເລືອກເປັນປະທານສະພາທີ່ປຶກສາຣາຊະການພື້ນເມືອງປະເທດລາວ. ນຳພາການ ສ້າງທາງ ແຕ່ບ້ານໂພນແກ້ວໄປຫາບ້ານກ້ວຍ ແຄມນ້ຳລີກ ຍາວ 2 ກ.ມ. ເກີດສົງຄາມໂລກຄັ້ງທີ 2 ມາແຕ່ຊຸມ ປາຍປີ 1930 ມາຈົນຮອດປີ 1940, ຝຣັ່ງຕົກຢູ່ໃນທ່າປະລາໄຊໃຫ້ແກ່ເຢຣະມັນ, ສະຫຍາມສະແດງທ່າທີແຂງ ກະດ້າງ ທວງທາວເອົາດິນລາວສ່ວນທີ່ເຄີຍແບ່ງໃຫ້ສະຫຍາມໃນເມື່ອກ່ອນ, ທັງສອງຊາດເກີດຜິດຖຽງກັນຂຶ້ນ ເຖິງຂັ້ນຍົກກຳລັງມາປະເຊີນກັນ ເຮັດໃຫ້ການທຽວເຮືອຕາມແມ່ນ້ຳຂອງຢຸດສະງັກລົງ. ເຈົ້າເພັດຊະຣາດອຸ້ນ ອ້ຽວສ້າງທາງເລກທີ 13 ເໜືອ ໂດຍເອົານັກໂທດຢູ່ຄຸກເມືອງວຽງຈັນ ເຂົ້າທຳແຕ່ບ້ານບວມພຸກໄປຫາເມືອງ ກາສີ, ນັກໂທດຢູ່ຄຸກເມືອງຫຼວງພະບາງ ແລະຊຽງຂວາງ ເຂົ້າທຳແຕ່ພູຄູນໄປຫາເມືອງກາສີ, ຕັ້ງເຈົ້າເມືອງ ເຈົ້າຄຳໝັ້ນ ວົງກົດລັດຕະນະເປັນຫົວໜ້າເມັ້າຕ່າງ 300 ຕົວ ໄປຕັ້ງຢູ່ເມືອງກາສີ ຕ່າງຂອງແຕ່ພູຄູນໄປຫາ ບ້ານບວມພຸກທຸກໆວັນ, ທາງຕອນພູຄູນໄປຫາບ້ານບວມພຸກ ສຳເລັດ ພາຍໃນ 6 ເດືອນກ່ອນໜ້າລະດູຝົນ ມີໄລ ຍະ 32 ກິໂລແມັດ.

3. ການເຄື່ອນໄຫວ ທາງການເມືອງ ລະຫວ່າງ ຄ.ສ. 1940 - 1946:

ໃນລະຫວ່າງເກີດສົງຄາມໂລກຄັ້ງທີສອງ ໄດ້ມີຂະບວນການກູ້ຊາດເກີດຂຶ້ນຢູ່ຫລາຍບ່ອນແລະຫຼາຍ ກຸ່ມຄົນ ໃນນັ້ນ ມີກຸ່ມທີ່ພະອົງຮູ້ຈັກແລະຮູ້ເຫັນເປັນໃຈນຳ ຄືກຸ່ມລາວອິດສະຣະ. ເຫດການສຳຄັນໃນລະຫວ່າງ ນັ້ນແມ່ນ ເລື່ອງຝຣັ່ງກັບສະຫຍາມ ເກີດຄວາມຂັດຂ້ອງຕໍ່ກັນໃນເລື່ອງດິນແດນລາວ ແຕ່ໃນທີ່ສຸດກໍແກ້ໄຂໂດຍໄປ ເຊັນສັນຍາກັນໃນວັນທີວັນທີ 9 ແມ(5) 1941 ຢູ່ທີ່ກຸງໂຕກຽວ ນະຄອນຫຼວງຍີ່ປຸ່ນ, ຝຣັ່ງຍົກເມືອງປາກລາຍ ເມືອງໄຊຍະບຸຣີ ແລະເມືອງທົ່ງສາ ໃຫ້ສະຫຍາມ.

1945 ເດືອນ 4 ວັນທີ 9 ມີນາ ເວລາກາງຄືນ ຍີ່ປຸ່ນຍຶດ ເມືອງວຽງຈັນໄດ້ແລະໃນເດືອນ 5 ວັນທີ 5 ກໍ ເດີນທັບມາເຖິງບ້ານນາຫຼວງ ຫ່າງຈາກຕົວເມືອງຫຼວງພະບາງ 1 ກິໂລແມັດ. ເວລາ 12 ໂມງ ພະອົງ ຮັບສັ່ງ ໃຫ້ເຊີນທະຫານຍີ່ປຸ່ນເຂົ້າເມືອງ. ເຊົ້າມື້ຕໍ່ມາ ເວລາ 8 ໂມງ ກໍຊັກທຸງຍີ່ປຸ່ນຂຶ້ນໄປຄູ່ຄຽງທຸງລ້ານຊ້າງຮົ່ມຂາວ ທີ່ໜ້າຫໍຄຳ ເຈົ້າຊີວິດປະກາດເອກະຣາດ(ຢູ່ໃນວົງໄພບູນຂອງຍີ່ປຸ່ນ).

ປີ 1945 ເດືອນສິງຫາ: ຍີ່ປຸ່ນປະລາໄຊໃຫ້ອາເມຣິກາໃນສົງຄາມໂລກຄັ້ງທີ 2, ຍົກພົນອອກຈາກ ເມືອງຫຼວງພະບາງ ລົງເຮືອລ່ອງໄປໃຕ້. ວັນທີ10 ຕຸລາ, ມີໂທລະເລກຂອງເສນາບໍດີກະຊວງມະຫາດໄທແຈ້ງວ່າ ເຈົ້າສີສະວ່າງວົງໄດ້ຖອດຍົດແລະປົດຕຳແໜ່ງ ພະອົງຈຶ່ງປະກາດບໍ່ກ່ຽວຂ້ອງກັບວຽກບ້ານການເມືອງອີກຕໍ່ໄປ. ແຕ່ປະຊາຊົນກັບອ້າຣາຊະການກຸ່ມນຶ່ງ ໄດ້ຈັດຕັ້ງກັນຂຶ້ນເປັນ "ລັດຖະບານລາວອິດສະຣະ" ໂດຍມີພະຍາຄຳ ມ້າວ ເປັນນາຍົກ ແລະ ປະກາດເອກະລາດໃນວັນທີ 12 ຕຸລາ ທີ່ວຽງຈັນ.

ຕົ້ນປີ1946 ເຈົ້າເພັດຊະຣາດ ຄືນໄປຢູ່ຫຼວງພະບາງ, ມາຮອດວັນທີ 4 ພຶດສະພາ (ກົງກັບວັນສຸກຂຶ້ນ 3 ຄ່ຳ ເດືອນ 6) ເວລາຄ້າຍຄ່ຳ ຈຶ່ງຕັດສິນພະໄທອອກຈາກເມືອງຫຼວງພະບາງໄປພ້ອມດ້ວຍຍາດພີ່ນ້ອງແລະ ຜູ້ຈົງ ຮັກພັກດີອີກ 40 ຄົນ, ເດີນທາງເຂົ້າປະເທດໄທ ເພື່ອຫຼົບໄພການເມືອງ. ເຈົ້າເພັດຊະຣາດກໍພຳນັກຢູ່ໃນ

ປະເທດໄທ ແລະໄດ້ຮັບແຕ່ງຕັ້ງໃຫ້ເປັນປະມຸກຂອງຄະນະກູ້ຊາດນັບແຕ່ເດືອນ ທັນວາປີ 1946, ໂດຍດຳເນີນການຕ່າງໆທັງປິດລັບແລະເປີດເຜີຍ. ຈົນເຫດການບ້ານເມືອງພິກປັ່ນໄປອີກ ໃນປີ1949 ຄະນະລັດຖະບານກູ້ຊາດອິດສະຣະ ແຕກກັນໄປຄົນລະທາງ, ເຈົ້າເພັດຊະຣາດຈຶ່ງວາງມືຈາກ ການເຄື່ອນໄຫວທາງການເມືອງ ແລະເວລານັ້ນ ພະອົງ ກໍມີບັນຫາດ້ານສຸຂະພາບແດ່.

ປີ 1956 ລັດຖະບານເຈົ້າສຸວັນນະພູມມາ(ພະອະນຸຊາ) ແຕ່ງຄະນະຜູ້ແທນ ໄປເຊີນສະເດັດກັບຄືນ.

ປີ 1957, ວັນທີ 22 ມີນາ: ກັບຄືນມາປະເທດລາວ ໂດຍທາງລົດໄຟ.

ຮວມເວລາລີ້ໄພ ຢູ່ປະເທດໄທ 11 ປີ.

4. ຊີວິດ ໃນບັ້ນທ້າຍ:

ຫຼັງຈາກກັບມາຢູ່ຫຼວງພະບາງໄດ້ບໍ່ດົນ ກໍໄດ້ຮັບພະລາຊະທານຖານັນດອນສັກເປັນເຈົ້າມະຫາອຸປະຣາດ ຕາມເດີມ ແລ້ວໄປຢ້ຽມຢາມປະຊາຊົນໃນ ແຂວງຫົວພັນຊຳເໜືອ ແລະຜົ້ງສາລີ. ເຈົ້າສຸພານຸວົງ ຫົວໜ້າຄະນະປະເທດລາວ ຂ້າຣາຊະການ ທະຫານ ແລະພົນລະເຮືອນ ກັບປະຊາຊົນຮັບຕ້ອນພະອົງເປັນຢ່າງດີ.

ປີ 1959 ເດືອນ10 ວັນພະຫັດ(ກົງກັບມື້ ຂຶ້ນ 8 ຄ່ຳ) ລັດຖະບານໄດ້ເອົາຕຶກທີ່ມອບຖວາຍເປັນພະຕຳໜັກຂອງ ພະອົງຢູ່ທີ່ນະຄອນວຽງຈັນ ເປັນສຳນັກງານນາຍົກລັດຖະມົນຕີ.

ວັນພຸດທີ 14 ຕຸລາ 1959 ກົງກັບວັນຂຶ້ນ12 ຄ່ຳ ເດືອນ 11 ຍາມພາດລັ່ນ ເວລາ 5.30 : ສະເດັດທິວົງຄົດທີ່ ວັງສີສຸວັນນະທຳຄຳຝ່າຍໜ້າເໜືອບ້ານຊຽງແກ້ວ ຍ້ອນອຳມະພາດ ອັນເນື່ອງດ້ວຍເສັ້ນໂລຫິດໃນສະໝອງແຕກ ຮວມພະຊົນມາຍຸ 69 ປີ 7 ເດືອນ ກັບ 12 ວັນ.

ຜົນງານການຂຽນ ທີ່ສຳຄັນ:

- ຕຳຣາໂຫຣາສາດ ພາກປະຕິທິນ, ຄົ້ນຄວ້າ ແລະພິມເປັນພາສາໄທ ແລະ ຝຣັ່ງ ປີ 1957
- ອາວຸດປືນ ແລະກິລາລະເນື້ອ, ພິມຢູ່ປະເທດໄທ.

ດ້ານຄອບຄົວ:

ເຈົ້າເພັດຊະຣາດ ອະພິເສກ ກັບ ເຈົ້າຍິງຄຳແວ່ນ ມີພະທິດາ ແລະພະໂອຣົດດັ່ງນີ້

1. ເຈົ້າຍິງຄຳຜີວ, ໄປສຶກສາທີ່ກຸງປາຣີ ປະເທດຝຣັ່ງ, ແຕ່ງດອງກັບເຈົ້າສົມສະນິດ ວົງກົດລັດຕະນະ ບໍ່ມີລູກ, ສິ້ນພະຊົນທີ່ເມືອງວຽງຈັນ ວັນທີ 10 ໂນວາມ 1943.
2. ເຈົ້າຍິງຄຳຈັນ, ໄປສຶກສາທີ່ເມືອງຮາໂນຍ ຫວຽດນາມເໜືອ ແຕ່ງດອງກັບຄົນຝຣັ່ງຊື່ *Hippolyte Bastier* ປັດຈຸບັນ ມີລູກຫຼານ ຢູ່ປະເທດຝຣັ່ງ.
3. ເຈົ້າຊາຍສຸຣິຍະຣາດ, ໄປສຶກສາທີ່ເມືອງໄຊງ່ອນ ຫວຽດນາມໃຕ້ ແຕ່ງດອງກັບນາງສີຟອງ ລູກມະຫາແກ້ວ ເມືອງວຽງຈັນ, ມີລູກຊາຍຄົນດຽວ ຊື່ທ້າວວໍລະດາ.

ອະພິເສກຄັ້ງທີ 2 ກັບ ໝ່ອມນາງສີ, ເມືອງວຽງຈັນ ມີພະທິດາ ແລະພະໂອຣົດ:

1 - ເຈົ້າຍິງອາລຸນນາ, ສຶກສາຢູ່ປະເທດໄທ ເປັນໝໍ ຊ່ຽວຊານເດັກ ດຸສະດີບັນດິດ, ຢູ່ປະເທດໄທ

2 - ເຈົ້າຊາຍມະໂນລົມ, ສຶກສາຢູ່ປະເທດໄທ ເປັນວິສະວະກອນກົນຈັກ, ຢູ່ປະເທດໄທ.

ກ່ຽວກັບ ມະຫາສີລາ ວີຣະວົງສ໌

ຊາຕະ : 01 ສິງຫາ 1904
ມໍຣະນະ : 18 ກຸມພາ 1987

ກ່ອນເສຽຊີວິດ ໃນເດືອນກຸມພາ 1987 ມະຫາ ສີລາ ວີຣະວົງສ໌ ເປັນທີ່ເປິກສາຜູ່ຊ່ຽວຊານຢູ່ສະຖາບັນຄົ້ນຄວ້າວິທະຍາສາດສັງຄົມ ກະຊວງສຶກສາທິການ ທ່ານເປັນຜູ່ຊົງຄຸນວຸດທິ ທີ່ໃຫ້ຄຳເປິກສາຫຼາຍດ້ານຢູ່ໃນສະຖາບັນ ເຊັ່ນ ປະຫວັດສາດ ພາສາ-ວັນນະຄະດີ ອັກສອນສາດ ໂຫຣາສາດ. ໃນພິທີສົ່ງສະການຂອງທ່ານມີແຂກຜູ່ມີກຽດທັງລາວ ແລະຕ່າງປະເທດ ໄປຮ່ວມສະແດງຄວາມເຄົາຣົບ ແລະໄວ້ອາໄລແດ່ທ່ານ ເປັນຈຳນວນມາກ.

ຕະຫຼອດຊີວິດ ທ່ານມະຫາ ສີລາ ວີຣະວົງສ໌ ອຸທິດຕົນ ເພື່ອການຟື້ນຟູ ພາສາ-ວັນນະຄະດີແລະອັກສອນສາດລາວ ໄດ້ຕໍ່ສູ້ຕ້ານກັບພວກທີ່ຢາກເອົາອັກສອນລາແຕງ (Latin) ໃຊ້ແທນອັກສອນລາວ ໃນຕົ້ນຊຸມປີ 1930 ແລະເມື່ອມີມະຕິຕົກລົງໃຫ້ໃຊ້ອັກສອນລາວຂຽນພາສາລາວແລ້ວ ທ່ານກໍໄດ້ພະຍາຍາມເສີມຂະຫຍາຍອັກສອນລາວ ໃຫ້ທັນສະໄໝຂຶ້ນໂດຍເພີ່ມວັນນະຍຸດເຂົ້າ ເພື່ອໃຫ້ອ່ານໜັງສືລາວງ່າຍຂຶ້ນແຕ່ງຫຼັກໄວຍາກອນລາວເພື່ອໃຫ້ການຂຽນໜັງສືລາວ ເປັນລະບຽບ ຖືກຕ້ອງຕາມຫຼັກເກນ ແຕ່ງວັດຈະນານຸກົມພາສາລາວ, ປະລິວັດແລະລິຈະນາໜັງສືວັນນະຄະດີບູຮານມາເປັນອັກສອນສະໄໝໃໝ່ດັ່ງທີ່ເຮົາໄດ້ອ່ານກັນຢູ່ທຸກວັນນີ້ ເຊັ່ນເລື່ອງ: ສັງສິນໄຊ, ນາງ ຕັນໄຕ, ສຽວສະຫວາດ ເວດສັນດອນຊາດົກ ທ້າວຮຸ່ງ-ທ້າວເຈືອງ ແລະອື່ນໆ.

ໃນດ້ານພຸດທະສາສະໜາ ມະຫາສີລາ ເປັນອາຈານສອນພາສາບາລີຢູ່ໃນໂຮງຮຽນສົງ ຊຶ່ງຂຶ້ນກັບພຸດທະບັນດິດຕະສະພາຈັນທະບູຣີອັນເປັນສະຖາບັນ ແຫ່ງທຳອິດຂອງປະເທດລາວໃນຕົ້ນຊຸມປີ 1930 ທ່ານໄດ້ຂຽນຕຳລາຮຽນພາສາບາລີ ຊຳລະແກ້ໄຂໜັງສືສູດມົນ ແລະຕຳລາຕ່າງໆ ສຳຫຼັບໃຊ້ໃນໂຮງຮຽນ ດັ່ງກ່າວນີ້ ນອກນັ້ນຍັງໄດ້ຄຳນວນປະຕິທິນລາວອອກມາຮັບໃຊ້ ເປັນເທື່ອທຳອິດ ຄຽງຄູ່ກັບປະຕິທິນສາກົນ.

ໃນດ້ານປະຫວັດສາດ ທ່ານໄດ້ແຕ່ງປຶ້ມພົງສາວະດານລາວ ຫົວທຳອິດຂຶ້ນພິມໂດຍກະຊວງສຶກສາທິການ. ໃນຖານະທີ່ທ່ານເອງກໍເປັນນັກເຄື່ອນໄຫວຢູ່ໃນຂະບວນລາວອິດສະລະ ທ່ານ ຈຶ່ງມີສ່ວນຮ່ວມໃນການປະກາດເອກະລາດລາວ ໃນວັນທີ 12 ຕຸລາ 1945 ທັງໄດ້ຮັບກຽດເປັນທີ່ເປິກສາຂອງລັດຖະບານອິດສະລະ ແລະເປັນຜູ່ໜຶ່ງທີ່ຮ່ວມອອກແບບທຸງພະຈັນເພັງ ອັນກາຍມາເປັນທຸງຊາດໃນປັດຈຸບັນ.

ມະຫາສິລາ ເກີດທີ່ບ້ານໜອງພື້ນຖ່ານ ແຂວງຮ້ອຍເອັດ ປະເທດໄທ ຈາກຄອບຄົວຊາວນາ ທີ່ສືບເຊື້ອສາຍມາຈາກຈຳປາສັກ ແລະວຽງຈັນ ຕັ້ງແຮກຮຽນໜັງສືດ້ວຍການເປັນສັງກະລີວັດ ແລະບວດເປັນຈົວນ້ອຍ, ພ້ອມດຽວກັນ ພໍ່ເຖົ້າ(ພໍ່ຂອງແມ່)ກໍໄດ້ສອນໜັງສືລາວໃຫ້ ໂດຍອີງຕາມໜັງສືໃບລານອັນມີທັງນິທານ ແລະໜັງສືພື້ນກ່ຽວກັບເຈົ້າຣາຊະວົງທີ່ທຳການສູ້ຮົບກັບໄທ ຈົນທ່ານມະຫາສິລາ ເກີດມີຄວາມຄິດຮັກຊາດຢ່າງແຮງກ້າ ແລະເມື່ອສອບເສັງໄດ້ມະຫາຫ້າປະໂຫຍກທີ່ບາງກອກແລ້ວກໍເດີນທາງມາວຽງຈັນ ໃນປີ1930 ແລະເຂົ້າເຮັດວຽກເປັນ ເລຂານຸການ ຂອງເຈົ້າເພັດຊະຣາດ ມີໂອກາດໄດ້ປະກອບພາລະກິດຟື້ນຟູການສຶກສາ ພຣະພຸດສາສະໜາ ພາສາລາວ ແລະວັນນະຄະດີລາວ ແລະອື່ນໆ.

ພາຍຫຼັງການປົດປ່ອຍໃນປີ 1975 ມະຫາສິລາ ໄດ້ສະໜອງຕອບຄຳຮຽກຮ້ອງຂອງກະຊວງສຶກສາທິການ ໂດຍຮັບໜ້າທີ່ເປັນພະນັກງານຊ່ຽວຊານ ທັງທີ່ທ່ານໄດ້ອອກກິນເບັ້ຽບຳນານມາແຕ່ປີ 1963 ແລ້ວ ຍ້ອນຄວາມເປັນຫ່ວງເປັນໃຍນຳພາສາ-ວັນນະຄະດີລາວ ທີ່ເປັນເອກະລັກທາງວັດທະນະທຳລາວທ່ານໄດ້ເຮັດວຽກຄົ້ນຄວ້າ ລິດຈະນາໜັງສືບູຮານຈົນເຖິງວາລະສຸດທ້າຍ ຂອງຊີວິດ ແລະປະຜົນງານອັນເປັນມໍລະດົກທາງວັດທະນະທຳ ໄວ້ໃຫ້ອະນຸຊົນຮຸ່ນຫຼັງ ໄດ້ສືບທອດຢ່າງຫຼວງຫຼາຍ.

ໃນດ້ານຄອບຄົວ ມະຫາສິລາ ແຕ່ງດອງຄັ້ງທີ 1 ກັບນາງແກ້ວຕາ ຄົນບ້ານໜອງປາໄນ ມີລູກຮ່ວມກັນ 3 ຄົນ ແລະຄັ້ງທີ 2 ກັບນາງມາລີ ຄົນ ບ້ານອູບມຸງ ຕາແສງສີຖານເໜືອ ເມືອງສີໂຄດຕະບອງ ກຳແພງນະຄອນວຽງຈັນ ແລະມີລູກນຳກັນ 14 ຄົນ, ເຮືອນປຸກຢູ່ທີ່ຄຸ້ມນາຄຳທົ່ງ ແມ່ນທີ່ພັກພິງບ່ອນສຸດທ້າຍ. ຊັບສົມບັດສ່ວນຕົວທີ່ຝາກໄວ້ແກ່ລູກຫຼານ ກໍມີທັງຜົນງານການຄົ້ນຄວ້າ ການແຕ່ງ ທັງທີ່ໄດ້ພິມແລະບໍ່ທັນໄດ້ພິມກວ່າ 200 ເລື່ອງ ແລະເອກະສານເກົ່າແກ່ ທີ່ເພິ່ນມ້ຽນສະສົມ ແລະຊົມໃຊ້ເປັນຄູ່ມືຄົ້ນຄວ້າ.

ຂໍ້ຄວາມທົ່ວໄປ

ປະຕິທິນ ເປັນສິ່ງທີ່ທຳຂຶ້ນສຳຫຼັບໝາຍລຳດັບ ວັນ ດິຖີ ແລະ ເດືອນ ແຫ່ງປີນຶ່ງໆ ເພາະສະນັ້ນ ປະຕິທິນທຸກແບບກໍຕ້ອງປະກອບດ້ວຍ ວັນ ດິຖີ ເດືອນ ພ້ອມກັບນາມຂອງປີ ແລະ ສັກຣາດ ແຕ່ຕ່າງປະຕິທິນ ກໍຕ່າງໃຊ້ວິທີນັບ ແລະກຳໜົດເວລາຕ່າງກັນໄປຕາມເກນ ເຊິ່ງບັນຍັດໄວ້ໃນຕຳຣາໂຫຣາສາດທີ່ເອົາມາເປັນຫຼັກນັ້ນ.

ດັ່ງນັ້ນ ກ່ອນຈະກ່າວເຖິງວິທີຄູນສັງຂານ (ທຳອັດຕາຖະເຫຼີງສົກ) ເພື່ອເຮັດປະຕິທິນຂຶ້ນໄດ້ນັ້ນ ຈະຕ້ອງໄດ້ອະທິບາຍເລື່ອງກ່ຽວກັບສິ່ງທັງປວງອັນປະກອບເຂົ້າກັບປະຕິທິນນັ້ນກ່ອນ ເມື່ອຮູ້ຈັກກຳໜົດ ແລະ ກົດເກນແຫ່ງສິ່ງເຫຼົ່ານັ້ນ ແລະຮູ້ຂໍ້ບັນຍັດຂອງຕຳຣາໂຫຣາສາດທຸກປະການແລ້ວ ຈຶ່ງຈະເຂົ້າໃຈວິທີຄຳນວນເລກໄດ້ດີ.

ອີກຢ່າງນຶ່ງ ເພື່ອໃຫ້ສະດວກທີ່ສຸດແກ່ຜູ້ທີ່ຕ້ອງການສຶກສາໂຫຣາສາດນັ້ນ ຂ້າພະເຈົ້າໄດ້ພາກພຽນ ຄຳນວນເລກເປັນຕົວຢ່າງໄວ້ຕາມຂໍ້ບັນຍັດເກືອບທຸກໆຂໍ້ ທັງໄດ້ເກັບເອົາຫຼັກຖານຕ່າງຕ່າງແຫ່ງຕຳຣາໂຫຣາສາດຝຣັ່ງ ມາທຽບກັບຫຼັກໂຫຣາສາດ ຂອງເຮົາໄວ້ດ້ວຍ.

ຕອນທີນຶ່ງ

ສິ່ງທີ່ປະກອບກັບປະຕິທິນ

1. ວັນ

ລາວເຮົານັບເວລາກາງວັນ ແລະ ກາງຄືນໂຮມກັນເປັນ "ວັນ" ນຶ່ງ ໂດຍຖືເອົາລະຍະເວລາທີ່ໂລກປິ່ນອ້ອມໂຕເອງຄົບຮອບນຶ່ງ ເປັນຫຼັກແຫ່ງການກຳໜົດເວລາຂອງວັນ ແລ້ວແບ່ງກຳໜົດເວລານັ້ນອອກເປັນ 24 ຊົ່ວໂມງຖ້ວນ.

ສ່ວນໂລກປິ່ນອ້ອມຕົວເອງຈະຊ້າຫຼືຈະໄວພໍພຽງໃດນັ້ນຕຳລາໂຫຣາສາດບໍ່ໄດ້ກ່າວເຖິງ ແຕ່ໂຫນຝຣັ່ງ ກ່າວໄວ້ວ່າ ມີຄວາມໄວເຖິງ 465 ແມັດຕໍ່ວິນາທີ ຫຼື 1674 ກິໂລແມັດຕໍ່ 1 ຊົ່ວໂມງ ຄືໄວກວ່າລູກປືນເລັກຍາວ ລາງຊະນິດ.

ວັນຂອງເຮົາມີຈຳນວນ 7 ວັນ ແລະມີຊື່ພະເຄາະໝາຍໄວ້ທຸກໆວັນ ຕາມລຳດັບກັນດັ່ງຕໍ່ໄປນີ້: (1) ອາທິດ (2) ຈັນ (3) ອັງຄານ (4) ພຸດ (5) ພະຫັດ (6) ສຸກ (7) ເສົາ.

ຮອບນຶ່ງແຫ່ງວັນທັງ 7 ທີ່ລຳດັບກັນມາແຕ່ວັນອາທິດເຖິງວັນເສົາ ຮຽກວ່າ "ສັບປະດາ" ຫຼື "ອາທິດ" ນຶ່ງ.

ຊາວຝຣັ່ງກໍໃຊ້ວັນແບບດຽວກັນກັບທາງເຮົາທຸກປະການຄື:

(1) ຖືເອົາລະຍະເວລາທີ່ໂລກປິ່ນອ້ອມຕົວເອງຄົບນຶ່ງຮອບ ເປັນຫຼັກແຫ່ງການກຳໜົດເວລາຂອງວັນ ແລະ ແບ່ງກຳໜົດເວລານັ້ນເປັນ 24 ຊົ່ວໂມງຖ້ວນຄືກັນ.

(2) ສ່ວນສັບປະດາ ກໍຕັ້ງຕົ້ນແຕ່ວັນອາທິດໄປຄືກັນກັບທາງເຮົາ.

ກ. ແຜນມື້

ນອກຈາກວັນທັງ 7 ດັ່ງກ່າວມານັ້ນ ບູຮານເຮົາຍັງໃຊ້ວັນອີກແບບນຶ່ງມີຈຳນວນ 60 ວັນ. ວັນແບບນີ້ມີຊື່ ແມ່ມື້ປະກອບກັບຊື່ລູກມື້ ໝາຍໄວ້ທຸກໆວັນ. ແມ່ມື້ນັ້ນມີຈຳນວນ 10 ເຊິ່ງເອົາໃຊ້ 6 ຮອບ ແລະ ລູກມື້ມີຈຳນວນ 12 ເຊິ່ງເອົາໃຊ້ 5 ຮອບ ຈຶ່ງເປັນຊື່ປະກອບຕ່າງໆກັນ 60 ຊື່ ສຳລັບໝາຍຈຳນວນ 60 ວັນນັ້ນ.

ແມ່ມື້ມີຊື່ ແລະລຳດັບກັນດັ່ງນີ້: ກາບ, ຮັບ, ຮວາຍ, ເມີງ, ເປີກ, ກັດ, ກົດ, ຮ້ວງ, ເຕົ່າ, ກາ.

ລູກມື້ມີຊື່ ແລະລຳດັບກັນດັ່ງນີ້: ໃຈ້ (ຊວດ) ເປົ້າ(ສະຫຼູ) ຍີ່(ຂານ) ເໝົ້າ(ເຖາະ) ສີ(ມະໂຮງ) ໃສ້(ມະເສັງ) ສະງ້າ(ມະເມັຽ) ມົດ(ມະແມ) ສັນ(ວອກ) ເຮົ້າ(ຣະກາ) ເສັດ(ຈໍ) ໃຄ້(ກຸນ).

ສະນັ້ນເມື່ອເຮັດເປັນຕາລາງແລ້ວ ຕາລາງໃດກໍມີຊື່ "ແມ່ມື້" ແລະຊື່ "ລູກມື້" ປະກອບກັນຢູ່ທຸກໆຕາລາງ ແລະຊື່ປະກອບນັ້ນໆ ແຕ່ລະຊື່ກໍໃຊ້ເປັນຊື່ຂອງແຕ່ລະວັນຕ່າງໆ ກັນຕະຫຼອດທັງ 60 ຕາລາງ ຫຼື ທັງ 60 ວັນນັ້ນ ດັ່ງຈະສັງເກດໄດ້ຕາມແຜນມື້ທີ່ໄດ້ລົງໄວ້ຕໍ່ໄປນີ້.

ແຜນມື້ນີ້ຍັງໃຊ້ກັນຢູ່ທຸກແຫ່ງ (ໃນປະເທດລາວ) ແລະ ພົນລະເມືອງກໍຍັງຖືຕາມທຳນຽມບູຮານຢູ່ສະເໝີຄື ພັກກິດບ້ານການເມືອງທຸກມື້ "ຮ້ວງ" ແລະ ມື້ "ຮວາຍ" ເພາະຖືກັນວ່າເປັນມື້ຄະລຳ ຄື ເປັນວັນທີ່ບໍ່ຄວນປະກອບກິດຈະການງານທຳມະດາ ຕ້ອງພັກເພື່ອປະກອບການກຸສົນຕາມສາສະໜາປະເພນີ ແລະໃນທຳນອງດຽວກັນນີ້ກໍຍັງຖືເອົາວັນ "ຄະລຳຮ້ວງ" ແລະ "ຄະລຳຮວາຍ" ນັ້ນເປັນວັນນັດລົງລາດ "ຕະຫຼາດນັດ" ຕາມແຄມແມ່ນ້ຳນ້ອຍໃຫຍ່ ເພື່ອແລກປ່ຽນສິນຄ້າຊື້ຂາຍກັນ ເຊິ່ງຮຽກວ່າ "ໂຊະລາດ" (ລົງຕະຫຼາດນັດ).

ຕາມຫົວເມືອງລາງແຫ່ງຍັງຖືເອົາວັນ "ຮ້ວງ" ແລະວັນ "ຮວາຍ" ນັ້ນເປັນມື້ລົງຕະຫຼາດນັດດັ່ງຕະຫຼາດ ເມືອງສິງ (ແຂວງຫົວຂອງ) ປັດຈຸບັນນີ້ເປັນແຂວງຫຼວງນ້ຳທາ ແລະຕະຫຼາດ "ລາດຮ້ວງ" ແຂວງຊຽງຂວາງ ເປັນຕົ້ນ, ປະເພນີນີ້ລາວຖືເປັນວັນພັກການ ເປັນປົກກະຕິ ດັ່ງດຽວກັນກັບບາງໆປະເທດ ຖືເອົາວັນທິດເປັນວັນພັກການ.

24 / VII

ແຜນມື້

ກາບ ໃຈ້	ຮັບ ເປົ້າ	ຮວາຍ ຍີ່	ເມີງ ເໝົ້າ	ເປີກ ສີ່	ກັດ ໃສ້	ກົດ ສະງ້າ	ຮ້ວງ ມົດ	ເຕົ່າ ສັນ	ກາ ເຮົ້າ
ກາບ ເສັດ	ຮັບ ໃຄ້	ຮວາຍ ໃຈ້	ເມີງ ເປົ້າ	ເປີກ ຍີ່	ກັດ ເໝົ້າ	ກົດ ສີ່	ຮ້ວງ ໃສ້	ເຕົ່າ ສະງ້າ	ກາ ມົດ
ກາບ ສັນ	ຮັບ ເຮົ້າ	ຮວາຍ ເສັດ	ເມີງ ໃຄ້	ເປີກ ໃຈ້	ກັດ ເປົ້າ	ກົດ ຍີ່	ຮ້ວງ ເໝົ້າ	ເຕົ່າ ສີ່	ກາ ໃສ້
ກາບ ສະງ້າ	ຮັບ ມົດ	ຮວາຍ ສັນ	ເມີງ ເຮົ້າ	ເປີກ ເສັດ	ກັດ ໃຄ້	ກົດ ໃຈ້	ຮ້ວງ ເປົ້າ	ເຕົ່າ ຍີ່	ກາ ເໝົ້າ
ກາບ ສີ່	ຮັບ ໃສ້	ຮວາຍ ສະງ້າ	ເມີງ ມົດ	ເປີກ ສັນ	ກັດ ເຮົ້າ	ກົດ ເສັດ	ຮ້ວງ ໃຄ້	ເຕົ່າ ໃຈ້	ກາ ເປົ້າ
ກາບ ຍີ່	ຮັບ ເໝົ້າ	ຮວາຍ ສີ່	ເມີງ ໃສ້	ເປີກ ສະງ້າ	ກັດ ມົດ	ກົດ ສັນ	ຮ້ວງ ເຮົ້າ	ເຕົ່າ ເສັດ	ກາ ໃຄ້

ຫ້າມຈຳໜ່າຍ

ຂ. ເວລາຕັ້ງຕົ້ນວັນ

ໃນສະໄໝນີ້ເຮົາຖືວ່າ ວັນແຮກຕັ້ງຕົ້ນແຕ່ວິນາທີທຳອິດຫຼັງທ່ຽງຄືນໄປ ແລະ ສ້ຽງສຸດລົງໃນເວລາທ່ຽງຄືນຂອງວັນໃໝ່ ມີໄລຍະເວລາ 24 ຊົ່ວໂມງຖ້ວນ.

ການທີ່ຖືເອົາເວລາທ່ຽງຄືນເປັນກຳໜົດເວລາຕັ້ງຕົ້ນວັນນີ້ ເປັນແບບແຜນຂອງຝຣັ່ງເຊິ່ງເຮົາຫາກໍນິຍົມໃຊ້ກັນລະຫວ່າງ 40 ປີມານີ້ເອງ ແລະ ປະເທດໄທກໍໄດ້ປະກາດໃຊ້ເປັນທາງຣາຊະການມາແຕ່ວັນທີ 10 ກັນຍາ ພ.ສ 2460 (ຈ.ສ. 1279 ຄ.ສ. 1917).

ແຕ່ຕາມແບບແຜນເດີມຂອງເຮົາ ທີ່ຖືກັນມາເປັນປົກກະຕິແຕ່ບູຮານນັ້ນ ວັນແຮກຕັ້ງຕົ້ນເອົາແຕ່ເວລາ ທີ່ແລເຫັນແສງອະຣຸນໄປ ແລະສ້ຽງສຸດລົງໃນເວລາເຫັນພະອາທິດຂຶ້ນອີກເທື່ອນຶ່ງຄືນັບແຕ່ເວລາຮຸ່ງຂອງວັນນຶ່ງ ໄປຈົນເຖິງຮຸ່ງແຫ່ງວັນໃໝ່ ມີລະຍະເວລາ 24 ຊົ່ວ ໂມງຖ້ວນ ຄືກັນກັບທາງຝຣັ່ງ.

ຊາວຝຣັ່ງນັບເວລາ 24 ຊົ່ວໂມງນັ້ນເປັນງວດດຽວ ຕະຫຼອດໄປ ຄືນັບແຕ່ 1 ໄປຈົນເຖິງ 24 ໂມງ ແຕ່ບູຮານເຮົາໃຊ້ວິທີນັບເວລາ 24 ຊົ່ວໂມງນັ້ນໂດຍແຍກອອກເປັນ 3 ຕອນດັ່ງນີ້:

(1) ຕອນເຊົ້າ ຕັ້ງແຕ່ຮຸ່ງຈົນເຖິງທ່ຽງວັນ ຄືຕັ້ງແຕ່ 6 ໂມງ ເຖິງ 12 ໂມງ ໂດຍໃຊ້ນັບເວລາບາລິກາ ແຕ່ 1 ໄປເຖິງ 6 ໂມງ ແລະ ໃຊ້ຄຳວ່າ "ໂມງເຊົ້າ" ເປັນຄຳໝາຍເວລາ ດັ່ງນັ້ນເມື່ອບາລິກາໝາຍ 7 ໂມງ ທາງເຮົາຈຶ່ງຮຽກວ່າ 1 ໂມງເຊົ້າ, 8 ໂມງ ທາງເຮົາຈຶ່ງເປັນ 2 ໂມງເຊົ້າ ແລະ ຕໍ່ໆໄປຈົນເຖິງ 12 ໂມງ ເຊິ່ງເຮົາຮຽກວ່າ 6 ໂມງເຊົ້າ ຫຼື ທ່ຽງວັນ.[1]

(2) ຕອນບ່າຍ ຕັ້ງແຕ່ທ່ຽງວັນໄປເຖິງຄ່ຳ ຄືຕັ້ງແຕ່ 12 ໂມງ ໄປເຖິງ 18 ໂມງ ໂດຍໃຊ້ນັບເວລາບາລິກາຕັ້ງແຕ່ 1 ໄປເຖິງ 6 ໂມງ ຄືກັບຕອນເຊົ້າ ແຕ່ໃຊ້ຄຳວ່າ "ໂມງແລງ" ເປັນຄຳໝາຍເວລາແທນຄຳວ່າ "ໂມງເຊົ້າ" ນັ້ນ ດັ່ງນັ້ນເມື່ອບາລິກາໝາຍ 13 ໂມງ ເຮົາຈຶ່ງຮຽກວ່າ 1 ໂມງແລງ ຫຼື ບ່າຍໂມງນຶ່ງ, 14 ໂມງ ທາງເຮົາຈຶ່ງເປັນ 2 ໂມງແລງ ຫຼື ບ່າຍສອງໂມງ ແລະຕໍ່ໆໄປຈົນເຖິງ 18 ໂມງ ເຊິ່ງເຮົາຮຽກວ່າ 6 ໂມງແລງ ຫຼື ຍ່ຳຄ່ຳ.

(3) ຕອນກາງຄືນ ຕັ້ງແຕ່ຍາມຄ່ຳໄປເຖິງຮຸ່ງ ຄືຕັ້ງແຕ່ 18 ໂມງ ໄປເຖິງ 6 ໂມງໂດຍໃຊ້ນັບເວລາ ບາລິກາຕັ້ງແຕ່ 1 ໄປເຖິງ 12 ໂມງເປັນງວດດຽວ, ແຕ່ໃນຕອນນີ້ໃຊ້ຄຳວ່າ ທຸ້ມ ແທນຄຳວ່າ ໂມງ ທີ່ໃຊ້ກັນໃນສອງຕອນແຫ່ງກາງວັນນັ້ນ. ດັ່ງນັ້ນເມື່ອບາລິກາໝາຍ 19 ນ. ທາງເຮົາຈຶ່ງຮຽກວ່າ "1 ທຸ້ມ", 20 ນ. ທາງເຮົາຈຶ່ງເປັນ 2 ທຸ້ມ 24 ນ. ເຮົາຈຶ່ງຮຽກວ່າ 6 ທຸ້ມ ຫຼື "ທ່ຽງຄືນ" ແລະຕໍ່ໆໄປຈົນເຖິງ 6 ນ. ເຊິ່ງເຮົາຮຽກວ່າ 12 ທຸ້ມ ຫຼື ຮຸ່ງ.

---

(1) ການນັບເລກແບບນີ້ ຄົນຝັ່ງຂວາຍັງໃຊ້ຢູ່ ແຕ່ຄົນລາວ ໂດຍທົ່ວໄປເຊົາໃຊ້ແລ້ວ, ກໍເລີຍເຂົ້າໃຈວ່າ ວິທີນັບແບບນັ້ນ ເປັນຂອງຊາດໄທໄປ (ບ.ກ)

ຄ. ມູນເຫດແຫ່ງຄໍາວ່າ ໂມງ ແລະ ທຸ້ມ

ການທີ່ຄົນບູຮານໃຊ້ຄໍາວ່າ "ໂມງ" ໝາຍເວລາແຫ່ງກາງວັນ ແລະຄໍາວ່າ "ທຸ້ມ" ໝາຍເວລາແຫ່ງກາງຄືນນັ້ນ ຜາກົດມີມູນເຫດດັ່ງນີ້:

"ວັນນະຄະດີໄທ" ຂອງນາຍ ຫຣີດ ເຣືອງຣິດ ກ່າວໄວ້ໃນໜ້າ 274 ວ່າ "ນາລິກາຂອງເຮົາແຕ່ເດີມໃຊ້ ກະໂປະໝາກພ້າວນ້ອຍໆ ເຈາະເປັນຮູນ້ອຍທີ່ກົ້ນກະໂປະ ກໍາໜົດສ່ວນໃຫ້ພໍດີຄືກະໂປະຈົມນໍ້າລົງເທື່ອນຶ່ງ ໃຫ້ໄດ້ສ່ວນນຶ່ງໃນ 12 ສ່ວນຂອງວັນ ແລ້ວເອົາລອຍໄປໄວ້ໃນແອ່ງນໍ້າ ແຕ່ພໍນໍ້າເອົ້າເຕັມກະໂປະ ກະໂປະກໍຈົມ ກໍາໜົດເປັນ 1 ນາລິກາ ຄືສ່ວນ 1 ໃນ 12 ສ່ວນຂອງວັນ ຕີຄ້ອງ "ໂມ່ງ" ຂຶ້ນເທື່ອນຶ່ງຮຽກວ່າ "ໂມງ" ຕາມສຽງຄ້ອງນັ້ນ ເວລາກາງຄືນກໍຄືກັນ ປ່ຽນແຕ່ສັນຍານຕີກອງໃຫຍ່ດັງ "ຕູ້ມໆ" ຈຶ່ງຮຽກວ່າ ທຸ້ມ ຕາມສຽງກອງສັນຍານນັ້ນ"

ງ. ຍາມ

ບູຮານຍັງແບ່ງວັນອີກແບບນຶ່ງ ຄືແບ່ງເປັນ 16 "ຍາມ" ມີກໍາໜົດເວລາ ຍາມລະ 90 ນາທີ ຫຼື 1 ຊົ່ວໂມງ 30 ນາທີ ແຕ່ຍາມນັ້ນມີສອງຢ່າງດັ່ງນີ້:

1 - ຍາມສໍາຫຼັບໝາຍເວລາ ຍາມຢ່າງນີ້ໃຊ້ໝາຍເວລາຄືກັນກັບເຮົາໃຊ້ ນາລິກາບອກເວລາ ໃນສະໄໝນີ້ ຍາມສໍາຫຼັບບອກເວລາ ມີຊື່ໝາຍໄວ້ທຸກໆຍາມ ແລະ ຍາມໃດກໍໝາຍຈໍາເພາະແຕ່ເວລາດຽວ ເປັນປົກກະຕິຢູ່ທຸກໆວັນ ບໍ່ໄດ້ມີການຍົກຍ້າຍລໍາດັບ ຫຼື ສັບຜ່ຽນເວລາໄປຕາມວັນແຫ່ງສັບປະດາເໝືອນດັ່ງຍາມ ສໍາຫຼັບຫາເຄາະ ຫຼື ໂຊກ.

ຍາມສໍາຫຼັບໝາຍເວລານີ້ ຊາວລາວເຮົານິຍົມໃຊ້ກັນທົ່ວໄປ ໂດຍທີ່ໃຊ້ເອົາຍາມຕາງນາລິກາ ແລະ ໃຊ້ຫາຍາມດີ ຍາມຮ້າຍດ້ວຍ ຄືໃຊ້ສໍາຫຼັບຈະຕົກລົງການມຸງຄຸນຕາມທີ່ຕົນປະສົງ ຫຼື ຈະເຮັດສິ່ງຕ່າງໆ ດັ່ງຈະລົງເຮືອນໄປທາງໃດທາງນຶ່ງເປັນຕົ້ນ.

2 - ຍາມສໍາຫຼັບດູຫາເຄາະ ຫຼື ໂຊກ ຍາມຢ່າງນີ້ໃຊ້ສໍາຫຼັບຫາເວລາດີ ຫຼື ເວລາຮ້າຍ ກ່ອນທີ່ຈະທໍາພິທີນຶ່ງ ຫຼື ກ່ອນຈະລົງເຮືອນໄປທາງໄກ ເພື່ອທໍາມາຫາກິນຕາມທໍາມະດາ ຍາມສໍາຫຼັບດູຫາເຄາະ ແລະ ໂຊກນີ້ ມີຊື່ເປັນພາສາບາລີ ໝາຍໄວ້ທຸກໆຍາມ ແຕ່ຍາມຊື່ໃດຊື່ນຶ່ງກໍດີ ບໍ່ໄດ້ໝາຍຈໍາເພາະແຕ່ເວລາດຽວເປັນປົກກະຕິເລີຍ ຫາກສັບຜຽນລໍາດັບແລະເວລາໄປຕາມວັນແຫ່ງສັບປະດາທຸກໆວັນ. ສະນັ້ນ ຈະເວົ້າວ່າ ຍາມຢ່າງນີ້ ເປັນຍາມປະຈໍາວັນກໍໄດ້.

ແຕ່ຍາມທັງສອງຢ່າງນີ້ ຮ່ວມເວລາດຽວກັນທັງກາງວັນແລະກາງຄືນ ເພື່ອສັງເກດຫາ

ຍາມໃດຍາມນຶ່ງກໍດີ ຕາມປົກກະຕິກໍອາໄສນາລິກາ ແຕ່ສ່ວນຊາວບ້ານນອກຂອກຄາເມນັ້ນ ສ່ວນຫຼາຍສັງເກດຫາເວລາຍາມຕາມການເຄື່ອນໄຫວຂອງພະອາທິດ ແລະຖ້າເປັນກາງຄືນກໍສັງເກດຕາມເວລາໄກ່ຂັນ ແລະ ຕາມດາວໃນພື້ນຟ້າລາງໝູ່ ເຊັ່ນ ດາວຊ້າງໃຫຍ່ ເປັນຕົ້ນ.

ຍາມສຳຫຼັບໝາຍເວລາ

ຍາມກາງເວັນ			ຍາມກາງຄືນ		
ຊື່ຍາມ	ແຕ່ເວລາ	ເຖິງເວລາ	ຊື່ຍາມ	ແຕ່ເວລາ	ເຖິງເວລາ
ຕູດຕັ້ງ	6.00 ນ.	7.30 ນ.	ຕູດຕັ້ງ	18.00 ນ.	19.30 ນ.
ງາຍ	7.30 ນ.	9.00 ນ.	ເດິກ	19.30 ນ.	21.00 ນ.
ແຖໃກ້ທ່ຽງ	9.00 ນ.	10.30 ນ.	ແຖໃກ້ທ່ຽງ	21.00 ນ.	22.30 ນ.
ທ່ຽງວັນ	10.30 ນ.	12.00 ນ.	ທ່ຽງຄືນ	22.30 ນ.	24.00 ນ.
ຕູດຊ້າຍ	12.00 ນ.	13.30 ນ.	ຕູດຊ້າຍ	24.00 ນ.	1.30 ນ.
ແລງ	13.30 ນ.	15.00 ນ.	ຄົວ	1.30 ນ.	3.00 ນ.
ແຖໃກ້ຄ່ຳ	15.00 ນ.	16.30 ນ.	ແຖໃກ້ຮຸ່ງ	3.00 ນ.	4.30 ນ.
ພາດລັ່ນ	16.30 ນ.	18.00 ນ.	ພາດລັ່ນ	4.30 ນ.	6.00 ນ.

<u>ໝາຍເຫດ:</u> ແຕ່ບູຮານແທ້ ລາວເຮົາຍັງບໍ່ມີນາລິກາໃຊ້ ສຳຫຼັບໝາຍບອກເວລາຂອງວັນນຶ່ງໆ ຈຶ່ງໃຊ້ຍາມໝາຍບອກເວລາ ຄືກາງເວັນມີ 8 ຍາມ ແລະກາງຄືນກໍມີ 8 ຍາມ ຊື່ຂອງຍາມນັ້ນໝາຍເອົາຕາມສຽງຂອງສັງ ແຖ ຫຼື ແຕ ແລະ ກອງທີ່ເປົ່າ ແລະຕີບອກເວລາ ຄື ຕອນເຊົ້າ 1, ຕອນຫົວຄ່ຳ 1, ຕອນບ່າຍໂມງກາງເວັນ 1, ຕອນບ່າຍໂມງກາງຄືນ 1, ໃຊ້ເປົ່າສັງ ຈຶ່ງຮຽກວ່າຍາມ ຕູດຕັ້ງ ແລະຕູດຊ້າຍ; ຍາມກິນງາຍ 1, ຍາມແລງ 1, ຍາມເດິກ 1, ຍາມຂ້ອນແຈ້ງ 1, ໃຊ້ກອງຕີບອກເວລາ ຈຶ່ງຮຽກວ່າ ກອງງາຍ, ກອງແລງ, ກອງເດິກ ແລະກອງຄົວ; ຍາມໃກ້ຈະທ່ຽງ ທັງກາງເວັນແລະ ກາງຄືນ ໃຊ້ແຖ (ແຕຣ) ເປົ່າບອກເວລາຈຶ່ງຮຽກວ່າ ແຖໃກ້ທ່ຽງ ແຖໃກ້ຄ່ຳ ແລະ ແຖໃກ້ຮຸ່ງ; ສ່ວນຍາມຈວນຈະຄ່ຳແທ້ໆ ຄືເວລາບ່າຍ 4 ໂມງແລງ 30 ນາທີ ກັບຍາມຂ້ອນແຈ້ງແທ້ ຄືເວລາ ບ່າຍ 4 ໂມງເຊົ້າ 30 ນາທີ ນັ້ນໃຊ້ຄ້ອງຕີບອກຍາມ ຈຶ່ງຮຽກວ່າ ຍາມພາດລັ່ນ ຄືຍາມພະລັ່ນຄ້ອງນັ້ນເອງ.

ຍາມສຳຫຼັບດູເວລາຮ້າຍ ຫຼື ດີ

ຍາມກາງເວັນ

ເວລາບາລິກາ		ວັນທິດ 1	ວັນຈັນ 2	ວັນອັງຄານ 3	ວັນພຸດ 4	ວັນພະຫັດ 5	ວັນສຸກ 6	ວັນເສົາ 7
ແຕ່	ເຖິງ	ຍາມ	ຍາມ	ຍາມ	ຍາມ	ຍາມ	ຍາມ	ຍາມ
6.00 ນ	7.30 ນ	ສຸຣິຍະ 1	ຈັນເທົາ 2	ພຸມມະ 3	ພຸທະ 4	ຄະຣຸ 5	ສຸກຣະ 6	ເສົາຣີ 7
7.30 ນ	9.00 ນ	ສຸກຣະ 6	ເສົາຣີ 7	ສຸຣິຍະ 1	ຈັນເທົາ 2	ພຸມມະ 3	ພຸທະ 4	ຄະຣຸ 5
9.00 ນ	10.30 ນ	ພຸທະ 4	ຄະຣຸ 5	ສຸກຣະ 6	ເສົາຣີ 7	ສຸຣິຍະ 1	ຈັນເທົາ2	ພຸມມະ 3
10.30 ນ	12.00 ນ	ຈັນເທົາ 2	ພຸມມະ 3	ພຸທະ 4	ຄະຣຸ 5	ສຸກຣະ 6	ເສົາຣີ 7	ສຸຣິຍະ 1
12.00 ນ	13.30 ນ	ເສົາຣີ 7	ສຸຣິຍະ 1	ຈັນເທົາ 2	ພຸມມະ 3	ພຸທະ 4	ຄະຣຸ 5	ສຸກຣະ 6
13.30 ນ	15.00 ນ	ຄະຣຸ 5	ສຸກຣະ 6	ເສົາຣີ 7	ສຸຣິຍະ 1	ຈັນເທົາ 2	ພຸມມະ 3	ພຸທະ 4
15.00 ນ	16.30 ນ	ພຸມມະ 3	ພຸທະ 4	ຄະຣຸ 5	ສຸກຣະ 6	ເສົາຣີ 7	ສຸຣິຍະ 1	ຈັນເທົາ2
16.30 ນ	18.30 ນ	ສຸຣິຍະ 1	ຈັນເທົາ 2	ພຸມມະ 3	ພຸທະ 4	ຄະຣຸ 5	ສຸກຣະ 6	ເສົາຣີ 7

ຍາມກາງຄືນ

ເວລາບາລິກາ		ວັນ 1	ວັນ 2	ວັນ 3	ວັນ 4	ວັນ 5	ວັນ 6	ວັນ 7
ແຕ່	ເຖິງ	ຍາມ	ຍາມ	ຍາມ	ຍາມ	ຍາມ	ຍາມ	ຍາມ
18.00 ນ	19.30 ນ	ຣະວິ 1	ສະສີ 2	ພຸມໂມ 3	ພຸໂທ 4	ຊີໂວ 5	ສຸກໂຣ 6	ໂສໂຣ 7
19.30 ນ	21.00 ນ	ຊີໂວ 5	ສຸກໂຣ 6	ໂສໂຣ 7	ຣະວິ 1	ສະສີ 2	ພຸມໂມ 3	ພຸໂທ 4
21.00 ນ	22.30 ນ	ສະສີ 2	ພຸມໂມ 3	ພຸໂທ 4	ຊີໂວ 5	ສຸກໂຣ 6	ໂສໂຣ 7	ຣະວິ 1
22.30 ນ	25.00 ນ	ສຸກໂຣ 6	ໂສໂຣ 7	ຣະວິ 1	ສະສີ 2	ພຸມໂມ 3	ພຸໂທ 4	ຊີໂວ 5
24.00 ນ	1.30 ນ	ພຸມໂມ 3	ພຸໂທ 4	ຊີໂວ 5	ສຸກໂຣ 6	ໂສໂຣ 7	ຣະວິ 1	ສະສີ 2
1.30 ນ	3.00 ນ	ໂສໂຣ 7	ຣະວິ 1	ສະສີ 2	ພຸມໂມ 3	ພຸໂທ 4	ຊີໂວ 5	ສຸກໂຣ 6
3.00 ນ	4.30 ນ	ພຸໂທ 4	ຊີໂວ 5	ສຸກໂຣ 6	ໂສໂຣ 7	ຣະວິ 1	ສະສີ 2	ພຸມໂມ 3
4.30 ນ	6.00 ນ	ຣະວິ 1	ສະສີ 2	ພຸມໂມ 3	ພຸໂທ 4	ຊີໂວ 5	ສຸກໂຣ 6	ໂສໂຣ 7

ໃຫ້ນັບຍາມ ຮຽງລຳດັບລົງໄປຕາມແຖວຂອງວັນ ເຊິ່ງເປັນເຈົ້າຂອງຍາມນັ້ນ.

2. ເດືອນ

ປະຕິທິນລາວ ຖືເອົາເດືອນທາງຈັນທຣະຄະຕິເປັນຫຼັກວາງຮູບປະຕິທິນ ບໍ່ຖືເອົາເດືອນທາງສຸຣິຍະຄະຕິເປັນຫຼັກ ຄືປະຕິທິນຝຣັ່ງ ເດືອນທາງຈັນທຣະຄະຕິ ຖືເອົາລະຍະເວລາທີ່ພະຈັນເດີນອ້ອມໂລກໄດ້ຮອບນຶ່ງ ເປັນກຳນົດແຫ່ງ 1 ເດືອນ ພະຈັນເດີນ 29 ວັນ 12 ຊົ່ວໂມງ 44 ນາທີ 2.39 ວິນາທີຈຶ່ງ ຮອບໂລກເທື່ອນຶ່ງ.

ຮູບທີ 1:

ອະທິບາຍກຳໜົດເວລາເດືອນຈັນທຣະຄະຕິ



<u>ສົມມຸດວ່າ:</u>

ຈ/1 ເປັນບ່ອນຕັ້ງຕົ້ນຮອບແຫ່ງການເດີນຂອງພະຈັນ ແລະ ຈ/1 ນັ້ນຢູ່ເລັງ[1]ກັບພະອາທິດ (ທ/1) ແລະດາວໜ່ວຍນຶ່ງຊຶ່ງໝາຍເອົາເປັນຫຼັກສັງເກດ.

ເມື່ອພະຈັນເດີນໄປໄດ້ 27 ວັນເສດ ກໍວຽນມາເຖິງຕົ້ນທາງບ່ອນ ຈ/1 ຄົບຮອບນຶ່ງ ແຕ່ໃນລະຫວ່າງ 27 ວັນນັ້ນ ພະອາທິດກໍເຄື່ອນຈາກ ທ/1 ເດີນນຳພະຈັນໄປໄດ້ 27 ອົງສາແລະໄປເຖິງບ່ອນ ທ/2 ແລ້ວ ດັ່ງນັ້ນພະຈັນກໍຕ້ອງເດີນໄປອີກ 2 ວັນເສດ (ວັນລະ 13 ອົງສາ) ຈຶ່ງຈະໄປເລັງ

---

(1) ເລັງ - ຊື່, ກົງກັບ

ກັບພະອາທິດ ທ/3 ແລະ ດາວໜ່ວຍເກົ່ານັ້ນອີກເທື່ອນຶ່ງ ແລ້ວຈຶ່ງຕັ້ງຮອບໃໝ່ ຫຼື ເດືອນໃໝ່ຕໍ່ໄປ.

ການທີ່ພະຈັນຕ້ອງເດີນໄປອີກ 2 ວັນເສດຈຶ່ງຈະກັບເຂົ້າສູ່ສະພາບເດີມ ຄືກັບມາເລັງກັບພະອາທິດແລະດາວໜ່ວຍເກົ່ານັ້ນ ກໍດ້ວຍເຫດວ່າ ໃນລະຫວ່າງສອງວັນເຊິ່ງພະຈັນຕ້ອງເດີນນຳພະອາທິດໄປນັ້ນ ພະອາທິດກໍເດີນໄປໄດ້ອີກ 2 ອົງສາ ເພາະສະນັ້ນ ເດືອນຈັນທຣະຄະຕິຈຶ່ງມີກຳໜົດເວລາເຖິງ 29 ວັນ 12 ຊົ່ວໂມງ 44 ນາທີ 2 ວິນາທີ.

ຕຳຣາຝຣັ່ງກ່າວວ່າ ພະຈັນເດີນວຽນອ້ອມພະອາທິດ (ເຊິ່ງໃນທີ່ນີ້ສົມມຸດເອົາແທນ ໂລກ) ກັບມາເຖິງຈຸດເດີມຄົບຮອບ 1 ໃນລະຍະເວລາ 27 ວັນ 7 ຊົ່ວໂມງ 43 ນາທີ 11.55 ວິນາທີ ແຕ່ໃນລະຫວ່າງ 27 ວັນນັ້ນ ພະອາທິດກໍເດີນຈາກຈຸດນັ້ນໄປນຳພະຈັນເປັນລະຍະ 27 ອົງສາ (ວັນລະ 1 ອົງສາ) ໂດຍເຫດນີ້ ເມື່ອພະຈັນວຽນມາເຖິງບ່ອນຕົ້ນທາງຄົບຮອບແລ້ວ ກໍຍັງຫ່າງໄກຈາກພະອາທິດອີກ 27 ອົງສາ ດັ່ງນັ້ນ ພະຈັນກໍຈຳຕ້ອງເດີນໄປອີກສອງວັນເສດ (ວັນລະ 13 ອົງສາ) ຈຶ່ງຈະທັນພະອາທິດ ແລະຕັ້ງຮອບໃໝ່ ຫຼືເດືອນໃໝ່ຕໍ່ໄປ. ການທີ່ພະຈັນຈຳຕ້ອງເດີນນຳພະອາທິດໄປ 2 ວັນເສດນັ້ນ ກໍຍ້ອນວ່າໃນລະຍະສອງວັນນັ້ນ ພະອາທິດກໍເດີນໄປໄດ້ອີກ 2 ອົງສາ (ເບິ່ງຮູບທີ 1) ດັ່ງນັ້ນ ເດືອນຈັນທຣະຄະຕິຝຣັ່ງຈຶ່ງມີກຳໜົດ ເວລາເຖິງ 29 ວັນ 12 ຊົ່ວໂມງ 44 ນາທີ 2.86 ວິນາທີ.

ເມື່ອທຽບກຳໜົດເວລາແຫ່ງເດືອນຈັນທຣະຄະຕິຝຣັ່ງ ໃສ່ກັບກຳໜົດເວລາແຫ່ງເດືອນຈັນທຣະຄະຕິລາວເຮົາແລ້ວ ກໍເຫັນໄດ້ວ່າຜິດກັນໄປພຽງເຄິ່ງວິນາທີທີ່ນັ້ນເອງ ເຊິ່ງສະແດງວ່າ ໂຫນບູຮານເຖິງແມ່ນຈະບໍ່ມີເຄື່ອງມືທີ່ໂຫນຝຣັ່ງໃຊ້ກັນໃນສະໄໝນີ້ກໍຕາມ ແຕ່ກໍຍັງສາມາດສັງເກດການເດີນຂອງພະຈັນໄດ້ຜົນດີຄືກັນ.

ກ. ປັກ

ບູຮານແບ່ງເດືອນຈັນທຣະຄະຕິອອກເປັນ 2 ປັກ ຄື "ປັກຂ້າງຂຶ້ນ" ຫຼື "ສຸກກະປັກ" ແລະ "ປັກຂ້າງແຮມ" ຫຼື "ກາລະປັກ"

ປັກຂ້າງຂຶ້ນ ຕັ້ງຕົ້ນແຕ່ເມື່ອພະຈັນ(ໃນຄາວຢູ່ລະຫວ່າງພະອາທິດກັບໂລກ)ແຮກເຄື່ອນຈາກເສັ້ນທີ່ເລັງ*ພະອາທິດກັບພະຈັນ ແລະ ໂລກນັ້ນໄປ ແລ້ວສ້ຽວສຸດລົງເມື່ອພຣຈັນເດີນຜ່ານຂ້າງປາຍຂອງເສັ້ນນັ້ນອີກ ໃນຄາວທີ່ພະຈັນຢູ່ຫ່າງໄກທີ່ສຸດຈາກພະອາທິດ ຄືໃນຄາວທີ່ພະຈັນຢູ່ຂ້າງນຶ່ງຂອງໂລກ ກົງກັນຂ້າມກັບພະອາທິດ (ເບິ່ງຮູບທີ 2)

ໃນເມື່ອເວລາຕັ້ງຕົ້ນປັກຂ້າງຂຶ້ນ ພະຈັນຕົກໃນເວລາດຽວກັນກັບພະອາທິດ ເພາະສະນັ້ນ ຈຶ່ງຫຼຽວບໍ່ເຫັນໜ່ວຍພະຈັນ ແຕ່ວັນຕໍ່ໆໄປ ເມື່ອພະຈັນເດີນຫ່າງຈາກພະອາທິດໄປທຸກໆວັນ ຈຶ່ງຫຼຽວເຫັນໜ່ວຍພະຈັນເປັນເວລານານຂຶ້ນທຸກໆວັນ ທັງເຫັນສ່ວນສວ່າງຂອງພະຈັນຂະຫຍາຍໃຫຍ່ອອກທຸກວັນດ້ວຍ ຈົນເປັນຮູບວົງມົນສົມບູນ ທີ່ຮຽກວ່າ "ເດືອນເພັງ" ເຊິ່ງເປັນວັນຂຶ້ນ 15 ຄ່ຳ ໃນມື້ເພັງນັ້ນ ພະຈັນໂປໂລຂຶ້ນທາງຕາເວັນອອກ ໃນເວລາພະອາທິດລັບໄປທາງຕາເວັນຕົກ ເພາະສະນັ້ນຈຶ່ງຫຼຽວເຫັນພະຈັນໄດ້ຕະຫຼອດຄືນ.

ປັກຂ້າງແຮມຕັ້ງຕົ້ນເມື່ອພະຈັນ (ໃນຄາວຢູ່ຫ່າງໄກທີ່ສຸດຈາກພະອາທິດ) ແຮກເຄື່ອນຈາກເສັ້ນທີ່ເລັງພະອາທິດກັບໂລກ ແລະ ພະຈັນນັ້ນໄປ ແລ້ວສ້ຽງສຸດລົງໃນເມື່ອໄປເລັງກັບພະອາທິດ ແລະ ໂລກອີກເທື່ອນຶ່ງ ໃນປັກຂ້າງແຮມນີ້ ພະຈັນເດີນວຽນເຂົ້າໃກ້ພະອາທິດໄປທຸກໆວັນ ແລະ ສ່ວນສວ່າງຂອງພະຈັນກໍນ້ອຍລົງທຸກໆວັນ ທັງຈະແລເຫັນພະຈັນຢູ່ໃນພື້ນຟ້າເປັນເວລາສັ້ນລົງທຸກໆວັນໄປສະເໝີຈົນຫາຍໄປເລີຍ ຈຶ່ງຮຽກວັນນັ້ນວ່າ "ມື້ດັບ" ຄືວັນແຮມ 14 ຄ່ຳໃນເດືອນຂາດ ຫຼືວັນແຮມ 15 ຄ່ຳໃນເດືອນເຕັມ ດັ່ງຮູບທີ 2 ຕໍ່ໄປນີ້:



ຮູບທີ 2:

ຂ. ກຳໜົດເວລາແລະລຳດັບເດືອນຈັນທຣະຄະຕິ

ເນື່ອງຈາກຮອບນຶ່ງຂອງພະຈັນມີເສດວັນຢູ່ 12 ຊົ່ວໂມງ ຫຼື ເຄິ່ງວັນນັ້ນ ເປັນການຫຍຸ້ງຍາກແກ່ການນັບເດືອນຈັນທຣະຄະຕິຕາມຈຳນວນວັນເຕັມ ບູຮານຈຶ່ງແກ້ໄຂໂດຍຖືເອົາ 2 ຮອບຂອງພະຈັນໂຮມເປັນ 59 ວັນເຕັມ ມາເປັນຫຼັກແລ້ວແບ່ງປັນໃຫ້ເດືອນນຶ່ງມີ 30 ວັນເຕັມ ແລະເດືອນນຶ່ງມີ 29 ວັນເຕັມ ຂັ້ນຕະຫຼອດທັງ 12 ເດືອນ ເຊິ່ງມີຢູ່ໃນຮອບປີ ໂດຍທີ່ບັນຍັດໃຫ້ເດືອນທີ່ໝາຍເລກລຳດັບເປັນເລກຄູ່ ມີ 30 ວັນ ແລະໃຫ້ເດືອນທີ່ໝາຍເລກລຳດັບເປັນເລກຄີກນີ້ ມີແຕ່ 29 ວັນ ດັ່ງສະເໜີຕໍ່ໄປນີ້:

ເດືອນທີ	ຊື່ເດືອນ	ຈຳນວນວັນ	ໝາຍເຫດ
1	ຈຽງ	29	ເດືອນອ້າຍ
2	ຍີ່	30	
3	ສາມ	29	
4	ສີ່	30	
5	ຫ້າ	29	ສົງການ (ຂຶ້ນຖະເຫຼີງສົກ) ຕົກຢູ່ໃນລະຫວ່າງມື້ຂຶ້ນ 6 ຄ່ຳ
6	ຫົກ	30	ເດືອນ 5 ໄປເຖິງເດືອນ 6 ຂຶ້ນ 5 ຄ່ຳ ທໍ່ນັ້ນ.
7	ເຈັດ	29	ປີອະທິກະວານມີ 30 ວັນ
8	ແປດ	30	ປີອະທິກະມາດມີ ເດືອນແປດສອງຫົນ
9	ເກົ້າ	29	
10	ສິບ	30	
11	ສິບເອັດ	29	
12	ສິບສອງ	30	

ໂຮມ 12 ເດືອນມີ 354 ວັນ

ຄ. ເດືອນຂຶ້ນປີໃໝ່ ແລະລຳດັບເດືອນຜິດປົກກະຕິ

(1) ກຳໜົດເດືອນຂຶ້ນປີໃໝ່ໃນລະຫວ່າງເດືອນ 5 ແລະເດືອນ 6

ປະຕິທິນທັງຫຼາຍຖືເອົາວັນທີ 1 ແຫ່ງເດືອນທີ 1 ເປັນກຳໜົດວັນຂຶ້ນປີໃໝ່ (ວັນຖະເຫຼີງສົກ) ເຊັ່ນ ປະຕິທິນຝຣັ່ງ ຫຼື ຢ່າງໜ້ອຍກໍຕັ້ງຕົ້ນປີໃໝ່ໃນວັນຂຶ້ນ 1 ຄ່ຳແຫ່ງເດືອນຈັນທຣະຄະຕິ ເຊັ່ນ ປະຕິທິນຊາວຈີນ ເຊິ່ງຖືເອົາເດືອນ 3 ຂຶ້ນ 1 ຄ່ຳ ເປັນວັນຂຶ້ນປີໃໝ່ເປັນຕົ້ນ.

ຕາມຫຼັກປະຕິທິນເຮົານັ້ນ ປີໃໝ່ເຮົາບໍ່ໄດ້ຂຶ້ນໃນເດືອນ 1 ແລະບໍ່ໄດ້ກົງກັບວັນຂຶ້ນ 1 ຄ່ຳ

ແຫ່ງເດືອນຈັນທຣະຄະຕິໃດເລີຍ ແຕ່ໄປຕົກຢູ່ລະຫວ່າງເດືອນທີ 5 ຂຶ້ນ 6 ຄ່ຳ ແລະເດືອນທີ 6 ຂຶ້ນ 5 ຄ່ຳ ເຊິ່ງຜິດຈາກປົກກະຕິໄປ.

ເລື່ອງນີ້ຂ້າພະເຈົ້າເຂົ້າໃຈວ່າ ເຫັນຈະເປັນຍ້ອນແຕ່ກ່ອນພຸ້ນ ລາວເຮົາຄົງຈະໃຊ້ປະຕິທິນຮູບນຶ່ງຢູ່ແລ້ວ ແລະວັນສັງຂານຂຶ້ນ (ວັນຖະເຫຼີງສົກ) ກໍອາດຕົກຢູ່ວັນຂຶ້ນ 1 ຄ່ຳ ແຫ່ງເດືອນທີ 1 ຄືເດືອນຈຽງ (ເດືອນອ້າຍ)ພາຍລຸນມາຈຶ່ງເອົາໂຫຣາສາດ ທີ່ມາຈາກອິນເດັຽໃຊ້ກັນຕໍ່ມາ ແຕ່ຕຳຣານີ້ກຳໜົດເອົາເວລາທີ່ພະອາທິດ (ສົມມຸດເອົາແທນໂລກ) ຍ້າຍຈາກຣາສີມີນ ເຂົ້າສູ່ ຣາສີເມດເປັນຫຼັກຕັ້ງຕົ້ນປີໃໝ່ ແລະຫຼັກນັ້ນ ບັງເອີນໃຫ້ວັນຂຶ້ນປີໃໝ່ໄປຕົກຢູ່ໃນລະຫວ່າງເດືອນ 5 ແລະເດືອນ 6 ແຫ່ງປະຕິທິນເກົ່າຂອງເຮົາ ໂດຍເຫດນີ້ປະຕິທິນໃໝ່ຂອງເຮົາຈຶ່ງຜິດຈາກປົກກະຕິໄປ.

ກ່ຽວກັບເລື່ອງດຽວກັນນີ້ ທ້າວຫຣີດ ເຮືອງຣິດ ກ່າວໄວ້ໃນວັນນະຄະດີໄທ (ໜ້າ 220) ວ່າມີມູນເຫດເດີມດັ່ງນີ້:

"ການທີ່ເດືອນອ້າຍ (ເດືອນຈຽງ) ເປັນເດືອນທີ 1 ເປັນເພາະກ່ອນຕັ້ງສັກຣາດປະມານ 5 ພັນປີເສດໆ ນັກປາດບູຮານເພິ່ນເຫັນວ່າ ຣະດູເຫມັນ(ຣະດູໜາວ) ເປັນເວລາປາສະຈາກເມກຝົນ ແລະ ພະອາທິດເດີນປັດໄປໃຕ້ ແສງແດດບໍ່ຮ້ອນ ຜາກົດຄືເວລາເຊົ້າຈຶ່ງກຳໜົດເອົາຣະດູເຫມັນເປັນຕົ້ນປີ. ຣະດູຄິມຫັນ (ຣະດູຮ້ອນ) ພະອາທິດເດີນຕັດຊື່ຫົວ ແສງແດດຮ້ອນ ຜາກົດຄືກາງເວັນຈຶ່ງກຳໜົດເອົາຣະດູຄິມຫັນເປັນກາງປີ ຣະດູວະສັນ (ຣະດູຝົນ) ເປັນເວລາຄຶ້ມຝົນ ອາກາດມືດມົວຢູ່ໂດຍມາກ ຜາກົດເປັນເໝືອນເວລາກາງຄືນ ຈຶ່ງກຳໜົດເອົາຣະດູວະສັນເປັນປາຍປີ. ດັ່ງນັ້ນເພິ່ນຈຶ່ງໄດ້ນັບເດືອນອ້າຍຕົ້ນຣະດູເຫມັນ ເປັນເດືອນທີ 1 ແຕ່ເມື່ອເຮົາໃຊ້ ສັກຣາດແລ້ວກຳໜົດ ເອົາພະອາທິດຂຶ້ນສູ່ຣາສີເມດ ບໍ່ຄາບກ່ຽວກັບຣາສີອື່ນໆ ເປັນສາມັນສົງການ (ພະອາທິດຕັດໄປຊື່ຫົວ) ຈຶ່ງໄດ້ຖິ້ມເດືອນອ້າຍຊຶ່ງເປັນເດືອນທີ 1 ນັ້ນເສຽ ໄປຕັ້ງເດືອນທີ 1 ໃນຣະດູຄິມຫັນ ຄືນັບແຕ່ເດືອນ 5 ເປັນ ເດືອນທີ 1 ເພາະສະນັ້ນ ສົງການຈຶ່ງຫຍັບເຂົ້າມາຢູ່ໃນເດືອນ 5 ຫຼື ເດືອນ 6 ແຕ່ເດືອນອ້າຍຍັງຄົງຄ້າງເປັນເດືອນ 1 ຢູ່ຈົນທຸກວັນນີ້ ເຖິງຈະຜ່ຽນ ກໍຜ່ຽນບໍ່ໄດ້ ເພາະໄດ້ຮຽກກັນມາຈົນເຄີຍແລ້ວ".

"ທີ່ຈິງ ການຕັ້ງປີໃໝ່ໃນຣະດູໜາວ ເໝືອນດັ່ງເຮົາຕັ້ງກັນມາແຕ່ກ່ອນພຸ້ນກໍເປັນການເໝາະສົມດີ ເພາະຕົ້ນປີຂອງຝຣັ່ງເອົາກໍຕັ້ງໃນຣະດູໜາວ ຄືເອົາກຳໜົດເອົາພະອາທິດເດີນບ່ຽງໄປໃຕ້ທີ່ສຸດເປັນອາຍັນຕຸສົງການ (ຕາເວັນອ້ອມເຂົ້າ ຫຼື ຕາເວັນຫຼີກຕໍ່ເພືອງ) ຝ່າຍຈີນກໍຄືກັນ ເປັນແຕ່ການຄຳນວນຕ່າງກັນ ເວລາຈຶ່ງຍ້າຍໄປຈາກກັນ ປີໃໝ່ຂອງຈີນຈຶ່ງບໍ່ເປັນອາຍັນຕຸສົງການຄືຝຣັ່ງ ແລະ ບໍ່ເປັນສາມັນສົງການຄືໄທ ເພາະຈີນໄປຕັ້ງປີໃໝ່ເອົາເດືອນສາມ ເມື່ອເຮົາຍັງບໍ່ໄດ້ໃຊ້

ຈຸລະສັກຣາດ ເຮົາກໍຕັ້ງປີໃໝ່ເມື່ອພະອາທິດບ່ຽງໄປໃຕ້ສຸດ ເປັນອາຍັນຕຸສົງການ ຄືກັນກັບຝຣັ່ງ ເພາະເປັນຣະດູໜາວ ຜາກົດເໝືອນດັ່ງເວລາເຊົ້າ ດັ່ງກ່າວມາແລ້ວ ເດືອນອ້າຍຂອງເຮົາຈຶ່ງຍັງ ທ້ອຍເປັນເດືອນ 1 ເປັນພະຍານຢືນຢັນຈົນທຸກວັນນີ້." (1)

(2) ລຳດັບເດືອນຜິດປົກກະຕິ

ເຖິງວ່າຕຳຣາໂຫຣາສາດຂອງອິນເດັຽຈະເອົາເວລາທີ່ພະອາທິດຍ້າຍຈາກຣາສີເມດ ເຂົ້າສູ່ຣາສີມີນ ເປັນຫຼັກຕັ້ງຕົ້ນປີກໍດີ ແລະຫຼັກນັ້ນບັງເອີນໃຫ້ວັນສົງການຂຶ້ນປີໃໝ່ໄປຕົກຢູ່ໃນເດືອນ 5 ແລະ ເດືອນ 6 ແລ້ວກໍດີ ກໍຍັງບໍ່ໄດ້ປ່ຽນແປງລຳດັບເດືອນໃຫ້ຖືກຕ້ອງກັບຖານະໃໝ່ແຕ່ຢ່າງໃດ ເລີຍ.

ການທີ່ລຳດັບເດືອນບໍ່ກົງກັບລຳດັບອັນແທ້ຈິງຂອງເດືອນນັ້ນ ປະຕິທິນຝຣັ່ງກໍມີຢູ່ຄືກັນ ດັ່ງຈະນຳມາເລົ່າໃຫ້ຊາບຕໍ່ໄປນີ້:

ປີຂອງຝຣັ່ງແຕ່ຄັ້ງບູຮານມີແຕ່ 10 ເດືອນ ຄື 4 ເດືອນແຮກຂອງຕົ້ນປີ ໝາຍດ້ວຍນາມ ເທວະດາຂອງຊາວກຣີກບູຮານ ເຊັ່ນ ເດືອນມາກ, ເອປຣິນ, ເມ ແລະ ຈູນ, ສ່ວນ 6 ເດືອນຕໍ່ໄປ ໝາຍເລກລຳດັບ ເຊັ່ນ: ເດືອນ ກັງຕີລິດ (ທີ 5) ເສດຕີລິດ (ທີ 6) ເສັບແຕັມເບີ (ທີ 7) ອັອກໂຕເບີ (ທີ 8) ໂນແວມເບີ (ທີ 9) ແລະ ດີແຊມເບີ (ທີ 10).

ໃນສະໄໝນັ້ນ ປີນຶ່ງມີຈຳນວນແຕ່ 304 ວັນທ່ານັ້ນ ພາຍລຸນມາຈຶ່ງໄດ້ຕັ້ງປະຕິທິນແບບໃໝ່ ຂຶ້ນ ໂດຍກຳໜົດໃຫ້ປີນຶ່ງມີ 12 ເດືອນ ແລະມີຈຳນວນ 355 ວັນ. ເດືອນທີ່ຕື່ມໃໝ່ນັ້ນ ເອົາຕື່ມເຂົ້າ ໃນຕົ້ນປີ ຄື ເດືອນ ແຈນຢູອາຣີ ແລະ ເຟບຣູອາຣີ ແລະ ໃນຄາວດຽວກັນນັ້ນກໍຜ່ຽນຊື່ ເດືອນທີ 5 ແລະ ທີ 6 ໂດຍເອົາພະນາມພະມະຫາກະສັດຊາວໂຣມັນຄື "ຈູລຽດ ຊີຊາ" (Jules Cesar) ແລະ "ອໍຄັດ" (August)ມາເປັນຊື່ ແທນເຊິ່ງຮຽກວ່າ ເດືອນ "ຈູລາຍ" ແລະ "ອໍຄັດ" ຈົນທຸກວັນນີ້.

ຄັນຕື່ມເດືອນອີກ 2 ເດືອນແລ້ວ ກໍບໍ່ໄດ້ປ່ຽນແປງລຳດັບເດືອນທີ 7, 8, 9 ແລະ 10 ຂອງ ເດີມນັ້ນ ໃຫ້ຖືກຕ້ອງຕາມລຳດັບໃໝ່ ເພາະສະນັ້ນເດືອນ ເສັບແຕມເບີ ທີ 7 ເຊິ່ງໄດ້ກາຍເປັນເດືອນທີ 9 ແລ້ວນັ້ນ ກໍຍັງຮຽກວ່າ ທີ 7 ຢູ່ຕາມເດີມສະເໝີ ເດືອນ ອັອກໂຕເບີທີ 8, ໂນແວມເບີທີ 9, ດີແຊມ ເບີທີ 10 ເຊິ່ງໄດ້ເລື່ອນໄປເປັນເດືອນທີ 10, 11, 12 ແລ້ວນັ້ນ ກໍຍັງຮຽກຕາມຊື່ເດີມຢູ່ສະເໝີ ຄືຮຽກ ເປັນທີ 8, 9 ແລະທີ 10 ຢູ່ນັ້ນເອງ.

---

(1) ໝາຍເຫດ : ຄຳວ່າ ອ້າຍ ແປວ່າ ກົກ, ຕົ້ນ, ທຳອິດ. ເພາະສະນັ້ນຈຶ່ງເປັນການແນ່ນອນວ່າ ແຕ່ບູຮານ ລາວເຮົາຖືເອົາ ເດືອນອ້າຍ ເປັນ ເດືອນຕົ້ນ ຫຼືເດືອນທີ 1 ຂອງປີໃໝ່ແທ້.

24/VII ຂ້າມ-ຈຳໜ່າຍ

ງ. ອະທິກະມາດ (ເດືອນແປດສອງຫົນ)

ເດືອນຈັນທຣະຄະຕິ 12 ເດືອນ ໃນຮອບນຶ່ງມີຈຳນວນວັນພຽງແຕ່ 354 ວັນ ດັ່ງໄດ້ກ່າວມາແລ້ວນັ້ນ ຄືໜ້ອຍກວ່າຈຳນວນ 365 ວັນແຫ່ງປີທາງສຸຣິຍະຄະຕິ(12 ເດືອນສຸຣິຍະຄະຕິ)ໄປ 11 ວັນ ດັ່ງນັ້ນຖ້າບໍ່ແກ້ໄຂການທີ່ຂາດກັນປີລະ 11 ວັນນັ້ນ ວັນສັງຂານຂຶ້ນປີໃໝ່ເຮົາກໍຈະຍ້າຍໄປຕົກຢູ່ໃນທຸກໆເດືອນນຳ ແລ້ວກໍບໍ່ເປັນປົກກະຕິໄດ້ ໂດຍເຫດນີ້ ບູຮານຈຶ່ງບັນຍັດໃຫ້ມີປີອະທິກະມາດຄືປີພິເສດມີ 13 ເດືອນຕື່ມເຂົ້າທຸກ 2 ປີ ຫຼື ທຸກ 3 ປີ ແລ້ວແຕ່ຈຳນວນ "ດິຖີຖະເຫຼິງສົກ" ເປັນປະມານດັ່ງນີ້:

"ຖ້າປີໃດດິຖີຖະເຫຼິງສົກ ມີຈຳນວນແຕ່ 25 ຂຶ້ນໄປເຖິງ 29 ຫຼື ແຕ່ 1 ໄປເຖິງ 5 ແລ້ວປີນັ້ນກໍຕ້ອງເປັນ ອະທິກະມາດ ເພາະປີອະທິກະມາດນັ້ນວັນສັງຂານຂຶ້ນ ຕົກຢູ່ໃນຂອບເຂດແຕ່ເດືອນ 5 ແຮມ 10 ຄ່ຳ (ດິຖີ 25) ໄປເຖິງເດືອນ 6 ຂຶ້ນ 5 ຄ່ຳທໍ່ນັ້ນ.

ເດືອນທີ່ຕື່ມເຂົ້າໃນປີ ອະທິກະມາດນັ້ນ ມີ 30 ວັນ ໂດຍຕື່ມເຂົ້າມາໃນລະຫວ່າງເດືອນ 8 ກັບ ເດືອນ 9 ຕໍ່ກັນແລະຮຽກວ່າ "ເດືອນແປດລຸນ" ຫຼື "ເດືອນແປດທີສອງ"

ເມື່ອຕື່ມເດືອນແປດທີສອງເຂົ້າມາດັ່ງນັ້ນແລ້ວ ຈຳນວນວັນແຫ່ງປີຈັນທຣະຄະຕິກໍທໍ່ກັບຈຳນວນວັນ ແຫ່ງປີທີ່ໃຊ້ເດືອນສຸຣິຍະຄະຕິ ຄືມີ 365 ວັນທໍ່ກັນ.

ແຕ່ຖ້າຄຶດໃຫ້ລະອຽດໄປກວ່ານີ້ແລ້ວ ກໍຈະເຫັນໄດ້ວ່າປີທີ່ໃຊ້ເດືອນຈັນທຣະຄະຕິ ຍັງຂາດກຳໜົດເວລາ ກັບປີ ທີ່ໃຊ້ເດືອນສຸຣິຍະຄະຕິໄປ 6 ຊົ່ວໂມງເສດ ສະນັ້ນຖ້າບໍ່ແກ້ໄຂການທີ່ເວລາເຄື່ອນຄາດກັນໄປນັ້ນ ແຮ່ງຫຼາຍປີກໍແຮ່ງຈະຜິດກັນຫຼາຍຂຶ້ນ.

ຈ. ອະທິກະວານ (ເດືອນ ເຈັດ ເຕັມ 30 ວັນ)

ເພື່ອຈະແກ້ໄຂລະຍະເວລາທັງສອງນັ້ນ ໃຫ້ຖືກຕ້ອງກັນ ຕຳຣາໂຫຣາສາດຈຶ່ງບັນຍັດໃຫ້ມີອະທິກະວານ ຄື ປີພິເສດ ມີເດືອນ 7 ເຕັມ 30 ວັນມາຂັ້ນທຸກໆ 4 ປີ, 5 ປີ ຫຼື 6 ປີ ແລ້ວແຕ່ຈຳນວນອະວະມານຖະເຫຼິງສົກ ເປັນປະມານດັ່ງນີ້:

(1) ຖ້າປີປົກຕິສຸຣະທິນ (365 ວັນ) ໃດຫາກມີ ອະວະມານຖະເຫຼິງສົກ ເປັນຈຳນວນແຕ່ 1 ຂຶ້ນໄປເຖິງ 137 ແລ້ວ ປີນັ້ນຕ້ອງເປັນ ອະທິກະວານ ແລະ

(2) ຖ້າປີ ອະທິກະສຸຣະທິນ (366 ວັນ) ໃດ ຫາກມີອະວະມານຖະເລິງສົກ ເປັນຈຳນວນ

---

(1) ວິທີກຳໜົດເອົາອະວະມານຖະເຫຼິງສົກ ມາເປັນຫຼັກວາງປີອະທິກະວານນີ້ ຂ້າພະເຈົ້າໄດ້ສັງເກດເຫັນເອງ ດັ່ງຈະສະເໜີໄວ້ໃນຕອນທີ 5 ຂ້າງໜ້າ.

ແຕ່ 1 ຂຶ້ນ ໄປເຖິງ 126 ແລ້ວ ປີນັ້ນຕ້ອງເປັນ ອະທິກະວານ [(1)]

ແຕ່ຕຳຣາໂຫຣາສາດ ບັນຍັດໄວ້ວ່າ ຖ້າປີໃດດິຖີຖະເຫຼີງສົກໝາຍໄວ້ວ່າ ປີນັ້ນເປັນອະທິກະມາດຢູ່ແລ້ວ ແລະ ອະວະມານຖະເຫຼີງສົກກຳໜົດອີກວ່າເປັນອະທິກະວານນຳ ດັ່ງນັ້ນໃຫ້ປີນັ້ນມີອະທິກະມາດ ແຕ່ຢ່າງດຽວ ສ່ວນອະທິກະວານນັ້ນໃຫ້ຍົກຍ້າຍໄປໃສ່ປີທີ່ຈະມາເຖິງ ຫຼື ບໍ່ດັ່ງນັ້ນກໍໃຫ້ຍ້າຍຄືນໄປໃສ່ປີທີ່ຢູ່ກ່ອນໜ້າ ດັ່ງຈະໄດ້ອະທິບາຍໄວ້ໃນຕອນທີ 5 ຂ້າງໜ້າ.

ປີ ຈ.ສ.	ຈຳນວນວັນທາງ		ອະທິກະ		ໂຮມວັນ	ວັນຖະເຫຼີງສົກທາງເດືອນ		ເດືອນ 5 ຂຶ້ນ 1 ຄ່ຳ ກົງກັບວັນທີ...ເດືອນ ສຸຣິຍະຄະຕິ
	ສຸຣິຍະຄະຕິ	ຈັນທຣະຄະຕິ	ມາດ	ວານ		ຈັນທຣະຄະຕິ	ສຸຣິຍະຄະຕິ	
1282	366	354	30	-	---	---	15 ເມສາ	20 ມີນາ 1920
1283	365	354			354	5 ຂຶ້ນ 8	15 ເມສາ	8 ເມສາ 1921
1284	365	354		1	355	5 ແຣມ 4	15 ເມສາ	28 ມີນາ 1922
1285	365	354	30		384	5 ແຣມ 14	15 ເມສາ	18 ມີນາ 1923
1286	366	354			354	5 ຂຶ້ນ 11	15 ເມສາ	5 ເມສາ 1924
1287	365	354			354	5 ແຣມ 7	15 ເມສາ	25 ມີນາ 1925
1288	366	354	30		384	6 ຂຶ້ນ 4	15 ເມສາ	14 ມີນາ 1926
1289	365	354		1	354	5 ຂຶ້ນ 14	15 ເມສາ	2 ເມສາ 1927
1290	366	354	30		384	5 ແຣມ 10	15 ເມສາ	22 ມີນາ 1928
1291	365	354			354	5 ຂຶ້ນ 6	15 ເມສາ	10 ເມສາ 1929
1292	365	354			354	5 ແຣມ 2	15 ເມສາ	30 ມີນາ 1930
1293	365	354	30		384	5 ແຣມ 14	16 ເມສາ	19 ເມສາ 1931
1294	366	354		1	355	5 ຂຶ້ນ 10	15 ເມສາ	6 ເມສາ 1932
1295	365	354			354	5 ແຣມ 5	15 ເມສາ	27 ມີນາ 1933
1296	365	354	30		384	6 ຂຶ້ນ 2	15 ເມສາ	16 ມີນາ 1934
1297	365	354			354	5 ຂຶ້ນ 13	16 ເມສາ	4 ເມສາ 1935
1298	366	354		1	355	5 ແຣມ 9	15 ເມສາ	23 ມີນາ 1936
1299	365	354	30		384	6 ຂຶ້ນ 5	15 ເມສາ	13 ມີນາ 1937
1300	365	354			354	5 ຂຶ້ນ 15	15 ເມສາ	1 ເມສາ 1938
1301	366	354	30		384	5 ແຣມ 12	16 ເມສາ	21 ມີນາ 1939
19 ປີ	6940	6726	210	4	6940 ວັນ			8 ເມສາ 1940

ເມື່ອຕື່ມອະທິກະມາດແລະອະທິກະວານເຂົ້າຕາມຫຼັກໂຫຣາສາດ ດັ່ງນີ້ແລ້ວ ຈຳນວນວັນຂອງປີທີ່ໃຊ້ເດືອນຈັນທຣະຄະຕິ ກໍກົງກັບຈຳນວນວັນຂອງປີທີ່ໃຊ້ເດືອນສຸຣິຍະຄະຕິ ເປັນປົກກະຕິທຸກໆປີ.

ສຳຫຼັບໄວ້ເປັນຫຼັກຖານໃນເລື່ອງນີ້ ຈະຍົກເອົາຮອບ 19 ປີມາເປັນຕົວຢ່າງຂໍ້ພິສູດຮອບ19 ປີນັ້ນ ທາງຝຣັ່ງຮຽກວ່າ ຮອບຈັນທຣະຄະຕິ (Moon Period) ຄືທຸກໆຮອບ 19 ປີ ວັນຂຶ້ນ 1 ຄ່ຳແຫ່ງເດືອນ 5 ກໍວຽນມາຄືບວັນທີເດີມແຫ່ງເດືອນ ເມສາ (ສຸຣິຍະຄະຕິ) ອີກເທື່ອນຶ່ງ ເປັນປົກກະຕິສະເໝີ ຕົວຢ່າງ ປີ ຈ.ສ. 1282 ເດືອນ 5 ຂຶ້ນຄ່ຳ 1 ກົງກັບວັນທີ 8 ເມສາ ຄ.ສ. 1921 ຕໍ່ມາອີກ 19 ປີ ຄືປີ ຈ.ສ. 1301 ເດືອນ 5 ກໍກັບມາ ຂຶ້ນຄ່ຳ 1 ກົງກັບວັນທີ 8 ເມສາ ອີກຄັ້ງນຶ່ງໃນປີ ຄ.ສ. 1940 ດັ່ງນີ້ເປັນຕົ້ນ, ຕາມທີ່ຈະສັງເກດໄດ້ໂດຍລະອຽດໃນຕາລາງຕໍ່ໄປນີ້:

<u>ຂໍ້ສັງເກດ</u>

ເມື່ອສັງເກດເບິ່ງຕາລາງຂ້າງເທິງນີ້ ກໍເຫັນໄດ້ວ່າ:

(1) ໃນຮອບ 19 ປີ ນັ້ນມີອະທິກະມາດ 7 ມີອະທິກະວານ 4 ເຊິ່ງເມື່ອນຳເອົາຈຳນວນວັນອະທິກະມາດ ກັບ ອະທິກະວານ 214 ວັນມາຕື່ມເຂົ້າກັບຈຳນວນ 6726 ວັນຂອງເດືອນຈັນທຣະຄະຕິທຳມະດາ ຈຶ່ງເປັນຈຳນວນ 6940 ວັນ ຖືກຕ້ອງກັບຈຳນວນວັນທາງສຸຣິຍະຄະຕິ.

(2) ສ່ວນຈຳນວນວັນແຫ່ງປີທີ່ໃຊ້ເດືອນຈັນທຣະຄະຕິເຊິ່ງມີ 354, 355 ແລະ 384 ວັນນັ້ນ ທາງໂຫຣາສາດບໍ່ໄດ້ຖືເອົາເປັນກຳໜົດແຫ່ງປີຕາມຈຳນວນນັ້ນໆແຕ່ປະການໃດເລີຍ ຫາກຖືເອົາແຕ່ກຳໜົດ 365 ວັນ ຫຼື 366 ວັນເຕັມທີ່ນັ້ນ ເປັນຫຼັກສຳຫຼັບປະຕິທິນ ຕາມກຳໜົດປີທາງສຸຣິຍະຄະຕິເພາະສະນັ້ນວັນຖະເຫຼີງສົກ ຈຶ່ງບໍ່ກົງກັບວັນຂ້າງຂຶ້ນ ຫຼື ຂ້າງແຮມ ວັນໃດວັນນຶ່ງຂອງເດືອນຈັນທຣະຄະຕິ ເປັນປົກກະຕິໄດ້ ແລະ ຈຶ່ງໄດ້ຍ້າຍໄປ ຍ້າຍມາລະຫວ່າງເດືອນ 5 ຂຶ້ນ 6 ຄ່ຳ ໄປເຖິງເດືອນ 6 ຂຶ້ນ 5 ຄ່ຳ ຢູ່ສະເໝີຕາມທີ່ໄດ້ກ່າວມາແລ້ວ.

(3) ວັນສັງຂານຂຶ້ນ (ຖະເຫຼີງສົກ) ກົງກັບວັນທີເດີມຂອງເດືອນສຸຣິຍະຄະຕິສະເໝີ ຄືວັນທີ 15 ເມສາ ສ່ວນປີ ຈ.ສ. 1293-1297 ແລະ 1301 ສັງຂານຂຶ້ນ ໄປກົງກັບວັນທີ 16 ເມສານັ້ນ ເນື່ອງມາຈາກປີເຮົາຍາວກວ່າຝຣັ່ງໄປ 23 ນາທີ 24 ວິນາທີນັ້ນເອງ ດັ່ງທີ່ຈະໄດ້ຊາບມູນເຫດໃນຕອນທີ່ກ່ຽວກັບປີ.

(4) ເດືອນ 5 ແຫ່ງທ້າຍປີ ຈ.ສ. 1301 ກໍຂຶ້ນ 1 ຄ່ຳ ກົງກັບວັນທີ 8 ເມສາ ດັ່ງດຽວກັນກັບປີ ຈ.ສ. 1283 ທີ່ລ່ວງແລ້ວ ຖືກຕາມຄຳກ່າວຂອງໂຫນຝຣັ່ງ.

ສ. ຊື່ເດືອນຕາມດາວນັກຂັດຕະຣຶກ

ນອກຈາກໃຊ້ຊື່ເດືອນຕາມເລກລຳດັບດັ່ງກ່າວມາແລ້ວ ບູຮານຍັງຮຽກເດືອນຈັນທຣະຄະຕິ ຕາມຊື່ດາວນັກຂັດຕະຣຶກ ໜ່ວຍທີ່ພະຈັນ ເດີນຜ່ານໃນວັນເພັງນັ້ນອີກຢ່າງນຶ່ງ ມີດັ່ງນີ້:

ຊື່ເດືອນຕາມດາວນັກຂັດຕະຣຶກ

ເດືອນທີ	ຊື່ເດືອນ	ຣຶກທີ	ຊື່ຣຶກ	ດາວປະຈຳຣຶກ
5	ຈິດຕະມາດ	14	ຈິດຕະ	ດາວເສືອ
6	ວິສາຂະມາດ	16	ວິສາຂະ	ດາວຄວາຍ
7	ເຊດຖະມາດ	18	ເຊດຖະ	ດາວແບ້ແມ່
8	ອຸຕຣາສາລຫະມາດ	20-21	ອຸຕຣາສາລະຫະ	ດາວຣາຊະສີຕົວແມ່
9	ສາວະນະມາດ	22	ສາວະນະ	ດາວອ້ອນແຈ້ງ
10	ພັທມາດ	25-26	ປຸບພາພັດທະ	ດາວແຮດ
11	ອາສາຍຸຊມາດ	1	ອັສວະນີ	ດາວມ້າ
12	ກັດຕິກາມາດ	3	ກັດຕິກາ	ດາວໄກ່ນ້ອຍ
1	ມິກຄະສີຣະມາດ	5	ມິກຄສີຣະ	ດາວກວາງ
2	ປຸສຍະມາດ	7	ປຸສຍະ	ດາວກຸ້ງ
3	ມາຄະມາດ	10	ມາຄະ	ດາວທ່ານຄຳ
4	ຜັກຄຸນະມາດ	11-12	ຜັກຄຸນີ	ດາວງົວເຖິກ

ຂ. ເດືອນສຸຣິຍະຄະຕິ

ຕຳຣາໂຫຣາສາດ ໃຊ້ເດືອນອີກຢ່າງນຶ່ງ ຄືເດືອນທາງສຸຣິຍະຄະຕິ ເຊິ່ງຮຽກວ່າ "ຣາສີ" ມີຈຳນວນ 12 ຣາສີ ໂດຍໝາຍເຖິງຊື່ ແລະລຳດັບເລກໄວ້ດັ່ງນີ້:

ເດືອນ ຫຼື ຣາສີ	0	ຊື່	ເມດ	ຫຼື	ໄຄ້ (ໝູ)	ມີ	31	ວັນ
ເດືອນ ຫຼື ຣາສີ	1	ຊື່	ພຶສພະ	ຫຼື	ໄຈ້ (ໜູ)	ມີ	31	ວັນ
ເດືອນ ຫຼື ຣາສີ	2	ຊື່	ມິຖຸນ	ຫຼື	ເປົ້າ (ງົວ)	ມີ	32	ວັນ
ເດືອນ ຫຼື ຣາສີ	3	ຊື່	ກໍຣະກົດ	ຫຼື	ຍີ່ (ເສືອ)	ມີ	32	ວັນ
ເດືອນ ຫຼື ຣາສີ	4	ຊື່	ສິງ	ຫຼື	ເໝົ້າ (ກະຕ່າຍ)	ມີ	31	ວັນ
ເດືອນ ຫຼື ຣາສີ	5	ຊື່	ກັນ	ຫຼື	ສີ່ (ນາກ)	ມີ	30	ວັນ
ເດືອນ ຫຼື ຣາສີ	6	ຊື່	ຕຸນ	ຫຼື	ໃສ້ (ງູ)	ມີ	30	ວັນ
ເດືອນ ຫຼື ຣາສີ	7	ຊື່	ພຶສຈິກ	ຫຼື	ສະງ້າ (ມ້າ)	ມີ	30	ວັນ
ເດືອນ ຫຼື ຣາສີ	8	ຊື່	ທະນູ	ຫຼື	ມົດ (ແພະ/ແບ້)	ມີ	29	ວັນ
ເດືອນ ຫຼື ຣາສີ	9	ຊື່	ມັງກອນ	ຫຼື	ສັນ (ລິງ)	ມີ	29	ວັນ
ເດືອນ ຫຼື ຣາສີ	10	ຊື່	ກຸມ	ຫຼື	ເຮົ້າ (ໄກ່)	ມີ	30	ວັນ
ເດືອນ ຫຼື ຣາສີ	11	ຊື່	ມີນ	ຫຼື	ເສັດ (ໝາ)	ມີ	30	ວັນ
					ໂຮມມີ:		365	ວັນ

ຖ້າເປັນປີອະທິກະສຸຣະທິນ (366) ຕື່ມວັນ 1 ເຂົ້າໃນເດືອນ "ມັງກອນ ໃຫ້ເຕັມ 30 ວັນ.

ເດືອນສຸຣິຍະຄະຕີນີ້ ປະເທດໄທ ໄດ້ເອົາມາໃຊ້ເປັນທາງຣາຊະການແຕ່ປີ ພ.ສ. 2432 (ຈ.ສ 1256) ແລະໃຊ້ຕາມແບບຢ່າງປະຕິທິນຂອງຝຣັ່ງທຸກປະການຄື:

ເດືອນ	ມະກະຣາ/ມັງກອນ	(ເຢັນຍູອາຣີ)	31	ວັນ
ເດືອນ	ກຸມພາ	(ເຟບຣູອາຣີ)	28/29	ວັນ
ເດືອນ	ມີນາ	(ມາກ)	31	ວັນ
ເດືອນ	ເມສາ	(ເອປຣິນ)	30	ວັນ
ເດືອນ	ພຶສພາ/ພຶດສະພາ	(ເມ)	31	ວັນ
ເດືອນ	ມິຖຸນາ	(ຈູນ)	30	ວັນ
ເດືອນ	ກໍຣະກະດາ/ກໍລະກົດ	(ຈູລາຍ)	31	ວັນ
ເດືອນ	ສິງຫາ	(ອໍຄັດ)	31	ວັນ
ເດືອນ	ກັນຍາ	(ເສັບແຕມເບີ)	30	ວັນ
ເດືອນ	ຕຸລາ	(ອັອກໂຕເບີ)	31	ວັນ
ເດືອນ	ພຶສຈິກາ/ພະຈິກ	(ໂນແວມເບີ)	30	ວັນ
ເດືອນ	ທັນວາ	(ດີແຊມເບີ)	31	ວັນ
		ໂຮມ	365	ວັນ

<u>ແບ່ງເດືອນສຸຣິຍະຄະຕິເປັນ 3 ຈຳພວກ</u>

ໂຫນບູຮານໄດ້ແບ່ງເດືອນສຸຣິຍະຄະຕິອອກເປັນ 3 ຈຳພວກຄື:

(1) ຈຳພວກທີ 1 ແມ່ນເດືອນເຊິ່ງເວລາກາງເວັນ ແລະ ກາງຄືນ ມີລະຍະເວລາທ່ຳກັນຄື ເດືອນເມສາ ແລະ ຕຸລາ.

(2) ຈຳພວກທີ 2 ແມ່ນເດືອນເຊິ່ງເວລາກາງເວັນ ມີລະຍະຍາວກວ່າກາງຄືນ ຄື ເດືອນ ພຶດສະພາ ມິຖຸນາ ກໍລະກົດ ສິງຫາ ແລະກັນຍາ.

(3) ຈຳພວກທີ 3 ແມ່ນເດືອນ ເຊິ່ງເວລາກາງຄືນມີລະຍະເວລາຍາວກວ່າກາງເວັນ ຄື ເດືອນ ພະຈິກ ທັນວາ ມັງກອນ ກຸມພາ ແລະມີນາ.

ຍ. ມະຫານາທີ

ມາດຕາທີ່ໃຊ້ກຳໜົດເວລາຂອງກາງເວັນ ແລະ ກາງຄືນ ຕາມວິທີໂຫຣາສາດບູຮານນັ້ນເພິ່ນໃຊ້ "ມະຫານາທີ" ນຶ່ງມະຫານາທີທ່ຳກັບ 4 ບາດ ຫຼື 24 ນາທີ ນາລິກາ (1 ບາດ ມີ 6 ນາທີນາລິກາ) ດັ່ງນັ້ນ ວັນນຶ່ງ ຫຼື 24 ຊົ່ວໂມງຈຶ່ງທ່ຳກັບ 60 ມະຫານາທີ.

ສ່ວນວິທີນັບເວລາຂອງກາງເວັນແລະກາງຄືນນັ້ນ ໃຊ້ນັບແຕ່ເວລາທ່ຽງຂອງກາງເວັນໄປເຖິງຫົວຄ່ຳ ສຳຫຼັບກາງເວັນ ແລະຕັ້ງແຕ່ທ່ຽງຄືນໄປເຖິງຮຸ່ງ ສຳຫຼັບກາງຄືນ ຄືກຳໜົດເອົາພຽງແຕ່ເຄິ່ງມື້ ຫຼື 12 ຊົ່ວໂມງທ່ນັ້ນເປັນຫຼັກ ທີ່ຮຽກວ່າ "ພະຫິນາທີ" ຫຼື ນາທີຊັ້ນນອກ (ສ່ວນນາທີຊັ້ນໃນນັ້ນຮຽກວ່າ "ອັນໂຕນາທີ").

ຍ້ອນວ່າ "ພະຫິນາທີ" ກຳໜົດເອົາແຕ່ 12 ຊົ່ວໂມງ ຫຼື 30 ມະຫານາທີເປັນຫຼັກ ດັ່ງນັ້ນ ຈຶ່ງບໍ່ສະດວກແກ່ການສັງເກດລະຍະເວລາເຕັມກຳໜົດ 24 ຊົ່ວໂມງ ຫຼື 60 ມະຫານາທີຂອງວັນເພາະສະນັ້ນສຳຫຼັບການທຽບລະຍະເວລາແຫ່ງກາງເວັນແລະກາງຄືນແຕ່ລະເດືອນໆທີ່ສະເໜີລົງໄປນີ້ຈຶ່ງໄດ້ທະວີລະຍະເວລາເຊິ່ງ "ພະຫິນາທີ" ກຳໜົດໄວ້ນັ້ນຂຶ້ນເປັນ 2 ທ່ ດັ່ງນີ້:

ເດືອນຫຼືຣາສີ	ກາງເວັນ		ກາງຄືນ	
	ມະຫານາທີ	ຊົ່ວໂມງ ນາທີ	ມະຫານາທີ	ຊົ່ວໂມງ ນາທີ
ເມສາ	30	12 - 00	30	12 - 00
ພຶດສະພາ	32	12 - 48	28	11 - 12
ມິຖຸນາ	34	13 - 36	26	10 - 24
ກໍລະກົດ	36	14 - 24	24	9 - 36
ສິງຫາ	34	13 - 36	26	10 - 24
ກັນຍາ	32	12 - 48	28	11 - 12
ຕຸລາ	30	12 - 00	30	12 - 00
ພະຈິກ	28	11 - 12	32	12 - 48
ທັນວາ	26	10 - 24	34	13 - 36
ມັງກອນ	24	9 - 36	36	14 - 24
ກຸມພາ	26	10 - 24	34	13 - 36
ມີນາ	28	11 - 12	32	12 - 48

ຂໍ້ສັງເກດ: ຕາມທີ່ "ພະຫິນາທີ" ກໍານົດໄວ້ນີ້ ເວລາກາງເວັນເຊິ່ງມີລະຍະຍາວທີ່ສຸດ ແມ່ນເດືອນກໍລະກົດ (ມີເວລາ 36 ມະຫານາທີ ຫຼື 14 ຊົ່ວໂມງ 24 ນາທີ) ແລະເວລາກາງຄືນເຊິ່ງມີລະຍະເວລາຍາວທີ່ສຸດແມ່ນ ເດືອນມັງກອນ (ຄືມີເວລາ 36 ມະຫານາທີ ຫຼື 14 ຊົ່ວໂມງ 24 ນາທີ).

ແຕ່ໂຫຣາສາດທາງຝຣັ່ງກ່າວວ່າ ກາງເວັນທີ່ມີເວລາຍາວທີ່ສຸດແມ່ນເດືອນມິຖຸນາ (ໃນລະຫວ່າງ ວັນທີ 21 ມິຖຸນາ ອັນເປັນວັນຕັ້ງຕົ້ນຣະດູຮ້ອນ) ແລະກາງຄືນທີ່ມີເວລາຍາວທີ່ສຸດແມ່ນເດືອນທັນວາ (ໃນລະຫວ່າງວັນທີ 21 ອັນເປັນວັນຕັ້ງຕົ້ນຣະດູໜາວ).

3. ຣະດູ

ກ. ຣະດູລາວ: ຣະດູຂອງລາວເຮົາມີ 3 ຣະດູ ໆ ໃດກໍມີ 4 ເດືອນດັ່ງນີ້:

(1) ຣະດູຮ້ອນ ຫຼື ຄິມຫັນຕະຣະດູ ມີກຳໜົດຕັ້ງຕົ້ນແຕ່ເດືອນ 3 ແຮມ 1 ຄໍ່າ ໄປເຖິງເດືອນ 8 ເພັງ.

(2) ຣະດູຝົນ ຫຼື ວັດສັນຕະຣະດູ ມີກຳໜົດຕັ້ງຕົ້ນແຕ່ເດືອນ 8 ແຮມຄໍ່າ 1 ໄປເຖິງເດືອນ 12 ເພັງ.

(3) ຣະດູໜາວ ຫຼື ເຫມັນຕະຣະດູ ມີກຳໜົດຕັ້ງຕົ້ນແຕ່ເດືອນ 12 ແຮມຄໍ່າ 1 ໄປເຖິງເດືອນ 4 ເພັງ.

ການທີ່ຣະດູຂອງເຮົາຕັ້ງຕົ້ນຣະດູ ໃນວັນກາງເດືອນນັ້ນ ເຫັນວ່າໃນຄັ້ງພຸດທະການ ເພິ່ນນັບເອົາກາລະປັກ ຄືເດືອນຂ້າງແຮມ ເປັນຕົ້ນເດືອນ ແລະສຸກຣະປັກ ຄືເດືອນຂ້າງຂຶ້ນ ເປັນປາຍເດືອນ ດັ່ງນັ້ນ ວັນຕັ້ງຕົ້ນຣະ ດູຈຶ່ງຕົກຢູ່ໃນວັນແຮມຄໍ່າ 1 ທຸກໆຣະດູ ຕໍ່ມາພາຍຫຼັງ ໃນລະຫວ່າງ ພ,ສ 1200 ທາງ ໂຫຣາສາດ ຈຶ່ງຜ່ຽນນັບສຸກຣະປັກ ເປັນຕົ້ນເດືອນ ແລະ ກາລະປັກເປັນປາຍເດືອນ.

ສ່ວນໂຫນບູຮານໄດ້ກຳໜົດໄວ້ແຕ່ 3 ຣະດູນັ້ນ ຈະເນື່ອງມາຈາກຫຼັກຖານປະການໃດ ຂ້າພະເຈົ້າຍັງບໍ່ໄດ້ພົບມູນເຫດອັນແນ່ນອນແຕ່ຢ່າງໃດ.

ຂ. ຣະດູຝຣັ່ງ: ຣະດູຂອງພວກຝຣັ່ງມີ 4 ຣະດູ ຄືຣະດູໃບບານໃໝ່ ຣະດູຮ້ອນ ຣະດູໃບໄມ້ຫຼົ່ນ ແລະຣະດູໜາວ ຣະດູໃດ ມີ 3 ເດືອນ.

ວັນຕັ້ງຕົ້ນຣະດູແຕ່ລະຣະດູຂອງພວກຝຣັ່ງນີ້ ເອົາຖືເອົາເວລາທີ່ພະອາທິດ (ສົມມຸດເອົາແທນໂລກ) ເດີນຜ່ານຈຸດສຳຄັນທັງ 4 ຈຸດແຫ່ງວິຖີທາງຂອງພະອາທິດເອງ Ecliptic ເປັນຫຼັກກຳໜົດຈື່ຣະດູ ແລະ ເປັນຫຼັກຕັ້ງຕົ້ນຂອງຣະດູນັ້ນໆດ້ວຍ ຈຸດທັງ 4 ນັ້ນຄື: (1) ຈຸດທີ 1 ເປັນຫຼັກຕັ້ງຕົ້ນຣະດູບານໃໝ່ ໝາຍເອົາຈຸດບ່ອນຂອງທາງພະອາທິດເດີນຜ່ານເສັ້ນກາງ) ແຫ່ງປະຣິມົນທົນວົງມົນຂອງຂອບຟ້າ(Celestial equator) (ຮູບທີ 3) ໃນເວລາພະອາທິດ ເດີນຈາກວິດຖັນດອນ (Latitude)ຄືຂ້າງໃຕ້ໄປທາງເໜືອ ພະອາທິດເດີນເຖິງຈຸດນີ້ ໃນລະຫວ່າງວັນທີ 21 ມີນາ ໃນຄາວນັ້ນ ກາງເວັນກັບກາງຄືນ ມີລະຍະເວລາ 12 ຊົ່ວໂມງທໍ່ກັນພໍດີ.

ຈຸດທີ 1 ນີ້ຍັງເປັນຫຼັກສຳຄັນອີກຢ່າງນຶ່ງຄື ເປັນຫຼັກຕັ້ງຕົ້ນປີ "ສີເດຣັນ" (Sidereal Year) ເຊິ່ງເປັນປີທາງໂຫຣາສາດຂອງຝຣັ່ງ ປີແບບນີ້ ຖືເອົາເວລາອັນແທ້ຈິງຂອງພະອາທິດ ເດີນວຽນມາຄົບຮອບໃນບ່ອນຈຸດນັ້ນອີກ ອັນເປັນຫຼັກແຫ່ງການກຳໜົດຂວບປີ ດັ່ງນັ້ນຈຸດທີ 1 ນີ້ກໍມີຄວາມໝາຍດັ່ງດຽວກັນກັບຂີດທີ່ຂັ້ນຣາສີມີນແລະຣາສີເມດເຊິ່ງໂຫຣາສາດຝ່າຍລາວຖືເອົາເປັນຫຼັກຕັ້ງຕົ້ນປີ ຂອງເຮົານັ້ນໂດຍກົງ (ຮູບທີ 3)

ຮູບທີ 3:



(2) ຈຸດທີ 2 ເປັນຫຼັກຕັ້ງຕົ້ນຣະດູຮ້ອນ (ວັນຕັ້ງຕົ້ນຣະດູຮ້ອນນີ້ກົງກັບວັນທີ 21 ມິຖຸນາ) ຈຸດນີ້ແມ່ນຈຸດບ່ອນພະອາທິດ ເດີນໄປເຖິງຂີດສູງສຸດຂອງເສັ້ນກາງແຫ່ງປະຣິມົນທົນວົງມົນຂອງຂອບຟ້າໃນຄາວ ພະອາທິດ ຢູ່ສູງກວ່າລະດັບເສັ້ນກາງແຫ່ງປະຣິມົນທົນວົງມົນຂອງຟ້າຂຶ້ນໄປ 23 ອົງສາກັບ 27 ລິບດາ ພະອາທິດ ເດີນເຖິງຈຸດທີ 2 ນີ້ໃນລະຫວ່າງວັນທີ 21 ມິຖຸນາ ໃນລະຍະນີ້ເວລາກາງເວັນຍາວທີ່ສຸດ ຕົວຢ່າງໃນປະເທດເຮົາ ກາງເວັນມີ 13 ຊົ່ວໂມງເສດ ແລະ ກາງຄືນມີແຕ່ 10 ຊົ່ວໂມງເສດທໍ່ນັ້ນ.

ຈຸດທີ 2 ນີ້ ຕາມຈັກກະຣາສີຂອງຝຣັ່ງ ຢູ່ຣາສີແຄນເຊີຣ໌ (Cancer) ຫຼື ຣາສີກໍຣະກົດ ແລະ ຢູ່ຣະດັບ ເສັ້ນວິດຖຸັນດອນ (Latitude) ທີ່ຮຽກວ່າ ທຣອບປິກ ອັອຟ ແຄນເຊີຣ໌ (Tropic of cancer)

(3) ຈຸດທີ 3 ເປັນຫຼັກຕັ້ງຕົ້ນຣະດູໃບໄມ້ຫຼົ່ນ (ວັນຕັ້ງຕົ້ນຣະດູນີ້ ກົງກັບວັນທີ 23 ກັນຍາ ຈຸດນີ້ແມ່ນ ຈຸດບ່ອນ ພະອາທິດ ເດີນຜ່ານເສັ້ນກາງແຫ່ງປະຣິມົນທົນວົງມົນຂອງຂອບຟ້າໃນຄາວພະ

ອາທິດເດີນຈາກຈຸດທີ 2 ໄປທາງໃຕ້ ພະອາທິດ ເດີນເຖີງຈຸດນີ້ໃນລະຫວ່າງວັນທີ 23 ກັນຍາ ໃນຄາວນັ້ນ ກາງຄືນກັບກາງເວັນມີ ເວລາ 24 ຊົ່ວໂມງທ່ກັນ ຄືກັນກັບເວລາພະອາທິດເດີນເຖີງຈຸດທີ 1 ການທີ່ເປັນດັ່ງນີ້ກໍຍ້ອນວ່າ ຈຸດທີ 1 ກັບ ຈຸດທີ 3 ຢູ່ໃນລະດັບດຽວກັນນັ້ນເອງ ຄືຢູ່ຊື່ເສັ້ນກາງແຫ່ງປະຣິມົນທົນວົງມົນຂອງຟ້ານຳກັນ ແຕ່ຫາກຢູ່ຫ່າງກັນ 180 ອົງສາ ຫຼືຢູ່ກົງກັນຂ້າມຄົນລະສົ້ນຂອງເສັ້ນກາງ.

(4) ຈຸດທີ 4 ເປັນຫຼັກຕັ້ງຕົ້ນຣະດູໜາວ (ວັນຕັ້ງຕົ້ນຣະດູໜາວ ກົງກັບວັນທີ 21 ທັນວາ) ຈຸດນີ້ ແມ່ນຈຸດບ່ອນພະອາທິດ ເດີນເຖີງຂີດຕ່ຳສຸດໃນຄາວພະອາທິດເດີນຈາກຈຸດທີ 3 ລົງໄປທາງໃຕ້ ຂີດຕ່ຳສຸດແຫ່ງການເດີນຂອງພະອາທິດນັ້ນ ຢູ່ຕ່ຳກວ່າລະດັບເສັ້ນກາງ ແຫ່ງປະຣິມົນທົນວົງມົນຂອງຟ້າລົງໄປ 23 ອົງສາ 27 ລິບດາ ທ່ກັນກັບຂະໜາດຂີດສູງສຸດ (ຈຸດທີ 2) ພະອາທິດເດີນເຖີງຈຸດທີ 2 ນີ້ ໃນລະຫວ່າງວັນທີ 21 ທັນວາ ໃນຄາວນັ້ນກາງຄືນມີລະຍະເວລາຍາວທີ່ສຸດ ຕົວຢ່າງໃນປະເທດເຮົາ ກາງຄືນຍາວເຖີງ 13 ຊົ່ວໂມງເສດ ແລະ ກາງເວັນມີລະຍະເວລາພຽງ 10 ຊົ່ວໂມງເສດທ່ນັ້ນ.

ຈຸດທີ 4 ນີ້ ຕາມຈັກກະຣາສີຝຣັ່ງຢູ່ຣາສີແຄັປຣີຄອນ (Capricorn) ຫຼື ຣາສີມັງກອນ ແລະ ຢູ່ລະດັບເສັ້ນ ວິດຖັນດອນ (Latitude) ທີ່ຮຽກວ່າ ທຣອບປິກ ອັອຟ ແຄັປຣີຄອນ (Tropic of capricorn).

ຈຸດທີ 4 ນີ້ຢູ່ຫ່າງໄກຈາກຈຸດທີ 2 ຕາມເສັ້ນວິຖີທາງພະອາທິດໄປ 180 ອົງສາ ຄືຢູ່ກົງກັນຂ້າມຄົນລະຂ້າງຂອງວິຖີທາງພະອາທິດ ທັງຢູ່ຄົນລະຂ້າງຂອງເສັ້ນກາງແຫ່ງປະຣິມົນທົນວົງມົນຂອງຟ້າອີກດ້ວຍ (ເບິ່ງຮູບທີ ໓)

<u>ຫຼັກຕັ້ງຕົ້ນຣະດູຝຣັ່ງ</u>

ຈຸດທີ 1 ເຊິ່ງເປັນຫຼັກຕັ້ງຕົ້ນຣະດູ "ບານໃໝ່" ນັ້ນ ຢູ່ບ່ອນວິຖີທາງພະອາທິດໄປຜ່ານເສັ້ນກາງ ແຫ່ງປະຣິມົນທົນວົງມົນຂອງຂອບຟ້າ ພະອາທິດເດີນເຖີງຈຸດນີ້ໄປລະຫວ່າງວັນທີ 21 ມີ ນາ ຈຸດທີ 1 ນີ້ຍັງເປັນຫຼັກຕັ້ງຕົ້ນ "ປີສີເດຣັນ" ອີກດ້ວຍ.

ຈຸດທີ 2 ເຊິ່ງເປັນຫຼັກຕັ້ງຕົ້ນ "ຣະດູຮ້ອນ" ນັ້ນຢູ່ສູງກວ່າເສັ້ນກາງແຫ່ງ ປະຣິມົນທົນວົງມົນຂອງຂອບຟ້າ ຂຶ້ນໄປ 23 ອົງສາ 27 ລິບດາ ພະອາທິດເດີນເຖີງ ຈຸດທີ 2 ນີ້ ລະຫວ່າງວັນທີ 21 ມິຖຸນາ.

ຈຸດທີ 3 ເຊິ່ງເປັນຫຼັກຕັ້ງຕົ້ນ "ຣະດູໃບໄມ້ຫຼົ່ນ" ນັ້ນ ຢູ່ບ່ອນວິຖີທາງພະອາທິດໄປຜ່ານເສັ້ນກາງ ແຫ່ງປະຣິມົນທົນວົງມົນຂອບຟ້າ ແລະຢູ່ກົງກັນຂ້າມກັບຈຸດທີ 1 ພະອາທິດ ເດີນເຖີງ ຈຸດທີ 3 ນີ້ລະຫວ່າງ ວັນທີ 23 ກັນຍາ.

24 / VII ຫ້າມຈຳໜ່າຍ

ຈຸດທີ 4 ເຊິ່ງເປັນຫຼັກຕັ້ງຕົ້ນ "ຣະດູໜາວ" ນັ້ນຢູ່ຕ່ຳກວ່າເສັ້ນກາງແຫ່ງປະຣິມົນທົນວົງມົນຂອງຟ້າລົງໄປ 23 ອົງສາ 27 ລິບດາ ແລະຢູ່ກົງກັນຂ້າມກັບຈຸດທີ 2 ແລະຢູ່ຈຸດລະຂ້າງເສັ້ນກາງປະຣິມົນທົນວົງມົນຂອງຂອບຟ້າອີກດ້ວຍ ພະອາທິດເດີນເຖິງຈຸດທີ 4 ນີ້ ໃນລະຫວ່າງວັນທີ 21 ທັນວາ

ຂໍ້ສັງເກດ: ຣະດູຝຣັ່ງມີກຳໜົດເວລາຜິດກັນທຸກໆ ຣະດູ ດັ່ງຈະເຫັນຕໍ່ໄປນີ້:

(1) ຣະດູບານໃໝ່ ແຕ່ວັນທີ 21 ມີນາ ເຖິງ ວັນທີ 20 ມິຖຸນາ ເປັນເວລາ 92 ວັນ ປາຍ 20 ຊົ່ວໂມງ.

(2) ຣະດູຮ້ອນ ແຕ່ວັນທີ 21 ມິຖຸນາ ເຖິງວັນທີ 22 ກັນຍາ ເປັນເວລາ 93 ວັນ ປາຍ 15 ຊົ່ວໂມງ.

(3) ຣະດູໃບໄມ້ຫຼົ່ນ ແຕ່ວັນທີ 23 ກັນຍາ ເຖິງວັນທີ 20 ທັນວາ ເປັນເວລາ 89 ວັນ ປາຍ 19 ຊົ່ວໂມງ.

(4) ຣະດູໜາວ ແຕ່ວັນທີ 21 ທັນວາ ເຖິງວັນທີ 20 ມີນາ ເປັນເວລາ 89 ວັນຖ້ວນ.

ການທີ່ຣະດູຝຣັ່ງມີກຳໜົດເວລາຜິດກັນດັ່ງນີ້ ເປັນຍ້ອນລະຍະແຫ່ງວິຖີທາງພະອາທິດລະຫວ່າງ ຈຸດຕັ້ງຕົ້ນຣະດູທັງ 4 ນັ້ນ ຍາວບໍ່ທ່ຳກັນນັ້ນເອງ.

4. ປີ

ປີລາວຂອງເຮົາເປັນປີສຸຣິຍະຄະຕິຄືກັນ ແຕ່ໃຊ້ເດືອນທາງຈັນທຣະຄະຕິ ດັ່ງທີ່ໄດ້ເຫັນມາແລ້ວນັ້ນ ປີສຸຣິຍະຄະຕິແບບນີ້ ຖືເອົາລະຍະເວລາທີ່ພະອາທິດ ເດີນຮອບໂລກຄົບຮອບນຶ່ງບໍຣິບູນເປັນຫຼັກກຳໜົດເວລາ ຂອງຂວບປີຊຶ່ງມີຈຳນວນ 365 ວັນ 6 ຊົ່ວໂມງ 12 ນາທີ 36 ວິນາທີ.

ໃນທີ່ນີ້ໂຫນບູຮານສົມມຸດເອົາພະອາທິດເດີນແທນໂລກ ດັ່ງທີ່ຜາກົດແກ່ຕາເຮົາ ຄືເຮົາເຫັນພະອາທິດ ຂຶ້ນຈາກທາງຕາເວັນອອກ ແລ້ວເດີນຜ່ານຫົວເຮົາລັບຫາຍໄປທາງຕາເວັນຕົກດ້ວຍເຫດນີ້ ເມື່ອຕຳຣາໂຫຣາສາດ ກ່າວວ່າ ພະອາທິດ ເດີນຄັ້ງໃດ ກໍຕ້ອງເຂົ້າໃຈວ່າ "ແມ່ນໂລກເດີນ" ສະເໝີໄປ.

ພະອາທິດ ຈະເດີນໄວ ຫຼື ຊ້າພໍປານໃດ ແລະລະຍະທາງແຫ່ງຮອບນຶ່ງຂອງພະອາທິດຈະມີຂະໜາດຍາວທໍ່ໃດນັ້ນ ໂຫນບູຮານຂອງເຮົາບໍ່ໄດ້ກ່າວເຖິງເລີຍ ແຕ່ຕາມທີ່ໂຫນຝຣັ່ງໄດ້ແທກມາແລ້ວນັ້ນໄດ້ຜົນວ່າ ພະອາທິດ ເດີນໄວເຖິງ 29 ກິໂລແມັດ 745 ແມັດ ຕໍ່ ວິນາທີ ຫຼື 107082 ກິໂລແມັດ ຕໍ່ 1 ຊົ່ວໂມງ ຄືໄວກວ່າເຮືອບິນອາຍພົ່ນແບບປະຈັນບານ ທີ່ໃຊ້ກັນໃນສົງຄາມເກົາຫຼີຫວ່າງປີ ຄ.ສ. 1946 ແລ້ວມານີ້ ເຖິງ 100 ຕໍ່ແຕ່ມະນຸດເຮົາບໍ່ຮູ້ເມື່ອເລີຍວ່າ ໂລກທີ່ເຮົາຢູ່ນີ້ໄດ້ພາເຮົາເຫາະວຽນໃນອາກາດໄວເຖິງປານນີ້.

ສ່ວນຂະໜາດຍາວຂອງວິຖີທາງພຣະອາທິດ ນັ້ນມີເຖິງ 938 703 299 ກິໂລແມັດ(ຜົນແຫ່ງ ບົດເລກ 29,745 ຄູນກັບຈຳນວນ ວິນາທີ ຊຶ່ງມີຢູ່ໃນປີຂອງເຮົາ)

ຮູບທີ 4:



ເມື່ອປຽບທຽບກຳໜົດເວລາປີ ລາວ ກັບໂຫຣາສາດ ຝຣັ່ງ ແບບປີ (ສິເດຣັນ) ແລະ ປີທາງປະຕິທິນ ແບບປີ ເກຣກໍຣຽນ(GREGORIAN) ແລ້ວຈະເຫັນໄດ້ວ່າປີລາວ:

(1) ຍາວກວ່າປີໂຫຣາສາດຝຣັ່ງແບບ ປີສິເດຣັນ ຊຶ່ງມີຈຳນວນ 365 ວັນ 5 ຊົ່ວໂມງ 9 ນາທີ 9 ວິນາທີ ນັ້ນໄປ 3 ນາທີ ກັບ 27 ວິນາທີ.

(2) ຍາວກວ່າປີປະຕິທິນຝຣັ່ງແບບ ເກຣກໍຣຽນ ຊຶ່ງມີ 365 ວັນ 5 ຊົ່ວໂມງ 49 ນາທີ ກັບ 12 ວິນາທີ ນັ້ນ ໄປ 23 ນາທີ ກັບ 24 ວິນາທີ.

ການທີ່ປີລາວກັບປີໂຫຣາສາດຝຣັ່ງ ມີກຳໜົດເວລາໃກ້ກັນທີ່ສຸດນີ້ ກໍຍ້ອນວ່າ ເປັນປີສຸຣິຍະຄະຕິແບບດຽວກັນ ຄືຖືເອົາລະຍະເວລາທີ່ພະອາທິດ ເດີນຮອບໂລກຄົບຮອບນຶ່ງບໍຣິບູນເປັນຫຼັກກຳໜົດເວລາຂອງປີຄືກັນ.

ສ່ວນປີລາວ ຍາວຫຼືຫຼາຍກວ່າປີທາງປະຕິທິນຂອງຝຣັ່ງໄປ 23 ນາທີເສດນັ້ນ ກໍຍ້ອນວ່າ ປີທາງປະຕິທິນຂອງຝຣັ່ງ ເປັນປີສຸຣິຍະຄະຕິອີກແບບນຶ່ງ ຊຶ່ງຖືເອົາຄວາມເປັນປົກກະຕິ ຂອງຣະດູ ເປັນຫຼັກ ແຫ່ງການກຳໜົດເວລາຂອງປີ ດັ່ງທີ່ໄດ້ກ່າວມາແລ້ວ ແລະ ດັ່ງທີ່ໄດ້ອະທິບາຍໄວ້ໃຕ້ຮູບ ທີ ໔

ກ. ປີຝຣັ່ງ (ປີທຣໍປິກ)

ປີທຣໍປິກຂອງຝຣັ່ງ (ຕາມຮູບທີ 4) ນີ້ ຖືເອົາຄວາມເປັນປົກກະຕິຂອງຣະດູເປັນຫຼັກແຫ່ງ ການກຳໜົດຂວບປີ ຕຳຣາໂຫຣາສາດຝຣັ່ງບອກວ່າ ຈຸດຊຶ່ງເປັນຫຼັກຕັ້ງຕົ້ນຂອງຣະດູ "ບານໃໝ່" ຫຼື ຈຸດວິຖີທາງພະອາທິດ ໄປຜ່ານເສັ້ນກາງແຫ່ງປະຣິມົນທົນວົງມົນ ຂອງຟ້ານັ້ນເຄື່ອນທີ່ໂດຍທັນ ຫຼັງໃຫ້ການເດີນທາງຂອງພະອາທິດເລື້ອຍໄປ ເພາະສະນັ້ນ ເມື່ອພະອາທິດ ຕັ້ງຕົ້ນຮອບບ່ອນຈຸດ ຈ/໑ ເດີນຮອບ ໂລກວຽນໄປຫາຕົ້ນທາງ ຈຶ່ງໄປສວນກັບຈຸດ ຈ/1 ນັ້ນທີ່ ຈ/2 ຄືກ່ອນຈະເຖິງຕົ້ນທາງ ເດີນເປັນລະຍະ 50 ພີລິບດາ ປີລຸນມາກໍຈະໄປສວນຈຸດ ຈ/1 ນັ້ນຢູ່ທີ່ ຈ/3 ຊຶ່ງຫ່າງຈາກ ຈ/2 ໄປ ທາງຊ້າຍອີກ 50 ພີລິບດາ ແລະຈະເປັນດັ່ງນີ້ໄປສະເໝີທຸກປີ.

ເນື່ອງຈາກພະອາທິດ ບໍ່ໄດ້ເດີນຄົບຮອບບໍຣິບູນແຫ່ງວິຖີທາງຂອງຕົນ ກໍໄປສວນກັບຈຸດ ຕັ້ງຕົ້ນຣະດູ "ບານໃໝ່" ເຊິ່ງເປັນຫຼັກຕັ້ງຕົ້ນແຫ່ງຮອບປີ ທຣໍປິກກ່ອນ ດັ່ງນັ້ນ ປີ ທຣໍປິກ ຈຶ່ງມີການ ກຳໜົດເວລາແຕ່ພຽງ 365 ວັນ 5 ຊົ່ວໂມງ ກັບ 48 ນາທີ 45 ວິນາທີ.

ຂ. ປີລາວ

ສ່ວນປີລາວນັ້ນຖືເອົາເວລາອັນແທ້ຈິງທີ່ພະອາທິດ ເດີນຄົບຮອບນຶ່ງບໍຣິບູນ ເປັນຫຼັກ ແຫ່ງກຳໜົດຂວບປີ.

ຫຼັກກຳໜົດຂວບປີຂອງລາວເຮົານີ້ ໂຫຣາສາດ ຂອງເຮົາກຳໜົດເອົາບ່ອນ <u>ຂີດອັ້ນ</u> ຣາສີ ມີນ ແລະ ຣາສີເມດ ເປັນຫຼັກຕັ້ງຕົ້ນຮອບແຫ່ງການເດີນທາງຂອງພະອາທິດ ແລະເປັນຈຸດຕັ້ງ ຕົ້ນປີໃໝ່ນຳອີກ ເມື່ອພະອາທິດວຽນມາເຖິງ <u>ຂີດ</u> ນັ້ນໃນເວລາໃດ ກໍຄົບບໍຣິບູນປີໃນເວລານັ້ນ ແລ້ວ ກໍຕັ້ງຮອບໃໝ່ ຫຼື ປີໃໝ່ຕໍ່ໄປ ເພາະສະນັ້ນ ປີລາວຈຶ່ງຍາວເຖິງ 365 ວັນ 6 ຊົ່ວໂມງ 12 ນາທີ 36 ວິນາທີ ຄືຍາວກວ່າປີ ທຣໍປິກ 23 ນາທີ 51 ວິນາທີ ແລະ ຍາວກວ່າປີເກຣກໍຣຽນ ຊຶ່ງຖືຫຼັກອັນ ດຽວກັນກັບປີ ທຣໍປິກນັ້ນ 23 ນາທີ 24 ວິນາທີ.

<u>ວັນສັງຂານ (ປີໃໝ່ລາວ)</u>

(ຄຳວ່າ "ວັນສັງຂານ" ນີ້ແມ່ນຄຳດຽວກັນກັບຄຳວ່າ "ວັນສົງກຣານ" ນັ້ນເອງ ຄືຕາມຫຼັກ

ການແປງຄຳເວົ້ານັ້ນ ຄຳພາສາຂະເໝນແລະສັນສະກຣິດ ຄຳໃດທີ່ແມ່ນຕົວ ກ ກັບ ຕົວ ຣ ຄວບກັນ ເຮົາ ແປງເປັນຕົວ ຂ ດັ່ງຄຳວ່າ ກຣຽນ ເປັນຂຽນ (ຄືນິກຂຽນ) ກຣາບ ເປັນ ຂາບ ແລະ ສົງກຣານ ເປັນ ສັງຂານ ເປັນຕົ້ນ ສະນັ້ນ ໃນທີ່ນີ້ຈຶ່ງໃຊ້ຄຳວ່າ ວັນສັງຂານຕາມບູຮານ ເຄີຍເວົ້າມາ ຂໍໃຫ້ຜູ້ອ່ານເຂົ້າໃຈຕາມນີ້ດ້ວຍ)

ເມື່ອພະອາທິດ ເດີນມາຄົບຮອບທີ່ ຂີດຂັ້ນຣາສີມີນ ກັບ ຣາສີເມດ ອັນເປັນກຳໜົດຂວບປີນຶ່ງນັ້ນ ລາວເຮົາຖືເອົາວັນນັ້ນເປັນວັນສັງຂານ ແປວ່າວັນຂຶ້ນປີໃໝ່ (ສ. ສັງກຣານຕະ ປ. ສັງກັນຕະ ແປວ່າ ກ້າວຂຶ້ນ) ຫຼື ວັນຖະເຫຼີງສົກ.

ໃນຂະນະທີ່ພະອາທິດ ເດີນມາຄົບຮອບທີ່ເຮົາຮຽກວ່າວັນສັງຂານນີ້ ຕຳຣາໂຫຣາສາດໄດ້ແບ່ງວັນສັງຂານນີ້ອອກເປັນ 3 ວັນ ຄື ວັນສັງຂານໄປ ວັນສັງຂານເນົາ ແລະ ວັນສັງຂານຂຶ້ນ ດັ່ງນີ້:

1 <u>ວັນສັງຂານໄປ</u> ແມ່ນວັນພະອາທິດ ຍ້າຍຈາກຣາສີມີນເຂົ້າສູ່ຣາສີເມດ ຄືເປັນວັນທີ່ພະອາທິດເດີນມາຄົບຮອບນຶ່ງບໍລິບູນ ແລະ ຕັ້ງແຕ່ຕົ້ນຮອບໃໝ່ ຫຼື ປີໃໝ່ຕໍ່ໄປ ເພາະສະນັ້ນ ສຳຜຸດພະອາທິດ ໃນວັນສັງຂານໄປຈຶ່ງມີ ຣາສີ 0 ແລະ ອົງສາ 0 ສະເໝີ ແລະ ລາງປີ ກໍມີລິບດາ 0 ອີກ ຊຶ່ງໝາຍຄວາມວ່າ ປີນັ້ນພະອາທິດ ເດີນເຖິງຂີດຂັ້ນຣາສີເມດໃນເວລາທ່ຽງພໍດີ.

2 <u>ວັນເນົາ</u> ແມ່ນວັນທີ່ຢູ່ລະຫວ່າງກາງຂອງວັນສັງຂານໄປແລະສັງຂານຂຶ້ນ (ຕາມປົກກະຕິວັນເນົາ ມີແຕ່ວັນດຽວ ແຕ່ເທື່ອງໆ ກໍມີເຖິງ 2 ວັນ ປີທີ່ສັງຂານເນົາ 2 ວັນນັ້ນ ແມ່ນປີທີ່ກຳມັດຊະພົນຖະເຫຼີງສົກ ມີຈຳນວນແຕ່ 668 ຂຶ້ນໄປເຖິງ 799 ຫຼັກນີ້ ຂ້າພະເຈົ້າໄດ້ສັງເກດເຫັນເອງແຕ່ເມື່ອຄັ້ງທຳອັດຕຣາຖະເຫຼີງສົກ ແຕ່ປີ ຈ.ສ. 1250 ຈົນເຖິງ 1650 ໄວ້ນັ້ນ ແລະ ທັງໄດ້ທຳສຳຜຸດພະອາທິດກວດຄົ້ນຫາຂອບເຂດກຳມັດຊະພົນ ຊຶ່ງທຳໃຫ້ສັງຂານມີເນົາເຖິງ 2 ວັນນັ້ນດ້ວຍ.

3 <u>ວັນສັງຂານຂຶ້ນ</u> ເປັນວັນຂຶ້ນປີໃໝ່ຕາມປະເພນີສືບກັນມາແຕ່ບູຮານ ແຕ່ຖ້າຈະເວົ້າຕາມຫຼັກໂຫຣາສາດແລ້ວ ປີໃໝ່ກໍຕ້ອງກົງກັບວັນສັງຂານໄປນັ້ນເອງ ເພາະເປັນວັນຊຶ່ງພະອາທິດເດີນມາຄົບຮອບບໍລິບູນ ດັ່ງກ່າວແລ້ວ.

ການທີ່ໂຫນໝາຍເອົາວັນສັງຂານຂຶ້ນ ເປັນຫຼັກຕັ້ງຕົ້ນປີໃໝ່ໃນທາງປະເພນີນັ້ນ ເຫັນຈະເປັນຍ້ອນວ່າ ວັນສັງຂານຂຶ້ນເປັນຫຼັກສຳຄັນຢູ່ 2 ປະການຄື:

(1-) ເປັນວັນສຸດທ້າຍແຫ່ງຈຳນວນຫໍຣະຄຸນຖະເຫຼີງສົກ ແລະຫໍຣະຄູນນັ້ນເປັນຈຳນວນວັນຊຶ່ງລ່ວງມາແລ້ວ ແຕ່ວັນຕັ້ງຕົ້ນຈຸລະສັກຣາດ ຈົນເຖິງວັນສຸດທ້າຍແຫ່ງປີທີ່ເຮົາຄູນສັງຂານນັ້ນ (ທຳອັດຕາຖະເຫຼີງສົກ) ຖ້າເຮົາຄູນສັງຂານໂດຍໃຊ້ພຸດທະສັກຣາດຫຼືມະຫາສັກຣາດ ແລະ ໃຊ້ເກນສຳຫຼັບ 2 ສັກຣາດດັ່ງດຽວກັນກັບຈຸນລະສັກຣາດ

(2-) ເປັນໝາຍເຂດ (0) ແຫ່ງສຸຣະທິນ ຊຶ່ງນັບ 1 ມາແຕ່ວັນທີ່ຢູ່ຫຼັງວັນສັງຂານຂຶ້ນ. ສຸຣະທິນ ແມ່ນຈຳນວນວັນຊຶ່ງມີຢູ່ແຕ່ຫຼັງວັນສັງຂານຂຶ້ນມາ ຈົນເຖິງວັນທີ່ເຮົາຕ້ອງການຈະຄຳນວນມັດທະຍົມ ແລະ ສຳຜຸດພະເຄາະດວງໃດໆກໍຕາມ ດ້ວຍເຫດນີ້ ສຸຣະທິນຈຶ່ງເປັນເກນສຳຄັນເກນນຶ່ງ.

ເຖິງແມ່ນວ່າພະອາທິດຈະເດີນເປັນເວລາ 365 ວັນ 6 ຊົ່ວໂມງ 12 ນາທີ 36 ວິນາທີ ຈຶ່ງຄົບຮອບນຶ່ງກໍຕາມ ແຕ່ປະຕິທິນກໍຖືເອົາພຽງແຕ່ຈຳນວນ 365 ວັນເຕັມທໍ່ນັ້ນມາເປັນຫຼັກຂອງຮອບປີ ສ່ວນເສດ 6 ຊົ່ວ ໂມງ 12 ນາທີ 36 ວິນາທີ ນັ້ນຍົກໄວ້.

ຄ. ປີອະທິກະສຸຣະທິນ

ຈຳນວນເສດຂອງປີ 6 ຊົ່ວໂມງ 12 ນາທີ 36 ວິນາທີ ນັ້ນເມື່ອໄດ້ຫຼາຍປີແລະຄົບ24 ຊົ່ວໂມງໃນປີໃດແລ້ວກໍຕື່ມວັນ 1 ເຂົ້າໃນປີນັ້ນ ໃຫ້ມີ 366 ວັນ ປີທີ່ຕື່ມວັນເຂົ້ານີ້ຈຶ່ງຮຽກວ່າ "ປີອະທິກະສຸຣະທິນ".

ປີທີ່ເປັນອະທິກະສຸຣະທິນນັ້ນ ສັງເກດໄດ້ຈາກຈຳນວນ "ກຳມັດຊະພົນຖະເຫຼືອສິກ" ດັ່ງນີ້: ຖ້າປີໃດມີກຳມັດຊະພົນຖະເຫຼືອສິກ ຕັ້ງແຕ່ນຶ່ງຂຶ້ນໄປຈົນເຖິງ 207 ແລ້ວ ປີນັ້ນຕ້ອງເປັນອະທິກະສຸຣະທິນ ເພາະເປັນປີນຶ່ງໃນຈຳນວນ 207 ປີທີ່ເປັນປີອະທິກະສຸຣະທິນ ອັນມີຢູ່ໃນຈຳນວນ 800 ປີ ທີ່ໂຫນບູຮານຕັ້ງເປັນຫຼັກເກນແຫ່ງ ກຳໜົດເວລາປີຂອງເຮົາ ດັ່ງຈະສະເໜີຕໍ່ໄປນີ້:

(1) - ປະຕິທິນຂອງເຮົາເອົາເກນ 800 ເປັນຫຼັກ ໂດຍແບ່ງໃຫ້ມີ:

ກ- ປີລະ 365 ວັນ ມີຈຳນວນ 593 ປີ ໂຮມເປັນ	216,445	ວັນ
ຂ- ປີລະ 366 ວັນ ມີຈຳນວນ 207 ປີ ໂຮມເປັນ	75,761	ວັນ
800 ປີມີ	292,207	ວັນ

(2) - ປະຕິທິນຝຣັ່ງ ເອົາເກນ 400 ເປັນຫຼັກ ໂດຍແບ່ງໃຫ້ມີ:

ກ- ປີລະ 365 ວັນ ມີຈຳນວນ 303 ປີ ໂຮມເປັນ	110,595	ວັນ
ຂ- ປີລະ 366 ວັນ ມີຈຳນວນ 97 ປີ ໂຮມເປັນ	35,502	ວັນ
400 ປີມີ	146,097	ວັນ

ເມື່ອເອົາ 2 ຄູນເກນ 400 ປີ ຂອງຝຣັ່ງໃຫ້ເປັນ 800 ປີ ທໍ່ກັນກັບເກນຂອງເຮົາແລ້ວ ກໍຈະໄດ້ຜົນແຕ່ 292,194 ວັນ ຊຶ່ງນ້ອຍກວ່າຈຳນວນວັນທາງເກນຂອງເຮົາໄປ 13 ວັນ ເພາະສະນັ້ນ ປີທາງປະຕິທິນຝຣັ່ງສັ້ນ ຫຼື ຫຼຸດປີລາວ 13 ໃນສ່ວນ 800 (13/800) ຫຼື 0,01625 ຊຶ່ງຄິດເປັນເວລາໄດ້ 23 ນາທີ 24 ວິນາທີ ດັ່ງກ່າວມາແລ້ວ ທັງນີ້ກໍຍ້ອນຕັ້ງເກນຕ່າງກັນນັ້ນເອງ.

ແຕ່ເຖິງດັ່ງນັ້ນປີລາວກໍຍັງບໍ່ຫຼາຍທໍ່ປີຝຣັ່ງອີກແບບນຶ່ງ ຊຶ່ງຮຽກວ່າປີອະໂນມາລິສຕິກ ຊຶ່ງ

ມີຈຳນວນວັນເຖິງ 365 ວັນ 6 ຊົ່ວໂມງ 13 ນາທີ 56 ວິນາທີ.

ຖ້າຈະປຽບທຽບປີສຸຣິຍະຄະຕິລາວ ກັບປີສຸຣິຍະຄະຕິຂອງຝຣັ່ງ ທຸກໆແບບທີ່ເຄີຍໃຊ້ມາແລ້ວ ແລະທີ່ໃຊ້ຢູ່ສະໄໝນີ້ (ປີຝຣັ່ງທີ່ໃຊ້ຢູ່ທຸກວັນນີ້ແມ່ນປີ ເກຣກໍຣຽນ) ກໍຈະເຫັນຜົນດັ່ງຕໍ່ໄປນີ້:

ປີ ອະໂນມາລິສຕິກ (ANOMALISTIC)	365 ວັນ 6 ຊົ່ວໂມງ 13 ນາທີ 56 ວິນາທີ
ປີ ລາວ	365 ວັນ 6 ຊົ່ວໂມງ 12 ນາທີ 36 ວິນາທີ
ປີ ສີເດຣັນ (SIDERAN)	365 ວັນ 6 ຊົ່ວໂມງ 9 ນາທີ 9 ວິນາທີ
ປີ ຈູລຽນ (JULIAN)	365 ວັນ 6 ຊົ່ວໂມງ 0 ນາທີ 0 ວິນາທີ
ປີ ເກຣກໍຣຽນ (GREGORIAN)	365 ວັນ 5 ຊົ່ວໂມງ 49 ນາທີ 12 ວິນາທີ
ປີ ທຣໍປິກ (TROPIC)	365 ວັນ 5 ຊົ່ວໂມງ 48 ນາທີ 45 ວິນາທີ

ການທີ່ປີລາວຂອງເຮົາຫຼາຍກວ່າປີປະຕິທິນ (ເກຣຣໍຣຽນ) ຂອງຝຣັ່ງໄປ 23 ນາທີ 24 ວິນາທີນັ້ນ ຖ້າຫຼາຍປີໄປທໍ່ໃດກໍຍິ່ງຜິດເວລາຫຼາຍຂຶ້ນ ຄື ເມື່ອເຖິງ 61 ປີກໍຜິດເວລາກັນເຖິງ 23 ຊົ່ວໂມງ 47 ນາທີ 24 ວິນາທີ.

ເພາະສະນັ້ນເມື່ອນັບແຕ່ວັນຕັ້ງຈຸລະສັກຣາດມາຈົນເຖິງວັນສຸດທ້າຍແຫ່ງປີ ຈ.ສ 1311 ຄືໃນກຳໜົດ 1311 ປີເຕັມນັ້ນ ປີລາວຈຶ່ງຫຼາຍເກີນປີທາງປະຕິທິນຝຣັ່ງໄປເຖິງ 21 ວັນ 7 ຊົ່ວໂມງ 14 ນາທີ ແລ້ວດ້ວຍເຫດນີ້ເອງ ວັນສັງຂານຂຶ້ນໃນຄາວຕັ້ງຕົ້ນຈຸລະສັກຣາດ ຊຶ່ງກົງກັບວັນທີ 24 ມີນາ (ມາກ) ຄ.ສ 639 ນັ້ນຈຶ່ງເລື່ອນມາຕົກຢູ່ໃນກາງເດືອນເມສາ ແລະ ຈະເລື່ອນໄປຫາທ້າຍເດືອນເມສາ ທຸກໆ 61 ປີເປັນປົກກະຕິສະເໝີ ດັ່ງຈະສັງເກດໄດ້ຕໍ່ໄປນີ້:

ປີ	ຈ.ສ	1201 ສັງຂານຂຶ້ນກົງກັບວັນທີ	14	ເມສາ	ຄ.ສ	1839
ປີ	ຈ.ສ	1262 ສັງຂານຂຶ້ນກົງກັບວັນທີ	15	ເມສາ	ຄ.ສ	1900
ປີ	ຈ.ສ	1323 ສັງຂານຂຶ້ນກົງກັບວັນທີ	15	ເມສາ	ຄ.ສ	1961
ປີ	ຈ.ສ	1324 ສັງຂານຂຶ້ນກົງກັບວັນທີ	16	ເມສາ	ຄ.ສ	1962

ແລະຕໍ່ໆໄປ ວັນສ້າງຂານຂຶ້ນກໍຍ້າຍໄປຕົກວັນທີ 17-18-19 ເມສາເປັນລຳດັບໄປທຸກໆຮອບ 61 ປີສະເໝີ ແລ້ວປີເຮົາກໍຍິ່ງຈະຜິດຈາກຄວາມເປັນປົກກະຕິ ຂອງຣະດູໄປຫຼາຍກວ່າໃນປັດຈຸບັນນີ້ອີກ.

ໃນຂະນະວັນສັງຂານຂຶ້ນກົງກັບວັນທີ 15 ເມສານີ້ (ຈ.ສ 1311) ປີຂອງເຮົາກໍຜິດຈາກວັນທີ 21 ມີນາ ຊຶ່ງເປັນວັນຕັ້ງຕົ້ນຮອບຣະດູນັ້ນໄປເຖິງ 24 ວັນແລ້ວ ຄື:

(1) ຜິດມາແຕ່ຄາວຕັ້ງຈຸລະສັກຣາດ 3 ວັນແລ້ວ

(2) ນັບແຕ່ ຕັ້ງຈຸລະສັກຣາດ ມາເຖິງຈຸລະສັກຣາດ 1311 ຜິດມາອີກ 21 ວັນເສດ.

ເນື່ອງຈາກປີຂອງເຮົາຜິດຈາກຫຼັກຂອງຣະດູໄປແລ້ວເກືອບຈະເຖິງເດືອນນີ້ເອງ ຊາວໄຮ່ ຊາວນາ ຈຶ່ງຄາດຄະເນຫາຟ້າຫາຝົນບໍ່ຄ່ອຍຈະຖືກ ແລະ ຈຶ່ງບໍ່ໄດ້ຮັບຜົນທີ່ຫຼຽມກັບສະໄໝບູຮານ ແລ້ວກໍພາກັນຈົ່ມວ່າ "ໃນຄັ້ງບູຮານ ເຂົ້າໃນນາ ປາໃນນ້ຳອຸດົມສົມບູນເປັນປົກກະຕິສະເໝີ ແຕ່ມາໃນສະໄໝນີ້ ເຂົ້າກໍໜີນາປາກໍໜີນ້ຳໄປໝົດ" ດັ່ງນັ້ນ, ດ້ວຍເຫດນີ້ຈຶ່ງຄວນປ່ຽນຫຼັກແຫ່ງການກຳໜົດ "ເວລາປີລາວ" ເສຽໃໝ່.

ງ. ປ່ຽນຫຼັກແຫ່ງການກຳໜົດລະຍະເວລາປີລາວ

ເມື່ອເຫັນປະຈັກວ່າ ປີຂອງເຮົາໄດ້ເຄື່ອນຄາດຈາກຣະດູໄປເປັນເວລາ 24 ວັນແລ້ວ ແລະ ຍິ່ງເຫິງນານໄປກໍຍິ່ງຈະຜິດຫຼາຍຕື່ມຂຶ້ນໄປອີກ ຂ້າພະເຈົ້າຈຶ່ງເຫັນວ່າ ບໍ່ຄວນຈະປະໄວ້ຈຳຕ້ອງຫາໂອກາດ ແລະ ວິທີແກ້ໄຂ "ຫຼັກແຫ່ງການກຳໜົດເວລາປີລາວ" ຂອງເຮົາເສຽໃໝ່ ເພື່ອຫຼີກເວັ້ນບໍ່ໃຫ້ປະຕິທິນເຄື່ອນຄາດຈາກ ຣະດູ ເກີນໄປກວ່າທີ່ເປັນມາແລ້ວ.

ການແກ້ໄຂປ່ຽນແປງດັ່ງນີ້ ທາງປະຕິທິນຝຣັ່ງກໍໄດ້ເຄີຍແກ້ໄຂມາແລ້ວເທື່ອນຶ່ງ ດັ່ງຈະນຳເລື່ອງແກ້ໄຂນັ້ນມາອ້າງໄວ້ເປັນຫຼັກດັ່ງຕໍ່ໄປນີ້:

(1) ປີຊຶ່ງພວກຝຣັ່ງຊາວໂຣມັນໃຊ້ກັນມາແຕ່ຕົ້ນໆນັ້ນ ປີນຶ່ງມີແຕ່ 10 ເດືອນ ໂຣມເປັນຈຳນວນວັນມີແຕ່ 304 ວັນ ພາຍລຸນມາຈຶ່ງປ່ຽນມາໃຊ້ປີແບບໃໝ່ມີ 12 ເດືອນ ໂຣມວັນມີ 355 ວັນ. ຊາວໂຣມັນໃຊ້ປີແບບນີ້ມາຈົນເຖິງປີ 708 ແຫ່ງໂຣມັນສັກຣາດ ຄືຈົນເຖິງ 44 ປີກ່ອນຈະຕັ້ງຄິດຕະສັກຣາດ ຈຶ່ງຍົກເລີກ ແລ້ວໃຊ້ປີສຸຣິຍະຄະຕິແທນຕໍ່ມາ ປີສຸຣິຍະຄະຕິນັ້ນ ມີຫຼັກເກນດັ່ງນີ້:

ກ/. ມີກຳໜົດເວລາ 365 ວັນ 6 ຊົ່ວໂມງຖ້ວນ.

ຂ/. ມີປີອະທິກະສຸຣະທິນ 366 ວັນ ເຂົ້າຂັ້ນນຶ່ງເທື່ອທຸກ 4 ປີສະເໝີ.

ປີແບບນີ້ ພະເຈົ້າຈັກກະພັດ "ຈູລຽດ ຊີຊາ" (Jules Ceaar 101- 44 ກ່ອນຄິດຕະການ) ແຫ່ງກຣຸງໂຣມໄດ້ອອກພະຣາຊະບັນຍັດໃຫ້ໃຊ້ ເພາະສະນັ້ນ ຈຶ່ງວ່າຮຽກວ່າ "ປີຈູລຽນ (Julian)"

(2) ເມື່ອໃຊ້ປີຈູລຽນມາຈົນເຖິງ ຄ.ສ 1582 ບັນດາໂຫນຈຶ່ງລົງຄວາມເຫັນວ່າ ປີຈູລຽນມີກຳໜົດເວລາ ຫຼາຍກວ່າກຳໜົດເວລາຮອບຂອງຣະດູ ຄືປີ ທຣໍປິກ ນັ້ນໄປ 11 ນາທີ 15 ວິນາທີ(ປີທຣໍປິກ ນີ້ມີ 365 ວັນ 5 ຊົ່ວໂມງ 48 ນາທີ 45 ວິນາທີ) ຄືຫຼາຍເກີນໄປ 3 ວັນຕໍ່ 400 ປີ ຫຼື 9 ວັນຕໍ່ 1200 ປີ ດ້ວຍເຫດນີ້ ໃນໄລຍະເວລາ 1626 ປີ ທີ່ໃຊ້ ປີ ຈູລຽນ ມານັ້ນ ປະຕິທິນຈຶ່ງໄດ້ເຄື່ອນຈາກຣະດູມາໄດ້ 10 ວັນ ແລ້ວ ເພາະສະນັ້ນຈຳຕ້ອງແກ້ໄຂປະຕິທິນ ໂດຍເຫດ 2 ປະການຄື:

(ກ) ແກ້ເວລາທີ່ເຄື່ອນຈາກຣະດູມາແລ້ວ 10 ວັນນັ້ນ ເພື່ອໃຫ້ປະຕິທິນ ກັບມາກົງກັບຣະດູອີກຕາມເດີມ.

(ຂ) ແກ້ຫຼັກແຫ່ງການກໍາໜົດເວລາຂອງປີ ເພື່ອບໍ່ໃຫ້ເຄື່ອນຄາດຈາກຣະດູໄດ້ອີກໃນອະນາຄົດສົມເດັດພະສັງຄະຣາດ (ສັນຕະປາປາ) ເກຣກົຣີ ທີ 13 ແຫ່ງນິກາຍໂຣມັນຄາທໍລິກ ທົ່ງເຫັນດີດ້ວຍ ຈຶ່ງທົ່ງອອກ ພະຣາຊະບັນຍັດ ນະວັນທີ 5 ຕຸລາ ປີ ຄ.ສ 1582 (ພ.ສ 2125) ປາກາດວ່າ:

(1) ວັນຊຶ່ງຢູ່ລຸນວັນທີ 4 ຕຸລາປີ ຄ.ສ 1582 ນັ້ນ ບໍ່ໃຫ້ນັບເປັນວັນທີ 5 ແຕ່ໃຫ້ນັບເປັນວັນທີ 15 ຕຸລາ ໂລດ (ອັນນີ້ເພື່ອແກ້ໄຂປະຕິທິນທີ່ໄດ້ຜິດຈາກຣະດູໄປ 10 ວັນແລ້ວນັ້ນ).

(2) ໃຫ້ເລີກໃຊ້ປີຈູລຽນ ແລະ ໃຫ້ໃຊ້ປີຊຶ່ງມີກໍາໜົດເວລາ 365 ວັນ 5 ຊົ່ວໂມງ 49 ນາທີ 12 ວິນາທີ ແທນຕໍ່ໄປ ໂດຍແບ່ງປີລະ 365 ວັນ 3 ປີຕໍ່ໆກັນ ແລ້ວຈຶ່ງມີປີອະທິກະສຸຣະທິນ 366 ວັນ ເວົ້າອັ້ນນຶ່ງປີເປັນປົກກະຕິສະເໝີ ຍົກເວັ້ນປີຖ້ວນຮ້ອຍ ຊຶ່ງເລກຈໍານວນຮ້ອຍຫານດ້ວຍ 4 ບໍ່ມີເສດ ທໍ່ນັ້ນໃຫ້ເປັນປີອະທິກະສຸຣະທິນ ຕາມປົກກະຕິ (ດັ່ງປີ 1700, 1800, 1900 ຊຶ່ງຈໍານວນຮ້ອຍຄື 17, 18, 19 ຫານດ້ວຍ 4 ມີ ເສດເປັນຕົ້ນ ຈຶ່ງບໍ່ເປັນປີ ອະທິສຸຣະທິນໄດ້ ເຖິງວ່າປີ 1700, 1800, 1900 ຈະຫານດ້ວຍ 4 ບໍ່ມີເສດກໍຕາມ) ເຖິງແມ່ນວ່າປີແບບໃໝ່ຊຶ່ງຮຽກວ່າ "ປີເກຣກໍຣຽນ" ຕາມພະນາມຂອງພະສັງຄະຣາດອົງທີ່ບັນຍັດໃຫ້ໃຊ້ນັ້ນ ຍັງຫຼາຍກວ່າປີທຣໍປິກໄປ 27 ວິນາທີກໍດີ ແຕ່ວ່າກວ່າຈະຜິດຈາກຣະດູໄປໄດ້ອີກ 1 ວັນ ກໍຕ້ອງກິນເວລາບໍ່ນ້ອຍກວ່າ 3200 ປີ.

ປີເກຣກໍຣຽນນີ້ ຊາວຝຣັ່ງເອີຣົບນິຍົມໃຊ້ກັນທຸກໆປະເທດ ຍົກເວັ້ນແຕ່ປະເທດລັດເຊຍກັບປະເທດກຣີກ ຊຶ່ງຍັງໃຊ້ປີ ຈູລຽນຕາມເດີມສະເໝີ ເພາະສະນັ້ນປະຕິທິນຂອງສອງປະເທດນີ້ຈຶ່ງຜິດກັບປະຕິທິນຂອງຝຣັ່ງຊາດອື່ນໆໄປ ເປັນເວລາ 13 ວັນ ຄືປີໃໝ່ຂອງລັດເຊຍ ແລະ ກຣີກ ບໍ່ໄດ້ກົງກັບວັນທີ 1 ມັງກອນ ແຕ່ໄປກົງກັບ ວັນທີ 13 ມັງກອນ ແຫ່ງປະຕິທິນຂອງຝຣັ່ງທັງຫຼາຍ.

ສ່ວນການຈະແກ້ໄຂຫຼັກແຫ່ງກໍາໜົດເວລາປີລາວນັ້ນ ຂ້າພະເຈົ້າບໍ່ໄດ້ໝາຍເຖິງວ່າຈະໃຫ້ແກ້ໄຂ ການທີ່ປະຕິທິນຂອງເຮົາໄດ້ເຄື່ອນຄາດຈາກຣະດູມາແລ້ວ 24 ວັນ ເໝືອນດັ່ງພວກຝຣັ່ງໄດ້ກະທໍາມາແລ້ວນັ້ນແຕ່ປະການໃດເລີຍ ຂ້າພະເຈົ້າໝາຍເຖິງພຽງແຕ່ຈະແກ້ໄຂຫຼັກແຫ່ງກໍາໜົດເວລາປີລາວ ເພື່ອບໍ່ໃຫ້ປະຕິທິນຜິດຈາກຣະດູຕື່ມໄປອີກທໍ່ນັ້ນ (ຄືໃຫ້ຜິດທໍ່ທີ່ຜິດມາແລ້ວ 24 ວັນທໍ່ນັ້ນ)

ສໍາຫຼັບຈະແກ້ໄຂຫຼັກແຫ່ງການກໍາໜົດເວລາປີຂອງເຮົາ ເພື່ອໃຫ້ໄດ້ຮັບຜົນຕາມຄວາມປະສົງນັ້ນ ຈໍາຕ້ອງຖິ້ມເກນບູຮານ 292207 ວັນ ນັ້ນເສຽ ແລະ ໃຊ້ເກນ 292194 ວັນ ແຫ່ງ 2 ຮອບ 400 ປີ ຕາມກໍາໜົດເວລາ ປີເກຣກໍຣຽນ ແທນຕໍ່ໄປ ເມື່ອໃຊ້ເກນໃໝ່ດັ່ງນີ້ ກໍຈໍາຕ້ອງປ່ຽນເກນບູຮານ ຊຶ່ງ

ຫານລັບ : ຜົນຂອງເລກຫານ, ລັບແປງມາຈາກລັບທະ

ໃຊ້ຄຳນວນອັດຕາຖະເຫຼີງສົກນັ້ນ ອີກລາງເກນ ເພື່ອໃຫ້ອັດຕາຖະເຫຼີງສົກ ທຸກຢ່າງກົງກັບລັກສະນະເດີມຢູ່ສະເໝີ ຄືໃຫ້ຕື່ມ ຫຼື ຫຼຸດຈຳນວນໄປທຸກໆປີ ກົງກັບຫຼັກບູຮານບັນຍັດໄວ້ນັ້ນສະເໝີ.

ຕາມທີ່ຂ້າພະເຈົ້າໄດ້ຄົ້ນຄວ້າຫາເກນໃໝ່ ສຳຫຼັບຈະໃຊ້ແທນເກນຂອງບູຮານ ເພື່ອບໍ່ໃຫ້ປີເຮົາເຄື່ອນຄາດຈາກຣະດູຕື່ມໄປອີກນັ້ນ ເຫັນວ່າໃຊ້ເກນທີ່ສະເໜີຕໍ່ໄປນີ້ຈະມີຫວັງໄດ້ຮັບຜົນສຳເລັດຕາມຄວາມປະສົງ.

ຫຼັກເກນແຫ່ງອັດຕາຖະເຫຼີງສົກ

ເກນເກົ່າ	ເກນໃໝ່
ຫໍຣະຄຸນ ຕັ້ງເກນ 292207 ລົງ ເອົາຈຸລະສັກຣາດປີກ່ຽວຂ້ອງນັ້ນຄູນ,ເອົາ 373 ບວກແລ້ວເອົາ 800 ຫານ, ລັບເອົາ 1 ບວກ ເປັນຫໍຣະຄຸນ	ຫໍຣະຄຸນ ຕັ້ງເກນ 292194 ລົງ ເອົາຈຸລະສັກຣາດປີກ່ຽວຂ້ອງນັ້ນຄູນ,ເອົາ 606 ບວກແລ້ວເອົາ 800 ຫານລັບ* ເອົາ 1 ບວກ ເປັນຫໍຣະຄຸນ
ກຳມັດຊະພົນ ຕັ້ງເກນ 800 ລົງເອົາເສດແຫ່ງບົດຫານຂ້າງເທິງນັ້ນລົບ ເສດເທົ່າໃດເປັນກຳມັດຊະພົນ.	ກຳມັດຊະພົນ ຕັ້ງເກນ800ລົງເອົາເສດແຫ່ງບົດຫານຂ້າງເທິງລົບ ເສດເປັນກຳມັດຊະພົນ.
ອຸດຈະພົນ ຕັ້ງຫໍຣະຄຸນລົງເອົາເກນ 621 ລົບເອົາເກນ3232 ຫານລັບຖິ້ມເສຍ ເສດເປັນອຸດຈະພົນ	ອຸດຈະພົນ ຕັ້ງຫໍຣະຄຸນລົງ ເອົາເກນ621ລົບເອົາເກນ 3232 ຫານລັບຖິ້ມເສຍ ເສດເປັນອຸດຈະພົນ.
ອະວະມານ ຕັ້ງຫໍຣະຄຸນລົງ ເອົາ 11 ຄູນເອົາເກນ 650 ບວກແລ້ວເອົາເກນ 692 ຫາກລັບຕຣາໄວ້ເສດ ເປັນອະວະມານ.	ອະວະມານ ຕັ້ງຫໍຣະຄຸນລົງເອົາ 11 ຄູນເອົາເກນ 650 ບວກແລ້ວເອົາ 692 ຫານລັບຕຣາໄວ້ເສດເປັນອະວະມານ.
ມາສະເກນ ຕັ້ງຫໍຣະຄຸນລົງເອົາລັບທີ່ຕຣາໄວ້ຂ້າງເທິງນັ້ນບວກແລ້ວເອົາ 30 ຫານລັບເປັນມາສະເກນ.	ມາສະເກນ ຕັ້ງຫໍຣະຄຸນລົງເອົາລັບທີ່ຕາໄວ້ຂ້າງເທິງນັ້ນ ບວກແລ້ວເອົາ 30 ຫານລັບ ເປັນມາສະເກນ.
ດິຖີ ເສດແຫ່ງບົດຫານດ້ວຍ 30 ນັ້ນເປັນດິຖີ.	ດິຖີ ເສດແຫ່ງບົດຫານດ້ວຍ 30 ນັ້ນເປັນດິຖີ.
ວາຣະ ຕັ້ງຫໍຣະຄຸນລົງເອົາ 7 ຫານ ລັບຖິ້ມເສຍ ເສດເປັນ ວາຣະ.	ວາຣະ ຕັ້ງຫໍຣະຄຸນລົງ ເອົາ 7 ຫານລັບຖິ້ມເສຍ ເສດເປັນ ວາຣະ

ເກນໃໝ່ນີ້ຂ້າພະເຈົ້າໄດ້ທຳອັດຕາຖະເຫຼີງສົກແຕ່ປີ ຈ.ສ 1310 ເຖິງປີ 1365 ເບິ່ງແລ້ວເຫັນວ່າໄດ້ຜົນສົມປະສົງແນ່ນອນດີ ຄືລະຫວ່າງ 10 ປີແຣກນັ້ນ (1310 - 1319)

1. ຈຳນວນອຸດຈະພົນ, ກະອະມານ, ມາສະເກນ, ດິຖີ ແລະ ວາຣະ ຖະເຫຼີງສົກ ກົງກັບຈຳນວນທີ່ຄຳນວນຕາມເດີມນັ້ນ ຊຶ່ງສະແດງວ່າອັດຕາຖະເຫຼີງສົກດັ່ງກ່າວນັ້ນ ຕື່ມ ຫຼື ຫຼຸດຈຳນວນຖືກຕ້ອງຕາມກຳໜົດ ທີ່ຕຳລາໂຫຣາສາດ ບູຣານບັນຍັດໄວ້ນັ້ນທຸກປະການ.

2. ທຳຣະຄຸນມີຈຳນວນນ້ອຍກວ່າທຳຣະຄຸນທີ່ຄຳນວນໄດ້ຕາມເກນເດີມນັ້ນ 21 ວັນ ຊຶ່ງສະແດງວ່າ ຖືກຕ້ອງກັບຈຳນວນ 21 ວັນ ຊຶ່ງປີລາວຫຼາຍກວ່າປີທາງປະຕິທິນຝຣັ່ງໄປໄລຍະເວລາ 1310 ປີ ດັ່ງກ່າວມາແລ້ວນັ້ນ.

3. ກຳມັດຊະພົນກໍຫຼຸດຈຳນວນລົງປີລະ 194 ຕົວ ທໍ່ກັບຈຳນວນ 194 ປີອະທິກະສຸຣະທິນ ຊຶ່ງມີຢູ່ໃນຮອບ 800 ປີແຫ່ງຫຼັກປີທາງປະຕິທິນຝຣັ່ງນັ້ນ.

ຕັ້ງແຕ່ປີຈຸລະສັກຣາດ 1320 ໄປເຖິງ 1365 ນັ້ນ ຈຳນວນອຸດຈະພົນ ດິຖີ ແລະ ວາຣະ ຈຶ່ງນ້ອຍກວ່າຈຳນວນທີ່ຄຳນວນໄດ້ຕາມເກນເດີມນັ້ນ 1 ວັນ ຊຶ່ງສະແດງວ່າວັນສັງຂານຂຶ້ນ (ວັນຖະເຫຼີງສົກ) ຕົກຢູ່ກົງກັບ ວັນທີ 15 ເມສາ ແຕ່ວັນຖະເຫຼີງສົກ ທີ່ຄຳນວນໄດ້ຕາມເກນເດີມນັ້ນ ໄປກົງກັບວັນທີ 16 ເມສາ.

ການຈະຜ່ຽນໃຊ້ເກນໃໝ່ນີ້ ຂ້າພະເຈົ້າຫວັງວ່າເວລາໃດໂອກາດຫາກອຳນວຍ ຈະຂໍໃຫ້ເອົາມາໃຊ້ເປັນທາງລາຊະການຕໍ່ໄປ ສຳຫຼັບປະຕິທິນລາວ ດັ່ງນັ້ນ ປະຕິທິນຂອງເຮົາ ຈຶ່ງຈະບໍ່ຜິດຈາກຣະດູຕື່ມໄປອີກ ແລະ ວັນປີໃໝ່ກໍຈະບໍ່ເຄື່ອນຄາດຈາກວັນທີ 15 ເມສາໄປໄດ້.

ແຕ່ສຳຫຼັບຈະຄຳນວນຫາມັດທະຍົມແລະສຳຜຸດນັ້ນ ຕ້ອງໃຊ້ເກນເດີມຂອງບູຣານຕໍ່ໄປສະເໝີ ເພາະເກນເດີມນັ້ນ ເອົາລະຍະເວລາແຫ່ງການເດີນຂອງໂລກມາເປັນຫຼັກໂດຍກົງ ດັ່ງດຽວກັນກັບທາງຝຣັ່ງໃຊ້ປີ ແລະ ວັນ "ສິເດຣັນ" ສຳຫຼັບຄຳນວນຫາການເດີນຂອງພະເຄາະ ແຕ່ຖືເອົາຣະດູເປັນຫຼັກແຫ່ງປີ ສຳຫຼັບປະຕິທິນ ດັ່ງກ່າວມາແລ້ວນັ້ນ.

ໝາຍເຫດ ຄວາມເຫັນຂອງຜູ້ແປ ແລະ ຮຽບຮຽງ (ມະຫາ ສີລາ) ກ/. ເກນໃໝ່ຕາມທີ່ສົມເດັດເຈົ້າເພັຊະຣາຊ ທົງກ່າວໄວ້ນີ້ ຂ້າພະເຈົ້າ ໄດ້ທົດລອງຄຳນວນເບິ່ງແລ້ວໃນຕອນທຳທຳຣະຄຸນອັດຕາເມື່ອເອົາຈຳນວນ 800 ຫານແລ້ວເອົາ 1 ບວກເຂົ້າ ຜົນຮັບເປັນທຳຣະຄຸນອັດຕານັ້ນ ເຫັນວ່າໃຊ້ເກນ 22 ບວກເຂົ້າ ຜົນຮັບໃຫ້ເປັນທຳຣະຄຸນອັດຕາໂລດ ເປັນການຖືກຕ້ອງແນ່ນອນດີ ຕາມວິທີນີ້ຈຳນວນ ເລກທຳຣະຄຸນໃໝ່ຈະຫຼຸດຈາກທຳຣະຄຸນເກົ່າລົງ 1 ວັນທຸກໆປີ ຕໍ່ຈາກນັ້ນໄປກໍຄຳນວນຕາມເກນເກົ່າ ແລ້ວຈຳນວນດິຖີແລະວາຣະກໍຈະຫຼຸດລົງ 1 ຕົວຄືກັນ ແລະດ້ວຍເຫດນີ້ວັນສັງຂານຈຶ່ງຈະບໍ່ຍ້າຍໄປໄດ້ອີກ.

ເກນເລກ 22 ຕົວນັ້ນແມ່ນຈຳນວນວັນ 21 ວັນ ທີ່ປະຕິທິນເຮົາຜິດຈາກຣະດູມາແຕ່ວັນຕັ້ງຈຸລະສັກຣາດນັ້ນເອງ ເມື່ອເອົາຈຳນວນ 1 ທີ່ສຳຫຼັບບວກຕື່ມຫໍຣະຄຸນນັ້ນມາບວກກັບຈຳນວນ 21 ວັນແລ້ວ ຈຶ່ງເປັນເກນ 22 ວັນ.

ຂ. ຫຼັກການເລື່ອນຍ້າຍນັ້ນມີລະຍະເວລາ 61 ປີ ເລື່ອນຍ້າຍວັນ 1 ດັ່ງກ່າວມາແລ້ວ ສະນັ້ນຈຶ່ງເຫັນໄດ້ວ່າ ແຕ່ວັນຕັ້ງຈຸລະສັກຣາດ 1 ມານັ້ນ ວັນສັງຂານຂຶ້ນຕົກຢູ່ວັນທີ 24 ມີນາ. ປັດຈຸບັນນີ້ນັບແຕ່ຈຸລະສັກຣາດ 1325 ເປັນຕົ້ນມາ ວັນສັງຂານໄປໄດ້ມາຕົກຢູ່ວັນທີ 13 ຫຼື 14 ເມສາ ແລະ ວັນສັງຂານຂຶ້ນ ຕົກຢູ່ໃນ ວັນທີ 15 ຫຼື 16 ເມສາ ແລ້ວ ການທີ່ວັນສັງຂານໄປຕົກຢູ່ໃນວັນທີ 13 ກັບ 14 ເມສາ ແລະ ວັນສັງຂານຂຶ້ນຕົກຢູ່ໃນວັນທີ 15 ກັບ 16 ເມສານີ້ ໄດ້ຕັ້ງຕົ້ນມາແຕ່ປີຈຸລະສັກຣາດ 1325 ກົງກັບ ຄ.ສ 1963 ແລະ ຈະເປັນດັ່ງນີ້ໄປອີກຈົນເຖິງ ຈຸລະສັກຣາດ 1386 (ຄ.ສ 2024) ເຖິງ ຈ.ສ 1387 (ຄ.ສ 2025) ວັນສັງຂານໄປ ຈະຍ້າຍໄປຕົກວັນທີ 14 ກັບ 15 ເມສາ ແລະ ວັນສັງຂານຂຶ້ນຈະໄປຕົກໃນວັນທີ 16 ກັບ 17 ເມສາຕໍ່ໆໄປ ຈົນຄົບ 61 ປີ ແລ້ວກໍຍ້າຍອີກ ຖ້າຫາກບໍ່ມີການຄຳນວນໃຫ້ມັນຢຸດໄວ້.

ສະນັ້ນຖ້າຫາກໃຊ້ເກນໃໝ່ຄຳນວນຫໍຣະຄຸນອັດຕາຕັ້ງແຕ່ນີ້ໄປແລ້ວ ວັນສັງຂານໄປຈຶ່ງຈະບໍ່ເລື່ອນໄປຈາກວັນທີ 13 ກັບ 14 ເມສາ ແລະ ວັນສັງຂານຂຶ້ນ ກໍຈະບໍ່ກາຍວັນທີ 15 ກັບ 16 ໄປໄດ້.

ຈ. ແຜນປີບູຣານ

ກາບ	ຮັບ	ຮວາຍ	ເມິງ	ເປີກ	ກັດ	ກົດ	ຮ້ວງ	ເຕົ່າ	ກາ
ໃຈ້	ເປົ້າ	ຍີ່	ເໝົ້າ	ສີ່	ໃສ້	ສະງ້າ	ມົດ	ສັນ	ເຮົ້າ
ກາບ	ຮັບ	ຮວາຍ	ເມິງ	ເປີກ	ກັດ	ກົດ	ຮ້ວງ	ເຕົ່າ	ກາ
ເສັດ	ໃຄ້	ໃຈ້	ເປົ້າ	ຍີ່	ເໝົ້າ	ສີ່	ໃສ້	ສະງ້າ	ມົດ
ກາບ	ຮັບ	ຮວາຍ	ເມິງ	ເປີກ	ກັດ	ກົດ	ຮ້ວງ	ເຕົ່າ	ກາ
ສັນ	ເຮົ້າ	ເສັດ	ໃຄ້	ໃຈ້	ເປົ້າ	ຍີ່	ເໝົ້າ	ສີ່	ໃສ້
ກາບ	ຮັບ	ຮວາຍ	ເມິງ	ເປີກ	ກັດ	ກົດ	ຮ້ວງ	ເຕົ່າ	ກາ
ສະງ້າ	ມົດ	ສັນ	ເຮົ້າ	ເສັດ	ໃຄ້	ໃຈ້	ເປົ້າ	ຍີ່	ເໝົ້າ
ກາບ	ຮັບ	ຮວາຍ	ເມິງ	ເປີກ	ກັດ	ກົດ	ຮວງ	ເຕົ່າ	ກາ
ສີ່	ໃສ້	ສະງ້າ	ມົດ	ສັນ	ເຮົ້າ	ເສັດ	ໃຄ້	ໃຈ້	ເປົ້າ
ກາບ	ຮັບ	ຮວາຍ	ເມິງ	ເປີກ	ກັດ	ກົດ	ຮວງ	ເຕົ່າ	ກາ
ຍີ່	ເໝົ້າ	ສີ່	ໃສ້	ສະງ້າ	ມົດ	ສັນ	ເຮົ້າ	ເຮັດ	ໃຄ້

ຕາມຈາຣຶກແລະຄຳພີເກົ່າແກ່ ຜາກົດວ່າບູຮານເພິ່ນລົງສັກຣາດພ້ອມກັບນາມປະຈຳປີ ເປັນປົກກະຕິສະເໝີ ຕົວຢ່າງ ປີເຕົ່າໃຈ້ 1274, ປີກາເປົ້າ 1275 ເປັນຕົ້ນ.

ນາມປະຈຳປີມີຈຳນວນ 60 ນາມຄືກັບທີ່ມີຢູ່ໃນແຜນນີ້ດ້ວຍ ແຕ່ສຳຫຼັບແຜນປີນັ້ນ ຄຳວ່າ ກາບ ຮັບ ຮວາຍ ໆລໆ ຮຽກວ່າ ແມ່ປີ ແລະ ຄຳວ່າ ໃຈ້ ເປົ້າ ຍີ່ ເໝົ້າ ໆລໆ ຮຽກວ່າ ລູກປີ.

ວິທີນັບປີຕາມນາມປີຊຶ່ງລຳດັບໄວ້ໃນແຜນປີນັ້ນ ຕ່າງຈາກວິທີນັບຂອງໄທ ແລະ ຂະເໝນ ຊຶ່ງນັບຕາມຕົວທ້າຍຂອງຈຸລະສັກຣາດແຕ່ 1 ເຖິງ 10 ຄືແຕ່ເອກສົກໄປເຖິງສຳລິດທິສົກ, ວິທີນັບເກນນີ້ພໍເປັນແຕ່ໝາຍປີທ້າຍຈຸລະສັກຣາດທໍ່ນັ້ນ. ສ່ວນແຜນປີບູຮານຂອງເຮົາ ກຳໜົດເອົາຕາມນາມປີ ຊຶ່ງມີຢູ່ໃນຮອບ 60 ປີນັ້ນບໍ່ໄດ້ຖືເອົາຈຸລະສັກຣາດເປັນປະມານແຕ່ປະການໃດເລີຍ ເພາະສະນັ້ນຈະຖືເອົານາມປະຈຳປີໄປທຽບກັບຄຳວ່າ ເອກສົກ-ໂທສົກ ນັ້ນບໍ່ໄດ້ ເພາະຄວາມໝາຍຕ່າງກັນດັ່ງກ່າວມາແລ້ວ.

ແຜນປີນີ້ມີປະໂຫຍດຫຼາຍ ໃນການໃຊ້ກວດເບິ່ງສັກຣາດທີ່ມີຢູ່ຕາມຄຳພີ ແລະ ຈາຣຶກເກົ່າແກ່ ເພື່ອໃຫ້ຮູ້ຄັກແນ່ວ່າສັກຣາດນັ້ນ ຈະຜິດ ຫຼື ຖືກປະການໃດ ເພາະຈາຣຶກ ຫຼື ຄຳພີເຫຼົ່ານັ້ນ ບູຮານລົງສັກຣາດເປັນຕົວເລກໄວ້ ທັງລົງນາມປີພ້ອມເປັນປົກກະຕິສະເໝີ ເມື່ອກວດເຫັນວ່າສັກຣາດທີ່ລົງໄວ້ນັ້ນບໍ່ຖືກຕ້ອງກັບນາມປີ ຊຶ່ງປະກອບຢູ່ນຳແລ້ວ ກໍຄັກແນ່ວ່າລົງເລກສັກຣາດຜິດໄປ.

ຕາມທີ່ຂ້າພະເຈົ້າໄດ້ກວດຕາມສັກຣາດໃນຄຳພີຕ່າງໆມາແລ້ວຫຼາຍເຫຼັ້ມ ໃນລະຫວ່າງ 35 ປີມານັ້ນ ຜາກົດວ່າ ຜູ້ກ່າຍມາຈາກສະບັບເດີມ ມັກຈະກ່າຍເລກສັກຣາດຜິດສະເໝີ ໂດຍບໍ່ລະມັດລະວັງ ແຕ່ນາມປີນັ້ນບໍ່ສູ້ຈະຫຼົງເລີຍ ດ້ວຍເຫດນີ້ໂດຍອາໄສ "ແຜນ" ປີນັ້ນເອງ ຈຶ່ງສາມາດແກ້ເລກສັກຣາດທີ່ຜິດນັ້ນໃຫ້ຖືກຕ້ອງກັບປີຊຶ່ງ ມີນາມປະກອບຢູ່ນັ້ນໄດ້ສະເໝີ.

5. ສັກຣາດ

ສັກຣາດທີ່ໃຊ້ມາແຕ່ບູຮານນັ້ນ ມີ 3 ຢ່າງຄື: ພຸດທະສັກຣາດ ມະຫາສັກຣາດ ແລະ ຈຸລະສັກຣາດ.

ກ. ພຸດທະສັກຣາດ

ພຸດທະສັກຣາດໄດ້ຕັ້ງຂຶ້ນເມື່ອພະພຸດທະເຈົ້າດັບຂັນທະປະຣິນິບພານໄປ. ຕາມຕຳນານໂຫຣາສາດຂະເໝນ ຊຶ່ງທ່ານ ຟາໂຣ ຮຽບຮຽງເປັນພາສາຝຣັ່ງນັ້ນກ່າວວ່າ ວັນຕັ້ງຕົ້ນພຸດທະສັກຣາດ ຫຼື ວັນສັງຂານຂຶ້ນ ກົງກັບ ວັນພະຫັດ ເດືອນ 5 ຂຶ້ນ 11 ຄໍ່າ ປີມະເສັງ (ເມິງໃສ້).

ພຸດທະສັກຣາດນີ້ ແຕ່ກ່ອນມາພວກລາວບໍ່ຄ່ອຍນິຍົມໃຊ້ ຍັງໃຊ້ເປັນປົກກະຕິຢູ່ແຕ່ຝ່າຍສົງ

ທໍ່ນັ້ນ ແຕ່ຝ່າຍໄທໄດ້ເອົາມາໃຊ້ເປັນສັກຣາດທາງຣາຊະການມາ ແຕ່ປີ ພ.ສ 2456 (ຈ.ສ 1275 ຄ.ສ 1913).

ຂ. ມະຫາສັກຣາດ

ມະຫາສັກຣາດໄດ້ຕັ້ງຂຶ້ນເມື່ອພຸດທະສັກຣາດໄດ້ 622.

ທ່ານ ຟາໂຣ ໄດ້ກ່າວໄວ້ໃນຕຳຣາໂຫຣາສາດ ຂະເໝນ ວ່າ ວັນຖະເຫຼີງສົກແຫ່ງມະຫາສັກຣາດ ນີ້ກົງກັບ ວັນພຸດ ເດືອນ 5 ແຮມ 11 ຄ່ຳ ປີເຖາະ (ປີກັດເໝົ້າ).

ມະຫາສັກຣາດນີ້ ບໍ່ຜາກົດເຫັນໃຊ້ກັນມາເຫິງແລ້ວ ເຫັນມີຢູ່ຕາມຄຳພີເກົ່າແກ່ ແລະຕາມສີລາຈາຣຶກທໍ່ນັ້ນ.

<u>ຄວາມເຫັນກ່ຽວກັບປີຕັ້ງຕົ້ນມະຫາສັກຣາດ</u>

ຕຳນານຕ່າງໆ ທີ່ຂ້າພະເຈົ້າໄດ້ເຫັນມາ ກ່າວຖືກຕ້ອງກັນວ່າ ມະຫາສັກຣາດ ໄດ້ຕັ້ງຕົ້ນເມື່ອປີເຖາະນັ້ນ ກົງກັບ ພຸດທະສັກຣາດ 621 ກໍມີ 622 ກໍມີ ແລະ 623 ກໍມີ ດັ່ງຈະນຳຫຼັກຖານມາສະເໜີຕໍ່ໄປນີ້:

(1) ຕຳນານລາວກ່າວວ່າ ປີເຖາະນັ້ນກົງກັບພຸດທະສັກຣາດ 623

(2) ຕຳນານຂະເໝນກ່າວວ່າ ປີເຖາະກົງກັບພຸດທະສັກຣາດ 622

(3) ປະຕິທິນໂຫຣາສາດ ຂອງຫຼວງອັດຖວາທີທັມມະປະທວັດ (ວິຊຽນ ຈັນທອມ) ກ່າວໄວ້ໃນໜ້າ 84 ວ່າ: "ມະຫາສັກຣາດນັບ 1 ແຕ່ປີພະເຈົ້າສາລິວາໜະຣາດສາກຍະວົງທົງມີມະຫາໄຊຕໍ່ຣາຊະສັດຕູ" ໃນປີເຖາະ ພະພຸດທະສັກຣາດ 622 ກລີຍຸກສັກຣາດໄດ້ 3179 ປີ ມະຫາສັກຣາດນັ້ນໃຊ້ຄຳນວນຕາມສຸຣິຍະຄະຕິ "ຂຶ້ນປີໃໝ່ເມື່ອພະອາທິດ ຂຶ້ນສູ່ຣາສີເມດ"

(4) ພົງສາວະດານໂຍນົກ ຂອງພະຍາປະຊາກິຈກອນຈັກ (ແຊ່ມ ບຸນນາກ) ກ່າວໄວ້ໃນໜ້າ 107 ວ່າ "ລຸພຸດທະສັກຣາດ 621 ວັດສາ ມີພະຣາຊາສາກຍະຣາດອົງໜຶ່ງ ທົງນາມສາລິວາໜະຣາດ ມີເດຊານຸພາບ ຜາບແພ້ ປະເທດອິນເດຍຝ່າຍໃຕ້ ຈຶ່ງຕັ້ງສັກຣາດໃໝ່ ຮຽກວ່າ ສັກກະສະລິໜະສຳວັດ ບ້າງ ສັກສັມວັດ ບ້າງ ສັກຣາດນີ້ແມ່ນມະຫາສັກຣາດທີ່ ປາກົດໃຊ້ໃນປະເທດນີ້ ສັກຣາດນີ້ຕັ້ງຂຶ້ນເມື່ອສິງການແຫ່ງປີກາລີຍຸກໄດ້ 3180 ຄຣິດສັກຣາດໄດ້ 79 ປີ ແຕ່ໃຊ້ 78 ເປັນເກນລົບແລະບວກມະຫາສັກຣາດນີ້ລົບມາແຕ່ກາລີຍຸກ ສັກຣາດໃຊ້ ໃນທາງຄຳນວນ ໂຫຣາສາດໄດ້ດ້ວຍ

ເມື່ອຂ້າພະເຈົ້າໄດ້ເຫັນຕຳນານຕ່າງໆກ່າວບໍ່ຖືກຕ້ອງກັນດັ່ງນັ້ນ ຈຶ່ງໄດ້ຄົ້ນຄວ້າໃນເລື່ອງນີ້ເພື່ອຢາກຮູ້ແນ່ນອນວ່າ ມະຫາສັກຣາດໄດ້ຕັ້ງຂຶ້ນກົງກັບພຸດທະສັກຣາດປີໃດແທ້ ສຳຫຼັບຈະຊອກ

ຫາຄວາມຈິງໃນເລື່ອງນີ້ ຈຶ່ງຖືເອົາຫຼັກ 2 ປະການຄື:

ປີກັດເໝົ້າ(ເຖາະ)ເຊິ່ງທຸກຕຳນານເວົ້າຖືກຕ້ອງກັນວ່າ ເປັນປີຕັ້ງຕົ້ນມະຫາສັກຣາດ ແລະ ອັດຕາຖະເຫຼີງສົກ ແຫ່ງປີມະຫາສັກຣາດທີ 1 ມາທຽບກັບອັດຕາຖະເຫຼີງງສົກແຫ່ງປີ ພຸດທະສັກຣາດ 621, 622 ແລະ 623 ເຊິ່ງຕ່າງຕຳນານ ອ້າງວ່າເປັນປີຕັ້ງຕົ້ນມະຫາສັກກະຣາດນັ້ນ.

1. <u>ປີເຖາະເປັນຫຼັກ</u> ເພື່ອຊອກຫາຫຼັກຖານໂດຍອາໄສນາມປະຈຳປີນີ້ ຂ້າພະເຈົ້າເອົາຮອບ 60 ປີ ແຫ່ງແຜນປີເປັນເກນ ແລ້ວກວດເບິ່ງໃນສະໄໝນີ້ວ່າ ປີພຸດທະສັກຣາດໃດກົງກັບປີກັດເໝົ້າ (ເຖາະ) ແດ່? ໄດ້ຜົນວ່າ ປີ ພ.ສ 2482 ເປັນປີກັດເໝົ້າ (ເຖາະ) ດັ່ງນັ້ນຈຶ່ງຕັ້ງ 2482 ລົງແລ້ວເອົາ ພ.ສ 623, 622, 621 ເຊິ່ງຕ່າງ ຕຳນານກ່າວວ່າເປັນປີຕັ້ງຕົ້ນມະຫາສັກຣາດນັ້ນມາລົບຄື:

2482 - 623 = 1859

2482 - 622 = 1860

2482 - 621 = 1861

ຕັ້ງເສດ 3 ຈຳນວນນັ້ນລົງເອົາເກນ 60 ປີແຫ່ງຮອບນຶ່ງຂອງແຜນປີມາຫານເບິ່ງຄື:

$\frac{1859}{60}$ = 30 ຮອບ ເສດ 59

$\frac{1860}{60}$ = 31 ຮອບຖ້ວນ

$\frac{1861}{60}$ = 31 ຮອບ ເສດ 1 ປີ

ຜົນແຫ່ງການຄຳນວນ ສະແດງໃຫ້ເຫັນວ່າ ມະຫາສັກຣາດໄດ້ຕັ້ງຂຶ້ນກົງກັບປີ ພ.ສ 622 ຍ້ອນວ່າ 1860/60 ໄດ້ຜົນລັບຄົບ 30 ຮອບ ອັນເປັນປີກັດເໝົ້າພໍດີ (ເຖາະ) ສ່ວນບົດທີ່ກ່ຽວກັບ ພ.ສ 623 ເຊິ່ງຜົນລັບເປັນ 30 ຮອບເສດ 59 ປີນັ້ນ ເປັນປີ ເປີກສີ (ປີຂານ) ແລະບົດທີ່ກ່ຽວກັບ ພ.ສ 621 ເຊິ່ງ ລັບເປັນ 31 ຮອບແລະເສດ 1 ປີ ນັ້ນເປັນປີ ກົດສີ (ປີມະໂຮງ) ສະນັ້ນຕາມຫຼັກຖານແຫ່ງນາມປະຈຳ ປີ, ມະຫາສັກຣາດໄດ້ຕັ້ງຕົ້ນເມື່ອ ພ.ສ 622 ການທີ່ກ່າວວ່າ ໄດ້ຕັ້ງຂຶ້ນກົງກັບ ພ.ສ 623 ແລະ ພ.ສ 621 ນັ້ນບໍ່ກົງກັບປີເຖາະ (ກັດເໝົ້າ).

2. <u>ອັດຕາຖະເຫຼີງສົກເປັນຫຼັກ</u> ສຳຫຼັບຈະຊອກຫາຫຼັກຖານໂດຍອາໄສອັດຕາຖະເຫຼີງສົກນັ້ນ, ຈຳຕ້ອງຄຳນວນອັດຕາຖະເຫຼີງສົກແຫ່ງມະຫາສັກຣາດ ປີທີ 1 ແລະ ທີ 2 ທັງຕ້ອງຄຳນວນອັດຕາຖະເຫຼີງສົກ ແຫ່ງ ປີ ພ.ສ 621-622 ແລະ 623 ເຊິ່ງ ຕຳນານຕ່າງກັນອ້າງວ່າ ເປັນປີຕັ້ງຕົ້ນມະ

ຫາສັກຣາດນັ້ນ ແລ້ວເບິ່ງອັດຕາຖະເຫຼີງສົກ ແຫ່ງມະຫາສັກຣາດປີທີ 1 ຈະມີຈຳນວນຖືກຕ້ອງກັບອັດຕາຖະເຫຼີງສົກແຫ່ງພຸດທະສັກຣາດປີໃດແທ້ໃນຈຳນວນ 3 ປີນັ້ນ.

ຜົນແຫ່ງການຄຳນວນມີດັ່ງທີ່ສະເໜີຕໍ່ໄປນີ້:

ອັດຕາຖະເຫຼີງສົກ	ພ.ສ 621	ພ.ສ 622	ພ.ສ 623	ພ.ສ 624
ຫໍຣະຄຸນ	226830	227195	227460	227921
ກຳມັດຊະພົນ	554	374	140	733
ອຸດຈະພົນ	1318	1683	2084	2414
ອະວະມານ	495	358	221	95
ມາສະເກນ	7682	7694	7706	7719
ດິຖີ	4	15	26	8
ວາຣະ	2	3	4	0
ອັຕຕາເຫຼີງສົກ	ມ.ສ	ມ.ສ	ມ.ສ.1	ມ.ສ.2
ຫໍຣະຄຸນ			368	734
ກຳມັດຊະພົນ			140	733
ອຸດຈະພົນ			2084	1414
ອະວະມານ			221	95
ມາສະເກນ			12	2
ດິຖີ			26	3
ວາຣະ			4	6

ຈຳນວນກຳມັດຊະພົນ ອຸດຈະພົນ ອະວະມານ ດິຖີ ແລະ ວາຣະ ແຫ່ງອັດຕາຖະເຫຼີງສົກມະຫາສັກຣາດ ປີທີ 1 ກົງກັບອັດຕາຖະເຫຼີງສົກແຫ່ງພຸດທະສັກຣາດປີ 623 ບໍ່ໄດ້ກົງກັບປີ ພ.ສ 622 ດັ່ງຫຼັກຖານບານມປະຈຳປີ ສະແດງໄວ້ນັ້ນ ການທີ່ບໍ່ຖືກຕ້ອງກັນນີ້, ອາດຈະເນື່ອງມາຈາກເຫດທີ່ຫຼຸດກຳໜົດລົງ 1 ປີ ຕາມທີ່ກ່າວໄວ້ໃນພົງສາວະດານນັ້ນກໍເປັນໄດ້ ຄືກ່າວວ່າ "ມະຫາສັກຣາດຕັ້ງເມື່ອຄຣິຕສັກຣາດໄດ້ 79 ປີ ແຕ່ໃຊ້ 78 ປີເປັນເກນ ລົບແລະບວກ". (78+/_ 1)

ຄ. ຈຸລະສັກຣາດ

ຕຳນານລາວກ່າວວ່າ ຈຸລະສັກຣາດໄດ້ຕັ້ງຂຶ້ນເມື່ອປີ "ກັດໄຄ້" (ປີກຸນ) ພ.ສ 1181 (ຄ.ສ

638) ວັນສົງການຂຶ້ນ ກົງກັບວັນຈັນ ເດືອນ 5 ຂຶ້ນ 12 ຄໍ່າ.

ເລື່ອງຕັ້ງຕົ້ນຈຸລະສັກຣາດນີ້ ຕໍາບານທີ່ກ່າວເຖິງບໍ່ຄ່ອຍຈະຖືກຕ້ອງກັນ ຕ່າງຕໍາບານກໍອ້າງຜູ້ຕັ້ງຈຸລະສັກຣາດນັ້ນຕ່າງກັນ ຈົນຮອດລົງວັນ ແລະປັກຂ້າງຂຶ້ນຂ້າງແຮມກໍຕ່າງກັນໄປນໍາ ດັ່ງຈະເຫັນຕໍ່ໄປນີ້:

(1) ຕໍາຣາໂຫຣາສາດ ຂະເໝນຂອງທ່ານ ຟາໂຣ (F.G Faraut) ກ່າວວ່າ ຈຸລະສັກຣາດໄດ້ຕັ້ງຂຶ້ນເມື່ອ ປີ ພ.ສ 1181 ແລະ ມະຫາສັກກະຣາດ 561 ວັນຖະເຫຼີງສົກກົງກັບວັນຈັນ ເດືອນ 5 ຂຶ້ນ 12 ຄໍ່າ ປີກຸນ (ກັດໄຄ້) ແລະ ກົງກັບວັນຈັນ ທີ 22 ມີນາ ຄ.ສ 639.

(2) ປະຕິທິນໂຫຣາສາດ ຂອງຫຼວງອັດຖະວາທີທັມມະປະຫວັດ (ວິຊຽນຈັນທອມ) ກ່າວໃນໜ້າ 84 ວ່າ "ຈຸລະສັກກະຣາດ ພະເຈົ້າແຜ່ນດິນພະມ້າອົງນຶ່ງ ຄື ສັງຄະຣາດບຸພໂສທັນ ເຊິ່ງສົກອອກ ຊິງເອົາລາຊະສົມບັດ ໃນປະເທດພະມ້າ ເປັນຜູ້ຕັ້ງຂຶ້ນ ເມື່ອກາລີຍຸກໄດ້ 3739 ປີ ໜ້ອຍກວ່າມະຫາສັກກະຣາດ 560 ປີ" ຈຸລະສັກກະຣາດນີ້ ປ່ຽນເມື່ອວັນຖະເຫຼີງສົກ.

(3) ສະໝຸດ ສະຫຍາມ* ຂອງທ່ານເກຣແຮມ (W.A. Graham) ກ່າວວ່າເລື່ອງການໃຊ້ສັກຣາດນັ້ນ ກໍຍັງບໍ່ແນ່ແທ້ວ່າແມ່ນໃຜຄຶດຂຶ້ນ ພະເຈົ້າແຜ່ນດິນຂະເໝນ ແລະ ພະມ້າ ຕ່າງກໍອ້າງວ່າໄດ້ທົງຄຶດຂຶ້ນ ຄືກັນກັບທີ່ວ່າພະອະຣຸນຣາດຣ່ວງ ເປັນຜູ້ຄຶດຂຶ້ນຄືກັນ ຫຼັກຖານທີ່ວ່າຈຸລະສັກກະຣາດໄດ້ໃຊ້ທົ່ວໄປໃນອິນເດຽນັ້ນ ກໍບໍ່ພາກົດລັກແນ່ວ່າແມ່ນຜູ້ໃດ ແລະ ຢູ່ບ່ອນໃດໄດ້ໃຊ້ມາກ່ອນ ສິລາຈາຣຶກທີ່ຄົ້ນພົບຢູ່ ເມືອງສຸໂຂໄທ ແລະ ສະຫວັນຄະໂລກ ໂດຍສ່ວນຫຼາຍພາກົດວັນຈາຣຶກຢູ່ໃນລະຫວ່າງພຸດທະສັກກະຣາດ 2043 ຫຼື ຈຸລະສັກກະຣາດ 800 ກໍຈິງ ແຕ່ເປັນພຸດທະສັກກະຣາດທັງໝົດ ຈາກຫຼັກຖານຂໍ້ນີ້ ຄືຈັ່ງວ່າຖ້າແມ່ນພະອະຣຸນຣາດຣ່ວງ ທົງຄຶດຂຶ້ນແທ້ ທັງພະອົງເອງແລະຜູ້ສືບສັນຕະຕິວົງ ກໍຄົງບໍ່ນິຍົມໃຊ້ ແຕ່ປາກົດຄວາມຈາກພົງສາວະດານ ພະມ້າ ແລະ ເລື່ອງທີ່ເລົ່າກັນສືບຕໍ່ມາ ໃນເມືອງລາວວ່າ ຈຸລະສັກຣາດນີ້ແຣກໃຊ້ຂຶ້ນໃນເມືອງລາວກ່ອນ ໃນສະໄໝເມື່ອມອນໄດ້ໄຊຊະນະຍົກກອງທັບເຂົ້າຄອບຄອງເມືອງລາວແລ້ວຈຶ່ງໄດ້ນໍາມາໃຊ້ໃນເມືອງສຸໂຂໄທ *ສະຫວັນຄະໂລກ ແລະ ສະຫຍາມ ໃນລະຫວ່າງນັ້ນ ເຖິງວ່າ ມອນ ແລະ ພະມ້າ ໄດ້ໃຊ້ຈຸລະສັກຣາດແຜ່ຫຼາຍແລ້ວກໍຈິງ ແຕ່ໃນປະເທດສະຫຍາມຍັງບໍ່ທັນມີຜູ້ໃຊ້ເທື່ອບາດວ່າພະມ້າໄດ້ທໍາສົງຄາມ ລະຫວ່າງ ພ.ສ 2140 ມີໄຊຊະນະ ເຮັດໃຫ້ສະຫຍາມ ກັບພະມ້າມີ ການຕິດຕໍ່ໃກ້ຊິດກັນ ຈຶ່ງໄດ້ນໍາມາໃຊ້.

(4) ພົງສາວະດານໂຍນົກຂອງພະຍາປະຊາກິຈກອນຈັກ (ແຊ່ມ ບຸນນາກ) ກ່າວໄວ້ດັ່ງນີ້:
ກ. (ໜ້າ 110) "ຈຸລະສັກຣາດເຊິ່ງໃຊ້ມາຈົນເຖິງປັດຈຸບັນນີ້ນັ້ນ ເປັນສັກຣາດໂຫຣາ ເຊິ່ງຕັດອອກມາຈາກປີກາລີຍຸກ ເມື່ອລ່ວງໄດ້ 2339 ແລ້ວ ຈຶ່ງຕັດໄວ້ເປັນເກນສໍາຫຼັບລົບບວກ ຮຽກວ່າ ນະວະຕິສັນຕິ ສັກຣາດນີ້ໄດ້ຕັ້ງຂຶ້ນໃນປະເທດພຸກາມ (ນາມເກົ່າປະເທດພະມ້າ) ເມື່ອສັງຄະຣາດບຸພະ

ໂສທັບ ປະຣິວັດຈາກເພດຊີ ອອກຊີງລາຊະສົມບັດ ເປັນກະສັດລຳດັບທີ 19 ໃນວົງ ສະໝຸດຣິດທີເມື່ອ ພະພຸດທະສາສະນາການລ່ວງໄດ້ 1182 ວັດສາ ແຕ່ຫຼຸດລົງປີນຶ່ງເປັນ ເກນ ກະທັມປາຍາ 1181 ໄວ້ ສຳຫຼັບລົບບວກຈຸລະສັກຣາດກັບ ພຸດທະການ.

ຂ. (ໜ້າ 161) "ຂຸນສຸດທີເຖິງແກ່ກຳ ຂຸນສຸຂະໄດ້ຄອງເມືອງຕໍ່ໄປຈົນເຖິງພຸດທະສັກຣາດ 559 ປີຈຶ່ງໂຮມ 15 ຊົ່ວເຈົ້າເມືອງ ຕັ້ງແຕ່ພຸດທະການລ່ວງໄດ້ 1110 ວັດສາມາຈົນເຖິງພຸດທະການ ໄດ້ 1181 ວັດສາ ໂຮມເປັນເວລາທີ່ຂຸນ ແຕ່ງເມືອງ ຫຼື ປະທານາທິບໍດີໃນວຽງປົກສາມານານໄດ້ 93 ປີ ຈຶ່ງເຖິງສະໄໝການທີ່ ພະເຈົ້າກຸງພຸການ ຜູ້ທົງນາມອະນຸຣຸດທຳມິກຣາດ ຕັ້ງຈຸລະສັກຣາດເອກສັກ ຂຶ້ນໃໝ່ໃນປີກຸນ ວັນອາທິດເດືອນ 5 ແຮມ 13 ຄ່ຳ ຂໍ້ຄວາມໃນຕຳນານ ສິງທະນະວັດ ກໍຍຸຕິແຕ່ພຽງ ນີ້"

ຄ. (ໜ້າ 223) ພະເຈົ້າອະນຸຣຸທະທຳມິກຣາດ ກໍລົບສັກຣາດອັນພະຍາຕຣິຈັກຂຸ ຕັ້ງໄວ້ ນັ້ນ ແຕ່ໃນຕຳນານຊຽງໃໝ່ວ່າ ພະຍາພັນທຸມັດ ກຸງລັງກາຕັ້ງໄວ້ໄດ້ 560 ປີນັ້ນເສຽ ຕັ້ງຈຸລະສັກ ຣາດໃໝ່ໃນປີ ກັດໃຄ້ ຄື ປີກຸນ ຍາມຮຸ່ງແຈ້ງ ວັນຈັນເດືອນ 5 ຂຶ້ນ 2 ຄ່ຳເປັນກຳໜົດ.

ເມື່ອເຫັນຕຳນານບໍ່ຖືກຕ້ອງກັນດັ່ງນີ້ ກໍເປັນໜ້າສົນໃຈຫຼາຍ ເພາະຂາດຫຼັກຖານທີ່ຜໍຈະຊີ້ ໃຫ້ເຫັນຄັກ ວ່າຈຸລະສັກຣາດ ນີ້ແມ່ນໃຜເປັນຜູ້ຕັ້ງຂຶ້ນແທ້ ແລະ ໄດ້ໃຊ້ໃນປະເທດໃດມາກ່ອນ.

ແຕ່ເມື່ອໄດ້ສັງເກດເບິ່ງນາມຜູ້ທີ່ອ້າງວ່າໄດ້ເປັນຜູ້ຕັ້ງຈຸລະສັກຣາດເຫຼົ່ານັ້ນແລ້ວ ຂ້າພະ ເຈົ້າເຂົ້າໃຈວ່າ ຜູ້ທີ່ຕັ້ງຈຸລະສັກຣາດນັ້ນເຫັນວ່າຈະເປັນພະສັງຄະຣາດບຸພະໂສທັບ ຫຼື ຂຸນສຸກຂະ ຫຼາຍກວ່າທີ່ຈະເປັນ ພະອະຣຸນຣາດຣ່ວງ ແຫ່ງສຸໂຂໄທ ຫຼື ພະອະນຸຣຸດທຳມິກຣາດ ແລະ ຈຸລະສັກ ຣາດ ນີ້ເຫັນຈະໄດ້ໃຊ້ກັນມາໃນປະເທດພະມ້າກ່ອນ ແລ້ວຈຶ່ງນຳມາໃຊ້ໃນປະເທດລາວ ລຸນມາຈຶ່ງ ນຳມາໃຊ້ໃນປະເທດໄທ ຕາມທີ່ທ່ານເກຣແຮມ ກ່າວໄວ້ນັ້ນ.

ແຕ່ສ່ວນຕຳນານຕ່າງໆ ໃສ່ປີວັນ ແລະ ປັກ ຕັ້ງຕົ້ນຈຸລະສັກຣາດຜິດພາດກັນໄປນັ້ນຜໍຈະ ນຳຫຼັກຖານມາຊີ້ແຈງໄດ້ແນ່ນອນວ່າ ຕຳນານໃດຖືກຕ້ອງ ແລະ ຕຳນານໃດຜິດໃນເລື່ອງນີ້.

ສຳຫຼັບຈະຊອກຫາປີພຸດທະສັກຣາດ ເຊິ່ງກົງກັບປີຕັ້ງຕົ້ນຈຸລະສັກຣາດ ກໍຕ້ອງອາໄສນາມ ປະຈຳປີຂອງ ແຜນປີ ດັ່ງດຽວກັນກັບການຊອກຫາປີທີ່ຕັ້ງຕົ້ນມະຫາສັກຣາດນັ້ນ ຄືຕ້ອງຖືເອົາປີ ກັດໃຄ້ (ປີກຸນ) ເປັນຫຼັກ ແລະ ສັງເກດເບິ່ງ ວ່າປີກັດໃຄ້ໃນສະໄໝນັ້ນ ກົງກັບປີພຸດທະສັກຣາດທໍ່ໃດ ແລ້ວຈຸລະສັກຣາດກໍໄດ້ຕັ້ງຂຶ້ນ ໃນປີພຸດທະສັກຣາດນັ້ນໂດຍກົງແທ້.

ເພື່ອຊອກຫາຫຼັກຖານໂດຍອາໄສນາມປະຈຳປີນັ້ນ ຂ້າພະເຈົ້າເອົາຮອບ 60 ປີແຫ່ງແຜນ ປີເປັນເກນ ແລ້ວກວດເບິ່ງໃນສະໄໝນີ້ວ່າ ປີກັດໃຄ້ (ປີກຸນ) ເປັນນາມປະຈຳປີແຫ່ງພຸດທະສັກຣາດ ປີທີ່ທໍ່ໃດຜົນແຫ່ງການກວດນັ້ນເຫັນວ່າ ປີພຸດທະສັກຣາດ 2502 ເປັນປີກັດໃຄ້ (ປີກຸນ) ສະນັ້ນຕັ້ງ

2502 ລົງເອົາ 1181 (ພ.ສ ທີ່ຕຳນານອ້າງ ວ່າເປັນປີຕັ້ງຈຸລະສັກຣາດ) ລົບຄື 2502 - 1181 = 1321 ແລ້ວ ຕັ້ງເສດ 1321 ລົງເອົາເກນ 60 ປີແຫ່ງຮອບຂອງປີກັດໃສ້ຫານຄື = 22 ຮອບເສດ 1 ປີ.

ເສດ 1 ປີນັ້ນສະແດງວ່າ ພ.ສ 1181 ຢູ່ກ່ອນປີກັດໃສ້ໄປນຶ່ງປີ ຄືເປັນປີເປີກເສັດ (ປີຈໍ) ດັ່ງນັ້ນຕາມຫຼັກຖານຂອງນາມປະຈຳ ຈຸລະສັກຣາດ ໄດ້ຕັ້ງຕົ້ນເມື່ອປີພຸດທະສັກຣາດ 1182 ເຊິ່ງເປັນປີກັດໃສ້ (ປີກຸນ ຖືກຕາມພົງສາວະດານໂຍນົກ ຂອງພະຍາປະຊາກິຈະກອນຈັກ ທີ່ກ່າວໄວ້ໃນໜ້າ 110 ດັ່ງກ່າວແລ້ວ).

ເພື່ອຈະຮູ້ໄດ້ວ່າປາງຕັ້ງຕົ້ນຈຸລະສັກຣາດກົງກັບວັນໃດ ແລະ ຂ້າງຂຶ້ນ ຫຼື ຂ້າງແຮມຈັກຄ່ຳນັ້ນຈຳຕ້ອງທຳອັດຕາຖະເຫຼີງສົກ (ຄູນສົງການ) ແຫ່ງປີຈຸລະສັກຣາດທີ 1 ນັ້ນເບິ່ງ ເມື່ອອັດຕາຖະເຫຼີງສົກມີດິຖີ ແລະ ວາຣະ ເປັນຈຳນວນທໍ່ໃດ ວັນຕັ້ງຕົ້ນແຫ່ງຈຸລະສັກຣາດ ກໍຕ້ອງເປັນວັນ ແລະ ຂ້າງຂຶ້ນ ຫຼື ຂ້າງແຮມ ນັ້ນໂດຍແນ່ນອນ.

ຜົນແຫ່ງການຄຳນວນຫາ ອັດຕາຖະເຫຼີງສົກປີຈຸລະສັກຣາດທີ 1 ຈຳນວນດັ່ງນີ້:

ຫໍຣະຄຸນ	366	ວັນ
ກຳມັດຊະພົນ	220	
ອຸດຈະພົນ	2977	
ອະວະມານ	524	
ມາສະເກນ	12	
ດິຖີ	12	(ເດືອນ 5 ຂຶ້ນ 12 ຄ່ຳ)
ວາຣະ	1	(ວັນຖະເຫຼີງສົກ ຫຼື ວັນສົງການຂຶ້ນເປັນວັນຈັນ)

ຕາມຫຼັກຖານຂ້າງເທິງນີ້, ຈຸລະສັກຣາດໄດ້ຕັ້ງຕົ້ນກົງກັບວັນຈັນເດືອນ 5 ຂຶ້ນ 12 ຄ່ຳໂດຍແນ່ນອນ ສ່ວນລາງຕຳນານກ່າວວ່າ ວັນຕັ້ງຕົ້ນຈຸລະສັກຣາດກົງກັບເດືອນ 5 ແຮມ 13 ຄ່ຳວັນອາທິດ ແລະ ກ່າວວ່າກົງກັບເດືອນ 5 ຂຶ້ນ 2 ຄ່ຳ ນັ້ນຜິດຢ່າງແນ່ນອນ ເພາະບໍ່ຖືກຕ້ອງກັບ ດິຖີ 12 ແລະ ວາຣະ 2 ແຫ່ງອັດຕາຖະເຫຼີງສົກປີ ຈ.ສ ທີ 1 ນັ້ນ ໂດຍສະເພາະຢ່າງຍິ່ງຕຳນານທີ່ກ່າວວ່າ ວັນຖະເຫຼີງສົກກົງກັບ ເດືອນ 5 ຂຶ້ນ 2 ຄ່ຳນັ້ນຍັງຜິດກັບຫຼັກແຫ່ງຕຳຣາໂຫຣາສາດອີກຊ້ຳ ເພາະວັນຖະເຫຼີງສົກນັ້ນຢູ່ນອກ ຂອບເຂດເດືອນ 5 ຂຶ້ນ 6 ຄ່ຳ ແລະ ເດືອນ 6 ຂຶ້ນ 5 ຄ່ຳ.

<u>ວັນຕັ້ງຕົ້ນຈຸລະສັກຣາດຈະກົງກັບວັນທີທໍ່ໃດແທ້ແຫ່ງເດືອນສຸຣິຍະຄະຕິ</u>

ເລື່ອງນີ້ ທ່ານ ຟາໂຣ ກ່າວໄວ້ໃນຕຳຣາໂຫຣາສາດຂະເໝນ (ໜ້າ 19) ວ່າ "ວັນຕັ້ງຕົ້ນຈຸລະສັກຣາດຄື ວັນຈັນ ເດືອນ 5 ຂຶ້ນ 12 ຄ່ຳນັ້ນ ກົງກັບວັນທີ່ 22 ມີນາ (ມາກ) ປີ ຄ.ສ 639".

ເມື່ອຂ້າພະເຈົ້າຄຳນວນເລກຊອກເບິ່ງແລ້ວ ຜາກົດວ່າວັນຕັ້ງຕົ້ນຈຸລະສັກຣາດນັ້ນ ກົງກັບວັນທີ 24 ມີນາ ບໍ່ແມ່ນກົງກັບວັນທີ 22 ຕາມທີ່ ທ່ານ ຟາໂຣ ກ່າວໄວ້ນັ້ນເລີຍ.

ການຄຳນວນເລກກ່ຽວກັບເລື່ອງນີ້ ຂ້າພະເຈົ້າໄດ້ຕັ້ງເກນດັ່ງຈະສະເໜີຕໍ່ໄປນີ້:

(1) ປີລາວມີກຳນົດເວລາ 365 ວັນ 6 ຊົ່ວໂມງ 12 ນາທີ 36 ວິນາທີ
ປີປະຕິທິນຝຣັ່ງເວລາ 365 ວັນ 5 ຊົ່ວໂມງ 49 ນາທີ 12 ວິນາທີ
ປີລາວຍາວກວ່າປີຝຣັ່ງ 23 ນາທີ 24 ວິນາທີ

(2) ດັ່ງນັ້ນຖ້ານັບຕັ້ງແຕ່ຕົ້ນຈຸລະສັກຣາດມາຈົນເຖິງວັນສຸດທ້າຍແຫ່ງປີ ຈ.ສ 1310 ຄືໃນໄລຍະ 1310 ປີທີ່ລ່ວງມາແລ້ວນັ້ນ ປີລາວກໍຍາວກວ່າປີຝຣັ່ງໄປ 1310 ຕໍ່ ທໍ່ກັບ 1404 ວິນາທີຫຼື:
1310 × 1404 = 1849220 ວິນາທີ ຫຼື 510 ຊົ່ວໂມງ 54 ນາທີ.

ເມື່ອຄິດເປັນວັນກໍມີຈຳນວນ 21 ວັນ 6 ຊົ່ວໂມງ 54 ນາທີ (510 : 24 = 21 ເສດ 6 ຊົ່ວໂມງ)

ວັນສຸດທ້າຍແຫ່ງປີ ຈ.ສ 1310 ນັ້ນກົງກັບວັນທີ 14 ເມສາ ປີ ຄ.ສ 1949 ຖ້າເອົາຈຳນວນວັນ 21 ວັນ 6 ຊົ່ວໂມງ 54 ນາທີເຊິ່ງປີລາວຍາວເກີນປີຝຣັ່ງໄປແລ້ວນັ້ນລົບກັບວັນທີ 14 ເມສາ ກໍເຫັນປະຈັກວ່າວັນຕັ້ງຕົ້ນ ຈຸລະສັກຣາດ (ວັນສົງການຂຶ້ນ ຫຼື ຖະເຫຼີງສົກ) ນັ້ນກົງກັບວັນທີ 14 ມີນາ ບໍ່ແມ່ນກົງກັບວັນທີ 22 ມີນາ ດັ່ງທ່ານ ຟາໂຣ ກ່າວໄວ້ນັ້ນເລີຍ.

ໝາຍເຫດ ກ່ຽວເຖິງເລື່ອງຕັ້ງຈຸລະສັກຣາດນີ້ ເມື່ອເດືອນ ມັງກອນ 2500 ຂ້າພະເຈົ້າໄດ້ຖາມຄວາມເຫັນ ຈາກທ້າວທອງເຈືອ ອ່າງແກ້ວ ລົງຄວາມເຫັນດັ່ງນີ້:

ຈຸລະສັກຣາດຕັ້ງຂຶ້ນໂດຍພະເຈົ້າບຸພະໂສຫັນກະສັດພະມ້າ ເມື່ອປີຈໍກະລິຍຸກສັກຣາດ3739 ປີຕັ້ງຕົ້ນ ເປັນປີຈຸລະສັກຣາດ 0 ກົງກັບວັນອາທິດຂຶ້ນ 1 ຄ່ຳເດືອນ 5 ວັນທີ 22 ມີນາ ຄ.ສ 638 ຜົນຄຳນວນຖະເຫຼີງສົກ ມີດັ່ງນີ້:

ຈຸລະສັກຣາດ	0	ກຳມັດຊະຜົນ	427
ມາສະເກນ	0	ອຸດຈະຜົນ	2612
ອະວະມານ	661	ດິຖີ	1
ຫໍຣະຄຸນ	1	ວາຣະ	1

ຜົນຂອງການຄຳນວນເປັນການພິສູດຄວາມຖືກຕ້ອງຄືວາຣະ 1 ເປັນວັນອາທິດ ດິຖີ 1ເປັນ

ວັນຂຶ້ນ 1 ຄ່ຳ ມາສະເກນ 0 ເປັນເດືອນ 5 ຫໍຣະຄຸນ 1 ເປັນວັນທີ 1 ແຫ່ງຈຸລະສັກຣາດ ແລະ ວັນນີ້ ກົງກັບວັນທີ 22 ມີນາ ຄ.ສ 638.

ອັດຕາຖະເຫຼີງສົກທັງ 8 ແຫ່ງປີຈຸລະສັກຣາດ 0 ອ້າງເທິງນີ້ ສາມາດຄຳນວນໄດ້ຕາມຫຼັກ ໂຫຣາສາດ ຈຳເພາະແຕ່ຫໍລະຄຸນ 1, ກຳມັດຊະພົນ 427, ມາສະເກນ 0, ດິຖີ 1 ແລະ ວາຣະ 1 ທີ່ນັ້ນ ສ່ວນອະວະມານ 661 ແລະ ອຸດຈະພົນ 2612 ນັ້ນ ຈຳຕ້ອງຄຳນວນຈາກຈຳນວນອະວະມານ ແລະ ອຸດຈະພົນແຫ່ງອັດຕາຖະເຫຼີງສົກ ປີຈຸລະສັກຣາດ 1 ໂດຍອາໄສຫຼັກທີ່:

ກ/. ອະວະມານຫຼຸດຈຳນວນລົງປີລະ 137 ຕົວ ສຳຫຼັບປີປົກກະຕິສຸຣິທິນ ຄື ອະວະມານຖະ ເຫຼີງສົກ ແຫ່ງປີ ຈຸລະສັກຣາດ 1 ເປັນ 524 ຕົວ. ດັ່ງນັ້ນອະວະມານຖະເຫຼີງສົກແຫ່ງປີຈຸລະສັກຣາດ 0 ກໍຕ້ອງເປັນ ຈຳນວນ 661 ຕົວ ຄືຫຼາຍກວ່າອະວະມານຖະເລີງສົກປີຈຸລະສັກຣາດໄປ 137 ຕົວ.

ຂ/. ອຸດຈະພົນທະວີຈຳນວນຂຶ້ນຫຼາຍກວ່າປີທີ່ຢູ່ກ່ອນໃນອັດຕາວັນລະຕົວ ດັ່ງນັ້ນເມື່ອວັນ ຖະເຫຼີງສົກ ແຫ່ງປີ ຈຸລະສັກຣາດ 1 ເປັນຈຳນວນ 2977 ຕົວ ຈຳນວນອຸດຈະພົນຖະເຫຼີງສົກແຫ່ງປີ ຈຸລະສັກຣາດ 0 ເຊິ່ງມີ 365 ວັນກໍຕ້ອງໜ້ອຍກວ່າ 365 ຕົວ ຄື ມີພຽງ 2612 ຕົວທີ່ນັ້ນເອງ.

ແຕ່ເຖິງຢ່າງໃດກໍຕາມ ການທີ່ວັນຖະເຫຼີງສົກແຫ່ງປີຈຸລະສັກຣາດ 0 ຕົກວັນຂຶ້ນ 1 ຄ່ຳແຫ່ງ ເດືອນ 5 ນັ້ນເຖິງ ແມ່ນວ່າຈະກົງກັບຜົນແຫ່ງການຄຳນວນເລກກໍດີ ແຕ່ຜິດກັບຫຼັກຂອງຕຳຣາໂຫ ຣາສາດຊຶ່ງບັນຍັດໄວ້ວ່າ "ວັນຖະເຫຼີງສົກຕົກຢູ່ແຕ່ລະຫວ່າງວັນຂຶ້ນ 6 ຄ່ຳເດືອນ 5 ກັບວັນຂຶ້ນ 5 ຄ່ຳເດືອນ 6 ທີ່ນັ້ນ".

24/VII
ຫ້າມຈຳໜ່າຍ

ຕອນທີສອງ

ຕຳນານດາວ

ຕຳນານດາວບູຮານກ່າວວ່າ ພູເຂົາພະສຸເມນຢູ່ທີມະພານ ທີ່ປະເທດອິນເດຍເປັນໃຈກາງຂອງໂລກ ຄືເປັນສູນກາງແຫ່ງວົງມົນ ເຊິ່ງເປັນເສັ້ນທາງຂອງດວງດາວທັງຫຼາຍ ທີ່ເດີນວຽນຮອບໂລກ.

ສ່ວນດາວນັ້ນບູຮານແບ່ງອອກເປັນສອງຈຳພວກຄື: ຈຳພວກນຶ່ງໄດ້ແກ່ດາວເຊິ່ງເດີນຕາມວິຖີຂອງຕົນເອງ ໄດ້ຮຽກວ່າ "ພະເຄາະ" ແລະອີກຈຳພວກນຶ່ງໄດ້ແກ່ດາວເຊິ່ງເດີນຕາມບໍ່ໄດ້ ຢູ່ປະຈຳບ່ອນໃນພື້ນຟ້າຮຽກ ວ່າ "ນັກຂັດຕຣິກ" ຫຼື "ດາວຣຶກ".

ຕຳຣາຝຣັ່ງກໍແບ່ງດາວອອກເປັນສອງຈຳພວກຄືກັນແລະກ່າວອີກວ່າພະເຄາະຕ່າງຈາກດາວຣຶກ ໂດຍລັກສະນະສຳຄັນ 3 ປະການດັ່ງນີ້:

(1) ພະເຄາະບໍ່ມີແສງຍິບໆ ຄືດັ່ງແສງດາວຣຶກ.

(2) ເມື່ອເບິ່ງດາວພະເຄາະ ດ້ວຍກ້ອງໂທຣະທັດ ຈະເຫັນເປັນຂະໜາດໃຫຍ່ພໍວັດແທກໄດ້ ແຕ່ຖ້າໃຊ້ກ້ອງນັ້ນ ເບິ່ງດາວຣຶກ ຈະເຫັນພໍແຕ່ເປັນຈຸດສະຫວ່າງຕາມຂະໜາດເດີມຢູ່ສະເໝີ.

(3) ພະເຄາະ ເຄື່ອນທີ່ໄປໃນພື້ນຟ້າໂດຍສັງເກດໄດ້ດ້ວຍຕາເຮົາເອງ ແຕ່ດາວຣຶກນັ້ນຈະເຫັນຢູ່ປະຈຳບ່ອນສະເໝີ ແມ່ນຈະໃຊ້ກ້ອງໂທຣະທັດ ຂະໜາດໃຫຍ່ທໍ່ໃດເບິ່ງ ແລະ ຈະເບິ່ງຢູ່ເປັນເວລາເຫິງນານທໍ່ໃດ ກໍຈະບໍ່ເຫັນເຄື່ອນທີ່ ຫຼື ຍ້າຍບ່ອນຈັກໜ້ອຍເລີຍ.

1. ຕຳນານດາວພະເຄາະ

ຕຳນານບູຮານຂອງເຮົາກ່າວວ່າ ພະເຄາະ ມີ 9 ໜ່ວຍຄື: ພະອາທິດ, ພະຈັນ, ພະອັງຄານ, ພະພຸດ, ພະຣືຫັດ, ພະສຸກ. ພະຣາຫູ, ພະເສົາ ແລະ ພະເກດ.

ທາງໂຫຣາສາດສົມມຸດເອົາພະອາທິດແທນໂລກ ດັ່ງທີ່ຜາກົດແກ່ຕາເຮົາທີ່ເຫັນພະອາທິດຂຶ້ນຈາກ ທິດຕາເວັນອອກ ແລ້ວເດີນຜ່ານຫົວເຮົາສູນຫາຍໄປທາງທິດຕາເວັນຕົກ ເພາະສະນັ້ນ ພະອາທິດ (ມັດທະຍົມ ແລະ ສົມຜຸດ) ຈຶ່ງມີ ຣາສີ, ອົງສາ ແລະ ລິບດາ ຄືກັນກັບ ພະເຄາະ ທັງຫຼາຍ.

ສ່ວນພະຣາຫູກັບພະເກດນັ້ນ ບໍ່ໄດ້ເປັນດວງຫຼືໜ່ວຍຄືດັ່ງພະເຄາະອື່ນໆ ຫາກເປັນແຕ່ຈຸດສົມມຸດແຫ່ງເສັ້ນວິຖີທາງພະຈັນ ແລະ ເສັ້ນວິຖີທາງພະອາທິດຜ່ານກັນທໍ່ນັ້ນ ພະຈັນເດີນຜ່ານເສັ້ນວິຖີທາງພະອາທິດ (ecliptic) ຈາກວິດຖຸນດອນ (latitude) ຂ້າງເໜືອໄປຂ້າງໃຕ້ ແລະ ຈາກຂ້າງ

ໃຕ້ໄປຂ້າງເໜືອເດືອນລະສອງເທື່ອທຸກໆເດືອນ ຈຸດສົມມຸດທີ່ພະຈັນ ເດີນຜ່ານວິຖີທາງພະອາທິດ ຈາກຂ້າງເໜືອໄປຂ້າງໃຕ້ຮຽກວ່າ "ຣາຫູ" ແລະ ຈຸດສົມມຸດທີ່ພະຈັນ ເດີນຜ່ານວິຖີທາງພະອາທິດ ຈາກຂ້າງໃຕ້ໄປຂ້າງເໜືອຮຽກວ່າ "ເກດ".

ຈຸດສົມມຸດທັງສອງນີ້ (ຣາຫູ ແລະ ເກດ) ເປັນຫຼັກສຳຄັນທີ່ສຸດໃນທາງຄຳນວນເລກສຳຫຼັບຫາວັນ ແລະ ເວລາ ທີ່ຈະມີສຸຣິຍະຄາດ ແລະ ຈັນທະຄາດ (ອາຄາດສູນຕາເວັນແລະກົບກິນເດືອນ) ແລະ ສຳຫຼັບຜູກດວງຊາຕາ ໂດຍເຫດນີ້ ໂຫຣາສາດຈຶ່ງສົມມຸດໃຫ້ ຣາຫູ ແລະ ເກດເປັນດາວເຊິ່ງເດີນໄດ້ຄືພະເຄາະໜ່ວຍອື່ນໆ ແຕ່ຣາຫູ ແລະ ເກດເດີນຈາກຂວາໄປຊ້າຍ ສ່ວນພະເຄາະໜ່ວຍອື່ນນັ້ນເດີນຈາກຊ້າຍໄປຂວາ ທຸກໆໜ່ວຍ.

ຮູບທີ 5: ວົງມົນສະແດງຕຳແໜ່ງຂອງພະເຄາະ



ຕຳນານດາວກ່າວອີກວ່າ ພະເຄາະ ທັງຫຼາຍຢູ່ຫ່າງໄກຈາກໂລກ ແລະ ເດີນຮອບວິຖີທາງຂອງຕົນຕາມລຳດັບ ແລະ ກຳໜົດເວລາດັ່ງຕໍ່ໄປນີ້:

ພະເຄາະ	ຢູ່ຫ່າງຈາກໂລກ		ເດີນຄົບຮອບ	ແກນ
	ໂຍດ	ກິໂລແມັດ	ໃນກຳໜົດ	ພະເຄາະ
ຈັນ	ໃກ້ໆໂລກ		27 ວັນ	27
ສຸກ	14.000	224000	224,7 ວັນ × 10 =	2247
ພຸດ	28.000	448.000	87,97 ວັນ × 100=	8797
ອາທິດ	42.000	672.000		
ເກດ			68 ຖ້ວນ	679
ອັງຄານ			2.332 ວັນ × 3 =	687
ພະຫັດ				12.997
ຣາຫູ	(ໄກຈາກເກດ	8.400.134.400)	10766 ວັນ	10.766
ເສົາ				

ຕຳນານບູຮານກ່າວອີກວ່າ ພະເສົາເປັນພະເຄາະທີ່ຢູ່ສູງກວ່າພະເຄາະທັງຫຼາຍ ແລະສູງກວ່າພະເສົາ ຂຶ້ນໄປນັ້ນ ມີແຕ່ດາວປະຈຳບ່ອນ ຫຼື ດາວຣຶກ ທັງມວນ.

ກ. ພະເຄາະທາງຝຣັ່ງ

ທາງຝຣັ່ງມີພະເຄາະ 10 ໜ່ວຍໂດຍບໍ່ນັບ ຣາຫູ ແລະ ເກດ. ພະເຄາະ 10 ໜ່ວຍນັ້ນຢູ່ຫ່າງຈາກພະອາທິດ ເຊິ່ງເປັນສູນກາງຕາມລຳດັບກັນຕໍ່ໄປນີ້: ພຸດ, ສຸກ, ໂລກ , ຈັນ , ອັງຄານ, ພະຣືຫັດ, ເສົາ, ອຸຣິເນັສ, ເນັບຈູນ ແລະ ປລູຕັນ. (ຮູບທີ 6) ພະເຄາະ 3 ໜ່ວຍຫຼັງນີ້ ໂຫນຝຣັ່ງຫາກໍໄດ້ພົ້ປະມານຮ້ອຍກວ່າປີລຸນມານີ້ເອງຄື:

(1) ອຸຣິເນັສ (Uranus) ພົ້ເມື່ອວັນທີ 31 ພຶດສະພາ ຄ.ສ 1781 (ພ.ສ 2324 ຈ.ສ 1183)

(2) ເນັບຈູນ (Neptune) ພົ້ເມື່ອວັນທີ 30 ຕຸລາ ປີ ຄ.ສ 1842 (ພ.ສ 2385 ຈ.ສ 1204)

(3) ປລູຕັນ (Pluton) ພົ້ເມື່ອວັນທີ 14 ມີນາ ຄ.ສ 1930 (ພ.ສ 2473 ຈ.ສ 1292)

ຮູບທີ 6: ວົງມົນສະແດງຕຳແໜ່ງພະເຄາະຕ່າງໆ



ຕາມສາສະດາຈານຝຣັ່ງໄດ້ຈົດໄວ້ນັ້ນ ຂະໜາດກວ້າງ ຄວາມໄວ. ກຳໜົດເວລາແຫ່ງຮອບ (ຫຼືປີ) ຂອງພະເຄາະ ແລະ ລະຍະຫ່າງຈາກພະອາທິດມີສະເໜີໄວ້ໃນຕາລາງດັ່ງຕໍ່ໄປນີ້:

ພະເຄາະ	ເສັ້ນຜ່າສູນກາງ (ກິໂລແມັດ)	ຄວາມໄວ (ກິໂລແມັດ)	ເດີນຄົບຮອບໃນກຳໜົດເວລາ	ຫ່າງຈາກພະອາທິດ (ກິໂລແມັດ)
ຈັນ	3,480		27 ວັນ	(ຈາກໂລກ)384,378
ພຸດ	4,500	47,800	88 ວັນ	57,823,500
ອັງຄານ	6,800	24,085	687 ວັນ	227,637,500
ສຸກ	12,240	34,956	224 ວັນ	108,065,550
ໂລກ	12,752	29,774	365 ວັນ	149,400,000
ພະຫັດ	143,500	13,404	11 ປີ 315 ວັນ	777,261,860

ເສົາ	123,200	9,503	29 ປີ 167 ວັນ	1,427,480,000
ອາທິດ	1,390,656	ປະຈຳທີ່		
ອຸຣິເນັສ	49,600		84 ປີ 7 ວັນ	2,871,190,000
ເນັປຈູນ	53,000	ຍັງບໍ່ຮູ້	164 ປີ280 ວັນ	4,498,370,000
ປລູຕັນ	1,384,820			ຍັງກຳນົດບໍ່ໄດ້

ສ່ວນຣາຫູ ແລະ ເກດນັ້ນ ໂຫຣາສາດຝຣັ່ງກໍມີຄືກັນ ແລະມີຄວາມໝາຍດັ່ງດຽວກັນກັບຕຳຣາໂຫຣາສາດລາວ ຝຣັ່ງຮຽກ ຣາຫູ ວ່າ ເນີ ເດັສຊັງດັງ (noeud descendant) ເຊິ່ງແປວ່າ "ທາງລົງ" ຄື ຈຸດສົມມຸດທີ່ພະຈັນເດີນຜ່ານວິຖີທາງພະອາທິດ ເມື່ອເດີນຈາກທາງເໜືອລົງໄປຂ້າງໃຕ້ ແລະ ຮຽກ "ເກດ" ວ່າ ເນີ ອັສຊັງດັງ (noeud ascendant) ເຊິ່ງແປວ່າ "ຈຸດທາງຂຶ້ນ"ຄືຈຸດສົມມຸດທີ່ພະຈັນເດີນຜ່ານວິຖີທາງພະອາທິດ ເມື່ອເດີນຈາກຂ້າງໃຕ້ໄປຂ້າງເໜືອ (ຮູບທີ 7) ແລະກ່າວອີກວ່າຈຸດທັງສອງນັ້ນ ເຄື່ອນທີ່ຕາມວິຖີທາງພະອາທິດ ຈາກຂວາໄປຊ້າຍສະເໝີແລະເມື່ອເຖິງກຳໜົດເວລາ 18 ປີເສດແລ້ວກໍຈະຈອດວິຖີທາງນັ້ນ 1 ຮອບບໍລິບູນ.

ຮູບທີ 7:



ນອກຈາກພະເຄາະ ທີ່ກ່າວມາແລ້ວນັ້ນ ໂຫນຝຣັ່ງວ່າຍັງມີພະເຄາະອີກ 1,100 ໜ່ວຍແຕ່ເປັນຂະໜາດນ້ອຍໆ ແລະບໍ່ມີຄວາມສຳຄັນຢ່າງໃດ.

ເມື່ອປຽບທຽບຕຳຣາຝຣັ່ງກັບຕຳຣາບູຮານເຮົາແລ້ວ ກໍຈະເຫັນໄດ້ວ່າກຳໜົດເວລາເຊິ່ງພະເຄາະເດີນຄົບຮອບນຶ່ງ ແຫ່ງວິຖີທາງຂອງແຕ່ລະໜ່ວຍນັ້ນໂດຍສ່ວນຫຼາຍກໍຖືກຕ້ອງກັນ ດັ່ງກຳໜົດເວລາຂອງພະເຄາະຕໍ່ລົງໄປນີ້:

ກຳໜົດເວລາເຊິ່ງເດີນຈອດຮອບນຶ່ງ

ພະເຄາະ	ຕາມຕຳຣາຝຣັ່ງ	ຕາມຕຳຣາລາວ
ຈັນ	27 ວັນ	27 ວັນ (27ຣຶກ)
ອັງຄານ	687 ວັນ	687 ວັນ
ພຸດ	88 ວັນ	88 ວັນ
ພະຫັດ	11 ປີ 345 ວັນ 4332 ວັນ	4332 ວັນ
ສຸກ	224 ວັນ	224 ວັນ
ເສົາ	29 ປີ 162 ວັນ ຫຼື 10757 ວັນ	10757 ວັນ

ສຳຫຼັບຈະໃຊ້ໃນທາງພະຍາກອນ ຕຳຣາໂຫຣາສາດລາວ ໄດ້ວາງກຳໜົດກຳລັງ ແລະກຳໜົດອາຍຸ ພະເຄາະ ໄວ້ດັ່ງຕໍ່ໄປນີ້:

ພະເຄາະ	ກຳລັງ	ທຽບທໍ່ກັບກຳລັງ		ອາຍຸ
ອາທິດ	6	ຣາຊະສີ	6 ຕົວ	12
ຈັນ	15	ນາງຟ້າ	15 ນາງ	30
ອັງຄານ	8	ຄວາຍ	8 ຕົວ	16
ພຸດ	17	ຊ້າງ	17 ຕົວ	34
ພະຫັດ	19	ພະລືສີ	19 ອົງ	38
ສຸກ	21	ງົວ	21 ຕົວ	42
ເສົາ	10	ເສືອ	10 ຕົວ	20
ລາຫູ	12	ຜີ	12 ໂຕ	24
ເກດ	9			
ໂຣມກຳລັງ	117			

ສຳລັບໃຊ້ໃນທາງພະຍາກອນ ຕຳຣາຖືເອົາແຕ່ຈຳນວນ 108 ຄືຍົກກຳລັງ 9 ຂອງພະເກດອອກ ເພາະພະເກດ ບໍ່ສະເໜີຍອາຍຸບຸກຄົນ. ຣາຫູໃນທີ່ນີ້ແມ່ນເວລາກາງຄືນວັນພຸດ.

ຂ. ຣາສີ

ສຳຫຼັບຈະໃຫ້ສັງເກດການເດີນຂອງພະເຄາະ ໄດ້ທຸກເວລາທີ່ຕ້ອງການນັ້ນ ໂຫນສົມມຸດໃຫ້ວິຖີທາງພະອາທິດເປັນວົງມົນ ຄືຂອບດົ້ງ ມີຂະໜາດ 360 ອົງສາຕາມຂະໜາດຂອງວົງມົນທັງຫຼາຍ ແລະ ຮຽກວົງມົນນັ້ນວ່າ "ຈັກກະຣາສີ" ຫຼື "ທວາທະສະມົນທົນ" ແລ້ວແບ່ງຈັກກະຣາສີເປັນ 12 ສ່ວນ ຫຼື 12 ຣາສີ ມີຂະໜາດຣາສີລະ 30 ອົງສາ.

ຣາສີທັງ 12 ນັ້ນ ໝາຍດ້ວຍເລກລະດັບແຕ່ 0 ເຖິງ 11 ທັງໝາຍດ້ວຍຊື່ຈຳພວກດາວທີ່ປະຈຳຣາສີນັ້ນໆ ອີກບໍາຄື:

ເລກລຳດັບ	ຊື່ຣາສີ	ດາວປະຈຳຣາສີ	ເລກລຳດັບ	ຊື່ຣາສີ	ດາວປະຈຳຣາສີ
0	ເມສາ	ດາວແບ້	6	ຕຸນ	ດາວຊັ່ງ
1	ພຶດສະພະ	ດາວງົວເຖິກ	7	ພຶດສະຈິກ	ດາວແມງງອດ
2	ເມຖຸນ	ດາວຄົນຜົວເມຍ	8	ທະນູ	ດາວທະນູ
3	ກໍລະກົດ	ດາວກະປູ	9	ມັງກອນ	ດາວລວງ
4	ສິງ	ດາວຣາຊະສີ	10	ກຸມ	ດາວໝໍ້
5	ກັນ	ດາວສາວນ້ອຍ	11	ມີນ	ດາວປາ

ການລຽນຣາສີໄປຕາມວົງຈັກກະຣາສີນັ້ນເອົາຣາສີເມດ(ທີ0)ໄວ້ເທິງແລ້ວລຽນຕາມເລກລຳດັບໄປທາງຊ້າຍ ມີຣາສີຕຸນ (ທີ6) ຢູ່ທາງລຸ່ມແລ້ວວຽນຂຶ້ນໄປຫາຣາສີເມດ(ເບິ່ງຮູບທີ8)

ຮູບທີ 8: ຈັກກະຣາສີ ແລະດາວປະຈຳຣາສີ



ມາດຕາໂຫນ

(1) <u>ມາດຕາລະຍະທາງ (ຈັກກະຣາສີ)</u>

1 ຈັກກະຣາສີ	(360 ອົງສາ)	ມີ	2	ອັດທະຈັກ
1 ອັດທະຈັກ	(180 ອົງສາ)	ມີ	2	ຕຣີຈັກ
1 ຕຣີຈັກ	(90 ອົງສາ)	ມີ	3	ຣາສີ
1 ຣາສີ	(30 ອົງສາ)	ມີ	2	ຂັນ
1 ຂັນ		ມີ	15	ອົງສາ
1 ອົງສາ		ມີ	60	ລິບດາ
1 ລິບດາ		ມີ	60	ຟິລິບດາ

(2) <u>ມາດຕາເວລາ</u>

60 ມະຫາບາທີ	ຫຼື 60	ມາຕິກາ	ເປັນ 1 ວັນ	(24 ຊົ່ວໂມງ)
1 ມະຫາບາທີ	ຫຼື 1	ມາຕິກາ	ເປັນ 4 ບາດ	(24 ບາທີບາລິກາ)

1 ມະຫາບາທີ	ຫຼື 1 ມາຕິກາ	ເປັນ	60 ວິມະຫາບາທີ 60 ວິມາຕິກາ
1 ບາດ		ເປັນ	6 ບາທີບາລິກາ
1 ວິມະຫາບາທີ	ຫຼື 1 ວິມາຕິກາ	ເປັນ	22 ວິບາທີບາລິກາ
1 ບາທີບາລິກາ		ເປັນ	60 ວິບາທີບາລິກາ

ຄ. ຣາສີແບບຝຣັ່ງ

ຝຣັ່ງກໍສົມມຸດໃຫ້ວິຖີທາງພະອາທິດ ເປັນວົງມົນດັ່ງດຽວກັບກັບທາງເຮົາ ແລະ ຮຽກຈັກກະຣາສີນັ້ນວ່າ "ໂຊດຽກ" (zodiac) ແລະ ແບ່ງໂຊດຽກນັ້ນ ອອກເປັນ 12 ສ່ວນຄືກັນ ແລະຮຽກວ່າ "ຊາຍ"(sign) ຫຼື ຣາສີກໍໝາຍດ້ວຍຊື່ດາວ ຈຳພວກດຽວກັບກັບທາງເຮົາທັງໝົດ (ເບິ່ງຮູບທີ 10)

ແຜນທີ່ດາວ (ກ່າຍມາຈາກຕຳຣາໂຫຣາສາດ ຝຣັ່ງ)

ຮູບທີ 9:



ດາວໜ່ວຍສຳຄັນໃນຈຳພວກດາວປະຈຳຣາສີ

1-	ອັນເດບາຣອງ	"	ໂຕຣິດ (ພຶດສະພາ)
2-	ກັສຕໍ	"	ເອມີນີ (ເມຖຸນ)
3-	ໂປນລຸດ	"	ເອມີນີ (ເມຖຸນ)
4-	ເຣກູຣູ	"	ເລໂອ (ສິງ)
5-	ເອປີ (ຣວງເຂົ້າ)	"	ວີຣະໂຄ (ກັນ)
6-	ອອງຕາແຣດ	"	ສະກໍປີໂອ (ພຶດສະຈິກະ)

ດາວໜ່ວຍສຳຄັນ ຫຼື ຈຳພວກສຳຄັນອື່ນໆ

7-	ໂປແລ (ທິດເໜືອ)	ໃນຈຳພວກດາວອູນຊາມີນໍ	(ໝີນ້ອຍ)
8-		ໃນຈຳພວກດາວອູນຊານາຍໍ	(ໝີໃຫຍ່)
9-	ອານຕຸຣູດ	ໃນຈຳພວກດາວ ບູວິເຢ	(ຄົນລ້ຽງງົວ)
10-	ເວກາ	ໃນຈຳພວກດາວລີຣາ	(ພິນ)
11-	ອັນຕາອີຣະ	ໃນຈຳພວກດາວ ອາກີລາ	(ນົກອິນຊີ)
12-	ເດແນບ	ໃນຈຳພວກດາວ ຊິກນຸດ	(ຫ່ານ)
13-		ໃນຈຳພວກດາວ ກັດສີໂອເປ	(ຜູ້ຍິງນັ່ງຕັ່ງອີ້)
14-	ກາແປນລາ	ໃນຈຳພວກດາວໂກເຊ	(ເວົ້າຣິກາ ຄົນຂັບຣົຖ)
15-	ແບແຕນເຊີດ	ໃນຈຳພວກດາວ ໂອອີ້ອົງ	(ນາຍພານ)
16-	ຣີແຊນ	ໃນຈຳພວກດາວ ໂອອີ້ອົງ	(ນາຍພານ)
17-	ສີຣີຍຸດ	ໃນຈຳພວກດາວ ຄານີສມາຍໍ	(ໝາໃຫຍ່)
18-	ໂປຣສີອອງ	ໃນຈຳພວກດາວ ການີສມີນໍ	(ໝານ້ອຍ)

ການລຽນຣາສີໄປຕາມວົງ "ໂຊດຽກ" ຫຼື ຈັກກະຣາສີນັ້ນກໍເອົາຣາສີທີ 1 (ເອຣີອິດ=ເມດ) ໄວ້ທາງເທິງ ແລະ ເອົາຣາສີຕາຊັ່ງ (ລາຍບຣາ=ຕຸນ) ໄວ້ທາງລຸ່ມຄືກັນກັບທາງເຮົາ ແຕ່ຝຣັ່ງທາກ ໃຊ້ວິທີລຽນຣາສີ ຈາກທາງເທິງມາທາງຂວາ ກົງກັນຂ້າມກັບວິທີໂຫນລາວ ເຊິ່ງລຽນຈາກທາງເທິງໄປທາງຊ້າຍ. (ເບິ່ງຮູບ 10)

24 / VII
ຫ້າມຈຳໜ່າຍ

ຮູບທີ 10: ຈັກກະຣາສີຝຣັ່ງ

ການທີ່ໃຊ້ວິທີລຽນຣາສີຕ່າງກັນຢ່າງນີ້ ເຫັນຈະເປັນຍ້ອນໂຫນບູຮານຂອງເຮົາ ແລະໂຫນຝຣັ່ງ ໃຊ້ແບບທຳແຜນທີ່ດາວໃນພື້ນຟ້າຕ່າງກັນນັ້ນເອງ ດັ່ງຫຼວງວິສາລດະຣຸນກອນ (ອັ້ນ ສາຣິກບຸດ) ກ່າວໄວ້ໃນຕຳຣາໂຫຣາສາດຂອງທ່ານ (ເຫຼັ້ມນຶ່ງໜ້າ 58) ນັ້ນວ່າ:

"ແຜນທີ່ດາວຢ່າງໄທ ແລະ ຢ່າງລາຕິນ (ຝຣັ່ງ) ນັ້ນຂຽນຮູບດາວປີ້ນກັນ ຄືຢ່າງໄທ ຂຽນຈຳລອງ "ໜ່ວຍດາວລົງມາໃນເຈັ້ຽກົງໆ ຄືກັບວ່າດາວນັ້ນໄດ້ຕົກລົງມາຢູ່ໃນແຜນເຈັ້ຽ ແຕ່ແບບລາຕິນນັ້ນ "ຂຽນຮູບດາວຢູ່ໃນພື້ນຟ້າ ດັ່ງນັ້ນ ເມື່ອເບິ່ງແຜນທີ່ດາວແບບໄທ ວາງເຈັ້ຽລົງໃຫ້ຊີ່ທິດຕາເວັນອອກ ຕາເວັນຕົກແລ້ວ ແລະເບິ່ງຮູບດາວແຕ່ທາງຕາເວັນຕົກໄປຫາທາງຕາເວັນອອກກໍກົງກັບຮູບດາວໃນພື້ນຟ້າໂລດ ບໍ່ຕ້ອງແຫງນໜ້າເບິ່ງໃນພື້ນຟ້າອີກ ແຕ່ແຜນທີ່ດາວຢ່າງລາຕິນນັ້ນຕ້ອງຍົກເຈັ້ຽຂຶ້ນ ໃຫ້ສູງກາຍຫົວແລ້ວຂວ້ຳຮູບດາວລົງຫາແຜ່ນດິນ ແລ້ວແລະເບິ່ງແຕ່ທິດຕາເວັນ

ຕົກໄປຫາຕາເວັນອອກ ຈຶ່ງຈະກົງກັບຮູບດາວໃນພື້ນຟ້າ".

ມາດຕາໂຫນຝຣັ່ງ

ສຳຫຼັບຄຳນວນຫາການເດີນຂອງພະເຄາະ ຝຣັ່ງກໍໃຊ້ ຣາສີ, ອົງສາ, ລິບດາ, ແລະ ພິລິບດາ ກົງກັບມາດຕາ ໂຫນບູຮານຂອງເຮົາຄື:

ໂຊດຽກ	(ວົງຈັກກະຣາສີ)	ມີ	360	ເດິເກຣ	(360 ອົງສາ)
ໂຊດຽກ	(ວົງຈັກກະຣາສີ)	ມີ	12	ຊາຍ	(12 ລາສີ)
1 ຊາຍ	(1 ລາສີ)	ມີ	30	ເດິເກຣ	(30 ອົງສາ)
1 ເດິເກຣ	(1 ອົງສາ)	ມີ	60	ມີນຸດ	(60 ລິບດາ)
1 ມີນຸດ	(1 ລິບດາ)	ມີ	60	ແຊກັນ	(60 ຟິລິບດາ)

ສ່ວນມາດຕາເວລານັ້ນໂຫນຝຣັ່ງໃຊ້ເວລາຂອງປີ "ສີເດຣັນ" (sideral year) ຫຼື ເວລາສີດາຣັນ (sideral time) ເຊິ່ງມີກຳໜົດດັ່ງນີ້:

1 ຊົ່ວໂມງສີເດຣັນ	ທໍ່ກັບ	56	ນາທີແລະ	4 ວິນາທີນາລິກາ
1 ນາທີສີເດຣັນ	ທໍ່ກັບ	56,04	ວິນາທີນາລິກາ	

ດັ່ງນັ້ນ ວັນ ສີເດຣັນ ກໍມີກຳໜົດເວລາພຽງແຕ່ 23 ຊົ່ວໂມງ 56 ນາທີ 4 ວິນາທີທໍ່ນັ້ນເອງ.

2. ນັກຂັດຕະຣຶກ

ເພື່ອຈະໃຫ້ຮູ້ໄດ້ວ່າໃນເວລາໃດເວລານຶ່ງ ພະເຄາະໜ່ວຍໃດຈະເດີນໄປເຖິງບ່ອນໃດໃນພື້ນຟ້ານັ້ນ ໂຫນບູຮານໄດ້ແບ່ງເສັ້ນວິຖີທາງພະອາທິດ ຫຼື ຈັກກະຣາສີເປັນ 27 ສ່ວນເຊິ່ງຮຽກວ່າ "ນັກຂັຕຣຶກ" ຫຼື "ຣຶກ" ໄວ້ເປັນຫຼັກສັງເກດແລ້ວຈຶ່ງແບ່ງ "ຣຶກ" ນັ້ນອອກເປັນ 60 ສ່ວນອີກ ເຊິ່ງຮຽກວ່າ "ນາທີຣຶກ".

ດັ່ງນັ້ນ ຣຶກນຶ່ງຈຶ່ງມີຂະໜາດ 13 ອົງສາ 20 ລິບດາ ແລະ ນາທີຣຶກ ຈຶ່ງມີຂະໜາດ 13 ລິບດາ 20 ຟິລິບດາ (360/27 = 13 ອົງສາ 20 ລິບດາ 13.20×60/60 = 13 ລິບດາ 20 ຟິລິບດາ)

ການທີ່ໂຫນບູຮານຂອງເຮົາແບ່ງວິຖີທາງພະອາທິດອອກເປັນ 27 ຣຶກ ນັ້ນ ບໍ່ໄດ້ແຈ້ງມູນເຫດໄວ້ແຕ່ຢ່າງໃດເລີຍ ຄັນຂ້າພະເຈົ້າໄດ້ສັງເກດເບິ່ງຕຳນານດາວຂອງຝຣັ່ງ ແລະ ໄດ້ເຫັນວ່າພະ

ຈັນເດີນອ້ອມໂລກຄົບຮອບນຶ່ງບໍລິບູນ ໃນກໍານົດເວລາ 27 ວັນ 7 ຊົ່ວໂມງ 43 ນາທີ 12 ວິນາທີ (ປີຂອງພະຈັນ) ດັ່ງນັ້ນຈຶ່ງເຂົ້າໃຈໄດ້ວ່າໂຫນບູຮານຂອງເຮົາຖືເອົາກໍານົດເວລາ 27 ວັນເຕັມແຫ່ງປີພະຈັນນີ້ເອງ ເປັນຫຼັກຕັ້ງຈໍານວນຣືກ 27 ນັ້ນ. ສະນັ້ນຣືກນຶ່ງກໍໝາຍເຖິງລະຍະທາງ ຂອງພະຈັນໃນເວລາ 1 ວັນໂດຍກົງ (ເບິ່ງຮູບທີ 11).

ໃນການເດີນຂອງພະຈັນນັ້ນ ພະຈັນ ກໍເດີນຜ່ານດາວຣືກ ທັງ 27 ນັ້ນໄປເປັນລໍາດັບຈົນຄົບຮອບຖ້ວນ ແລ້ວກໍຕັ້ງໃໝ່ຕໍ່ໄປດັ່ງນັ້ນເປັນປົກຕິສະເໝີ. ດ້ວຍເຫດນີ້ ເມື່ອພະຈັນ ເດີນໄປກົງກັບດາວໜ່ວຍໃດໃນມື້ເພັງແລ້ວ ໂຫນຈຶ່ງເອົາຊື່ຂອງດາວໜ່ວຍນັ້ນມາເປັນຊື່ຂອງຣືກນັ້ນໆ ໂດຍຕັ້ງຕົ້ນແຕ່ດາວ "ອັດສະວະນີ" ຫຼື ດາວມ້າ ເປັນຣືກ ລໍາດັບທີ 1 ແລ້ວວຽນໄປຕາມເສັ້ນວິຖີທາງຂອງພະອາທິດ ຈົນສ້ຽງສຸດລົງກັບດາວ "ເຣວະຕີ" ຫຼື ດາວກ້ານສວຍ ເຊິ່ງເປັນຣືກ ລໍາດັບທີ 27 ດັ່ງຮູບທີ່ສະເໜີໄວ້ໃຫ້ເຫັນຕໍ່ໄປນີ້:

ຮູບທີ 11: ດາວນັກຂັດຕະຣືກ



ຣຶກທີ	ຊື່ຣຶກ	ດາວລາງຈຳພວກທີ່ມີຢູ່ໃນຣຶກ		ຣິກ ກົງກັບ ຣາສີ
1	ອັດສະວະນີ	ດາວມ້າ		ເມດ
2	ພໍຣະນີ	ດາວຄົນໄຖນາ,	ດາວກ້ອນເສົ້າ	ເມດ
3	ກັດຕິກາ	ດາວໄກ່ນ້ອຍ,	ດາວທຸງ	ເມດ ແລະ ພຶດສະພາ
4	ໂຣຫິນີ	ດາວປາຄູ່,	ໄມ້ຄ້ຳກວຽນ	ພຶດສະພາ
5	ມິຄສີຣະ	ດາວກວາງ,	ດາວຫົວເນື້ອ	ພຶດສະພາແລະເມຖຸນ
6	ອັດທະຣະ	ດາວເຕົ່າ,	ດາວເພັກ	ເມຖຸນ
7	ປຸນັບພະສຸ	ດາວສະເພົາ,		ເມຖຸນ ແລະ ກໍລະກົດ
8	ປຸສະຍາ	ດາວກຸ້ງ,	ດາວໂລງ	ກໍລະກົດ
9	ອະສີເລສາ	ດາວອອນ,	ດາວແຂນຄູ້	ກໍລະກົດ
10	ມາຄະ	ດາວທ່ານຄຳ,	ດາວງ້ອນໄຖ	ສິງ
11	ບຸດພະຜັກຄຸນີ	ດາວງົວເຖິກ,	ດາວພິດານ	ສິງ
12	ອຸດຕະຣະຜັກຄຸນີ	ດາວງົວແມ່,	ດາວພິດານ	ສິງ ແລະ ກັນ
13	ຫັດຖະ	ດາວຊ້າງ,	ດາວຝ່າມື	ກັນ
14	ຈິດຕະ	ດາວເສືອ,	ດາວທອນໄຟ	ກັນ ແລະ ຕຸນ
15	ສວາດີ	ດາວງູ,	ດາວໜ່ວຍແກ້ວ	ຕຸນ
16	ວິສາຂະ	ດາວຄວາຍ,	ດາວແຂນນາງ	ຕຸນ ແລະ ພະຈິກ
17	ອະນຸຣາທະ	ດາວນົກຍູງ,	ດາວໜ້າໄມ້	ພະຈິກ
18	ເຊດຖະ	ດາວແບ້ແມ່,	ດາວຄໍນາກ	ພະຈິກ
19	ມູລະ	ດາວແມວ	ດາວຊ້າງນ້ອຍ	ທະນູ
20	ບຸບພາສານທະ	ດາວສີເຖິກ,	ດາວປາກນົກ	ທະນູ
21	ອຸດຕຣາສານທະ	ດາວສີແມ່,	ດາວຄຸດ	ທະນູ ແລະ ມັງກອນ
22	ສາວະນະ	ດາວຮຸ້ງ,	ດາວຫູກໄຊ	ມັງກອນ
23	ທະນິດຖາ	ດາວເສດຖີ	ດາວໄຊ	ມັງກອນ ແລະ ກຸມ
24	ສັດຕະພິດ	ດາວຍັກ,	ດາວພິມຄຳ	ກຸມ
25	ບຸບພາພັດທະ	ດາວແຮດຜູ້,	ດາວພິດານ	ກຸມ ແລະ ມີນ
26	ອຸດຕຣາພັດທະ	ດາວແຮດແມ່,	ດາວພິດານ	ມີນ
27	ເຣວະຕີ	ດາວກ້ານສວຍ,	ດາວປາ	ມີນ

ຣືກ ມີຄວາມໝາຍສຳຄັນຫຼາຍໃນທາງໂຫຣາສາດ ແລະ ໃນທາງພະຍາກອນເພື່ອຈະຄຳນວນຫາຣືກດີມີໂຊກສຳຫຼັບຈະທຳພິທີມຸງຄຸນຕ່າງໆເປັນຕົ້ນ.

<u>ວິທີຄຳນວນຫາຣືກ</u>

ເພື່ອຈະຄຳນວນຫາຣືກ ສຳຫຼັບວັນໃດວັນໜຶ່ງກໍດີ ໃນຂັ້ນຕົ້ນຕ້ອງຄຳນວນຫາ ມັດທະຍົມ ແລະ ສຳຜຸດພະຈັນ ຂອງວັນນັ້ນເສຍກ່ອນແລ້ວຈຶ່ງ:

(1) ຕັ້ງຈຳນວນຣາສີໃນສຳຜຸດນັ້ນລົງ ເອົາ 30 ຄູນເປັນອົງສາແລ້ວເອົາຈຳນວນອົງສາໃນສຳຜຸດສົມ.

(2) ຕັ້ງອົງສາທີ່ຄຳນວນໄດ້ນັ້ນລົງ ເອົາ 60 ຄູນເປັນລິບດາ ແລ້ວເອົາຈຳນວນລິບດາໃນສຳຜຸດສົມ.

(3) ຕັ້ງຈຳນວນລິບດາທີ່ຄຳນວນໄດ້ນັ້ນລົງເອົາ 800 ຫານໄດ້ຮັບເປັນ ຣືກ (ເພາະຕົວຫານ 800 ນັ້ນ ເປັນຈຳນວນລິບດາເຊິ່ງມີຢູ່ໃນຣືກ 1) ຖ້າບົດຫານມີເສດເອົາ 13 ຫານເສດນັ້ນໄດ້ຮັບເປັນນາທີຣືກ (ເພາະຕົວຫານ 13 ນັ້ນເປັນຈຳນວນລິບດາເຊິ່ງມີຢູ່ໃນນາທີຣືກ 1)

<u>ຕົວຢ່າງ</u>: ຄຳນວນຫາຣືກ ສຳຫຼັບວັນທີ 8 ພຶດສະພາ ພ.ສ 2477 ເຊິ່ງກົງກັບວັນອັງຄານ ເດືອນ ມີນາ ແຮມ 10 ຄ່ຳ ປີກາບເສັດ (ປີຈໍ) ຈ.ສ 1297 ເຊິ່ງສຳຜຸດພະຈັນເປັນຣາສີ 10 ອົງສາ 26 ລິບດາ 11

(1) 10 ຣາສີ × 30 = 300 ອົງສາ, 300 + 26 = 326

(2) 326 × 60 = 19560 ລິບດາ, 19560 + 11 = 19571 ລິບດາ

(3) 19571/800 = 24 ຣືກ ເສດ 371, 371/13 = 24 ນາທີຣືກ ເສດ 9 ຖິ້ມ.

3. ອຸປະຣາຄາ

ໄດ້ກ່າວມາແລ້ວວ່າ ພະອາທິດ ພະຈັນ ພະອັງຄານ ພະພຸດ ພະຣືຫັດ ພະສຸກ ແລະ ພະເສົາເດີນຈາກຊ້າຍໄປຂວາ ແຕ່ພະຣາຫູ ແລະພະເກດ ເດີນຈາກຂວາໄປຊ້າຍ. ເພາະສະນັ້ນພະຣາຫູກັບພະເກດຈຶ່ງສວນທາງກັນກັບພະເຄາະໜ່ວຍອື່ນໆເປັນປົກກະຕິສະເໝີ.

ຕາມຄວາມເຊື່ອຖືທີ່ສືບກັນມາແຕ່ບູຮານກ່າວວ່າ ເມື່ອຣາຫູສວນທາງກັບພະອາທິດແລະພະຈັນໃນຄາວໃດແລ້ວ ຣາຫູກໍຄຸບກືນກິນພະອາທິດ ຫຼື ພະຈັນ ໃນຄາວນັ້ນ ທຸກໆເທື່ອຈຶ່ງບັນດານມີ

ອຸປະຣາຄາຂຶ້ນ (ສຸຣິຍຸປະຣາຄາ ແລະ ຈັນທຣຸປະຣາຄາ) ເພາະສະນັ້ນເມື່ອໃດເກີດມີ ອຸປະຣາຄາຂຶ້ນ ປະຊາຊົນຈຶ່ງຕີຄ້ອງຍິງປືນເບື່ອງບັນຂຶ້ນ ເພື່ອໃຫ້ຣາຫູຕົກໃຈຢ້ານແລ້ວຄາຍພະອາທິດ ຫຼື ພະຈັນ ອອກຈາກປາກໄປ.

ຮູບທີ 12: ຣາຫູອົມຈັນ

ຄວາມເຊື່ອຖືກັນດັ່ງນັ້ນ ບູຮານຈະຖືສືບກັນມາຈາກຊາດໃດກໍບໍ່ຮູ້ໄດ້ແນ່ນອນ, ຕາມທີ່ຂ້າພະເຈົ້າໄດ້ເຫັນນິທານຣາຫູໃນຄຳພີ ມານະວະທຳມະສາດ (Manawa - Dhamma - Satra) ທີ່ທ່ານ ລວາເຊີເລີ-ເດ ລອງຊອງ (Loiseleur - Deslongchamps) ແປເປັນພາສາຝຣັ່ງໄວ້ນັ້ນ ເຂົ້າໃຈວ່າຄວາມເຊື່ອຖືກ່ຽວກັບຣາຫູເປັນສັດຕູກັບພະອາທິດ ແລະ ພະຈັນນັ້ນ ເຫັນວ່າຈະສືບກັນມາຈາກປະເທດອິນເດຽ.

ນິທານຣາຫູ

ຕາມນິທານທີ່ມີຢູ່ໃນຄຳພີເຫຼັ້ມນັ້ນກ່າວວ່າ: ຣາຫູເປັນຍັກ ແຕ່ໃນຄາວທີ່ເທວະດາທັງຫຼາຍພ້ອມກັນໄປທຳພິທີກວນນ້ຳມະຫາສະໝຸດ ເພື່ອເຮັດນ້ຳ "ອະມະຣິດ" ອັນສັກສິດສຳຫຼັບຮັກສາຊີວິດໄວ້ຕະຫຼອດອະສົງໄຂ ພົ້ນຈາກມໍຣະນະກຳໄດ້ໂດຍເດັດຂາດນັ້ນ ຣາຫູ ໄດ້ປອມໂຕເຂົ້າໄປປົນຢູ່ນຳພວກເທວະດາທັງຫຼາຍ ແລ້ວກໍເລີຍໄດ້ຮັບນ້ຳອະມະຣິດນັ້ນ ຈາກການແບ່ງປັນຄື ກັບເທວະດາອື່ນໆທຸກອົງ ແຕ່ເມື່ອຣາຫູຍົກຂັນນ້ຳອະມະຣິດນັ້ນຂຶ້ນໃສ່ປາກ ພໍດີພະອາທິດ ກັບ ພະຈັນຫຼຽວເຫັນຣາຫູຈຶ່ງພ້ອມກັນຊີ້ຕົວໃຫ້ພະອີສວນເບິ່ງ ພະອີສວນຫຼຽວເຫັນເປັນຈິງ ດັ່ງນັ້ນຈຶ່ງຄວ້າງກົງຈັກໄປໃສ່ຣາຫູໃນທັນທີ ກົງຈັກໄປຖືກຄໍຣາຫູຂາດ ແຕ່ຣາຫູໄດ້ດື່ມນ້ຳອະມະຣິດນັ້ນເຂົ້າໄປແລ້ວ ເຖິງແມ່ນວ່າຄໍໄດ້ຂາດຈາກຕົວໄປແລ້ວກໍດີ ແຕ່ຫົວ ແລະ ຕົວກໍບໍ່ໄດ້ຕາຍ ຈຶ່ງໄດ້ວົນວຽນຢູ່ໃນພື້ນຟ້າສະເໝີ ແລະເນື່ອງຈາກຄວາມຄຽດແຄ້ນໃຫ້ພະອາທິດແລະພະຈັນ ແຕ່ວັນນັ້ນມາບໍ່ລືມໄດ້ ເມື່ອໃດທ່ອນຫົວຂອງຣາຫູມີໂອກາດພໍ້ພະອາທິດ ຫຼື ພະຈັນເຂົ້າແລ້ວ ກໍຕ້ອງຄຸບກືນທັນທີທັນໃດໂລດ ຈຶ່ງເປັນອຸປະຣາຄາຂຶ້ນ ຊາວອິນເດຽເຊື່ອຖືວ່າອຸປະຣາຄາມີເຫດຜົນຕົ້ນປາຍມາຢ່າງນີ້.

ທ່ານ ລວາເຊີເລີ ເດລອງຊອງ ກ່າວອີກວ່າ: ຣາຫູ ຫຼື ຫົວມັງກອນນັ້ນແມ່ນຈຸດສົມມຸດທີ່ພະຈັນເດີນຜ່ານວິຖີທາງພະອາທິດ ໃນຄາວເດີນຈາກວົດຖຸັນດອນຂ້າງເໜືອໄປຂ້າງໃຕ້.

ສ່ວນທ່ອນຄີງຂອງຣາຫູທີ່ຮຽກກວ່າພະເກດ ຫຼືຫາງມັງກອນນັ້ນ ແມ່ນຈຸດສົມມຸດທີ່ພະຈັນເດີນຜ່ານ ວິຖີທາງຂອງພະອາທິດ ໃນຄາວເດີນຈາກວົດຖຸັນດອນຂ້າງໃຕ້ໄປຂ້າງເໜືອ.

ເຖິງແມ່ນປະຊາຊົນຈະເຊື່ອກັນວ່າອຸປະຣາຄາໄດ້ເກີດຂຶ້ນເພາະຄວາມພູກພະຍາບາດຂອງຣາຫູກໍດີ ແຕ່ທາງໂຫຣາສາດນັ້ນ ບັນດານັກປາດ ໄດ້ຊາບມາແຕ່ການກ່ອນແລ້ວວ່າ:

(1) ສຸຣິຍຸປະຣາຄາ (ອາຄາດສູນຕາເວັນ) ນັ້ນແມ່ນເງົາຂອງພະຈັນ ພຸ່ງມາເຖິງໂລກເຮົາ

ຮູບທີ 13:



ສຸຣິຍະຄາດ ຫຼືກົບກິນພຣະຈັນ

ໃນເວລາທີ່ ພະຈັນ ເດີນຜ່ານລະຫວ່າງກາງພະອາທິດກັບໂລກ.

(2) ຈັນທະຣຸປະຣາຄາ (ກົບກິນເດືອນ) ນັ້ນແມ່ນເງົາຂອງໂລກເຮົາ ພຸ່ງໄປເຖິງພະຈັນ ໃນເວລາທີ່ໂລກ ເດີນຜ່ານລະຫວ່າງກາງພະອາທິດກັບພະຈັນ (ເບິ່ງຮູບທີ 13).

ເພາະສະນັ້ນຕຳຣາໂຫຣາສາດ ຈຶ່ງບັນຍັດກົດເກນແລະວິທີເລກໄວ້ເພື່ອຄຳນວນຫາວັນ ແລະເວລາ ເຊິ່ງຈະມີອຸປະຣາຄານັ້ນ. ກົດເກນແລະວິທີຄຳນວນນັ້ນ ໂຫນຍັງໃຊ້ເປັນປົກກະຕິຢູ່ສະເໝີ ແລະເຊື່ອໄດ້ວ່າບໍ່ມີການຜິດພາດເລີຍ.

ຕຳຣາໂຫຣາສາດເຮົາກ່າວອີກວ່າ:

(1) ສຸຣິຍຸປະຣາຄາ ເກີດຂຶ້ນໄດ້ແຕ່ໃນລະຫວ່າງເດືອນແຮມ 14-15 ຄ່ຳແລະວັນຂຶ້ນ 1 ຄ່ຳ ທໍ່ນັ້ນ.

(2) ຈັນທະຣຸປະຣາຄາເກີດຂຶ້ນໄດ້ແຕ່ໃນລະຫວ່າງເດືອນອອກໃໝ່ 14-15 ຄ່ຳແລະແຮມ 1 ຄ່ຳທໍ່ນັ້ນ.

ດ້ວຍເຫດນີ້ເມື່ອຈະຄຳນວນຫາວັນເຊິ່ງອາດຈະມີອຸປະຣາຄາແລ້ວຈຶ່ງຄຳນວນຫາສຳຜຸດ ພະອາທິດ ພະຈັນ ແລະ ພະຣາຫູ ໂດຍຈຳເພາະແຕ່ວັນຂຶ້ນ ຫຼື ແຮມດັ່ງກ່າວມານັ້ນ ບໍ່ກ່ຽວກັບວັນ ອື່ນໆ ແລ້ວຈຶ່ງສັງເກດເບິ່ງຈຳນວນຣາສີອົງສາໃນສຳຜຸດທັງ 3 ຢ່າງນັ້ນຖ້າເຫັນວ່າ:

ກ/. ພະອາທິດຢູ່ຣາສີດຽວກັບຣາຫູ ຫຼື ຣາຫູຢູ່ຣາສີດຽວກັບພະຈັນ ແລະ ພະເຄາະໜ່ວຍ ທີ່ບໍ່ຢູ່ຮ່ວມກັບຣາຫູນັ້ນ ຫາກຢູ່ຫ່າງຈາກຣາຫູໄປ 6 ຣາສີ ແລະໂດຍມີຈຳນວນອົງສາເກືອບຈະທໍ່ ກັນທັງໃນ 3 ສຳຜຸດນັ້ນແລ້ວ ກໍອາດຈະມີຈັນທະຣຸປະຣາຄາ (ກົບກິນເດືອນ) ໃນວັນນັ້ນໄດ້.

ຂ/.ພະອາທິດຢູ່ຮ່ວມຣາສີກັບພະຈັນແຕ່ຣາຫູຢູ່ຫ່າງໄປ 6 ຣາສີ ແລະ ໂດຍມີຈຳນວນອົງ ສາເກືອບຈະທໍ່ກັນທັງໃນ 3 ສຳຜຸດນັ້ນແລ້ວກໍອາດຈະມີສຸຣິຍຸປະຣາຄາ (ອາຄາດສູນຕາເວັນ) ໃນ ວັນນັ້ນໄດ້.

ເມື່ອໂຫນສັງເກດເຫັນວ່າສຳຜຸດແຫ່ງພະເຄາະທັງ 3 ໜ່ວຍ ເປັນດັ່ງນັ້ນແລ້ວ ຈຶ່ງດຳເນີນ ການຄຳນວນ ເລກເພື່ອຫາເວລາເຊິ່ງຈະເກີດອຸປະຣາຄານັ້ນຕໍ່ໄປ.

ຕຳນານດາວຝຣັ່ງກ່າວວ່າ ຕາມທຳມະດາໃນປີນຶ່ງມີສຸຣິຍຸປະຣາຄາຫຼາຍກວ່າຈັນທະຣຸ ປະຣາຄາ ແຕ່ ສຸຣິຍຸປະຣາຄານັ້ນ ປະສົບແຕ່ສ່ວນນ້ອຍຂອງໂລກ ທັງນີ້ເນື່ອງຈາກເງົາຂອງພະຈັນ

ມີຂະໜາດນ້ອຍນັ້ນເອງສ່ວນ ຈັນທະຣຸປະຣາຄານັ້ນ ຫຼຽວເຫັນກັນຕະຫຼອດເຖິງເຄິ່ງໂລກທຸກໆເທື່ອ. ໂດຍເຫດນີ້ ໃນບ່ອນໃດບ່ອນນຶ່ງຂອງໂລກກໍດີ ຈຶ່ງຜາກົດວ່າມີຈັນທະຣຸປະຣາຄາຫຼາຍກວ່າສຸຣິຍຸປະຣາຄາສະເໝີ.

ຕາມປົກກະຕິນັ້ນ ໃນປີນຶ່ງຕ້ອງມີອຸປະຣາຄາຢ່າງໜ້ອຍ 2 ເທື່ອ ແລະ ຢ່າງຫຼາຍ 7 ເທື່ອທໍ່ນັ້ນ ແລະວັນທີ່ມີອຸປະຣາຄານັ້ນຍ້າຍໄປທຸກໆປີ ເມື່ອເຖິງ 18 ປີ ກັບ10 ວັນ ຫຼື 11 ວັນແລ້ວ (ຄົບ 223 ເດືອນຈັນທຣະຄະຕິ) ກໍກັບຄືນມາມີອຸປະຣາຄາຄົບຮອບນຶ່ງໃນກຳໜົດເວລາ223 ເດືອນ ແລ້ວຕັ້ງຮອບໃໝ່ອີກ.

ກຳໜົດ 223 ເດືອນ ຈັນທຣະຄະຕິນັ້ນ ເປັນເວລາທີ່ຣາຫູ ແລະ ເກດ ເຄື່ອນທີ່ໄປຕາມວິຖີທາງພະອາທິດ ຄົບຮອບນຶ່ງ ຄືວຽນມາເຖິງຈຸດເດີມແຫ່ງຕົ້ນທາງອີກນັ້ນເອງ.

24 / VII
ຫ້າມຈຳໜ່າຍ

ຕອນທີສາມ

ປະຕິທິນ

ປະຕິທິນລາວເປັນແບບຈັນທຣະຄະຕິກັບສຸຣິຍະຄະຕິປະກອບກັນ ດັ່ງຈະຊີ້ແຈງໃຫ້ຊາບຕໍ່ໄປນີ້:

(1) ໄດ້ກ່າວມາແລ້ວວ່າ ປະຕິທິນເຮົາຖືເອົາເດືອນທາງຈັນທຣະຄະຕິເປັນຫຼັກວາງຮູບ ຄືຖືເອົາລະຍະເວລາທີ່ພະຈັນ ເດີນອ້ອມໂລກຄົບຮອບນຶ່ງເປັນຫຼັກ ໂດຍກຳໜົດເອົາຮອບນຶ່ງເປັນ 1 ເດືອນ ແຕ່ຮອບ 1 ຂອງພະຈັນນັ້ນ ມີກຳໜົດເວລາ 29 ວັນ 12 ຊົ່ວໂມງ 44 ນາທີ 2,39 ວິນາທີ ແລະ ເພື່ອຄວາມສະດວກ ໂຫນບູຣານ ໄດ້ບັນຍັດໃຫ້ເດືອນນຶ່ງມີ 30 ວັນເຕັມ ແລະ ເດືອນນຶ່ງມີ 29 ວັນຂັ້ນກັນຕະຫຼອດທັງ 12 ເດືອນແຫ່ງຂວບປີ.

(2) ແຕ່ສ່ວນປີຖືເອົາກຳໜົດເວລາພະອາທິດ (ສົມມຸດເອົາແທນໂລກ) ເດີນຮອບໂລກ (ຮອບພະອາທິດ) ຄົບຮອບນຶ່ງເປັນຫຼັກ ໂດຍກຳໜົດເອົາຮອບນຶ່ງເປັນປີນຶ່ງ ແຕ່ຮອບນຶ່ງຂອງພະອາທິດນັ້ນ ມີກຳໜົດເວລາ 365 ວັນກັບ 6 ຊົ່ວໂມງ 12 ນາທີ 36 ວິນາທີ ແລະ ເພື່ອຄວາມສະດວກໂຫນບູຣານ ໄດ້ບັນຍັດ ໃຫ້ຖືເອົາແຕ່ຈຳນວນ 365 ວັນເຕັມເປັນຂວບປີ ສ່ວນເສດວັນຂອງຮອບພະອາທິດນັ້ນໃຫ້ຍົກໄວ້ແລະເມື່ອໃດເຖິງ 24 ຊົ່ວໂມງ ຫຼື 1 ວັນ ເຕັມໃນປີໃດແລ້ວໃຫ້ເອົາຕື່ມເຂົ້າໃນປີນັ້ນຈຶ່ງເປັນປີພິເສດຮຽກວ່າ "ປີອະທິກະສຸຣະທິນ" ມີຈຳນວນ 366 ວັນ.

ປະຕິທິນຮູບຈັນທຣະຄະຕິ ແລະ ສຸຣິຍະຄະຕິປະກອບກັນນີ້ ສືບມາຈາກປະເທດອິນເດຍ ແລະ ຕ່າງຈາກປະຕິທິນຊາວຝຣັ່ງ ເຊິ່ງຖືເອົາປີ ແລະ ເດືອນສຸຣິຍະຄະຕິເປັນຫຼັກວາງຮູບ.

ປະຕິທິນແບບທີ່ເຮົາໃຊ້ກັນນີ້ ຜາກົດວ່າຊາວນະຄອນ "ອາແທນ" (ປະເທດເກຣັກ) ໃຊ້ກັນຢູ່ແລ້ວແຕ່ຄາວກ່ອນພຸດທະການ ໃນສະໄໝນີ້ກໍຜາກົດວ່າຊາວມົງໂກນ, ຊາວຈີນ ແລະ ຊາວຫວຽດນາມກໍຍັງໃຊ້ປະຕິທິນແບບນີ້ຢູ່ ແຕ່ຫາກວາງລະບຽບຜິດກັບເຮົາໄປແດ່ເລັກນ້ອຍ ດັ່ງເດືອນແຫ່ງຕົ້ນປີໃໝ່ ແລະ ຫຼັກກຳໜົດປີ ອະທິກະມາດ ແລະ ປີອະທິກະວານເປັນຕົ້ນ.

ເນື່ອງຈາກປະຕິທິນເຮົາເປັນແບບຈັນທຣະຄະຕິ ແລະ ສຸຣິຍະຄະຕິ ປະກອບກັນສະນັ້ນ ການຄູນສັງຂານ (ທຳອັດຕາຖະເຫຼີງສົກ) ຈຶ່ງຫຍຸ້ງຍາກແລະຍືດຍາວຫຼາຍ ເພາະຈຳຕ້ອງຄຳນວນເລກຫຼາຍສິບບົດຈຶ່ງຈະສຳເລັດແລະຮູ້ໄດ້ໂດຍແນ່ນອນວ່າປີທີ່ກ່ຽວຂ້ອງນັ້ນ:

(1) ຈະເປັນຢ່າງໃດແນ່ ຄືຈະເປັນປີ ປົກກະຕິສຸຣະທິນມີ 365 ວັນ ຫຼື ຈະເປັນປີອະທິກະມາດ ມີ13 ເດືອນ ຫຼື ເປັນປີອະທິກະວານ ມີເດືອນ 7 ເຕັມ 30 ວັນ

(2) ວັນສັງຂານຂຶ້ນ (ວັນຖະເຫຼີງສົກ) ຈະກົງກັບວັນໃດ ແລະຈະເປັນຂ້າງຂຶ້ນຫຼືຂ້າງແຮມ

ຈັກຄ່ຳ? ເພື່ອຈະຄຳນວນອັດຕາຖະເຫຼີງສົກ ເຊິ່ງເປັນຫຼັກກຳໜົດລັກສະນະຕ່າງໆຂອງປີນັ້ນ ຕຳຣາ ໂຫຣາສາດໄດ້ວາງກົດເກນແລະວິທີຄຳນວນໄວ້ດັ່ງຈະນຳມາສະເໜີຕໍ່ໄປນີ້:

1. ຄູນສັງຂານ (ທຳອັດຕາຖະເຫຼີງສົກ)

ສຳຫຼັບການຄູນສັງຂານນັ້ນ ຕຳຣາໂຫຣາສາດບັນຍັດໄວ້ວ່າ:

"ສິດທິກາຣິຍະ ຖ້າຈະຄູນສັງຂານ ໃຫ້ຕັ້ງເກນ 292207 ລົງ ເອົາຈຸລະສັກຣາດປີທີ່ຕ້ອງການຈະຄຳນວນນັ້ນຄູນ ເອົາ 373 ສົມ ແລ້ວເອົາ 800 ຫານ ໄດ້ລັບທໍ່ໃດເອົາ 1 ສົມ ສຳເລັດເປັນ "ທໍຣະຄຸນອັດຕາ"

"ໃຫ້ຕັ້ງ 800 ລົງ ເອົາເສດທີ່ເຫຼືອຈາກບົດຫານນັ້ນໄປລົບ ເສດທໍ່ໃດເປັນ "ກຳມັດຊະພົນອັດຕາ"

"ເອົາ "ທໍຣະຄຸນອັດຕາ" ຕັ້ງລົງ ເອົາ 11 ຄູນ ເອົາ 650 ສົມ ແລ້ວເອົາ 692 ຫານ ເສດເປັນ "ອະວະມານອັດຕາ" ສ່ວນລັບນັ້ນ ເອົາສົມທໍຣະຄຸນອັດຕາອີກ ແລ້ວເອົາ30 ຫານ ລັບເປັນ "ມາສະເກນອັດຕາ" ເສດເປັນ "ດິຖີອັດຕາ" ໃຫ້ຕັ້ງທໍຣະຄຸນອັດຕາລົງ ເອົາ 621 ລົບ ແລ້ວເອົາ 3232 ຫານ ລັບຖິ້ມເສຍເສດເປັນ "ອຸດຈະພົນອັດຕາ".

"ໃຫ້ຕັ້ງທໍຣະຄຸນລົງ ເອົາ 7 ຫານ ລັບຖິ້ມເສຍ ເສດເປັນວາຣະຖະເຫຼີງສົກ ຄືຖ້າເສດ 1 ເປັນວັນອາທິດ, ເສດ 2 ເປັນວັນຈັນ, ເສດ 3 ເປັນວັນອັງຄານ, ເສດ 4 ເປັນວັນພຸດ ແລະ ຕໍ່ໆໄປຈົນເຖິງເສດ 0 ເປັນວັນເສົາ ແລ້ວ ໃຫ້ພິຈາລະນາຕໍ່ໄປວ່າ ອັດຕາດິຖີເປັນເລກໃດ ຄືຖ້າເປັນ 0, 1, 2, 3, 4, 5 ດັ່ງນີ້ ວັນສັງຂານຂຶ້ນ (ວັນຖະເຫຼີງສົກ) ຕ້ອງຕົກຢູ່ເດືອນ 6, ຖ້າເປັນເລກ 6-8-9 ຂຶ້ນໄປຈົນເຖິງ 29 ແລ້ວ ວັນສັງຂານຂຶ້ນຕ້ອງຕົກຢູ່ເດືອນ 5 ແລະ ຖ້າຕ້ອງການຮູ້ວ່າຈະຕົກຢູ່ຂ້າງແຮມໃຫ້ຕັ້ງ ດິຖີ ອັດຕາຖະເຫຼີງສົກລົງ ເອົາ 15 ລົບໄດ້ເສດ ເປັນ 0 ວັນສັງຂານຂຶ້ນ ຕົກຢູ່ຂ້າງຂຶ້ນ ຖ້າໄດ້ເສດເປັນເລກອື່ນ ວັນສັງຂານຂຶ້ນຕົກຢູ່ຂ້າງແຮມ ແລະ ເສດເປັນຈຳນວນທໍ່ໃດວັນສັງຂານຂຶ້ນ ກໍເປັນແຮມທໍ່ນັ້ນຄ່ຳ, ຖ້າດິຖີອັດຕາໜ້ອຍກວ່າ 15 ລົບບໍ່ໄດ້ ແລະ ເປັນຈຳນວນທໍ່ໃດແລ້ວກໍໃຫ້ຖືເອົາຈຳນວນອັດຕານັ້ນເປັນກຳໜົດ ວັນຂ້າງຂຶ້ນທໍ່ນັ້ນຄ່ຳທັ້ນແລ"

ຕຳຣາໂຫຣາສາດໄດ້ວາງຫຼັກໄວ້ດັ່ງນີ້ແລ້ວ ໝໍໂຫນກໍຄຳນວນເລກໄປຕາມກົດເກນ ແລະ ວິທີຂອງບູຮານນັ້ນ ໂດຍບໍ່ເຂົ້າໃຈຕົ້ນປາຍສາຍເຫດແຕ່ປະການໃດເລີຍ.

ຕາມທີ່ຂ້າພະເຈົ້າໄດ້ສັງເກດເປັນເວລາເຫິງກວ່າ 20 ປີມາແລ້ວນັ້ນ ຍັງບໍ່ເຫັນໝໍໂຫນລາວຄົນໃດຈະເຂົ້າໃຈໄດ້ວ່າ:

(1) ເກນຕ່າງໆນັ້ນເອົາມາຈາກສິ່ງໃດ ແລະເກນໃດຈະມີຄວາມໝາຍຢ່າງໃດ?

(2) ເພາະເຫດໃດຈຶ່ງໃຫ້ສົມ, ລົບ/ລົບ, ຄູນ ຫຼື ຫານເກນນັ້ນກັບເກນນີ້?

ເບື້ອງຕົ້ນ ຂ້າພະເຈົ້າເອງກໍບໍ່ເຂົ້າໃຈຢ່າງໃດຄືກັນ ແຕ່ເມື່ອໄດ້ຄູນສັງຂານມາເປັນເວລາຫຼາຍປີ ແລະດ້ວຍຄວາມສົນໃຈພາກພຽນພິຈາຣະນາ ຊອກຄົ້ນຫາເຄົ້າມູນແຫ່ງເກນເຫຼົ່ານັ້ນ ແລະທັງໄດ້ຄຶດຄົ້ນຊອກສະແຫວງຫາເຫດຜົນຕົ້ນປາຍແຫ່ງວິທີຄຳນວນເລກຂອງໂຫນບູຮານນັ້ນ ຈຶ່ງຄ່ອຍກະຈ່າງແຈ້ງຂຶ້ນແດ່ ແລະ ເມື່ອໄດ້ຊັບນະສູດເປັນເວລາເຫິງກວ່າ 15 ປີແລ້ວ ກໍມາບັນລຸເຖິງເຄົ້າມູນແຫ່ງເກນເຫຼົ່ານັ້ນໄດ້ເປັນສ່ວນຫຼາຍ ທັງເຂົ້າໃຈຢ່າງແຈ່ມແຈ້ງເຖິງວິທີຄຳນວນເລກເຊິ່ງຕຳຣາໂຫຣາສາດ ບັນຍັດໄວ້ນັ້ນຫຼາຍວິທີອີກດ້ວຍ.

ແຕ່ຄວາມຮູ້ສ່ວນນີ້ ຂ້າພະເຈົ້າຈະນຳມາຂະຫຍາຍໃນຕອນຫຼັງ ສ່ວນໃນຕອນນີ້ຈະໄດ້ດຳເນີນການຄຳນວນອັດຕາຖະເຫຼີງສົກຕາມຂໍ້ບັນຍັດຂອງຕຳຣາໂຫຣາສາດທີ່ກ່າວມາແລ້ວນັ້ນພໍເປັນຕົວຢ່າງໄວ້ກ່ອນ ແລະ ຕົວຢ່າງນັ້ນກໍແມ່ນການຄູນສັງຂານ (ທຳອັດຕາຖະເຫຼີງສົກ) ສຳຫຼັບປະຕິທິນປີ ຈ.ສ 1312.

<u>ອັດຕາຖະເຫຼີງສົກປີຈຸລະສັກຣາດ 1312 (ພ.ສ 2493)</u>

(1) ຫໍຣະຄຸນ ຕັ້ງເກນ 292207 ລົງ ເອົາຈຸລະສັກກຣາດປີທີ່ຕ້ອງການຄຳນວນນັ້ນ ຄູນເອົາ 373 ສົມ ແລ້ວເອົາ 800 ຫານ ໄດ້ລັບທໍ່ໃດເອົາ 1 ສົມສຳເລັດເປັນ <u>ຫໍຣະຄຸນອັດຕາ</u>

292207 × 1312 = 383375584

383375584 + 373 = 383375957

383375957 / 800 = 479219 ເສດ 757

479219 + 1 = 479220 <u>ເປັນ ຫໍຣະຄຸນອັດຕາ</u>

(2) <u>ກຳມັດຊະພົນ</u> ຕັ້ງ 800 ລົງ ເອົາເສດແຫ່ງບົດຫານລົບຍັງເຫຼືອທໍ່ໃດ ເປັນກຳມັດຊະພົນອັດຕາ.

800 - 757 = 43 ເປັນ <u>ກຳມັດຊະພົນອັດຕາ</u>

(3) <u>ອະວະມານ</u> ຕັ້ງຫໍຣະຄຸນລົງ ເອົາ 11 ຄູນ ເອົາ 650 ສົມ ແລ້ວເອົາ 692 ຫານ ລັບຕາໄວ້ ເສດເປັນ <u>ອະວະມານອັດຕາ</u>

479220 × 11 = 5271420

5271420 + 650 = 5272070

5272070 / 692 = 7618 ເສດ 414 ເປັນ <u>ອະວະມານອັດຕາ</u>

(4) <u>ມາສະເກນ</u> ຕັ້ງທໍຣະຄຸນລົງ ເອົາລັບແຫ່ງປົດຫານອ້າງເທິງນັ້ນສົມ ແລ້ວເອົາ 30 ຫານ ໄດ້ລັບທໍ່ໃດ ເປັນ<u>ມາສະເກນອັດຕາ</u>

479220 + 7618 = 486838

486838 / 30 = 16227 ເປັນ <u>ມາສະເກນອັດຕາ</u> ເສດ 28

(5) <u>ດິຖີ</u> ເສດແຫ່ງປົດ ຫານດ້ວຍ 30 ນັ້ນເປັນ <u>ດິຖີອັດຕາ</u> ໃນທີ່ນີ້ ດິຖີອັດຕາ ເປັນ 28 ຈຶ່ງເປັນວັນແຮມ 13 ຄ່ຳເດືອນ 5

(6) <u>ອຸດຈະພົນ</u> ຕັ້ງທໍຣະຄຸນລົງ ເອົາ 621 ລົບແລ້ວເອົາ 3232 ຫານ ໄດ້ລັບທໍ່ໃດຖິ້ມເສຍ ເສດເປັນ <u>ອຸດຈະພົນອັດຕາ:</u>

479220 - 621 = 478599

478599 / 3232 = 148 ເສດ 263 ເປັນ <u>ອຸຈພົນອັດຕາ</u>

(7) <u>ວາຣະ</u> ຕັ້ງທໍຣະຄຸນລົງ ເອົາ 7 ຫານ ລັບຖິ້ມເສຍ ເສດເປັນ <u>ວາຣະອັດຕາ:</u>

479220 / 7 = 68460 ເສດ 0 ເປັນ <u>ວາຣະອັດຕາ</u> ຄືວັນເສົາ

ຕາມຜົນແຫ່ງການຄຳນວນນີ້ ອັດຕາຖະເຫຼີງສົກ ປີຈຸລະສັກຣາດ 1312 ມີດັ່ງນີ້ຄື:

1/. ທໍຣະຄຸນ	279220
2/. ກໍາມັດຊະພົນ	43
3/. ອະວະມານ	414
4/. ມາສະເກນ	16227
5/. ດິຖີ	28
6/. ອຸດຈະພົນ	263
7/. ວາຣະ	0

ເມື່ອເຮົາພິຈາລະນາຕາມຄຳຊີ້ແຈງໃນຕອນທ້າຍແຫ່ງອໍ້ບັບຍັດຂອງຕຳຣາໂຫຣາສາດ ທີ່ກ່າວໄວ້ອ້າງເທິງນັ້ນແລ້ວ ກໍຈະຮູ້ໄດ້ແຕ່ພຽງ 2 ປະການຄື ວັນສັງຂານຂຶ້ນ (ວັນຖະເຫຼີງສົກ) ກົງກັບເດືອນ 5 ແຮມ 13 ຄ່ຳ (ດິຖີ 28) ແລະກົງກັບວັນເສົາ (ວາຣະ 0) ແຕ່ປີ ຈ.ສ 1312 ນັ້ນຈະມີ 365 ຫຼື 366 ວັນຈະມີ 12 ຫຼື 13 ເດືອນ ຈະມີເດືອນ 7 ເຕັມ 30 ວັນ ຫຼື 29 ວັນ ຕຳຣາໂຫຣາສາດຕອນທີ່ກ່າວມານັ້ນ ກໍບໍ່ໄດ້ຊີ້ແຈງຢ່າງໃດໄວ້ ພໍທີ່ຈະເອົາມາພິຈາລະນາກ່ຽວກັບສິ່ງເຫຼົ່ານີ້.

ເພື່ອແກ້ຄວາມສົນໃຈໃນເລື່ອງນີ້ ກໍຕ້ອງຄູນສັງຂານສຳຫຼັບປີທີ່ລ່ວງໄປແລ້ວ (ຈ.ສ1311) ແລະ ປີທີ່ຈະມາເຖິງ (ຈ.ສ 1313) ນັ້ນເສຍກ່ອນ ແລ້ວຈຶ່ງທຽບອັດຕາຖະເຫຼີງສົກທັງສາມປີນັ້ນໃສ່ກັນ ແລະ ພິຈາລະນາໄປນຳຈຶ່ງຈະພໍຮູ້ໄດ້. ການຄຳນວນອັດຕາຖະເຫຼີງສົກສຳຫຼັບປີ 1311 ແລະ

1313 ນັ້ນກໍເປັນໄປດັ່ງດຽວກັນກັບທີ່ໄດ້ຄຳນວນເປັນແນວທາງແຫ່ງການສຶກສາມາແລ້ວນັ້ນທຸກ ປະການ ແລະ ໄດ້ຜົນດັ່ງນີ້:

ອັດຕາຖະເຫຼີງສົກ	ຈ.ສ 1311	ຈ.ສ1312	ຈ.ສ1313
ຫໍຣະຄຸນ	478855	479220	479586
ກໍາມັດຊະພົນ	250	43	636
ອຸດຈະພົນ	3130	263	629
ອະວະມານ	551	414	288
ມາສະເກນ	16215	16227	16240
ດິຖີ	17	28	10
ວາຣະ	6	0	2

ເມື່ອຊັນນະສູດອັດຕາຖະເຫຼີງສົກຂ້າງເທິງນີ້ແລ້ວ ກໍຈະເຫັນໄດ້ວ່າປີ ຈ.ສ 1312 ເຊິ່ງເຮົາ ຄູນສັງຂານ ສຳຫຼັບເຮັດປະຕິທິນນັ້ນ.

(1) ເປັນປີ ອະທິກະສຸຣະທິນມີ 366 ວັນ ເພາະຫໍຣະຄຸນມີຈຳນວນຕ່ຳກວ່າຫໍຣະຄຸນແຫ່ງປີ 1313 ນັ້ນ 479586 - 479220 = 366 ວັນ

(2) ເປັນປີອະທິກະມາດມີ 13 ເດືອນ ເພາະຈຳນວນມາສະເກນຕ່ຳກວ່າມາສະເກນແຫ່ງປີ ຈ.ສ 1313 ນັ້ນ 16240 - 16227 = 13 ເດືອນ.

ເຖິງແມ່ນວ່າຮູ້ດັ່ງນັ້ນແລ້ວກໍດີ ເພື່ອຈະໃຫ້ເປັນການລັກແນ່ ຈຳຕ້ອງສອບເບິ່ງຈຳນວນ ຂອງປີຈ.ສ.1312 ນັ້ນ ໂດຍນັບແຕ່ວັນສັງຂານຂຶ້ນ(ວັນຖະເຫຼີງສົກ)ຄືແຕ່ເດືອນ 5 ແຮມ 13 ຄ່ຳ ປີ 1312 ໄປຈົນເຖິງເດືອນ 5 ຂຶ້ນ 9 ຄ່ຳ ຄືຈົນຮອດວັນເນົາແຫ່ງສັງຂານປີ 1313 (ວັນເດືອນ 5 ຂຶ້ນ10 ຄ່ຳເປັນ ສ່ວນຂອງປີ 1313) :

ເດືອນ 5 ແຮມ 13 ຄ່ຳແລະ 14 ຄ່ຳ	2 ວັນ	ເດືອນ 11	29 ວັນ
ເດືອນ 6	30 ວັນ	ເດືອນ 12	30 ວັນ
ເດືອນ 7	29 ວັນ	ເດືອນອ້າຍ	29 ວັນ
ເດືອນ 8 ທີ 1	30 ວັນ	ເດືອນຍີ່	30 ວັນ
ເດືອນ 8 ທີ 2	30 ວັນ	ເດືອນສາມ	29 ວັນ
ເດືອນ 9	29 ວັນ	ເດືອນສີ່	30 ວັນ
ເດືອນ 10	30 ວັນ	ເດືອນຫ້າ ເຖິງວັນຂຶ້ນ 9 ຄ່ຳ	9 ວັນ
		ໂຮມ	366 ວັນ

ປີ ຈ.ສ 1312 ມີຈຳນວນວັນ 366 ວັນ ກົງກັບຈຳນວນເຊິ່ງຫໍຣະຄຸນນ້ອຍກວ່າຫໍຣະຄຸນແຫ່ງປີ 1313 ດັ່ງອັດຕາຖະເຫຼີງສົກກຳໜົດໄວ້ນັ້ນແທ້.

ບາດນີ້ຕ້ອງກວດເບິ່ງວ່າວັນສັງຂານຂຶ້ນ (ວັນຖະເຫຼີງສົກ) ແຫ່ງປີ 1313 ເຊິ່ງວາຣະເປັນ 2 ໝາຍຄວາມວ່າກົງກັບວັນຈັນນັ້ນ ຈະກົງກັບເດືອນ 5 ຂຶ້ນ 10 ຄ່ຳ ຕາມທີ່ດິຖີຖະເຫຼີງສົກ (10) ກຳໜົດໄວ້ນັ້ນແທ້ບໍ່?

ສຳຫຼັບຈະກວດໃນເລື່ອງນີ້ ຕັ້ງຈຳນວນ 366 ວັນ ແຫ່ງປີ 1312 ລົງ ເອົາ 7 ຫານໄດ້ລັບເປັນສັບດາ ແລະເສດເປັນວັນແຫ່ງສັບປະດາ 366/7 = 52 ເສດ 2 ເປັນວັນຈັນ ກົງກັບວາຣະ 2 ແຫ່ງອັດຕາຖະເຫຼີງສົກ ທີ່ຄຳນວນໄດ້ນັ້ນແທ້.

ເມື່ອສອບເຫັນວ່າເປັນການຖືກຕ້ອງດັ່ງນັ້ນແລ້ວ ຈຶ່ງແນ່ໃຈໄດ້ວ່າການຄູນສັງຂານທີ່ດຳເນີນມານັ້ນ ບໍ່ຜິດພາດແຕ່ປະການໃດເລີຍ ແລ້ວຈຶ່ງນຳເອົາຜົນແຫ່ງການຄຳນວນນັ້ນເຮັດປະຕິທິນຂຶ້ນໄດ້ຄື:

ປີຈຸລະສັກຣາດ 1312 (ກົດຍີ່ - ຂານໂທສົກ) ນັ້ນສັງຂານຂຶ້ນເດືອນ 5 ແຮມ 13 ຄ່ຳວັນເສົາເປັນປີອະທິກະສຸຣະທິນ (366 ວັນ) ແລະເປັນປີອະທິກະມາດ (ເດືອນ 8 ສອງຫົນ) ອີກ ແລ້ວສ້ຽງສຸດລົງນະວັນອາທິດ ເດືອນ 5 ຂຶ້ນ 9 ຄ່ຳເຊິ່ງເປັນວັນເນົາແຫ່ງສັງຂານປີ 1313 (ຮ້ວງເໝົ້າ-ເຖາະຕຣີສົກ).

ຕາມປະເພນີທີ່ຖືສືບມາແຕ່ບູຮານນັ້ນ ເມື່ອຄຳນວນອັດຕາຖະເຫຼີງສົກຮຽບຮ້ອຍແລ້ວກໍອາໄສຜົນແຫ່ງການຄຳນວນນັ້ນ ດັ່ງດິຖີແລະວາຣະຖະເຫຼີງສົກເປັນຕົ້ນ ມາເປັນຫຼັກສຳຫຼັບດຳເນີນການພະຍາກອນ ເພື່ອຈະຊາບວ່າປີທີ່ກ່ຽວຂ້ອງນັ້ນຈະໃຫ້ຜົນຮ້າຍ ຫຼື ຜົນດີຢ່າງໃດແດ່ ແຕ່ເພື່ອຈະໃຫ້ຮູ້ຜົນແຫ່ງການທວາຍໄດ້ໂດຍຖ້ວນຖີ່ ກໍຕ້ອງຄຳນວນຫາເວລາສັງຂານຂຶ້ນ (ເວລາຖະເຫຼີງສົກ) ແລະເວລາສັງຂານໄປ ຄືເວລາທີ່ພະອາທິດ ເດີນມາຄົບຮອບນັ້ນດ້ວຍຕາມວິທີຄຳນວນເຊິ່ງຈະນຳມາສະເໜີຕໍ່ໄປນີ້:

2. ຫາເວລາສັງຂານຂຶ້ນ(ເວລາຖະເຫຼີງສົກ)

ຕຳຣາບັນຍັດວ່າ "ໃຫ້ຕັ້ງເກນຣືກຈັນ ຄື 800 ນັ້ນລົງ ເອົາກຳມັດຊະພົນອັດຕາ ລົບເຫຼືອທໍ່ໃດເອົາ 24 ຄູນ ແລ້ວເອົາ 800 ຫານ ລັບເປັນໂມງຕາໄວ້ ສ່ວນເສດນັ້ນເອົາ 60 ຄູນແລ້ວເອົາ 800 ຫານ ລັບເປັນນາທີຕາໄວ້ ຖ້າມີເສດອີກໃຫ້ເອົາ 60 ຄູນ ແລ້ວເອົາ 800 ຫານ ລັບເປັນວິນາທີຕາໄວ້"

ຕົວຢ່າງ ກຳມັດຊະພົນປີ 1312 ເປັນ 43

(1) 800 - 43 = 757

(2) 757 x 24 = 18168

(3) 18168 / 800 = 22 ໂມງ ເສດ 568

(4) 568 x 60 = 34080

(5) 34080/800 = 42 ນາທີ ເສດ 480

(6) 480 x 60 = 28800

(7) 28800 / 800 = 36 ວິນາທີ

ລັບເປັນ 22 ໂມງ 42 ນາທີ 36 ວິນາທີ ຕາໄວ້.

ຕຳຣາກ່າວອີກວ່າ "ເມື່ອຄຳນວນແລ້ວໃຫ້ພິຈາລະນາເບິ່ງສຳຜຸດພະອາທິດໃນວັນເຊິ່ງມີ ຣາສີ 0 ແລະ ອົງສາ 1 ແລ້ວໃຫ້ນັບ 1 ແຕ່ນິ່ງນາລິກາແຫ່ງວັນໃໝ່ໄປຈົນເຖິງຊົ່ວໂມງ ນາທີ ແລະ ວິນາທີທີ່ຕາໄວ້ນັ້ນ ເຊິ່ງມັກຈະຕົກຢູ່ໃນວັນທີ່ມີຣາສີ 0 ແລະ ອົງສາ 2"

ດັ່ງນັ້ນ ຈຳຕ້ອງຄຳນວນຫາສຳຜຸດພະອາທິດໃນວັນເນົາ ແລະ ວັນສັງຂານຂຶ້ນ ເຊິ່ງມັກຈະ ມີຣາສີ 0 ແລະອົງສາ 2 ນັ້ນສາກ່ອນ ສ່ວນວັນສັງຂານໄປນັ້ນ ບໍ່ຕ້ອງສົນໃຈ ເພາະເປັນວັນເຊິ່ງສຳ ຜຸດພະອາທິດມີຣາສີ ແລະ 0 ອົງສາ 0 ເປັນ ປົກກະຕິຢູ່ສະເໝີ ດັ່ງກ່າວມາແລ້ວນັ້ນ.

ວິທີຄຳນວນຫາສຳຜຸດພະອາທິດ

ເພື່ອຄຳນວນຫາສຳຜຸດພະອາທິດນັ້ນ ໃນຂັ້ນຕົ້ນຕ້ອງນັບຈຳນວນ "ສຸຣະທິນ" ສຳຫຼັບຈະທຳ ສຳຜຸດນັ້ນກ່ອນ ສຸຣະທິນ ນັ້ນນັບ 1 ແຕ່ວັນເຊິ່ງຢູ່ຫຼັງວັນສັງຂານຂຶ້ນໄປຈົນເຖິງວັນຈະທຳສຳຜຸດ ດັ່ງນັ້ນ ສຸຣະທິນສຳຫຼັບວັນເນົາແລະວັນສັງຂານຂຶ້ນແຫ່ງປີ ຈ.ສ 1312 ກໍຕ້ອງນັບ 1 ແຕ່ວັນທີ່ຢູ່ຫຼັງ ວັນສັງຂານຂຶ້ນ ແຫ່ງປີ ຈ.ສ 1311 ມາຈົນເຖິງວັນເນົາແລະວັນສັງຂານຂຶ້ນແຫ່ງປີ ຈ.ສ 1312 ນັ້ນ ເອງ.

ປີ ຈ.ສ 1311 ນັ້ນ ດິຖີຖະເຫຼືອສົກເປັນ 17 ເຊິ່ງໝາຍຄວາມວ່າ ສັງຂານຂຶ້ນເດືອນ 5 ແຮມ 2 ຄ່ຳ ດັ່ງນັ້ນຕ້ອງນັບສຸຣະທິນ 1 ແຕ່ວັນແຮມ 3 ຄ່ຳເດືອນ 5 ໄປ ດັ່ງນີ້:

ເດືອນ 5 ແຮມ 3 ຄ່ຳເຖິງ 14 ຄ່ຳ	ໄດ້ 12 ວັນ	ເດືອນ 12	ໄດ້ 30 ວັນ
ເດືອນ 6	ໄດ້ 30 ວັນ	ເດືອນອ້າຍ	ໄດ້ 29 ວັນ
ເດືອນ 7	ໄດ້ 29 ວັນ	ເດືອນຍີ່	ໄດ້ 30 ວັນ
ເດືອນ 8	ໄດ້ 30 ວັນ	ເດືອນສາມ	ໄດ້ 29 ວັນ

ເດືອນ 9	ໄດ້ 29 ວັນ	ເດືອນສີ່	ໄດ້ 30 ວັນ
ເດືອນ 10	ໄດ້ 30 ວັນ	ເດືອນຫ້າ ແຮມ 12 ຄ່ຳ ໄດ້ 27 ວັນ	
ເດືອນ 11	ໄດ້ 29 ວັນ		

ໂຮມຈຳນວນສຸຣະທິນເຖິງວັນເນົາແຫ່ງສັງຂານປີ 1312 ໄດ້ 364 ວັນ

ການຄຳນວນຫາສຳຜຸດພະອາທິດນີ້ ຈະຄຳນວນຈຳເພາະແຕ່ສຸຣະທິນ 364 ວັນ ເຊິ່ງນັບມາແລ້ວນັ້ນ ພໍເປັນຕົວຢ່າງ ແລະ ກ່ອນແຕ່ຈະຫາສຳຜຸດພະອາທິດໄດ້ ກໍຕ້ອງຫາມັດທະຍົມພະອາທິດສາກ່ອນ ດັ່ງຕໍ່ໄປນີ້:

ມັດທະຍົມພະອາທິດ

(1) ຕັ້ງສຸຣະທິນລົງເອົາ 800 ຄູນ ເອົາກຳມັດຊະພົນແຫ່ງປີທີ່ນັບສຸຣະທິນນັ້ນບວກ ແລ້ວເອົາ 24350 ຫານ ລັບເປັນ ຣາສີ:

364 x 800 = 291200

291200 + 250 = 291450

291450 / 24350 = 11 ຣາສີ ເສດ 23600

(2) ຕັ້ງເສດນັ້ນລົງ ເອົາ 811 ຫານ ລັບເປັນອົງສາ

23600 / 811 = 29 ອົງສາ ເສດ 81

(3) ຕັ້ງເສດນັ້ນລົງເອົາ 14 ຫານ ລັບເປັນ ລິບດາ

81 / 14 = 5 ລິບດາ ເສດ 11

(4) ຕັ້ງລິບດາລົງເອົາ 3 ລົບ : 5 - 3 = 2 ລິບດາ

ມັດທະຍົມພະອາທິດໃນວັນເນົາແຫ່ງສັງຂານປີ 1312 ເປັນ 11 ຣາສີ 29 ອົງສາ 2 ລິບດາ.

ຂໍ້ບັນຍັດສຳຫຼັບເກນ

ເພື່ອຈະທຳສຳຜຸດພະອາທິດ (ຫຼືພະເຄາະໜ່ວຍອື່ນໆ) ຕຳຣາໂຫຣາສາດບັນຍັດໄວ້ດັ່ງນີ້:

ໃຫ້ຕັ້ງມັດທະຍົມລົງ ເອົາ 2 ລົບຣາສີ ແລະ ເອົາ 20 ລົບອົງສາ ເຫຼືອທີ່ໃດ ໃຫ້ສັງເກດເບິ່ງຈຳນວນຣາສີ ທີ່ເປັນເກນນັ້ນ:

ຖ້າຣາສີເປັນ 0, 1, 2 ເອົາ 2 ຄູນເກນນັ້ນ ໄດ້ລັບເປັນອັນຕາໄວ້.

ຖ້າຣາສີເປັນ 3, 4, 5, ເອົາໄປລົບອັດທະຈັກ (6 ຣາສີ) ເຫຼືອທີ່ໃດຈຶ່ງເອົາ 2 ຄູນຈຳນວນຣາສີນັ້ນ ໄດ້ລັບເປັນ ອັນຕາໄວ້.

ຖ້າຣາສີເປັນ 6, 7, 8, ເອົາ 6 ຣາສີລົບເຫຼືອທໍ່ໃດຈຶ່ງເອົາ 2 ຄູນຣາສີນັ້ນ ໄດ້ລັບເປັນ ອັນ ຕາໄວ້.

ຖ້າຣາສີເປັນ 9, 10 , 11 ເອົາໄປລົບທວາທະສະມົນທົນ(12 ຣາສີ) ເຫຼືອທໍ່ໃດຈຶ່ງເອົາ 2 ຄູນຈຳນວນຣາສີນັ້ນໄດ້ ລັບເປັນ ອັນ ຕາໄວ້.

"ແລ້ວໃຫ້ພິຈາຣະນາເບິ່ງອົງສາ ຖ້າອົງສາມີເຖິງ 15 ໃຫ້ເອົາ 15 ຫານ ເສດທໍ່ໃດຕາໄວ້ ສ່ວນລັບ ແຫ່ງບົດເລກຫານນັ້ນ ໃຫ້ເອົາບວກເຂົ້າກັບອັນ ແລ້ວເອົາ 60 ຄູນອົງສາ ທີ່ເສດຈາກບົດ ຫານນັ້ນ ແລະບວກລິບດາເຂົ້ານຳໂຮມເປັນພຸຊະລິບ ຕາໄວ້".

ຕັ້ງພຸຊະລິບລົງ ແລ້ວເບິ່ງອັນວ່າເປັນອັນທີ່ທໍ່ໃດ ຈຶ່ງທຳຕໍ່ໄປດັ່ງນີ້:

ສາຍາພະອາທິດ

ຖ້າອັນເປັນ 0 ເອົາ 35 ຄູນ ພຸຊະລິບ ແລ້ວເອົາ 900 ຫານ ໄດ້ລັບເປັນອົງສາ ເສດເປັນລິບ ດາ ລັບແລະ ເສດນີ້ຮຽກກວ່າ ຣະວິພຸຊະຜົນ.

ຖ້າອັນເປັນ 1 ເອົາ 32 ຄູນພຸຊະລິບ ແລ້ວເອົາ 900 ຫານ ລັບເອົາໄປບວກກັບ 35 ແລ້ວເອົາ 60 ຫານ ໄດ້ລັບເປັນອົງສາ ເສດເປັນລິບດາ ລັບແລະເສດ ຮຽກວ່າ ຣະວິພຸຊະຜົນ.

ຖ້າອັນເປັນ 2 ເອົາ 27 ຄູນພຸຊະລິບ ແລ້ວເອົາ 900 ຫານລັບນັ້ນເອົາໄປບວກກັບ 67 ແລ້ວ ເອົາ 60 ຫານໄດ້ລັບເປັນອົງ ສາເສດເປັນລິບດາ ລັບແລະເສດ ຮຽກວ່າ ຣະວິສຸຊະຜົນ.

ຖ້າອັນເປັນ 3 ເອົາ 22 ຄູນພຸຊະລິບແລ້ວເອົາ 900 ຫານ ລັບນັ້ນເອົາໄປບວກກັບ 94 ແລ້ວ ເອົາ 60 ຫານ ໄດ້ລັບເປັນອົງສາ ເສດເປັນລິບດາ ລັບແລະເສດ ຮຽກວ່າ ຣະວິພຸຊະຜົນ.

ຖ້າອັນເປັນ 4 ເອົາ 13 ຄູນພຸຊະລິບແລ້ວເອົາ 900 ຫານ ລັບນັ້ນເອົາໄປບວກກັບ 116ແລ້ວ ເອົາ 60 ຫານ ລັບເປັນອົງສາ ເສດເປັນລິບດາ ລັບແລະເສດຮຽກວ່າ ຣະວິພຸຊະຜົນ.

ຖ້າອັນເປັນ 5 ເອົາ 5 ຄູນພຸຊະລິບແລ້ວເອົາ 900 ຫານ ລັບເອົາໄປບວກກັບ 129 ແລ້ວເອົາ 60 ຫານ ລັບເປັນອົງສາ ເສດເປັນລິບດາ ລັບແລະເສດຮຽກວ່າ ຣະວິພຸຊະຜົນ.

ແລ້ວລົງເລກ 0 ເປັນຣາສີແລ້ວຈຶ່ງລົງຈຳນວນອົງສາ ລິບດາ ຕາມທີ່ຄຳນວນໄດ້ຈາກ ອັນ ນັ້ນເຊິ່ງຮຽກວ່າ ຣະວິພຸຊະຜົນ ຫຼື ຜົນ.

ເມື່ອສຳເລັດດັ່ງນີ້ແລ້ວ ຈຶ່ງພິຈາຣະນາເບິ່ງທີ່ທຳມາແຕ່ຕົ້ນ ຄືຕັ້ງແຕ່ບົດເລກທີ່ເອົາ 2 ລົບ ຣາສີ ແລະ 20 ລົບອົງສາແຫ່ງມັດທະຍົມພະອາທິດນັ້ນມາວ່າເປັນເກນທໍ່ໃດ ຖ້າເກນແຕ່ 0 ເຖິງ 5 ເປັນເກນລົບ ຖ້າ ເກນເປັນ 6 ຂຶ້ນໄປເປັນເກນບວກ ເມື່ອຣະວິພຸຊະຜົນຢູ່ໃນເກນລົບກໍໃຫ້ລົບຖ້າຢູ່ໃນ ເກນບວກ ກໍໃຫ້ບວກກັບມັດທະຍົມ ພະອາທິດໄດ້ ລັບເປັນ "ສຳຜຸດພະອາທິດແລ"

ເກນ

ມັດທະຍົມພະອາທິດ (ສຳຫຼັບປີ ຈ.ສ1312 ສຸຣະທິນ 364) ທີ່ຄຳນວນມາແລ້ວນີ້ ເປັນ 11 ຣາສີ 29 ອົງສາແລະ 2 ລິບດາ ສະນັ້ນສຳຫຼັບຈະຄຳນວນຫາເກນກໍຕ້ອງລົບມັດທະຍົມພະອາທິດນັ້ນອອກ 2 ຣາສີ ແລະ 20 ອົງສາຄື:

ມັດທະຍົມພະອາທິດ	11	ຣາສີ	29	ອົງສາ	2	ລິບດາ
ເອົາ	2	ຣາສີ	20	ອົງສາ	ລົບອອກ	
ເສດເປັນເກນ	9	ຣາສີ	9	ອົງສາ	2	ລິບດາ

ໝາຍເຫດ ຕາມທີ່ໂຫຣາສາດບັນຍັດໄວ້ຂ້າງເທິງນີ້ ເປັນທີ່ເຂົ້າໃຈຍາກທີ່ສຸດ ເພາະສະນັ້ນສຳຫຼັບຈະຄຳນວນຫາສຳຜຸດພະອາທິດຕໍ່ໄປນີ້ ຂ້າພະເຈົ້າຈະທຳເປັນຕອນໆໄປ ໂດຍຄວາມຫວັງຈະໃຫ້ເຂົ້າໃຈວິທີໄດ້ງ່າຍຂຶ້ນ ສ່ວນ ສາຍາພະອາທິດນັ້ນ ເມື່ອຂ້າພະເຈົ້າໄດ້ພິຈາຣະນາເບິ່ງແລ້ວ ເຫັນວ່າຖ້າຂຽນສາຍານັ້ນ (ໃໝ່ຕາມແບບ) ດັ່ງສະເໜີຕໍ່ໄປນີ້ຈະເປັນທີ່ແຈ່ມແຈ້ງດີຄື:

ອັນ	ເກນ	ມູນແຫ່ງເກນຄູນ		ເກນຄູນ
0				35
1	35	67 - 35		32
2	67	94 - 67	=	27
3	94	116 - 94	=	22
4	116	129 - 116	=	13
5	129	134 - 129	=	5

ຂໍ້ບັນຍັດຂອງເກນບອກວ່າ ຖ້າເກນເປັນ:

ລາສີ	ເປັນ	0-1-2	ໃຫ້ເອົາຕາມນັ້ນ
ລາສີ	ເປັນ	3-4-5	ໃຫ້ເອົາລົບອັທຈັກ ຫຼື 6 ຣາສີ
ລາສີ	ເປັນ	6-7-8	ໃຫ້ລົບອອກ 6 ຣາສີ
ລາສີ	ເປັນ	9-10-11	ໃຫ້ເອົາໄປລົບທວາທະສະມົນທົນ ຫຼື 12 ຣາສີ

ຫຼື 11 ຣາສີ 29 ອົງສາ 60 ລິບດາ.

ເກນທີ່ຄຳນວນໄດ້ເປັນ 9 ຣາສີ ກໍຕ້ອງເອົາໄປລົບທະວາທະສະມົນທົນຄື:

	11	ຣາສີ	29	ອົງສາ	60	ລິບດາ
-						
	9	ຣາສີ	9	ອົງສາ	2	ລິບດາ
ເອົາເກນລົບເສດເປັນ	2	ຣາສີ	20	ອົງສາ	58	ລິບດາ

ອັບ

ຕັ້ງຣາສີແຫ່ງເສດລົງເອົາ 2 ຄູນ ໄດ້ລັບທໍ່ໃດຕາໄວ້ຄື: 2 × 2 = 4 ຕາໄວ້

ຕັ້ງອົງສາເອົາ 15 ຫານ ໄດ້ລັບນັ້ນໄປບວກເຂົ້າກັບລັບແຫ່ງບົດທີ່ເອົາຣາສີຄູນດ້ວຍ 2 ນັ້ນ ໄດ້ຈຳນວນ ທໍ່ໃດເປັນ ອັບ ຄື:

ອົງສາ 20 / 15 = 1 ເສດ 5

ບົດຄູນຣາສີເປັນ 4 + 1 = 5 ເປັນອັບ

ພຸຊະລິບ

ສ່ວນຈຳນວນອົງສາທີ່ເສດຈາກບົດຫານດ້ວຍ 15 ນັ້ນ ໃຫ້ເອົາ 60 ຄູນ ໄດ້ລັບທໍ່ໃດ ເອົາບວກເຂົ້າກັບຈຳນວນລິບດາ ໂຮມເປັນພຸຊະລິບ ຄື:

ເສດຈາກບົດຫານດ້ວຍ 15 ເປັນ 5 × 60 = 300

ລິບດາ 58 + 300 = 358

ຈຳນວນ 358 ເປັນພຸຊະລິບ

ຣະວິພຸຊະຜົນ

ອັບທີ່ຄຳນວນໄດ້ເປັນ 5 ສະນັ້ນຕ້ອງເອົາ 5 ຄູນພຸຊະລິບຄື: 358 × 5 = 1790

ແລ້ວຫານດ້ວຍ 900 ຄື: 1790 / 900 = 1 ເສດ 890 ຖິ້ມເສຍ

ຕ້ອງເອົາຮັບ 1 ໄປບວກກັບ 129 + 1 = 130

ຕ້ອງເອົາເກນ 60 ຫານຄື: 130 / 60 = 2 ເສດ 10

ໄດ້ລັບເປັນຣະວິພຸຊະຜົນ ຄື: 2 ອົງສາ 10 ລິບດາ

ສຳຜຸດພະອາທິດ

ເກນເດີນເປັນ ຣາສີ 9 ດັ່ງນັ້ນກໍຕ້ອງເອົາຣະວິພຸຊະຜົນ ບວກເຂົ້າກັບມັດທະຍົມພະອາທິດ

ຄື:

ມັດທະຍົມພະອາທິດ	11	ຣາສີ	29	ອົງສາ	2	ລິບດາ
ຣະວິພຸຊະຜົນເປັນ	+		2	"	10	ລິບດາ
ສຳຜຸດພະອາທິດ	11	ຣາສີ	31	ອົງສາ	12	ລິບດາ

ສຳຜຸດນັ້ນມີຈຳນວນອົງສາເກີນໄປ 1 ຣາສີ (ຫຼື ອົງສານັ້ນໄດ້ 1 ຣາສີກັບເສດ 1 ອົງສາຈຶ່ງເອົາ 1 ລາສີທີ່ເກີນຈາກອົງສານັ້ນມາບວກເຂົ້າກັບ 11 ຣາສີ) ສຳຜຸດພະອາທິດຈຶ່ງເປັນ 12 ຣາສີ 1 ອົງສາ 12 ລິບດາ ຈຳນວນຣາສີໄດ້ 12 ຣາສີນັ້ນສະແດງວ່າສຳຜຸດສະຄົບຮອບຈັກກະຣາສີ ຫຼືທະວາທະສະມົນທົນແລ້ວ ຈຶ່ງຕ້ອງລົບອອກເສຍ.

ສະນັ້ນສຳຜຸດພະອາທິດໃນວັນເນົາແຫ່ງປີ ຈ.ສ 1312 ຈຶ່ງເປັນ <u>0 ຣາສີ 1 ອົງສາ 12 ລິບດາ</u>

ອົງສາຂອງສຳຜຸດພະອາທິດໃນວັນເນົາເປັນຈຳນວນ 1 ຕາມທີ່ຕ້ອງການສຳຫຼັບຫາເວລາສັງຂານຂຶ້ນດັ່ງນັ້ນແລ້ວ ກໍບໍ່ຕ້ອງການຈະຄຳນວນຫາສຳຜຸດພະອາທິດໃນວັນສັງຂານຂຶ້ນນັ້ນອີກ.

ຕຳຣາບັນຍັດວ່າ ໃຫ້ພິຈາລະນາເບິ່ງສຳຜຸດພະອາທິດຈຳເພາະໃນວັນເຊິ່ງມີຣາສີ 0 ອົງສາ 1 ແລ້ວ ໃຫ້ນັບ 1 ແຕ່ນຶ່ງນາລິກາແຫ່ງວັນໃໝ່ໄປຈົນເຖິງຊົ່ວໂມງ ນາທີ ແລະ ວິນາທີ ທີ່ຕຣາໄວ້ນັ້ນ.

ເວລາຖະເຫຼີງສົກ ຫຼື ເວລາສັງຂານຂຶ້ນເຊິ່ງຄຳນວນມາແຕ່ກ່ອນແລ້ວນັ້ນມີ 22 ຊົ່ວໂມງ 42 ນາທີ ກັບ 36 ວິນາທີ ດັ່ງນັ້ນເວລາຂຶ້ນປີໃໝ່ກໍແມ່ນເວລາ 22 ໂມງ 42 ນາທີ 36 ວິນາທີຫຼືເວລາ 4 ທຸ້ມ 42 ນາທີ 36 ວິນາທີ ແຫ່ງວັນສັງຂານຂຶ້ນນັ້ນເອງ.

3. ຫາເວລາສັງຂານໄປ ຫຼື ສັງຂານລ່ວງ

ເວລາສັງຂານໄປ ເປັນຫຼັກສຳຄັນອີກຢ່າງນຶ່ງ ສຳຫຼັບການທວາຍຫາຜົນຮ້າຍແລະດີກ່ຽວກັບປີໃໝ່ ເພື່ອຈະຄຳນວນຫາເວລາສັງຂານໄປນັ້ນ ໃນຂັ້ນຕົ້ນຕ້ອງທຳສົມຜຸດພະອາທິດແຫ່ງວັນສັງຂານໄປນັ້ນກ່ອນ ແລ້ວຈຶ່ງທຽບຈຳນວນ "ລິບດາ" ໃນສຳຜຸດນັ້ນກັບ "ລິບດາ" ໃນຕາລາງທີ່ບູຮານທຳໄວ້ໂດຍສະເພາະ ຄັນເຫັນວ່າຈຳນວນລິບດາກົງກັນໃນບ່ອນໃດແລ້ວ ໃຫ້ສັງເກດເບິ່ງວ່າກົງກັບ "ບາດ" ທີ່ທໍ່ໃດອີກນຳ ແລ້ວຈຶ່ງເອົາຈຳນວນ "ບາດ" ນັ້ນມາຄຳນວນເປັນໂມງແລະນາທີ ແລະເມື່ອ

ຄຳນວນແລ້ວ ໃຫ້ພິຈາລະນາເບິ່ງວ່າຈຳນວນບາດນັ້ນຢູ່ໃນຕອນໃດຂອງຕາລາງ ແລ້ວຈຶ່ງລົງເວລາສັງຂານໄປຕາມທີ່ພາຍໄວ້ໃນຕາລາງນັ້ນ.

ການຄຳນວນຫາສຳຜຸດພະອາທິດໃນວັນສັງຂານໄປ ຕ້ອງຄຳນວນດ້ວຍ ສຸຣະທິນ 363 ວັນສະເໜີ ແລະ ດຳເນີນການຄຳນວນຫາສຳຜຸດພະອາທິດໃນວັນສັງຂານໄປປີ ຈ.ສ 1312 ນັ້ນມີ 0 ຣາສີ 0 ອົງສາ 14 ລິບດາ.

ສ່ວນຕາລາງສຳຫຼັບຫາເວລາສັງຂານໄປ ເຊິ່ງບູຮານເຮັດໄວ້ນັ້ນເປັນຮູບວົງມົນມີ 2 ຂອບ (ເບິ່ງຮູບ 14) ຄື:

(1) ຂອບຢູ່ໃນ ລົງຈຳນວນລິບດາເປັນລຳດັບໄປແຕ່ 0 ເຖິງ 59 ໂດຍຕັ້ງ 0 ລິບດາໃນເວລາທ່ຽງຄືນ ແລ້ວລຽນກັນໄປທາງຊ້າຍ ຕາມຂອບວົງມົນ ແລະ ວຽນມາຄົບຮອບທີ 0 ຫຼື 60 ລິບດາ ເປັນກຳໜົດເວລາ 24 ຊົ່ວໂມງພໍດີ.

(2) ຂອບຢູ່ນອກ ລົງຈຳນວນບາດໄວ້ເປັນ 4 ຕອນ ແຕ່ລະຕອນມີຈຳນວນບາດ ແຕ່ 0 ເຖິງ 60 ເປັນລຳດັບກັນໄປທຸກ 4 ບາດ ແລະລຽນກັນໄປທາງຂວາ ກົງກັບຂ້າມກັບການລຽນລິບດາ ເພາະສະນັ້ນ ຈຳນວນບາດແຕ່ລະຕອນ ຈຶ່ງຢູ່ກົງກັບຈຳນວນລິບດາ ດັ່ງນີ້:

(1)	ຕອນທີ	1	ກົງກັບ	0	ລິບດາໄປເຖິງ	45	ລິບດາ	(ທ່ຽງຄືນໄປເຖິງ 6 ໂມງເຊົ້າ)
(2)	"	2	"	45	"	30	"	(6 ໂມງເຊົ້າໄປເຖິງທ່ຽງວັນ)
(3)	"	3	"	30	"	15	"	(ທ່ຽງວັນໄປເຖິງ 18 ໂມງ)
(4)	"	4	"	15	"	0	"	(18 ໂມງໄປເຖິງທ່ຽງຄືນ)

ຕົວຢ່າງ: ວັນເສົາສັງຂານໄປ ປີ ຈ ສ. 1312 ສຳຜຸດພະອາທິດເປັນ 0 ຣາສີ 0 ອົງສາ 14 ລິບດາ ສັງຂານໄປ ຈະກົງກັບເວລາໃດ?

ເມື່ອກວດເບິ່ງຕາລາງຂອງ ບູຮານ ກໍເຫັນວ່າຈຳນວນ 14 ລິບດາຢູ່ຊິດດຽວກັບ 4 ບາດຕັ້ງ 4 ບາດລົງ ເອົາ 6 ນາທີຄູນ ໄດ້ລັບເປັນ 24 ນາທີ (ຖ້າເປັນຈຳນວນສູງກວ່າ 60 ນາທີໃຫ້ເອົາ 60 ຫານ ລັບເປັນຊົ່ວໂມງເສດເປັນນາທີ) ເມື່ອກວດເບິ່ງຕາລາງນັ້ນອີກ ກໍເຫັນວ່າຈຳນວນ 4 ບາດທີ່ກ່ຽວຂ້ອງນັ້ນຢູ່ໃນຕອນທີ 4 ເຊິ່ງກົງກັບເວລາແຕ່ 18 ເຖິງ 24 ນາລິກາ ສະນັ້ນຕ້ອງນັບຕັ້ງແຕ່ 18 ນາລິ ກາໄປ 24 ນາທີ ຈຶ່ງເປັນເວລາສັງຂານໄປ ຄືກົງກັບເວລາ 18 ນາລິກາ 24 ນາທີ.

ເພື່ອຈະໃຫ້ເຂົ້າໃຈວິທີຫາເວລາສັງຂານໄປແບບສະດວກຂຶ້ນ ຂ້າພະເຈົ້າຈະເອົາສຳຜຸດພະ

ອາທິດ ແຫ່ງວັນສັງຂານໄປແຕ່ປີ ຈ.ສ 1289 ເຖິງ 1295 ມາເປັນຕົວຢ່າງໄວ້ຕໍ່ໄປນີ້:

ຂໍ້ສັງເກດ ເມື່ອຊັນນະສູດເບິ່ງຕົວຢ່າງຂ້າງເທິງນີ້ແລ້ວກໍຈະສັງເກດເຫັນວ່າ ເຖິງແມ່ນວ່າຈຳນວນລິບດາໃນສຳຜຸດຈະຕ່າງກັນໄປທຸກໆປີກໍດີ ແຕ່ສ່ວນຈຳນວນບາດນັ້ນກໍທໍ່ກັນ ສຳຫຼັບຫຼາຍໆປີຕິດໆກັນໄປ ອີກປະການນຶ່ງຈຳນວນດຽວຂອງບາດນັ້ນ ເຖິງວ່າຈະມີກຳໜົດທໍ່ກັນກໍຕາມ ແຕ່ຫາກໝາຍເຖິງເວລາແຫ່ງວັນຕ່າງໆກັນ ທຸກຈຳນວນເຊິ່ງພາໃຫ້ເກີດຄວາມສົນໃຈເປັນອັນມາກ ການທີ່ເປັນໄປດັ່ງນັ້ນກໍຍ້ອນ ບູຮານແບ່ງກຳໜົດເວລາ 24 ຊົ່ວໂມງແຫ່ງວັນນຶ່ງອອກເປັນ 4 ຕອນນັ້ນເອງ ເມື່ອແຕ່ລະຕອນມີກຳໜົດ ເວລາ 6 ຊົ່ວໂມງ (60 ບາດ) ທໍ່ກັນ ດັ່ງນັ້ນຈຳນວນໃດຈຳນວນນຶ່ງຂອງບາດ ກໍຕ້ອງມີທົ່ວໄປທັງໃນ 4 ຕອນນັ້ນຄືກັນ ແຕ່ຈະຄວນໃຊ້ໃນຕອນໃດນັ້ນ ແລ້ວແຕ່ຈຳນວນລິບດາໃນສຳຜຸດຈະຢູ່ໃນຕອນນັ້ນເປັນປະມານ ດັ່ງນັ້ນ ຈຳນວນດຽວຂອງບາດ ດັ່ງ 24 ໃນຕົວຢ່າງທີ່ກ່າວມານີ້ຈຶ່ງໝາຍເຖິງ 3 ເວລາແຕກຕ່າງກັນໄປ ດ້ວຍເຫດນີ້ ການຫາເວລາສັງຂານໄປຕາມຕາລາງຂອງບູຮານຈຶ່ງເປັນທີ່ເຂົ້າໃຈຍາກຫຼາຍ.

ເມື່ອຂ້າພະເຈົ້າໄດ້ປະສົບຄວາມຫຍຸ້ງຍາກດັ່ງນີ້ມາຫຼາຍໆເທື່ອແລ້ວ ຈຶ່ງໄດ້ຄິດແກ້ໄຂຕາລາງນັ້ນໃຫ້ເຂົ້າໃຈງ່າຍຂຶ້ນ ໂດຍໃຊ້ຊົ່ວໂມງ ແລະ ນາທີແທນ "ບາດ" ຂອງບູຮານ ແລະໂດຍລຽນໂມງແລະນາທີເປັນງວດດຽວຕະຫຼອດໄປຈົນຄົບ 24 ຊົ່ວໂມງ ດັ່ງດຽວກັນກັບວິທີລຽນລິບດາຂອງບູຮານນັ້ນ ທັງຕັ້ງຕົ້ນ 0 ນາລິກາ ກົງກັບອິດ 0 ລິບດາດ້ວຍ. (ເບິ່ງຮູບທີ 15)

ປີ	ສຳຜຸດພະອາທິດ			ຈຳນວນ	ຢູ່ໃນຕອນ	ຈຳນວນ		ເວລາສັງຂານໄປ
ຈ.ສ	ລາສີ	ອົງສາ	ລິບດາ	ບາດ		ໂມງ	ນາທີ	
1289	0	0	11	16	ທົ່ວຄ່ຳ	1	36	19ນ.36 (1 ທຸ່ມ 36)
1290	0	0	54	24	ຫຼັງທ່ຽງຄືນ	2	24	2ນ.24 (8ທຸ່ມ 24)
1291	0	0	39	24	ເຊົ້າ	2	24	8ນ. 24 (2 ໂມງ24)
1292	0	0	24	24	ບ່າຍ	2	24	14ນ.24(2ໂມງ24ແລງ)
1293	0	0	9	24	ທົ່ວຄ່ຳ	2	24	20ນ.24(2ທຸ່ມ24)
1294	0	0	52	32	ຫຼັງທ່ຽງຄືນ	3	12	3ນ. 12(9 ທຸ່ມ 12)
1295	0	0	37	32	ເຊົ້າ	3	12	9ນ.12 (3ໂມງ12ເຊົ້າ)

ຮູບທີ 14



ສຳຫຼັບຈະຫາເວລາສັງຂານໄປ ໃຫ້ສັງເກດເບິ່ງລິບດາໃນສຳຜຸດທີ່ຄຳນວນໄວ້ນັ້ນ ວ່າກົງກັບລິບດາໃດໃນຕາລາງຂອງ ບູຮານນັ້ນແລ້ວ ໃຫ້ເອົາຈຳນວນ "ບາດ" ເຊິ່ງຢູ່ໃນຂີດດຽວກັບທີ່ກ່ຽວຂ້ອງນັ້ນຕັ້ງລົງ ເອົາ 6 ນາທີຄູນ ແລະເອົາ 60 ຫານ ໄດ້ລັບເປັນຊົ່ວໂມງ ເສດເປັນນາທີຕາໄວ້. ດັ່ງນັ້ນແລ້ວໃຫ້ພິຈາຣະນາເບິ່ງວ່າ ຈຳນວນ "ບາດ" ທີ່ກ່ຽວຂ້ອງນັ້ນຢູ່ໃນຕອນໃດ ແລ້ວກໍລົງເວລາສັງຂານໄປຕາມກຳໜົດໂມງແລະນາທີ ທີ່ຕາໄວ້ນັ້ນ ໂດຍນັບແຕ່ຕອນຕົ້ນໄປສະເໝີ ດັ່ງຈະທຳຕົວຢ່າງໄວ້ຕໍ່ໄປນີ້:

ວິທີຄູນສັງຂານ (ທຳອັດຕາຖະເຫຼີງສົກ) ສຳຫຼັບເຮັດປະຕິທິນຂຶ້ນ ເພື່ອໃຊ້ເບິ່ງວັນປັກຂ້າງຂຶ້ນ ຫຼື ຂ້າງແຮມ ແລະ ເດືອນນັ້ນ ຂໍຍຸຕິໄວ້ແຕ່ພຽງນີ້ກ່ອນ.

ຂ້າພະເຈົ້າຫວັງວ່າ ການທີ່ຄຳນວນເປັນຕົວຢ່າງໄວ້ນັ້ນ ອາດນຳຄວາມສະດວກໃຫ້ຜູ້ທີ່ສົນໃຈໃນການຄູນສັງຂານ ສ່ວນຂໍ້ຄວາມລະອຽດກ່ຽວກັບວັນຖະເຫຼີງສົກ ແລະ ປະຕິທິນນັ້ນ ຈະເອົາມາສະເໜີໃນພາກຕໍ່ໄປນີ້.

ອີກປະການນຶ່ງ ຕາມທຳນຽມເຮົາ ປະຕິທິນບໍ່ໄດ້ໃຊ້ສຳຫຼັບໝາຍແຕ່ວັນ ແລະ ເດືອນທໍ່ນັ້ນ ຍັງອາໄສວັນແລະເວລາສັງຂານປີໃໝ່ ເພື່ອທວາຍຫາຟ້າຝົນຈະມີມາກຫຼືໜ້ອຍ ເຂົ້າປາຈະຂາດເຂີນຫຼືອຸດົມສົມບູນພຽງໃດ ທັງສິ່ງຈຳເປັນອື່ນໆອີກຫຼາຍຢ່າງດ້ວຍ.

ຄຳທວາຍເຫຼົ່ານັ້ນ ຕ້ອງກະທຳຂຶ້ນໂດຍການຄຳນວນເລກຕາມທີ່ຕຳຣາບັນຍັດໄວ້ນັ້ນທຸກປະການ ແລະເມື່ອຄຳນວນເສັດແລ້ວ ກໍເອົາຄຳທວາຍຕາມຜົນຄຳນວນນັ້ນລົງໄວ້ຂ້າງເທິງປະຕິທິນ ກ່ອນຈະລົງຕາລາງລຳດັບວັນແລະເດືອນນັ້ນສະເໜີ.

ສຳຫຼັບຈະໃຫ້ເປັນທີ່ສະດວກແກ່ຜູ້ສົນໃຈໃນເລື່ອງນີ້ ຂ້າພະເຈົ້າໄດ້ນຳເອົາຕຳຣາທີ່ກ່ຽວກັບການທວາຍມາໂຮມໄວ້ໃນຕອນທີ 6 ທັງໄດ້ຕັ້ງຄຳນວນເລກເປັນຕົວຢ່າງໄວ້ທຸກໆບົດດ້ວຍ.

ຕາລາງບອກເວລາສັງຂານໄປເປັນ ໂມງ-ນາທີ

ຮູບທີ 15:



ຕອນທີສີ່

ຄວາມເຫັນກ່ຽວກັບມູນແຫ່ງເກນຕ່າງໆ ແລະແຫ່ງວິທີຄູນສັງຂານ

ທ່ານເຫັນມາແລ້ວວ່າ ສຳຫຼັບການທຳສັງຂານ (ທຳອັດຕາຖະເຫຼີງສົກ) ນັ້ນ ຕຳຣາໂຫຣາສາດໃຊ້ເກນໃດແດ່ ແລະ ດຳເນີນການຄຳນວນເລກຢ່າງໃດ ແຕ່ຕຳຣານັ້ນບໍ່ໄດ້ຊີ້ແຈງເລີຍວ່າກົດເກນຕົວໃດເປັນອັນໃດ ມາຈາກໃສ ແລະຍ້ອນເຫດຜົນປະການໃດ ຈຶ່ງບັນຍັດໃຫ້ເອົາເກນເຫຼົ່ານັ້ນ ສົມ, ລົບ/ລົບ,ຄູນ ຫຼື ຫານກັນ ເພາະດັ່ງນັ້ນ ຜູ້ທີ່ທຳອັດຕາຖະເຫຼີງສົກຈຶ່ງສາມາດຮູ້ໄດ້ພຽງແຕ່ຄຳນວນເລກໄປຕາມຂໍ້ບັນຍັດເທົ່ານັ້ນ ແຕ່ບໍ່ອາດຈະເຂົ້າໃຈເຖິງມູນຖານ ແຫ່ງບົດເລກຕ່າງໆ ເຊິ່ງຕົນຄຳນວນນັ້ນແຕ່ປະການໃດເລີຍ ດັ່ງຂ້າພະເຈົ້າໄດ້ປະສົບດ້ວຍຕົນເອງມາແລ້ວ.

ເນື່ອງຈາກຄວາມສົນໃຈໃນເລື່ອງນີ້ຂ້າພະເຈົ້າຈຶ່ງໄດ້ພາກພຽນຊອກຄົ້ນຫາມູນແຫ່ງເກນຕ່າງໆ ແລະແຫ່ງວິທີເລກທີ່ຕຳຣາໂຫຣາສາດບັນຍັດໄວ້ນັ້ນ ເມື່ອໄດ້ຊຸ້ມນະສູດເປັນເວລາເກືອບຈະເຖິງ 20 ປີແລ້ວ ຈຶ່ງບັນລຸເຖິງຕົ້ນປາຍສາເຫດແຫ່ງເກນເຫຼົ່ານັ້ນເປັນສ່ວນຫຼາຍ ທັງເຂົ້າໃຈໂດຍແຈ່ມແຈ້ງໃນວິທີຄຳນວນຂອງບູຮານຫຼາຍປະການອີກ ດ້ວຍຄວາມຮູ້ສ່ວນນີ້ຂ້າພະເຈົ້າຈະເອົາມາສະເໜີໃຫ້ທ່ານຊາບດັ່ງຕໍ່ໄປນີ້.

ກ່ອນທີ່ຈະສະເໜີຄວາມຮູ້ຂອງຂ້າພະເຈົ້ານັ້ນ ຂ້າພະເຈົ້າເຂົ້າໃຈວ່າ ຄວນນຳເອົາຄວາມເຫັນແລະຄວາມອະທິບາຍຂອງໂຫນຜູ້ທີ່ໄດ້ຮ່ຳຮຽນຕຳຣາໂຫຣາສາດມາກ່ອນຂ້າພະເຈົ້າ ມາສະເໜີໃຫ້ທ່ານຮູ້ໄວ້ກ່ອນ ໂດຍຄວາມເຄົາລົບ ຜູ້ທີ່ໄດ້ສົນໃຈໃນວິຊາຊັ່ນີ້ມາແຕ່ເທິງແລ້ວ ທັງມີຄວາມຮູ້ຫຼາຍກວ່າຂ້າພະເຈົ້າດ້ວຍ.

ຄວາມເຫັນ ແລະ ຄຳອາທິບາຍຂອງໂຫນເຊິ່ງຈະນຳມາສະເໜີນະບັດນີ້ ຂ້າພະເຈົ້າຫາກໍໄດ້ພົບພໍ້ທີ່ກຸງເທບ ເມື່ອ ພ.ສ 2490 ແລະ 2491 ນີ້ເອງ (ຄ.ສ 1947 - 48).

1. ຄວາມເຫັນຂອງໂຫນໄທ

(1) ຕຳຣາໂຫຣາສາດ ຂອງ ຣ. ຕ ທອງຄຳ ຍິ້ມຄຳພູ (ໜ້າ 3) ກ່າວວ່າ:

ຕາມຕຳຣາບູຮານ ມີຈຳນວນເລກຈຳນວນນຶ່ງ ຄື 292207 ອັນເປັນເກນສຳຄັນໃນການທຳອັດຕາ "ຖະເຫຼີງສົກ" ເມື່ອຊາບວ່າ ເລກຈຳນວນນີ້ເປັນອັນໃດ ມາຈາກໃສແລ້ວ ກໍພາໃຫ້ເຂົ້າໃຈໃນທາງຄຳນວນຕຳຣາສຸລິຍະຍາດ ໄດ້ດີຕາມມະຕິຂອງຂ້າພະເຈົ້າເຂົ້າໃຈວ່າ ໂຫນສະໄໝບູຮານ

ທີ່ຮຽບຮຽງຕຳຣານີ້ໄດ້ສັງເກດເຫັນວ່າ ພະອາທິດໂຄຈອນຮອບຈັກກະຣາສີຄັ້ງນຶ່ງ (ແຕ່ສະໄໝນີ້ເຂົ້າໃຈວ່າ ໂລກໂຄຈອນຮອບໜ່ວຍອາທິດ) ເປັນເວລາ 365 ວັນ 6 ນາລິກາ (6 ຊົ່ວໂມງ) 12 ນາທີ 36 ວິນາທີ ຖ້າພະອາທິດໂຄຈອນໄປໄດ້ 800 ຮອບ ຫຼື 292207 ວັນ ດາວພະເຄາະຍ່ອມໂຄຈອນໄປຢູ່ໃນບ່ອນດຽວ ຄືຄັ້ງນຶ່ງ (ຄິດຕາມທາງຄຳນວນ) ເພາະສະນັ້ນ ເພິ່ນຈຶ່ງຕັ້ງໃຫ້ພະອາທິດວັນນຶ່ງມີກຳລັງ 800 (ທີ່ເປັນຕົວຫານ) ເມື່ອໂຄຈອນໄປຮອບນຶ່ງແລ້ວຈະມີກຳລັງ 29207 ນັ້ນເອງແຕ່ປີນຶ່ງໃຊ້ກັນທໍ່ກັບ 292000 ຫຼື 365 ວັນທໍ່ນັ້ນ ສ່ວນເສດ 207 ນັ້ນ ກໍບໍ່ໄດ້ຖິ້ມເສຍ ໂຮມໄວ້ ເມື່ອຄົບ 800 ຄື 1 ວັນ ໃນປີໃດກໍຕື່ມປີນັ້ນເຂົ້າ 1 ວັນ ຮຽກວ່າ ອະທິກະສຸຣະທິນ ປີນັ້ນກໍມີເປັນ 366 ວັນ ພໍເປັນຫຼັກທາງພິສູດໄດ້ທໍ່ນີ້".

(2) ໂຫຣາສາດຂອງ ຫຼວງອັຖວາທິທັມມະປະຫວັດ (ວິຊຽນ ຈັນຫອມ) ກ່າວໄວ້ໃນໜ້າ1,2, ແລະ 3 ວ່າ: ຈຳນວນຫຼັກເກນຕ່າງໆຄື 292207 ກໍດີ 800 ກໍດີມາຈາກໃສ? ເພິ່ນເອົາອັນໃດມາເປັນເກນ? ເມື່ອເອົາ 800 ລ◡ງຫານ 292207 ເບິ່ງດັ່ງນີ້ຈະເຫັນໄດ້ວ່າເກນ 292207 ນັ້ນ ກໍຄືຈຳນວນວັນໃນ 800 ປີນັ້ນເອງ ແລະ ຖ້າເຮົາເອົາ 800 ຫານ 373 ເບິ່ງດັ່ງນີ້ກໍຜາກົດຜົນວ່າ 46625 ເປັນເກນສົມໃນປີນຶ່ງໆ ສະນັ້ນຖ້າເຮົາຈະທຳອັດຕາຖະເຫຼີງສົກ ຈະເຊົາໃຊ້ເກນ 292207 ເປັນຈຳນວນຕັ້ງເພື່ອເອົາຈຸລະສັກຣາດປີທີ່ຕ້ອງການຄູນ ແລະເອົາ 373 ສົມ ເອົາ 800 ຫານ ກັບເອົາ 1 ສົມເສຍກໍໄດ້ໂດຍໃຊ້ວິທີດັ່ງຕໍ່ໄປນີ້ ຄືໃຫ້ຕັ້ງເກນ 365,25875 (ວັນໃນປີນຶ່ງ)ລົງແລ້ວເອົາຈຸລະສັກຣາດ ປີທີ່ຕ້ອງການຄູນ ເອົາເກນ 1,466 25 ສົມ ເສດຖິ້ມເສຍ ເອົາແຕ່ຈຳນວນເຕັມ ຄົງສຳເລັດຮູບເປັນ "ທໍຣະຄຸນອັດຕາ" ໄດ້ດັ່ງດຽວກັນ ແຕ່ນັ້ນຈຶ່ງດຳເນີນຕາມຫຼັກເກນໃນຄຳພີສຸຣິຍະຍາດຕໍ່ໄປ.

ໂຫນທັງສອງນີ້ເຂົ້າໃຈມູນແຫ່ງເກນ ແລະ ແຫ່ງວິທີຄຳນວນຕ່າງກັນໄປຄົນລະຢ່າງ ແລະກໍຕ່າງຈາກຄວາມເຫັນຂອງຂ້າພະເຈົ້າອີກດ້ວຍ.

2. ຄວາມເຫັນຂອງຂ້າພະເຈົ້າ

ເພື່ອຈະໃຫ້ເຂົ້າໃຈໄດ້ງ່າຍໃນຄວາມເຫັນຂອງຂ້າພະເຈົ້ານັ້ນ ຈະໄດ້ທຳອັດຕາຖະເຫຼີງສົກ ປີ 1312 ອີກເທື່ອນຶ່ງ ສຳຫຼັບເປັນຫຼັກພິຈາລະນາຫາມູນເຫດແຫ່ງເກນ ແລະແຫ່ງວິທີເລກຂອງບູຮານຄື:

ກ. ທໍຣະຄຸນ

ຕຳຣາບັນຍັດວ່າ: ໃຫ້ຕັ້ງເກນ 292207 ລົງ ເອົາຈຸລະສັກຣາດປີທີ່ຕ້ອງການນັ້ນຄູນ ເອົາ 373 ສົມ ແລ້ວເອົາ 800 ຫານ ໄດ້ລັບທໍ່ໃດເອົາ 1 ສົມ ສຳເລັດເປັນ ທໍຣະຄຸນ

292207 × 1312 = 383375584

383375584 + 373 = 383375957

383375957 / 800 = 479219 ເສດ 757

479219 + 1 = 479220 ເປັນ ຫໍຣະຄຸນ

ຄວາມເຫັນ ຫໍຣະຄຸນ ໝາຍເຖິງສອງປະການຄື:

1. ໝາຍເຖິງຈຳນວນວັນ ເຊິ່ງລ່ວງມາແລ້ວ ແຕ່ວັນຕັ້ງຕົ້ນຈຸລະສັກຣາດ ຈົນເຖິງວັນສັງຂານຂຶ້ນ (ວັນຖະເຫຼີງສົກ) ແຫ່ງປີທີ່ເຮົາທຳອັດຕາຖະເຫຼີງສົກນັ້ນ ດັ່ງວິທີຄຳນວນຫາ "ວາຣະ" ເປັນຫຼັກຖານໄວ້ຄື ເພື່ອຈະຮູ້ໄດ້ວ່າວັນສັງຂານຂຶ້ນ ຈະກົງກັບວັນໃດຂອງສັບປະດາແລ້ວ ຕຳຣາບອກໃຫ້ເອົາເກນ 7 ວັນແຫ່ງສັບປະດາ 1 ໄປຫານກັບຫໍຣະຄຸນ ໄດ້ລັບເປັນຈຳນວນສັບປະດາທີ່ລ່ວງມາແລ້ວ ແລະເສດເປັນວັນໃນສັບປະດາກົງກັບ ວັນສັງຂານຂຶ້ນ.

2. ໝາຍເຖິງຈຳນວນວັນຂອງປີທີ່ເຮົາທຳອັດຕາຖະເຫຼີງສົກນັ້ນ ດັ່ງປີ ຈ.ສ ທີ 1 ຫໍຣະຄຸນມີຈຳນວນ 366 ວັນປີ ຈ.ສ ທີ 2 ຫໍຣະຄຸນ ມີຈຳນວນ 731 ວັນ ຄືຫຼາຍກວ່າປີທີ່ລ່ວງມາແລ້ວ 365 ວັນ ດັ່ງນີ້ເປັນຕົ້ນ.

ສ່ວນ ຫໍຣະຄຸນຈຳນວນ 479220 ວັນ ແຫ່ງຜົນຄຳນວນຂ້າງເທິງນີ້ ກໍໝາຍເຖິງຈຳນວນວັນເຊິ່ງລ່ວງມາແລ້ວ ແຕ່ວັນຕັ້ງຕົ້ນຈຸລະສັກຣາດ ຈົນເຖິງວັນສັງຂານຂຶ້ນແຫ່ງປີ ຈ.ສ 1312 ນັ້ນເອງ.

24/VII

ເກນ 292207 ໄດ້ອະທິບາຍມາແລ້ວວ່າ ເກນຕົວນີ້ເປັນຈຳນວນວັນເຊິ່ງມີຢູ່ໃນຮອບ 800 ປີ ທີ່ບູຮານເອົາເປັນຫຼັກໂດຍແບ່ງໃຫ້:

ປີປົກຕິສຸຣະທິນ (365 ວັນ) 593 ປີ: 593 × 365 = 216445 ວັນ

ຫ້າມຈຳໜ່າຍ

ປີອະທິກະສຸຣະທິນ (366 ວັນ) 207 ປີ: 207 × 366 = 75762 ວັນ

ໂຮມ 800 ປີ 292207 ວັນ

ເພາະສະນັ້ນຖ້າເອົາ 800 ປີ ຫານເກນ 292207 ລັບ ແລະ ເສດກໍເປັນລະຍະເວລາແຫ່ງປີນຶ່ງຄື 292207 / 800 = 365 ວັນເສດ 207 / 800 = ຫຼື 0 ວັນ 25875 ຫຼື 22356 ວິນາທີ ຄື 6 ຊົ່ວ ໂມງ 12 ນາທີ 36 ວິນາທີ.

ປະຕິທິນຖືເອົາແຕ່ຈຳນວນ 365 ວັນເຕັມເປັນກຳໜົດປີນຶ່ງ ສ່ວນເສດວັນນັ້ນຍົກໄວ້ທຸກໆປີ ແລະເມື່ອຄົບກຳໜົດວັນເຕັມໃນປີໃດກໍຕື່ມປີນັ້ນອີກ 1 ວັນເປັນ 366 ວັນເຊິ່ງຮຽກວ່າ ປີອະທິກະສຸຣະທິນ.

ຕາມຈຳນວນເສດວັນ 207 / 800 ທຸກໆ ປີນັ້ນເຖິງກຳໜົດ 4 ປີຈຶ່ງຄົບເວລາ 1 ວັນເຕັມ

ຄື: (207 + 207 + 207 + 207) / 800 = 828 / 800 ຫຼື 1 ວັນປາຍ 28 / 800 ຫຼື 50 ນາທີ ກັບ 24 ວິນາທີ

ສ່ວນຂໍ້ບັນຍັດໃຫ້ຕັ້ງເກນ 292207 ລົງແລ້ວເອົາຈຸລະສັກຣາດຄູນນັ້ນ ມີຄວາມໝາຍຈະທະວີຈຳນວນວັນ ເຊິ່ງລ່ວງມາແລ້ວ ແຕ່ວັນຕັ້ງຕົ້ນຈຸລະສັກຣາດນັ້ນໃຫ້ສູງຂຶ້ນ 800 ຕໍ່ ເພື່ອໃຫ້ເປັນຂະໜາດດຽວກັນກັບເກນ 373 ເຊິ່ງສົມເຂົ້ານັ້ນ ເພາະຖ້າຫາກບໍ່ເປັນຂະໜາດດຽວກັນ ກໍສົມກັນບໍ່ໄດ້.

ເກນ 373 ເກນຕົວນີ້ເປັນເສດວັນ ຄື 373 / 800 ຫຼື 0 ວັນ 46625 ຫຼື 40274 ວິນາທີ (11 ຊົ່ວໂມງ 11 ນາທີ 24 ວິນາທີ).

ເມື່ອຄູນຈຳນວນວັນດັ່ງກ່າວຂຶ້ນ 800 ຕໍ່ແລ້ວ ເກນ 373 / 800 ກໍກາຍເປັນຈຳນວນຕົວເລກເຕັມ 373 ຂະໜາດດຽວກັບ 383375584 ແຫ່ງ 292207 × 1312 ນັ້ນ ແລະເມື່ອສົມເຂົ້າກັບແລ້ວຈຶ່ງເປັນ 383375957

ການທີ່ຕຳຣາໃຫ້ເອົາເກນ 800 ປີ ຫານລັບອ້າງເທິງນີ້ກໍເພື່ອໃຫ້ຈຳນວນວັນເຊິ່ງຄູນຂຶ້ນ 800 ຕໍ່ ແລະ ສົມເກນ 373 ເຂົ້າແລ້ວນັ້ນ ກັບມາເປັນຈຳນວນວັນເຕັມອີກ ເພາະສະນັ້ນ ລັບ 479219 ຈຶ່ງເປັນຈຳນວນວັນເຕັມ ແຕ່ເສດ 757 ນັ້ນເປັນສ່ວນຂອງວັນ ຄື 757 / 800 = 0,97625 ຫຼື 22 ຊົ່ວໂມງ 42 ນາທີ 36 ວິນາທີ.

ເກນ 373 ຕົວນີ້ ຂ້າພະເຈົ້າເຂົ້າໃຈວ່າ ຈະເປັນລະຍະເວລາ ເຊິ່ງພະອາທິດລ່ວງເກີນຂີດທີ່ຂັ້ນລາສີມີນ ແລະລາສີເມດ (ຈຸດຕັ້ງຕົ້ນຮອບແຫ່ງການເດີນຂອງພະອາທິດ) ໄປໃນຄາວຕັ້ງຈຸລະສັກຣາດນັ້ນເອງ ການທີ່ເອົາເກນ 373 ສົມເຂົ້ານັ້ນ ກໍເພື່ອໃຫ້ແກ້ໄຂຄວາມໄວຂອງພະອາທິດໃຫ້ພະອາທິດຕັ້ງແຮກຕົ້ນຮອບບ່ອນຂີດເຊິ່ງຂັ້ນຣາສີມີນ ແລະ ຣາສີເມດ ນັ້ນໂດຍກົງ ເກນຢ່າງດຽວກັນກັບເກນ 373 ນັ້ນໃນຕຳຣາທຳອັດຕາຖະເຫຼີງສົກ ໂດຍໃຊ້ພຸດທະສັກຣາດແລະມະຫາສັກຣາດກໍມີຄືກັນ ແຕ່ຫາກເປັນຈຳນວນຕ່າງກັນຕາມກຳນົດເວລາ ເຊິ່ງພະອາທິດລ່ວງເກີນຂີດດັ່ງກ່າວໃນຄາວຕັ້ງຕົ້ນແຕ່ລະສັກຣາດນັ້ນ.

ຖ້າເຮົາສັງເກດໃຫ້ລະອຽດໄປອີກ ກໍຈະເຫັນໄດ້ວ່າ ເຖິງແມ່ນວ່າຈະແກ້ໄຂໂດຍສົມເກນ 373 ເຂົ້າດັ່ງນັ້ນແລ້ວກໍດີ ແຕ່ຍັງບໍ່ພຽງພໍຈະໃຫ້ລັບແຫ່ງບົດຫານດ້ວຍ 800 ນັ້ນ ມີຈຳນວນວັນເຕັມຕາມກຳໜົດວັນຂອງທຣະຄຸນເລີຍຄື 292207 / 800 = 365 ວັນ ເສດ 207 / 800 ຫຼື 6 ຊົ່ວໂມງ 12 ນາທີ 36 ວິນາທີ ຄັນເອົາເກນ 373 / 800 ຫຼື 11 ຊົ່ວໂມງ 11 ນາທີ 24 ວິນາທີ ສົມເຂົ້າອີກ ລັບກໍເປັນແຕ່ (207 + 373) / 800 = 580 / 800 ຫຼື 17 ຊົ່ວໂມງ 24 ນາທີຄືຍັງຂາດອີກ 6 ຊົ່ວໂມງ 36 ນາທີ ຈຶ່ງຈະເຖິງກຳໜົດ 366 ວັນ ແຫ່ງຈຳນວນວັນຂອງປີ 1312 ເຊິ່ງເປັນປີອະທິກະສຸຣະທິນ ດັ່ງກຳ

ມັດຊະພົນ 43 ເຊິ່ງໜ້ອຍກວ່າ 207 ໝາຍໄວ້ນັ້ນ ອີກປະການນຶ່ງ ຖ້າເຮົາເອົາຈຳນວນ 7 ວັນແຫ່ງສັປະດາໄປຫານລົບ 479219 ວັນ ແຫ່ງບົດ 383375957 / 800 ກໍຈະໄດ້ລົບເປັນ 67459 ສັບປະດາ ແລະ ເສດ 6 ຄືຈະໄດ້ວາຣະຖະເຫຼີງສົກເປັນວັນສຸກເຊິ່ງ ຜິດກັບອັດຕາຖະເຫຼີງສົກແຫ່ງປີ 1313 ເຊິ່ງວາຣະຖະເຫຼີງສົກເປັນ 7 (ວັນເສົາ) ນັ້ນໄປ 1 ວັນ.

ເກນ 1 ເພາະສະນັ້ນຕຳຣາຈຶ່ງບັນຍັດໃຫ້ເອົາເກນ 1 ວັນ ສົມກັບຜົນລົບແຫ່ງບົດທີ່ຫານດ້ວຍ 800 ນັ້ນ ສຳເລັດເປັນຫໍຣະຄຸນ ຄື: 479219 + 1 = 479220 ເປັນຫຣະຄຸນ.

ເມື່ອຕື່ມເກນ 1 ເຂົ້າດັ່ງນັ້ນແລ້ວ ຫຣະຄຸນກໍຕ້ອງເກີນກຳໜົດວັນເຕັມໄປ 580 / 800 ຫຼື 17 ຊົ່ວໂມງ 24 ນາທີຕາມທີ່ເປັນມາແລ້ວນັ້ນ ເສດວັນທີ່ເກີນໄປນັ້ນຕຳຣາໃຫ້ຄິດເປັນສ່ວນປີທີ່ລ່ວງໄປແລ້ວສະເໝີ ຄືໃນທີ່ນີ້ ກໍເປັນສ່ວນປີ 1311 ຕາມທີ່ໄດ້ເປັນມາແລ້ວໃນການຄຳນວນຫາເວລາຖະເຫຼີງສົກນັ້ນ ໂດຍມີຂໍ້ບັນຍັດທີ່ກ່າວວ່າ ເມື່ອຄຳນວນແລ້ວໃຫ້ພິຈາລະນາເບິ່ງສຳຜຸດພະອາທິດຈຳເພາະວັນ ເຊິ່ງພະອາທິດມີຣາສີ 0 ແລະ ອົງສາ 1 ແລະ ໃຫ້ນັບ 1 ແຕ່ 1 ນາລິກາແຫ່ງວັນໃໝ່ໄປຈົນເຖິງຊົ່ວໂມງນາທີ ແລະ ວິນາທີ ທີ່ຕາໄວ້ນັ້ນເຊິ່ງມັກຈະ ຕົກຢູ່ໃນວັນທີ່ມີຣາສີ 0 ແລະ ອົງສາ 2.

ສ່ວນປີ 1313 ທີ່ຄຳນວນເປັນຕົວຢ່າງແຫ່ງການພິຈາລະນານັ້ນ ເສດດັ່ງກ່າວມີ 757 ຫຼື 22 ຊົ່ວໂມງ 42 ນາທີ 36 ວິນາທີ ເພາະສະນັ້ນເວລາສັງຂານຂຶ້ນຈຶ່ງໄປກົງກັບ 22 ນາລິກາ 42 ນາທີ 36 ວິນາທີ ແຫ່ງວັນຖະເຫຼີງສົກ ບໍ່ໄດ້ກົງກັບ 0 ນາລິກາ ເຊິ່ງເປັນເວລາຕັ້ງຕົ້ນຂອງວັນນັ້ນເລີຍ.

ໝາຍເຫດ ຫໍຣະຄຸນຕື່ມຈຳນວນຂຶ້ນປີລະ 365 ວັນ ໃນປີປົກຕິສຸຣະທິນ ແລະ 366 ວັນໃນປີອະທິກະສຸຣະທິນ ດ້ວຍເຫດນີ້ເມື່ອເຮົາຄຳນວນຫໍຣະຄຸນປີໃດແລ້ວ ຄວນສັງເກດເບິ່ງວ່າຫໍຣະຄຸນນັ້ນຈະຫຼາຍກວ່າຫໍຣະຄຸນແຫ່ງປີທີ່ລ່ວງໄປແລ້ວນັ້ນ 365 ວັນ ຫຼື 366 ວັນບໍ່? ຖ້າຫາກບໍ່ຫຼາຍກວ່າຈຳນວນດັ່ງກ່າວນີ້ ແລ້ວກໍແນ່ໃຈໄດ້ວ່າບໍ່ມີການຜິດພາດເລີຍ.

ຂ. ກຳມັດຊະພົນ

ຕຳຣາບັນຍັດວ່າໃຫ້ຕັ້ງເກນ 800 ລົງ ເອົາເສດແຫ່ງບົດທີ່ຫານດ້ວຍ 800 ນັ້ນລົບ ຍັງເຫຼືອທໍ່ໃດເປັນ ກຳມັດຊະພົນ.

ສຳຫຼັບປີ 1312 ເສດດັ່ງກ່າວນີ້ເປັນ 757 ສະນັ້ນ 800 - 757 = 43 ເປັນ ກຳມັດຊະພົນ.

ຄວາມເຫັນ ກຳມັດຊະພົນ ໝາຍເຖິງເສດວັນ ເຊິ່ງເກີນກຳໜົດວັນເຕັມແຫ່ງຈຳນວນຫໍຣະຄຸນໄປ.

<u>ເກນ 800</u> ໄດ້ອະທິບາຍມາແລ້ວວ່າ ເກນຕົວນີ້ແມ່ນຈຳນວນ 800 ປີເຊິ່ງມີ 292207 ວັນຄືປີ

1 ມີກໍາ ໜົດ 365 ວັນ 6 ຊົ່ວໂມງ 12 ນາທີ 36 ວິນາທີ ສະນັ້ນຈະຮຽກເກນ 800 ວ່າເປັນກໍາໜົດ 1 ວັນເຕັມກໍໄດ້.

ໝາຍເຫດ ກໍາມັດຊະພົນ ຫຼຸດຈໍານວນລົງປີລະ 207 ຕົວ ເປັນປົກກະຕິສະເໝີ ດັ່ງຈະສັງເກດໄດ້ຕາມຈໍານວນກໍາມັດຊະພົນແຫ່ງປີ 1311, 1312, ແລະ 1313 ທີ່ຄໍານວນມາແລ້ວນັ້ນຄື:

ຈ.ສ 1311	ກໍາມັດຊະພົນ ເປັນ -	250
ຈ.ສ 1312	ກໍາມັດຊະພົນ ເປັນ -	43 (250 - 207 = 43)
ຈ.ສ 1313	ກໍາມັດຊະພົນ ເປັນ -	636 (800 + 43 = 843. 843 - 207 = 636)

ເນື່ອງຈາກກໍາມັດຊະພົນ ຫຼຸດຈໍານວນລົງປີລະ 207 ຕົວດັ່ງນັ້ນເມື່ອເຮົາທໍາອັດຕາຖະເຫຼີງສົກເທື່ອໃດ ກໍຄວນສັງເກດເບິ່ງວ່າ ຜົນແຫ່ງການຄໍານວນນັ້ນຈະຕໍ່າກວ່າຈໍານວນ ກໍາມັດຊະພົນແຫ່ງປີທີ່ລ່ວງມາແລ້ວນັ້ນ 207 ຕົວ ຫຼື ບໍ່ ? ຖ້າຫາກຕໍ່າກວ່າ 207 ຕົວແລ້ວ ກໍແນ່ໃຈວ່າການຄໍານວນນັ້ນຖືກຕ້ອງແລ້ວ ອີກປະການນຶ່ງກໍາມັດຊະພົນແຫ່ງປີຖະເຫຼີງສົກໃດໆກໍດີ ໃຊ້ຄໍານວນມັດທະຍົມ ແລະ ສົມຜຸດພະອາທິດໄດ້ສໍາຫຼັບທຸກໆວັນເຊິ່ງມີຢູ່ໃນປີນັ້ນໆ.

ກໍາມັດຊະພົນເປັນຫຼັກສໍາຄັນ 3 ປະການຄື:

(1) ເປັນເກນບວກກັບສຸຣະທິນ ສໍາຫຼັບຄໍານວນມັດທະຍົມ ແລະ ສໍາຜຸດພະອາທິດ.

(2) ເປັນຫຼັກກໍາໜົດປີອະທິກະສຸຣະທິນ(366 ວັນ) ຄືປີໃດກໍາມັດຊະພົນຖະເຫຼີງສົກ ບໍ່ເກີນ 207 ຕົວ ແລ້ວກໍໝາຍວ່າ ປີນັ້ນຢູ່ໃນຈໍາພວກປີອະທິກະສຸຣະທິນ 207 ປີແຫ່ງຮອບ 800 ເຊິ່ງບູຮານເອົາເປັນຫຼັກຕາມທີ່ໄດ້ກ່າວມາແລ້ວນັ້ນ.

(3) ເປັນຫຼັກກໍາໜົດສັງຂານເນົາ 2 ວັນ ຄືຖ້າປີໃດກໍາມັດຊະພົນຖະເຫຼີງສົກມີຈໍານວນແຕ່ 668 ຂຶ້ນໄປເຖິງ 799 ແລ້ວ ສັງຂານປີນັ້ນກໍຕ້ອງເນົາ 2 ວັນສະເໝີ ຫຼັກນີ້ຕາມທີ່ໄດ້ກ່າວມາແລ້ວ ຂ້າພະເຈົ້າໄດ້ຄຶດຄົ້ນເຫັນເອງເມື່ອຄາວທໍາອັດຕາຖະເຫຼີງສົກແຕ່ປີ ຈ.ສ 1250 ເຖິງ 1650 ນັ້ນ ແລະທັງໄດ້ທໍາສໍາຜຸດພະອາທິດ ກວດຄົ້ນຫາຂອບເຂດກໍາມັດຊະພົນເຊິ່ງທໍາໃຫ້ສັງຂານມີວັນເນົາເຖິງ 2 ວັນນັ້ນດ້ວຍ.

ຄ. ວິທີຄໍານວນຫໍຣະຄຸນ ແລະ ກໍາມັດຊະພົນ ອີກແບບນຶ່ງ

ລາງຕໍາຣາໃຊ້ຄໍານວນຫໍຣະຄຸນ ແລະ ກໍາມັດຊະພົນ ໂດຍຕັ້ງຈຸລະສັກຣາດປີທີ່ກ່ຽວຂ້ອງນັ້ນລົງ ເອົາ 365,25,875 ຄູນ ເອົາ 1,46,625 ສົມ ຈໍານວນເລກຕົວເຕັມແຫ່ງຜົນຄໍານວນເປັນຫໍຣະຄຸນຄື:

1312 × 365,25,875 = 479,219,48,000

+ 1,46,625

479,220,94,625

ຈຳນວນຕົວເລກເຕັມ 479220 ເປັນຫໍຣະຄຸນ.

ສ່ວນກຳມັດຊະພົນນັ້ນ ຕຳຣາບັນຍັດວ່າ ໃຫ້ຕັ້ງຈຳນວນເສດວັນຂ້າງເທິງນັ້ນລົງ ເອົາ 800 ຄູນ ແລ້ວເອົາຈຳນວນເລກເຕັມແຫ່ງຜົນຄຳນວນນັ້ນໄປລົບ 800 ເສດທີ່ໃດເປັນ ກຳມັດຊະພົນ ຄື:

0,94626 × 800 = 757,00000

800 - 757 = 43 ເປັນ ກຳມັດຊະພົນ.

ຄວາມເຫັນ ວິທີຄຳນວນຫໍຣະຄຸນ ແລະ ກຳມັດຊະພົນແບບນີ້ກໍໃຊ້ເກນດຽວກັນກັບວິທີຄຳນວນແບບກ່ອນນັ້ນທຸກໆເກນ ແຕ່ຫາກດຳເນີນການຄຳນວນຕ່າງກັນທີ່ນັ້ນ ດັ່ງຈະສະເໜີຕໍ່ໄປນີ້:

(1) ວິທີຄຳນວນແບບກ່ອນນັ້ນ ເອົາເກນຕ່າງໆຄູນແລະສົມກັນ ເສັດແລ້ວຈຶ່ງເອົາເກນ 800 ຫານທີລຸນ ຕໍ່ໄປຈຶ່ງເອົາເກນ 1 ສົມເປັນຫໍຣະຄຸນ ສ່ວນກຳມັດຊະພົນນັ້ນ ເອົາຈຳນວນເສດວັນໄປລົບ 800 ໂລດເຫຼືອທີ່ໃດເປັນກຳມັດຊະພົນ.

(2) ແຕ່ວິທີຄຳນວນແບບລຸນນີ້ເອົາເກນ 800 ຫານເກນ 292207 ແລະ ເກນ 373 ເສຍກ່ອນ ເສັດແລ້ວຈຶ່ງເອົາຜົນລັບ ແລະ ເສດແຫ່ງບິດຫານເຫຼົ່ານັ້ນຄູນ ແລະ ສົມກັນທີລຸນຄື:

ເກນ 365,25875 ນັ້ນກໍເປັນຜົນລັບແຫ່ງບິດເລກ 292207 ⁄ 800 ນັ້ນເອງ.

ເກນ 1,46,625 ນັ້ນເມື່ອແຍກຈຳນວນ 1 ທີ່ເປັນວັນເຕັມອອກແລ້ວເສດ 46,625 ກໍແມ່ນຜົນລັບແຫ່ງບິດເລກ 373 ⁄ 800 ນັ້ນເອງ ບໍ່ໄດ້ແມ່ນເກນຕົວໃໝ່ແຕ່ຢ່າງໃດເລີຍ ເພາະສະນັ້ນ ເມື່ອເຮົາສົມ 0,46,625 ກົງກັບຜົນແຫ່ງການຄຳນວນຂອງວິທີກ່ອນນັ້ນ ແລະ ເມື່ອເອົາເກນ 1 ວັນ ເຊິ່ງແຍກອອກໄວ້ນັ້ນ ສົມເຂົ້າອີກ ຈຶ່ງໄດ້ຜົນເປັນຈຳນວນ 479220 ທີ່ກັບຫໍຣະຄຸນທີ່ຄຳນວນໄດ້ຕາມແບບກ່ອນນັ້ນໂດຍກົງ.

ສ່ວນການຄຳນວນໂດຍເອົາເສດວັນ 0,94625 ຄູນ 800 ນັ້ນກໍເພາະເສດນັ້ນ ເປັນລັບແຫ່ງ 757⁄800 ນັ້ນເອງ ເພາະສະນັ້ນເມື່ອເອົາ 800 ຄູນແລ້ວຈຶ່ງເປັນ 757 ກົງກັບຜົນແຫ່ງການຄຳນວນຕາມວິທີກ່ອນນັ້ນ ແລ້ວຈຶ່ງເອົາໄປລົບເກນ 800 ໄດ້ເສດ 43 ເປັນກຳມັດຊະພົນ ທີ່ກັບກັບຈຳນວນກຳມັດຊະພົນຂອງແບບກ່ອນນັ້ນ

໗. ອະວະມານ

ຕຳຣາບັນຍັດວ່າ: ໃຫ້ຕັ້ງຫໍຣະຄຸນລົງເອົາເກນ 11 ຄູນ ເອົາເກນ 650 ສົມ ແລ້ວເອົາ 692 ຫານລັບຕາໄວ້ ເສດເປັນອະວະມານ.

ຫໍຣະຄຸນ 479220 × 11 = 5271420

5271420 + 650 = 5272070

5272070 / 692 = 7618 ເສດ 414 ເປັນ ອະວະມານ

ຄວາມເຫັນ ອະວະມານ ໝາຍເຖິງຈຳນວນລິບດາແຫ່ງການເດີນຂອງພະຈັນໃນວັນທີ່ເຮົາຄຳນວນນັ້ນ ອະວະມານຖະເຫຼີງສົກກໍໝາຍເຖິງກຳໜົດລິບດາຂອງພະຈັນ ໃນວັນຖະເຫຼີງສົກນັ້ນເອງ.

ອະວະມານ ເປັນເກນສຳຫຼັບໃຊ້ຄຳນວນມັດທະຍົມ ແລະ ສຳຜຸດພະຈັນ.

ເກນ 11 ຕາມທີ່ໄດ້ຄຳນວນມັດທະຍົມ ແລະ ສຳຜຸດພະອາທິດ ແລະ ພະຈັນມາແລ້ວນັ້ນ ໄດ້ສັງເກດເຫັນວ່າ ດາວພະເຄາະທັງສອງ ເມື່ອເດີນຈາກຈຸດດຽວໄປພ້ອມກັນ ດັ່ງນັ້ນ ໃນເວລາ 1 ວັນ ພະຈັນກໍເດີນໄວເລີຍ ພະອາທິດໄປໄດ້ 11 / 692 ຫຼື ຈະເວົ້າວ່າໃນເວລາ 692 ວັນ ພະຈັນເດີນໄວເກີນພະອາທິດໄປເປັນເວລາ 11 ພໍດີກໍໄດ້ ສະນັ້ນເກນ 11 ທີ່ເປັນຕົວຄູນນັ້ນເປັນຈຳນວນວັນເຊິ່ງພະຈັນລ່ວງ ເກີນພະອາທິດໄປໃນກຳໜົດເວລາ 692 ວັນແຫ່ງການເດີນຂອງພະເຄາະທັງສອງໜ່ວຍນັ້ນ ແລະ ການທີ່ເອົາ 11 ຄູນຫໍຣະຄຸນນັ້ນກໍເພື່ອຄວາມໝາຍຈະທະວີຫໍຣະຄຸນຂຶ້ນ 11 ຕໍ່ ໃຫ້ເປັນຂະໜາດດຽວກັນກັບເກນ 650 ເຊິ່ງຈະເອົາສົມເຂົ້ານັ້ນ.

ເກນ 650 ເພາະເກນຕົວນີ້ມີຂະໜາດ 650 / 11 ແຫ່ງວັນເຕັມ ຫຼື 59 ວັນ 2 ຊົ່ວໂມງ 10 ນາທີ 54 ວິ ນາທີ ສ່ວນໂຮມຂອງເກນ 650 ນັ້ນ ຂ້າພະເຈົ້າເຂົ້າໃຈ ວ່າເປັນລະຍະເວລາເຊິ່ງພະຈັນລ່ວງເລີຍຂີດທີ່ຂັ້ນຣາສີມີນ ແລະ ຣາສີເມດໄປໃນຄາວຕັ້ງຕົ້ນຈຸລະສັກຣາດຄື ກັນກັບເກນ 373 ອັນໝາຍລະຍະເວລາ ເຊິ່ງພະອາທິດລ່ວງເລີຍຂີດດັ່ງກ່າວນັ້ນ. ຈະເວົ້າວ່າເກນ 650 ນັ້ນ ເປັນລະຍະເວລາທີ່ພະອາທິດບໍ່ທັນພະຈັນໃນຄາວຕັ້ງຕົ້ນຈຸລະສັກຣາດກໍໄດ້ຄືກັນ. ເພື່ອຈະແກ້ໄຂໃຫ້ພະເຄາະທັງສອງເດີນຈາກຂີດທີ່ຂັ້ນຣາສີມີນ ແລະ ຣາສີເມດ ໃນເວລາດຽວກັນ ຈຶ່ງເອົາເກນ 650 ສົມເຂົ້າກັບລັບແຫ່ງບິດເລກ 11 ຄູນຫໍຣະຄຸນກ່ອນ ຈະເອົາເກນ 692 ຫານ.

ເກນ 692 ໄດ້ກ່າວມາຂ້າງເທິງນີ້ແລ້ວວ່າ ເກນຕົວນີ້ເປັນຈຳນວນວັນເຕັມ ເຊິ່ງພະຈັນເດີນໄປໄວກວ່າ ພະອາທິດໄດ້ 11 ວັນພໍດີ ດັ່ງນັ້ນຈະຮຽກເກນ 692 ນັ້ນວ່າເປັນກຳໜົດແຫ່ງຮອບນຶ່ງຂອງອະວະມານກໍໄດ້.

ພະຈັນເດີນໄວກວ່າພະອາທິດໄປ 11 ວັນໃນລະຍະເວລາ 692 ວັນ ດັ່ງນັ້ນຖ້າຈະໃຫ້ໄວກວ່າ

ພະອາທິດໄປພຽງແຕ່ 1 ວັນ ກໍຕ້ອງກິນເວລາໜ້ອຍກວ່າ 692 ວັນນັ້ນໄປ 11 ຕໍ່ ຫຼື 692 / 11 ສ່ວນ ໂດຍເຫດນີ້ ເມື່ອເອົາເກນ 692 ຫານ ລັບ (527 + 2070) ຈຶ່ງໄດ້ 7618 ເຊິ່ງເປັນຈຳນວນຮອບລະ 692 ວັນ ແຫ່ງອະວະມານ ຄື 7624 ຮອບເຊິ່ງພະຈັນເດີນໄວເກີນພະອາທິດໄປຮອບລະ 11 ວັນສ່ວນ ເສດ 414 ເຊິ່ງເປັນອະວະມານນັ້ນເປັນສ່ວນນຶ່ງຂອງຮອບ 692 ວັນນັ້ນ.

ຂໍ້ສັງເກດ ອະວະມານຖະເຫຼິງສົກແຫ່ງປີໃດ ກໍດີມີຈຳນວນຫຼາຍກວ່າ ອະວະມານຂອງປີທີ່ຈະມາເຖິງນັ້ນ ຕາມກຳໜົດຕໍ່ໄປນີ້:

ກ/. ຖ້າເປັນປີປົກກະຕິສຸຣະທິນ ອະວະມານ ເປັນຈຳນວນຫຼາຍກວ່າ ອະວະມານ ແຫ່ງປີທີ່ຈະມາເຖິງນັ້ນ 137 ຕົວ.

ຂ/. ຖ້າເປັນປີອະທິກະສຸຣະທິນ ອະວະມານເປັນຈຳນວນຫຼາຍກວ່າ ອະວະມານແຫ່ງປີທີ່ຈະມາເຖິງນັ້ນ 126 ຕົວ ດັ່ງຕົວຢ່າງ:

ປີ	1311	1312	1312	1313
ອະວະມານ	551 (-1357) =	414	414 (- 288) =	126

ດັ່ງນີ້ເປັນຕົ້ນ.

ການທີ່ອະວະມານຫຼຸດຈຳນວນລົງປີລະ 137 ຫຼື 126 ເປັນປົກກະຕິດັ່ງນີ້ເປັນຫຼັກສຳຄັນຢ່າງນຶ່ງ ຄືເປັນຫຼັກສຳຫຼັບສັງເກດເບິ່ງປີຈະເປັນ ອະທິກະວານ (ເດືອນ 7 ເຕັມ 30 ວັນ) ຄື:

ປີປົກກະຕິສຸຣະທິນໃດ ເຊິ່ງມີອະວະມານຖະເຫຼິງສົກເປັນແຕ່ 1 ຂຶ້ນໄປເຖິງ 137 ແລະປີອະທິກະສຸຣະທິນໃດ ເຊິ່ງມີອະວະມານຖະເຫຼິງສົກເປັນຈຳນວນແຕ່ 1 ຂຶ້ນໄປເຖິງ 126 ແລ້ວ ປີນັ້ນຕ້ອງເປັນອະທິກະວານໂດຍແນ່ນອນ.

ຫຼັກນີ້ ຂ້າພະເຈົ້າໄດ້ສັງເກດເອງ ແຕ່ໂຫນໄທ ບໍ່ຖືເອົາຈຳນວນອະວະມານດັ່ງກ່າວນີ້ເປັນຫຼັກສຳຫຼັບວາງ ປີອະທິກະວານເລີຍ ໄປຖືເອົາຣຶກແຫ່ງວັນເຂົ້າພັນສາເປັນຫຼັກແຫ່ງການວາງປີອະທິກະວານ ດັ່ງຈະໄດ້ສະເໜີໃນຕອນທີ່ກ່ຽວກັບ "ປີອະທິກະວານ" ນັ້ນ.

ອີກປະການນຶ່ງ ຂ້າພະເຈົ້າໄດ້ສັງເກດເຫັນວ່າ ເມື່ອປີໃດມີອະວະມານຖະເຫຼິງສົກເປັນແຕ່ 1 ຂຶ້ນໄປເຖິງ 137 ແລ້ວ ອະວະມານຖະເຫຼິງສົກແຫ່ງປີຈະມາເຖິງກໍມີຈຳນວນຫຼາຍຂຶ້ນຕາມກຳໜົດດັ່ງນີ້ຄື:

ຖ້າເປັນປີປົກກະຕິສຸຣະທິນ ປີຈະມາເຖິງກໍມີຈຳນວນອະວະມານສູງກວ່າ 555 ຕົວສະເໝີ.

ຖ້າເປັນປີອະທິກະສຸຣະທິນ ປີຈະມາເຖິງກໍມີຈຳນວນອະວະມານສູງກວ່າ 566 ຕົວ. ດັ່ງ:

ປີ	1300	1299	1305	1304
ອະວະມານ	641 (- 86) =	555	670 (- 104) =	566

ດັ່ງນີ້ເປັນຕົວຢ່າງ.

ຄວນສັງເກດເບິ່ງອີກວ່າ ເມື່ອຈຳນວນອະວະມານແຫ່ງປີປົກກະຕິສຸຣະທິນ ແລະ ແຫ່ງປີອະທິກະສຸຣະທິນ ຄາດເຄື່ອນກັນໄປ 11 ຕົວເປັນປົກກະຕິສະເໝີດັ່ງນີ້ ສະແດງໃຫ້ເຫັນໄດ້ວ່າ ເມື່ອຈຳນວນວັນແຫ່ງປີຜິດກັນໄປ 1 ວັນ ກໍທຳໃຫ້ຈຳນວນອະວະມານ ຜິດຈາກກັນໄປ 11 ຕົວ ດັ່ງຈຳນວນອະວະມານ 137 ແລະ 126 ຫຼື ອະວະມານຈຳນວນ 555 ແລະ 566 ສັນນັ້ນ.

ຈ. ມາສະເກນ

ເມື່ອເຮົາຄຳນວນອະວະມານໂດຍຫານດ້ວຍເກນ 692 ໄດ້ລັບຕາໄວ້ ແລະ ເສດເປັນອະວະມານແລ້ວ ຕຳຣາບັນຍັດວ່າ: ສ່ວນລັບທີ່ຕາໄວ້ນັ້ນໃຫ້ເອົາສົມທໍຣະຄຸນແລ້ວເອົາ 30 ຫານໄດ້ລັບເປັນມາສະເກນ ແລະ ເສດເປັນ ດິຖີ ຄື: 7618 + 479,220 = 486838

486838 / 30 = 16227 ເສດ 28

ລັບ 16227 ເປັນມາສະເກນເສດ 28 ເປັນດິຖີ.

ຄວາມເຫັນ ມາສະເກນໝາຍເຖິງຈຳນວນເດືອນຈັນທຣະຄະຕິ ເຊິ່ງລ່ວງມາແລ້ວແຕ່ວັນຕັ້ງຕົ້ນຈຸລະສັກຣາດຈົນເຖິງເດືອນທີ່ທຳອັດຕາຖະເຫຼິງສົກນັ້ນ ດັ່ງປີ ຈ.ສ 1 ມາສະເກນເປັນ 12 ເດືອນ ແລະ ປີ ຈ.ສ 2 ມາສະເກນເປັນ 24 ເດືອນ ສັນນັ້ນ.

ເດືອນຈັນທຣະຄະຕິມີລະຍະເວລາ 29 ວັນເສດ ບໍ່ເຖິງ 30 ວັນເຕັມ ຕາມທີ່ເຫັນມາແລ້ວນັ້ນ ຖ້າເອົາ 30 ວັນໄປຫານຈຳນວນທໍຣະຄຸນ ລັບກໍຈຳຕ້ອງເປັນຈຳນວນເດືອນ ຈັນທຣະຄະຕິ ໜ້ອຍກວ່າຈຳນວນອັນແທ້ຈິງຂອງເດືອນທຣະຄະຕິ ທີ່ລ່ວງມາແລ້ວໂດຍແນ່ນອນ.

ສຳຫຼັບຈະແກ້ໄຂເລື່ອງນີ້ ໂຫນບູຣານຈຶ່ງເອົາລັບແຫ່ງບົດເລກເຊິ່ງຫານດ້ວຍ 692 ສົມເຂົ້າກັບທໍຣະຄຸນເສຍກ່ອນ ແລ້ວຈຶ່ງເອົາເກນ 30 ວັນຫານ ສ່ວນລັບແຫ່ງບົດເລກເຊິ່ງຫານດ້ວຍ 692 ນັ້ນ ເຮົາເຫັນມາແລ້ວ ວ່າເປັນຈຳນວນຮອບລະ 692 ວັນແຫ່ງອະວະມານ ຄືເປັນຈຳນວນຮອບເຊິ່ງພະຈັນເດີນໄວເກີນພະອາທິດຄັ້ງລະ 11 ວັນພໍດີ ດ້ວຍເຫດນີ້ ລັບດັ່ງກ່າວຈຶ່ງເປັນຈຳນວນວັນ ເຊິ່ງຮູບເດືອນຈັນທຣະຄະຕິຂາດຈາກຈຳນວນວັນແຫ່ງເດືອນເຊິ່ງມີກຳໜົດ 30 ວັນ ໂດຍນັບຕັ້ງຕົ້ນແຕ່ຕັ້ງຈຸລະສັກຣາດມາຈົນເຖິງວັນສຸດທ້າຍແຫ່ງປີທີ່ຄຳນວນອັດຕາຖະເຫຼິງສົກນັ້ນ ເພາະສະນັ້ນເມື່ອເອົາລັບດັ່ງກ່າວສົມກັບທໍຣະຄຸນແລ້ວ ຄັນເອົາເກນ 30 ວັນຫານຈຶ່ງໄດ້ລັບເປັນຈຳນວນເດືອນຈັນທຣະຄະຕິ ເຊິ່ງລ່ວງມາແລ້ວນັ້ນໂດຍກົງໄດ້ ເພື່ອຈະໃຫ້ເຂົ້າໃຈວິທີຄຳນວນຂອງບູຮານໄດ້ງ່າຍ ໃຫ້ຕັ້ງເລກດັ່ງນີ້ເບິ່ງ:

ທໍຣະຄຸນຫານດ້ວຍເກນ 30 ວັນຄື : 479220 / 30 = 15974 ເສດ 0

ລັບ 7618 ຫານດ້ວຍ 30 " : 7618 / 30 = 253 ເສດ 28

ໂຮມເປັນ 16227 ເສດ 28

ຈຳນວນລັບ ແລະ ເສດກໍກົງກັບຜົນແຫ່ງການຄຳນວນມາແລ້ວນັ້ນ ແຕ່ການຕັ້ງເລກໂດຍແຍກເປັນ 2 ບົດດັ່ງນີ້ ສະແດງໃຫ້ເຫັນປະຈັກກວ່າວິທີເດີມວ່າ ລັບຈຳນວນ 7618 ນັ້ນເປັນຈຳນວນວັນຄືກັນກັບຫໍຣະຄຸນ ແລະ ເປັນຈຳນວນວັນເຊິ່ງເດືອນຈັນທຣະຄະຕິມີໜ້ອຍກວ່າຈຳນວນວັນແຫ່ງເດືອນເຊິ່ງມີ 30 ວັນເຕັມ ທີ່ເປັນຕົວຫານນັ້ນ.

ໝາຍເຫດ ມາສະເກນທະວີຈຳນວນຂຶ້ນ 12 ເດືອນທຸກໆປີທີ່ບໍ່ເປັນອະທິກະມາດ ຖ້າເປັນປີອະທິກະມາດ ເກນກໍທະວີຈຳນວນຂຶ້ນ 13 ເດືອນ ແຕ່ມາສະເກນແຫ່ງປີອະທິກະມາດທະວີຈຳນວນຂຶ້ນ 13 ເດືອນນັ້ນ ເປັນໄປໄດ້ໂດຍ 2 ຢ່າງຄື:

ກ/. ຖ້າປີອະທິກະມາດໃດ ສັງຂານຂຶ້ນໃນເດືອນ 5 (ດິຖີ ແຕ່ 25 ເຖິງ 29) ແລ້ວມາສະເກນແຫ່ງປີນັ້ນກໍທະວີຂຶ້ນ 13 ເດືອນ ຕົວຢ່າງປີ 1310 (12 ເດືອນ) ມາສະເກນເປັນ 16203 ສູງກວ່າມາສະເກນ 16190 ແຫ່ງປີ 1309 ເຊິ່ງເປັນອະທິກະມາດ (ດິຖີ 26) ໄປ 13 ເດືອນ ເຊິ່ງສະແດງວ່າປີອະທິກະມາດ 1309 ມີ 13 ເດືອນ.

ຂ/. ຖ້າປີອະທິກະມາດໃດ ສັງຂານຂຶ້ນໃນເດືອນ 6 (0 ເຖິງ 5) ແລ້ວມາສະເກນແຫ່ງປີນັ້ນກໍທະວີຈຳນວນຂຶ້ນແຕ່ 12 ເດືອນຕາມປົກກະຕິຂອງປີທຳມະດາ ແຕ່ປີທີ່ລ່ວງໄປແລ້ວນັ້ນ (ເຊິ່ງບໍ່ເປັນອະທິກະມາດ) ມີ 13 ເດືອນ ດັ່ງຕົວຢ່າງຕໍ່ໄປນີ້:

ປີອະທິກະມາດ ຈ.ສ 1307 (ດິຖີ 3) ມາສະເກນເປັນ 16166 ສູງກວ່າມາສະເກນ 16153 ແຫ່ງ ປີ ຈ.ສ 1306 (ເຊິ່ງບໍ່ເປັນອະທິກະມາດ) ໄປ 13 ເດືອນເຊິ່ງສະແດງວ່າປີ ຈ.ສ 1306 ນັ້ນມີ 13 ເດືອນ ສ່ວນມາສະເກນແຫ່ງປີອະທິກະມາດ 1307 ນັ້ນໜ້ອຍກວ່າມາດເກນ ທີ່ສັງຂານຂຶ້ນໃນເດືອນ 5 ເຊິ່ງມາສະເກນໜ້ອຍກວ່າມາສະເກນແຫ່ງປີຈະມາເຖິງ 13 ເດືອນແຕ່ຫຼາຍກວ່າມາສະເກນແຫ່ງປີທີ່ລ່ວງໄປແລ້ວນັ້ນ 12 ເດືອນ.

ເນື່ອງຈາກມາສະເກນທະວີຈຳນວນຂຶ້ນປີລະ 12 ເດືອນ ຫຼື 13 ເດືອນ ດັ່ງນັ້ນເມື່ອເຮົາທຳອັດຕາຖະເຫຼີງສົກກໍຄວນສັງເກດເບິ່ງວ່າຜົນແຫ່ງການຄຳນວນມາສະເກນຈະເປັນຈຳນວນສູງກວ່າມາສະເກນແຫ່ງປີທີ່ລ່ວງໄປແລ້ວນັ້ນ 12 ເດືອນ ຫຼື 13 ເດືອນແທ້ບໍ່? ອີກປະການນຶ່ງຄວນສັງເກດເບິ່ງວ່າ ປີເຊິ່ງເຮົາຄຳນວນອັດຕາຖະເຫຼີງສົກນັ້ນ ສັງຂານຂຶ້ນໃນເດືອນ 5 ຫຼື ເດືອນ 6 ເພື່ອເປັນຫຼັກພິຈາຣະນາກ່ຽວກັບຈຳນວນ 12 ຫຼື 13 ເດືອນເຊິ່ງທະວີຈຳນວນຂຶ້ນນັ້ນ.

ສ. ດິຖີ

ຕຳຣາກ່າວວ່າ: ລັບແຫ່ງບິດເລກເຊິ່ງຫານດ້ວຍ 30 ນັ້ນເປັນມາສະເກນແລະເສດເປັນດິຖີ ດັ່ງນັ້ນເສດ 28 ແຫ່ງບິດຫານດ້ວຍ 30 ເຊິ່ງລັບຈຳນວນ 16227 ເປັນມາສະເກນນັ້ນ ກໍເປັນດິຖີຖະເຫຼີງສົກແຫ່ງປີ 1312 ແລະ ດິຖີກໍໝາຍເຖິງຈຳນວນວັນເຊິ່ງເຫຼືອຈາກເດືອນເຕັມແຫ່ງມາສະເກນນັ້ນເອງ ທັງໝາຍວັນຂ້າງຂຶ້ນ ຫຼື ຂ້າງແຮມ ແຫ່ງວັນຕັ້ງຕົ້ນປີໃໝ່ຕາມປະເພນີສືບມາແຕ່ບູຮານ (ວັນສັງຂານຂຶ້ນ).

ດ້ວຍເຫດວ່າວັນຖະເຫຼີງສົກ (ວັນສັງຂານຂຶ້ນ) ຕົກຢູ່ໃນຂອບເຂດແຕ່ເດືອນ 5 ຂຶ້ນ 6 ຄ່ຳໄປເຖິງເດືອນ 6 ຂຶ້ນ 5 ຄ່ຳທີ່ນັ້ນ ເມື່ອດິຖີຖະເຫຼີງສົກເປັນຈຳນວນແຕ່ 6 ຂຶ້ນໄປເຖິງ 29 ກໍໝາຍຄວາມວ່າສັງຂານຂຶ້ນເດືອນ 5 ແລະເມື່ອດິຖີຖະເຫຼີງສົກເປັນຈຳນວນແຕ່ 0 ຂຶ້ນໄປເຖິງ 5 ກໍໝາຍຄວາມວ່າສັງຂານຂຶ້ນເດືອນ 6

ດັ່ງນັ້ນສັງຂານ ຈິ່ງຂຶ້ນເດືອນ 6 ກົງກັບວັນຂຶ້ນ 1 ຄ່ຳ ດັ່ງດຽວກັນກັບດິຖີ 1.

ອີກປະການນຶ່ງເມື່ອດິຖີຖະເຫຼີງສົກເປັນຈຳນວນແຕ່ 0 ໄປເຖິງ 5 ຫຼືແຕ່ 25 ໄປເຖິງ 29 ກໍໝາຍຄວາມວ່າ ປີທີ່ກ່ຽວຂ້ອງນັ້ນເປັນອະທິກະມາດ (ເດືອນແປດສອງຫົນ) ດັ່ງໄດ້ກ່າວມາແລ້ວ.

ດິຖີຖະເຫຼີງສົກບໍ່ເປັນຫຼັກແນ່ນອນໄດ້ສຳຫຼັບກຳໜົດຂ້າງຂຶ້ນຫຼືຂ້າງແຮມແຫ່ງວັນຕັ້ງຕົ້ນປີໃໝ່ ຫຼື ວັນສັງຂານຂຶ້ນ ເພາະລາງປີດິຖີຖະເຫຼີງສົກອ່ອນໄປ 1 ຄ່ຳ ຄືຜິດຈາກລຳດັບວັນເຊິ່ງວາລະຖະເຫຼີງສົກກຳໜົດໄວ້ນັ້ນໄປ 1 ຄ່ຳ ເມື່ອດິຖີຖະເຫຼີງສົກບໍ່ຖືກຕ້ອງກັບວາຣະຖະເຫຼີງສົກ ດັ່ງນັ້ນຕຳຣາໂຫຣາສາດ ບັນຍັດໃຫ້ຖືເອົາ ວາຣະຖະເຫຼີງສົກເປັນຫຼັກສະເໝີແລະໃຫ້ເຕີ່ມດິຖີຖະເຫຼີງສົກຂຶ້ນ 1 ຄ່ຳ ເປັນປົກກະຕິສະເໝີ.

ຊ. ອຸດຈະພົນ

ຕຳຣາບັນຍັດວ່າ: ຕັ້ງທໍຣະຄຸນລົງ ເອົາເກນ 621 ລົບແລ້ວເອົາເກນ 3232 ຫານລັບຖິ້ມເສຍ ເສດເປັນ ອຸດຈະພົນ.

479220 - 621 = 478599

478599 / 3232 = 148 ເສດ 263 ເປັນ ອຸດຈະພົນ.

ຄວາມເຫັນ ອຸດຈະພົນໝາຍເຖິງຈຸດແຫ່ງວິຖີທາງຂອງພະຈັນໃນຄາວທີ່ພະຈັນຢູ່ຫ່າງໄກທີ່ສຸດຈາກພະອາທິດ, ທາງໂຫຣາສາດຝຣັ່ງຮຽກວ່າ "ອາພົດເຊ" (apogée) ດັ່ງນັ້ນ ອຸດຈະພົນກໍໝາຍເຖິງການເດີນຂອງພະຈັນ ແຕ່ຕຳຣາບູຮານເຮົາ ສັງເກດການເດີນຂອງພະຈັນ ຕາມຄວາມເຄື່ອນຍ້າຍຂອງອຸດຈະພົນ ແລະ ອຸດຈະພົນເຄື່ອນທີ່ໄປ 3232 ວັນ ຈິ່ງວຽນຮອບ 12 ຣາສີ ຫຼື ວິຖີ

ທາງຂອງພະຈັນຄົບຮອບນຶ່ງ (8 ປີ 312 ວັນ)

ເກນ 621 ເກນຕົວນີ້ຂ້າພະເຈົ້າເຂົ້າໃຈວ່າຈະເປັນຈຳນວນວັນເຊິ່ງອຸດຈະພົນ ຍັງບໍ່ທັນເຖິງ ຂິດທີ່ຂັ້ນຣາສີມີນ ແລະ ເມດ ເຊິ່ງເປັນຕົ້ນທາງແຫ່ງຮອບເດີນຂອງພະເຄາະໃນຄາວຕັ້ງຕົ້ນຈຸລະສັກຣາດນັ້ນ ການທີ່ເອົາຈຳນວນ 621 ວັນໄປລົບຫໍຣະຄຸນນັ້ນ ກໍເພື່ອຈະແກ້ໄຂໃຫ້ອຸດຈະພົນຕັ້ງຮອບທີ່ຕົ້ນທາງດັ່ງກ່າວໃນເວລາດຽວກັນກັບພະອາທິດ ແລະ ພະຈັນ.

ຍ. ວິທີຄຳນວນ ອຸດຈະພົນ ແບບຂະເໝນ

ຕຳຣາໂຫຣາສາດ ຂະເໝນ ບັນຍັດໃຫ້ຕັ້ງຫໍຣະຄຸນລົງ ເອົາ 2611 ສົມແລ້ວເອົາເກນ 3232 ຫານ ລັບຖິ້ມເສຍ ເສດເປັນອຸດຈະພົນຖະເລີງສົກຄື:

479220 + 2611 = 481831

481831 / 3232 = 149 ເສດ 263 ເປັນອຸດຈະພົນ

ເສດ 263 ວັນໃນທີ່ນີ້ກໍກົງກັບຈຳນວນອຸດຈະພົນເຊິ່ງຄຳນວນໄດ້ຕາມວິທີກ່ອນນັ້ນ.

ເກນ 2611 ເກນຕົວນີ້ເປັນເສດແຫ່ງບົດເລກ 3232 - 621 = 2611 ນັ້ນເອງ ດັ່ງນັ້ນເກນ 2611 ກໍເປັນ ຈຳນວນວັນເຊິ່ງ ອຸດຈະພົນ ໄດ້ລ່ວງເລີຍຂິດທີ່ຂັ້ນຣາສີມີນ ແລະ ເມດໄປໃນຄາວຕັ້ງຕົ້ນຈຸລະສັກຣາດນັ້ນ ຄືກົງກັນຂ້າມກັບເກນ 621 ເຊິ່ງໝາຍເຖິງເວລາທີ່ ອຸດຈະພົນຍັງບໍ່ທັນເຖິງ ຂິດດັ່ງກ່າວນັ້ນ.

ໝາຍເຫດ ອຸດຈະພົນ ທະວີຈຳນວນຂຶ້ນທໍ່ກັບຫໍຣະຄຸນທຸກໆປີເປັນປົກກະຕິສະເໝີ ຄືທະວີຂຶ້ນ 365 ຫຼື 366 ວັນແຕ່ເມື່ອ ອຸດຈະພົນທະວີຂຶ້ນເຖິງ 3232 ແລ້ວກໍຕັ້ງຮອບໃໝ່ໄປອີກ ດັ່ງຕົວຢ່າງຕໍ່ໄປນີ້:

ປີ 1311 ອຸດຈະພົນ ເປັນ 3130

ປີ 1312 ອຸດຈະພົນ ເປັນ 263

ຄື 3130 + 365 = 3495

3495 - 3232 = 263

ດ. ວາຣະ

ຕຳຣາບັນຍັດວ່າ: ຕັ້ງຫໍຣະຄຸນລົງ ເອົາ 7 ຫານ ລັບຖິ້ມເສຍ ເສດເປັນວາຣະຖະເຫຼີງສົກ:

479220 / 7 = 68460 ເສດ 0 ຄືວັນເສົາ ເປັນວັນຖະເຫຼີງສົກ.

ສ່ວນລັບ 68460 ນັ້ນເປັນຈຳນວນສັບດາ ແລະ ເສດເປັນວັນແຫ່ງສັບດາທີ່ສັງຂານ ຈະຖະ

24/7 ຫ້າມຈຳໜ່າຍ

ເຫຼີງສົກ.

ໝາຍເຫດ ເມື່ອເຮົານັບວັນຕາມຂ້າງຂຶ້ນ ແລະ ຂ້າງແຮມໃນປີໃດປີນຶ່ງສຳຫຼັບຈະທຳປະຕິທິນນັ້ນ ຖ້າເຫັນວ່າ ດິຖີຖະເຫຼີງສົກບໍ່ກົງກັບວັນແຫ່ງສັປະດາ ເຊິ່ງວາຣະຖະເລີງສົກກຳໜົດໄວ້ ຕ້ອງເຂົ້າໃຈວ່າ ດິຖີນັ້ນອ່ອນໄປ 1 ຄ່ຳສະເໝີ ແລະຕ້ອງແກ້ໄຂໂດຍຕື່ມດິຖີຂຶ້ນ 1 ຄ່ຳ ເພື່ອໃຫ້ກົງກັບລຳດັບ ວັນເຊິ່ງວາຣະຖະເຫຼີງສົກກຳໜົດໄວ້ນັ້ນ ຕາມຕຳຣາບັນຍັດໄວ້ວ່າ ຕ້ອງຖືເອົາວາຣະຖະເຫຼີງສົກເປັນຫຼັກສະເໝີ ດັ່ງຈະນຳເອົາຕົວຢ່າງມາສະເໜີຕໍ່ໄປນີ້:

ປີ ຈ.ສ 1310 ດິຖີຖະເຫຼີງສົກເປັນ 6 ຄ່ຳແລະວາຣະຖະເຫຼີງສົກເປັນ 5 ຄືວັນພະຫັດ ເຊິ່ງສະແດງວ່າ ສັງຂານຖະເຫຼີງສົກເດືອນ 5 ຂຶ້ນ 6 ຄ່ຳ ວັນພະຫັດ ແຕ່ເມື່ອເຮົານັບຈຳນວນວັນຕາມຂ້າງຂຶ້ນ ແລະ ຂ້າງແຮມ ທັງນັບລຳດັບວັນແຫ່ງສັປະດານຳແລ້ວ ໂດຍຕັ້ງຕົ້ນແຕ່ວັນຖະເຫຼີງສົກແຫ່ງປີ 1309 ໄປຈົນເຖິງວັນຖະເຫຼີງສົກແຫ່ງປີ 1310 ກໍເຫັນວ່າ ວັນພະຫັດ ແຫ່ງສັງຂານຖະເຫຼີງສົກແຫ່ງປີ 1310 ນັ້ນ ກົງກັບເດືອນ 5 ຂຶ້ນ 7 ຄ່ຳ ບໍ່ກົງກັບວັນຂຶ້ນ 6 ຄ່ຳ ດັ່ງດິຖີຖະເຫຼີງສົກກຳໜົດໄວ້ນັ້ນເລີຍ ດັ່ງນັ້ນຈຶ່ງຕ້ອງຕື່ມດິຖີຖະເຫຼີງສົກອີກ 1 ຄ່ຳ ເພື່ອເລື່ອນດິຖີໃຫ້ເປັນວັນຂຶ້ນ 7 ຄ່ຳ ຈຶ່ງຈະຖືກຕ້ອງກັນກັບວັນພະຫັດ. ເມື່ອເຮົາແກ້ໄຂດັ່ງນັ້ນແລ້ວ ຈຳນວນແຫ່ງປີ 1309 ຈຶ່ງຄົບ 365 ວັນ ຕາມກຳໜົດວັນຂອງປີນັ້ນ ເຊິ່ງເປັນປີປົກກະຕິສຸຣະທິນ ຖ້າຫາກບໍ່ຕື່ມດິຖີຖະເລີງສົກຂຶ້ນອີກ 1 ຄ່ຳ ປີ 1309 ກໍຈະມີແຕ່ 364 ທໍ່ນັ້ນ ຄືຈະຂາດກຳໜົດໄປ 1 ວັນ.

3. ຄວາມເຫັນກ່ຽວກັບວິທີຄຳນວນຫາເວລາຖະເຫຼີງສົກ

ເຮົາເຫັນມາແລ້ວໃນຄາວຄຳນວນຫາເວລາຖະເຫຼີງສົກແຫ່ງປີ 1312 ວ່າຕຳຣາບັນຍັດໄວ້ດັ່ງນີ້:

ຕັ້ງເກນຣົກ ຈັບ 800 ລົງເອົາກຳມັດຊະພົນຖະເຫຼີງສັກລົບ ເຫຼືອທໍ່ໃດເອົາ 24 ຄູນ ແລ້ວເອົາ 800 ຫານ ລັບເປັນຊົ່ວໂມງຕາໄວ້ ຖ້າມີເສດອີກເອົາ 60 ຄູນແລ້ວເອົາ 800 ຫານ ລັບເປັນນາທີຕາໄວ້ຖ້າມີເສດອີກ ເອົາ 60 ຄູນ ແລ້ວເອົາ 800 ຫານ ລັບເປັນວິນາທີຕາໄວ້.

ເພື່ອປະຕິບັດຕາມຂໍ້ບັນຍັດນີ້ຈະເອົາກຳມັດຊະພົນ 43 ແຫ່ງປີ 1312 ມາຄຳນວນເປັນຕົວຢ່າງ ອີກເທື່ອນຶ່ງຄື:

(1) 800 - 43 = 757

(2) 757 × 24 = 18168

(3) 18168 / 800 = 22 ຊົ່ວໂມງ ເສດ 586

(4) 586 × 60 / 800 = 42 ນາທີ ເສດ 480

(5) 480 × 60 / 800 = 36 ວິນາທີ ເສດ 000

ຜົນແຫ່ງການຄຳນວນເປັນ 22 ຊົ່ວໂມງ 42 ນາທີ 36 ວິນາທີ.

ຄວາມເຫັນ ກ່ຽວກັບເກນ 800 ນັ້ນໄດ້ອະທິບາຍມູນເຫດມາແລ້ວ ການທີ່ເອົາກຳມັດຊະພົນຖະເຫຼີງສົກໄປລົບເກນ 800 ນັ້ນກໍເພື່ອຄຳນວນຫາລະຍະເວລາເຊິ່ງທໍຣະຄຸນລ່ວງເລີຍຈຳນວນເຕັມວັນນັ້ນໄປ ເມື່ອເຮົາສັງເກດເບິ່ງຈຳນວນເສດ 757 ນັ້ນແລ້ວ ກໍເຫັນວ່າເປັນຈຳນວນດຽວກັນກັບເສດແຫ່ງບົດເລກເຊິ່ງຫານດ້ວຍ 800 ໃນຄັ້ງຄຳນວນທໍຣະຄຸນນັ້ນເອງ ສ່ວນຈຳນວນເສດ 757 ຫຼື 22 ຊົ່ວໂມງ 42 ນາທີ 36 ວິນາທີນັ້ນ ເຮົາກໍເຫັນມາແລ້ວວ່າເປັນລະຍະເວລາເຊິ່ງເກີນວັນເຕັມແຫ່ງທໍຣະຄຸນປີ 1311 ນັ້ນໄປ ແລະ ເຊິ່ງຄວບເຂົ້າໄປໃນວັນຖະເຫຼີງສົກແຫ່ງປີ 1312.

ເມື່ອຄຳນວນຫາລະຍະເວລາດັ່ງກ່າວນັ້ນແລ້ວ ຕຳຣາບັນຍັດວ່າ: ໃຫ້ພິຈາຣະນາເບິ່ງສຳຜຸດພະອາທິດ ໃນວັນທີ່ພະອາທິດມີຣາສີ 0 ແລະ ອົງສາ 1 ແລ້ວໃຫ້ນັບ 1 ແຕ່ 1 ນາລິກາແຫ່ງວັນໃໝ່ໄປທໍ່ກັບໂມງ ນາທີ ແລະ ວິນາທີທີ່ຕາໄວ້ນັ້ນ ເຊິ່ງມັກຈະຕົກຢູ່ໃນວັນທີ່ພະອາທິດມີຣາສີ 0 ແລະອົງສາ 2.

ສຳຜຸດພະອາທິດໃນລະຫວ່າງປີໃໝ່ ມີຣາສີ 0 ເປັນປົກກະຕິສະເໝີ ແລະສ່ວນວັນສັງຂານໄປນັ້ນຍັງມີອົງສາເປັນ 0 ດ້ວຍ ແລະ ລາງປີກໍມີລິບດາເປັນ 0 ອີກຊ້ຳ ຕາມທີ່ໄດ້ກ່າວມາແລ້ວ ແລະ ດັ່ງຈະໄດ້ສັງເກດເຫັນ ໃນຕາລາງຕໍ່ໄປນີ້:

ປີ	ສົມຜຸດພະອາທິດ											
ຈ.ສ	ວັນສັງຂານໄປ			ວັນເນົາທີ 1			ວັນເນົາທີ 2			ວັນສັງຂານຂຶ້ນ		
	ຣາສີ	ອົງສາ	ລິບດາ	ຣາສີ	ອົງສາ	ລິບດາ	ຣາສີ	ອົງສາ	ລິບດາ	ຣາສີ	ອົງສາ	ລິບດາ
1251	0	0	0	0	0	59	0	0	57	0	2	52
1288	0	0	26	0	1	24				0	2	22
1289	0	0	11	0	1	11				0	2	7
1290	0	0	54	0	1	52				0	2	49
1291	0	0	39	0	1	37				0	2	34
1292	0	0	24	0	1	22				0	2	20
1293	0	0	9	0	1	9	0	2	7	0	3	2
1294	0	0	52	0	1	50				0	2	47
1295	0	0	37	0	1	35				0	2	32
1296	0	0	22	0	1	20				0	2	18
1297	0	0	5	0	1	4	0	2	3	0	2	00

ເມື່ອສັງເກດເບິ່ງສຳຜຸດພະອາທິດຂ້າງເທິງນີ້ແລ້ວ ກໍເຫັນໄດ້ວ່າ ວັນເຊິ່ງພະອາທິດມີຣາສີ 0 ແລະ ອົງສາ 1 ທີ່ຕຳຣາບັນຍັດໃຫ້ນັບເວລາຖະເຫຼີງສົກ ໂດຍຕັ້ງຕົ້ນ 1 ແຕ່ 1 ນາລິກາແຫ່ງວັນໃໝ່ໄປນັ້ນ ຕາມປົກຕິຢູ່ໃນວັນເນົາ ແຕ່ລາງປີ ເມື່ອສັງຂານມີວັນເນົາເຖິງ 2 ວັນກໍໄປຕົກຢູ່ໃນວັນເນົາທີ 2 ດັ່ງປີ 1251 ນັ້ນ.

ດັ່ງນັ້ນ ສຳຫຼັບຈະຫາເວລາຖະເຫຼີງສົກແຫ່ງປີໃດປີນຶ່ງກໍດີ ຄວນສັງເກດເບິ່ງວ່າ ສັງຂານເນົາຈັກວັນແທ້ ຖ້າສັງຂານຫາກເນົາແຕ່ວັນດຽວ ກໍທຳສຳຜຸດຈຳເພາະແຕ່ວັນເນົານັ້ນມາພິຈາລະນາ ແຕ່ຖ້າສັງຂານຫາກເນົາເຖິງ 2 ວັນ ຈຳຕ້ອງທຳສຳຜຸດພະອາທິດແຫ່ງວັນເນົາທັງ 2 ວັນນັ້ນດ້ວຍຈຶ່ງຈະຮູ້ວ່າສຳຜຸດເຊິ່ງມີ ຣາສີ 0 ແລະ ອົງສາ 1 ນັ້ນຈະຕົກຢູ່ໃນວັນເນົາໃດແທ້ ແລ້ວຈຶ່ງນັບເວລາແຕ່ທ່ຽງຄືນແຫ່ງວັນນັ້ນໄປຕາມທີ່ຕຳຣາບັນຍັດໄວ້ນັ້ນ.

4. ຄວາມເຫັນກ່ຽວກັບເກນແລະວິທີຄຳນວນມັດທະຍົມແລະສຳຜຸດພະອາທິດ

ສຳຫຼັບຈະທຳສຳຜຸດ ພະເຄາະໜ່ວຍໃດກໍດີ ຂັ້ນຕົ້ນຕ້ອງທຳມັທະຍົມພະເຄາະໜ່ວຍນັ້ນສາກ່ອນແລ້ວ ຈຶ່ງຄຳນວນຫາ "ຜົນ" ແລ້ວຈຶ່ງເອົາ "ຜົນ" ນັ້ນໄປລົບ ຫຼື ສົມມັດທະຍົມ ເອົາແຕ່ຈຳນວນ "ເກນ" ເປັນປະມານ ຕາມທີ່ເຫັນມາແລ້ວນັ້ນ ເສດ ຫຼື ລັບເປັນ "ສຳຜຸດ"

ມັດທະຍົມ ແລະ ສຳຜຸດ ມີຄວາມໝາຍຕ່າງກັນດັ່ງນີ້ຄື ມັດທະຍົມໝາຍເຖິງລະຍະທາງທີ່ພະເຄາະ ສາມາດເດີນໄປໄດ້ຕາມອັດຕາແຫ່ງຄວາມໄວຜ້ານກາງຂອງພະເຄາະໜ່ວຍນັ້ນໆ ໃນກຳໜົດເວລາທີ່ເຮົາເອົາມາຄຳນວນນັ້ນ.

ສ່ວນສຳຜຸດໝາຍເຖິງລະຍະທາງອັນແທ້ຈິງທີ່ພະເຄາະ ເດີນເຖິງໄດ້ໃນກຳໜົດເວລາດຽວກັນນັ້ນ ດ້ວຍເຫດນີ້ເມື່ອຄຳນວນມັດທະຍົມສຳເລັດແລ້ວຈຶ່ງເອົາ "ຜົນ" ໄປລົບ ຫຼື ສົມມັດທະຍົມແລ້ວແຕ່ຈຳນວນເກນເປັນ ປະມານເສດ ຫຼື ລັບຈຶ່ງເປັນສຳຜຸດ.

ຕຳຣາໂຫຣາສາດຝຣັ່ງກໍມີມັດທະຍົມ ແລະ ສົມຜຸດຄືກັນເຊິ່ງເຂົາຮຽກວ່າ "ມິດຽມອະໂນມາລີ" ສຳຫຼັບມັດທະຍົມແລະ "ທຣູອະໂນມາລີ" ສຳຫຼັບສຳຜຸດ.

ກ. ມັດທະຍົມພະອາທິດ

ສະນັ້ນມັດທະຍົມພະອາທິດໃນວັນເນົາແຫ່ງສັງຂານ ປີ 1312 ເຊິ່ງຄຳນວນມານັ້ນກໍໝາຍເຖິງລະຍະທາງຜ້ານກາງຂອງພະອາທິດໃນກຳໜົດເວລາ 365 ວັນແຫ່ງການເດີນຂອງພະອາທິດໂດຍນັບແຕ່ວັນເຊິ່ງຢູ່ຫຼັງວັນຖະເຫຼີງສົກແຫ່ງປີ 1311 ໄປຈົນເຖິງວັນເຊິ່ງຢູ່ກ່ອນໜ້າແຫ່ງວັນຖະ

ເຫຼືອສົກປີ 1312 ນັ້ນ.

ສ່ວນວິທີຄຳນວນມັດທະຍົມພະອາທິດນັ້ນເຮົາເຫັນມາແລ້ວວ່າ ຕຳຣາບັນຍັດໄວ້ວ່າ: ຕັ້ງສຸຣະທິນລົງ ເອົາ 800 ຄູນ ເອົາກຳມັດຊະພົນຖະເຫຼືອສົກແຫ່ງປີທີ່ເຮົານັບສຸຣະທິນນັ້ນສົມ ແລ້ວເອົາ 24350 ຫານ ໄດ້ລັບ ເປັນຣາສີ ສ່ວນເສດນັ້ນເອົາ 811 ຫານລັບເປັນອົງສາ ຖ້າມີເສດອີກເອົາ 14 ຫານ ໄດ້ລັບເປັນລິບດາ ເສດຖິ້ມເສຍ ແລ້ວຈຶ່ງຕັ້ງລິບດາລົງ ເອົາ 3 ລົບເຫຼືອເສດທໍ່ໃດເປັນລິບດາ ໃນມັດທະຍົມຈຳນວນຣາສີອົງສາ ແລະ ລິບດາ ທີ່ ຄຳນວນໄດ້ມານັ້ນເປັນມັດທະຍົມພະອາທິດ.

ເພື່ອຈະໃຫ້ເຂົ້າໃຈຄວາມເຫັນຂອງຂ້າພະເຈົ້າໄດ້ງ່າຍ ຈະໄດ້ຄຳນວນມັດທະຍົມພະອາທິດ ໃນວັນເນົາແຫ່ງສັງຂານປີ 1312 ນັ້ນອີກເທື່ອນຶ່ງສຳຫຼັບເປັນຫຼັກພິຈາລະນາຫາມູນແຫ່ງເກນແລະ ວິທີຄຳນວນຂອງບູຮານ.

ສຸຣະທິນແຫ່ງວັນເນົາດັ່ງກ່າວເປັນ 364 ວັນແລະກຳມັດຊະພົນແຫ່ງປີ 1311 ເຊິ່ງເຮົານັບ ສຸຣະທິນນັ້ນເປັນ 250 ດັ່ງນັ້ນການຄຳນວນກໍຕ້ອງດຳເນີນດັ່ງຈະສະເໜີຕໍ່ໄປນີ້:

364 × 800 = 291200

291200 + 250 = 291450

291450 / 24350 = 11 ຣາສີ ເສດ 23600

23600 / 811 = 29 ອົງສາ ເສດ 81

81 / 14 = 5 ລິບດາ ເສດຖິ້ມ

5 - 3 = 2 ລິບດາ

ມັດທະຍົມພະອາທິດເປັນ 11 ຣາສີ 29 ອົງສາ 2 ລິບດາ

ຄວາມເຫັນ ການຄຳນວນມັດທະຍົມພະອາທິດນັ້ນໃຊ້ເກນໃໝ່ 4 ຕົວ ຄື 24350, 811, 14 ເຊິ່ງເປັນຕົວຫານ ແລະເກນ 3 ເຊິ່ງເປັນຕົວລົບ ເມື່ອເຮົາຮູ້ວ່າເກນເຫຼົ່ານັ້ນເປັນອັນໃດ ແລະເອົາມາ ຈາກອັນໃດແລ້ວ ກໍຈະເຂົ້າໃຈວິທີຄຳນວນມັດທະຍົມພະອາທິດງ່າຍຂຶ້ນ.

ເກນ 24350 ຂ້າພະເຈົ້າໄດ້ຊອກຄົ້ນຫາມູນແຫ່ງເກນຕົວນີ້ໂດຍຊັນນະສູດວ່າ ເພາະເຫດ ໃດເມື່ອຄູນຈຳນວນວັນແຫ່ງສຸຣະທິນຂຶ້ນ 800 ຕໍ່ ແລະ ເອົາກຳມັດຊະພົນສົມແລ້ວຄັນເອົາ 24350 ຫານ ລັບຈຶ່ງກາຍມາເປັນຣາສີໄດ້ ເມື່ອເຫັນລັບເປັນຢ່າງນັ້ນຈຶ່ງຄິດອອກເອົາຈຳນວນ 12 ຣາສີ ຫຼື ວິຖີທາງພະອາທິດໄປຫານຈຳນວນ 292207 ວັນແຫ່ງຮອບ 800 ປີລອງເບິ່ງ ຄື:

292207 / 12 = 24350 ເສດ 7 / 12 ຫຼື 0,58

ຄັນເຫັນລັບເປັນຈຳນວນດຽວກັບເກນ 24350 ດັ່ງນັ້ນກໍເຂົ້າໃຈໄດ້ແນ່ນອນວ່າ ເກນຕົວນີ້ ເປັນລະຍະເວລາ (ເຊິ່ງຄູນຂຶ້ນ 800 ຕໍ່) ທີ່ພະອາທິດເດີນຜ່ານຣາສີ 1 ແລະລະຍະເວລານັ້ນທໍ່ກັບກຳ

ໝົດ 30 ວັນ 10 ຊົ່ວ ໂມງ 30 ນາທີ ແລະ 0 ວິນາທີ ຄື: 24350 / 800 = 30 ວັນເສດ 350 / 800 ຫຼື 10 ຊົ່ວໂມງ 24 ນາທີ 20 ວິນາທີ.

ເກນ 811 ເມື່ອຮູ້ມູນແຫ່ງເກນ 24350 ຂ້າງເທິງນີ້ແລ້ວ ການພິຈາລະນາຫາມູນແຫ່ງເກນ 811 ແລະ ເກນ 14 ກໍສະດວກຂຶ້ນ. ກ່ຽວກັບເກນ 811 ນັ້ນຕຳຣາບັນຍັດວ່າ: ຕັ້ງເສດແຫ່ງບົດເລກ ເຊິ່ງຫານດ້ວຍ 24350 ນັ້ນລົງເອົາ 811 ຫານ ໄດ້ລັບເປັນອົງສາ. ເມື່ອຮູ້ແລ້ວວ່າເສດດັ່ງກ່າວເປັນສ່ວນ 1 ຂອງຣາສີກໍເຂົ້າໃຈໄດ້ວ່າ ເກນ 811 ນັ້ນເປັນລະຍະເວລາ ເຊິ່ງຄູນຂຶ້ນ 800 ຕໍ່ ທີ່ພະອາທິດເດີນຜ່ານອົງສາ 1 ນັ້ນເອງ ຄື :

24350 / 30 = 811 ເສດ 20 / 30 ຫຼື 0,66

(ຕົວຫານ 30 ແມ່ນຈຳນວນ 30 ອົງສາ)

ເກນ 811 ນັ້ນທໍ່ກັບກຳໜົດເວລາ 1 ວັນ 19 ນາທີ 48 ວິນາທີ ຄື:

811 / 800 = 1 ວັນ, ເສດ 11 / 800 ຫຼື 19 ນາທີ 48 ວິນາທີ

ເກນ 14 ສຳລັບເກນຕົວນີ້ ຕຳຣາບັນຍັດວ່າ: ຕັ້ງເສດແຫ່ງບົດເລກ ເຊິ່ງຫານດ້ວຍ 811ລົງເອົາ 14 ຫານ ໄດ້ລັບເປັນລິບດາ. ເມື່ອເຮົາຮູ້ວ່າເສດດັ່ງກ່າວເປັນສ່ວນນຶ່ງຂອງອົງສາ (ເຊິ່ງມີ 60 ລິບດາ) ດັ່ງນັ້ນກໍເຂົ້າໃຈໄດ້ວ່າເກນ 14 ນັ້ນເປັນລະຍະເວລາ (ເຊິ່ງຄູນຂຶ້ນ 800 ຕໍ່) ທີ່ພະອາທິດເດີນຜ່ານ 1 ລິບດານັ້ນເອງ ຄື:

811 / 60 = 13 ເສດ 31 / 60 ຫຼື 0,51

ຕຳຣາຕື່ມ 1 ເຂົ້າ ລັບໄດ້ເປັນເກນ 14 ເຊິ່ງທໍ່ກັບກຳໜົດເວລາ 25 ນາທີ 12 ວິນາທີ ຄື:

14 / 800 = 0,0175 ແຫ່ງວັນ ຫຼື ແຫ່ງ 24 ຊົ່ວໂມງ ເຊິ່ງມີ 86400 ວິນາທີ.

ດັ່ງນັ້ນ 0,0175 × 86400 = 1512 ວິນາທີ ຫຼື 25 ນາທີ 12 ວິນາທີ.

ການທີ່ຕຳຣາຕື່ມ 1 ເຂົ້າ ລັບ 13 ໃຫ້ເປັນເກນ 14 ນັ້ນ ເຫັນຈຳເປັນເພາະເພື່ອທົດແທນເສດ 7 / 12 , 20 / 30 ແລະ 31 / 60 ເຊິ່ງຖິ້ມເສຍຂ້າງເທິງນັ້ນ ແລະ ເມື່ອໂຮມເຂົ້າກັນເປັນຈຳນວນເກີນ 1 ເຕັມ ຄືເປັນ:

7 / 12 + 20 / 30 + 31 / 60 = (35 + 40 + 31)/ 60 = 106 / 60 = 1 ເສດ 46 / 60 ຫຼື 0,76

ເກນ 3 ສ່ວນລັບແຫ່ງບົດເລກເຊິ່ງຫານດ້ວຍ 14 ນັ້ນ ຕຳຣາໃຫ້ເອົາ 3 ລິບດາລົບເຫຼືອທໍ່ໃດເປັນລິບດາແຫ່ງມັດທະຍົມພະອາທິດ ເກນ 3 ລິບດານັ້ນ ຈະເອົາມາຈາກອັນໃດ ຂ້າພະເຈົ້າບໍ່ຮູ້ຕົ້ນສາຍປາຍເຫດໄດ້ໂດຍແນ່ນອນ.

ຂ. ວິທີຄຳນວນມັດທະຍົມພະອາທິດ

ເມື່ອຮູ້ວ່າເກນ 24350, 811 ແລະ 14 ເປັນລະຍະເວລາ (ເຊິ່ງຄູນຂຶ້ນ 800 ຕໍ່) ທີ່ພະອາທິດເດີນຜ່ານ ແຕ່ລະຣາສີອົງສາແລະລິບດາ ດັ່ງນັ້ນການພິຈາລະນາຫາມູນແຫ່ງການຄຳນວນມັດທະຍົມພະອາທິດ ກໍເປັນການສະດວກຂຶ້ນຫຼາຍ ຄື:

ກ. ການເອົາ 800 ຄູນສຸຣະທິນ ກໍເພື່ອທະວີຈຳນວນວັນຂຶ້ນໃຫ້ເປັນ 800 ຕໍ່ ເພື່ອໃຫ້ເປັນຂະໜາດດຽວກັນກັບກຳມັດຊະພົນຖະເຫຼິງສົກ ທີ່ຈະເອົາມາສົມເຂົ້ານັ້ນ ຄັນເມື່ອສົມກັນເຂົ້າແລ້ວເອົາເກນ 24350 ມາຫານ ລັບຈຶ່ງເປັນຈຳນວນຣາສີ ເຊິ່ງພະອາທິດໄດ້ເດີນຜ່ານໄປແລ້ວໃນກຳໜົດເວລາ 364 ວັນແຫ່ງສຸຣະທິນນັ້ນ.

ຂ. ສ່ວນເສດແຫ່ງບົດເລກເຊິ່ງຫານດ້ວຍ 14350 ເປັນສ່ວນນຶ່ງຂອງຣາສີຄືເປັນຈຳນວນອົງສາ (ເຊິ່ງຄູນຂຶ້ນ 800 ຕໍ່) ສະນັ້ນເມື່ອເອົາເກນ 811 ຫານ ລັບຈຶ່ງເປັນຈຳນວນອົງສາເຊິ່ງພະອາທິດໄດ້ເດີນລ່ວງເລີຍຈຳນວນຣາສີທີ່ຄຳນວນໄດ້ນັ້ນໄປ.

ຄ. ເສດແຫ່ງບົດເລກເຊິ່ງຫານດ້ວຍ 811 ນັ້ນເປັນສ່ວນນຶ່ງຂອງອົງສາ ຄືເປັນຈຳນວນລິບດາ (ເຊິ່ງຄູນຂຶ້ນ 800 ຕໍ່) ສະນັ້ນເມື່ອເອົາເກນ 14 ຫານ ລັບຈຶ່ງເປັນຈຳນວນລິບດາ ເຊິ່ງພະອາທິດເດີນລ່ວງເລີຍຈຳນວນໄດ້ນັ້ນໄປ.

ງ. ແຕ່ຕຳຣາໃຫ້ເອົາ 3 ລຶບ ລິບດາທີ່ຄຳນວນໄດ້ນັ້ນ ຂ້າພະເຈົ້າບໍ່ສາມາດຈະອະທິບາຍໄດ້ເພາະບໍ່ຮູ້ມູນແຫ່ງເກນ 3 ນັ້ນ.

ຄວາມເຫັນກ່ຽວກັບ "ເກນ"

ຕຳຣາບັນຍັດວ່າ ຄັນຄຳນວນມັດທະຍົມພະອາທິດສຳເລັດແລ້ວໃຫ້ເອົາ 2 ລຶບຣາສີແລະ 20 ລຶບອົງ ສາເສດທໍ່ໃດເປັນ "ເກນ"

ຕົວຢ່າງມັດທະຍົມພະອາທິດ	11	ຣາສີ	29	ອົງສາ	2	ລິບດາ
ລຶບອອກ	2	"	20	"		
ເກນ	9	ຣາສີ	9	ອົງສາ	2	ລິບດາ

ຈະເປັນຍ້ອນເຫດອັນໃດຈຶ່ງລຶບມັດທະຍົມອອກ 2 ຣາສີ ແລະ 20 ອົງສານັ້ນ ຂ້າພະເຈົ້າຍັງບໍ່ຮູ້ມູນເຫດ ແຕ່ປະການໃດ.

ຂໍ້ບັນຍັດກ່ຽວກັບເກນ ຕຳຣາບັນຍັດວ່າໃຫ້ສັງເກດເບິ່ງເກນແລ້ວ ປະຕິບັດດັ່ງຕໍ່ໄປນີ້ ຄືຖ້າເກນ:

ມີຣາສີ 0, 1, 2 ໃຫ້ຕາໄວ້

"	3, 4, 5	ໃຫ້ເອົາລົບກັບຈັກກະຣາສີ (6 ຣາສີ) ເສດ ຕາໄວ້
"	6, 7, 8	ໃຫ້ລົບອອກ 6 ຣາສີ ເສດຕາໄວ້
"	9,10,11	ໃຫ້ເອົາລົບກັບທວາທະສະມົນທົນ (12 ຣາສີ) ເສດທີ່ໃດຕາໄວ້.

ຄວາມເຫັນ ຂ້ອຍໄດ້ພິຈາລະນາເບິ່ງຂໍ້ບັນຍັດທີ່ກ່ຽວກັບເກນນັ້ນແລ້ວ ກໍເຫັນໄດ້ວ່າໂຫນບູຮານມີຈຸດປະສົງຈະຄຳນວນເລກ ຈຳເພາະແຕ່ໃນຂອບເຂດ 3 ຣາສີທີ່ນັ້ນ ທັງນີ້ເພື່ອຄວາມສະດວກແກ່ການຄຳນວນ ດ້ວຍເຫດນີ້ເມື່ອເກນເປັນຈຳນວນ:

0, 1, 2 ຣາສີ		ຈຶ່ງໃຫ້ຕາໄວ້ເພາະຢູ່ໃນ 3 ຣາສີ ຕົ້ນແລ້ວ
3, 4, 5	"	ຈຶ່ງໃຫ້ລົບກັບ 6 ຣາສີເສດກໍຕ້ອງໜ້ອຍກວ່າ 3 ຣາສີ ຕົ້ນສະເໝີ
6, 7, 8	"	ຈຶ່ງໃຫ້ລົບອອກ 6 ຣາສີ ເສດກໍຕ້ອງໜ້ອຍກວ່າ 3 ຣາສີ ຕົ້ນສະເໝີ
9,10,11	"	ຈຶ່ງໃຫ້ລົບກັບທວາທະສະມົນທົນ ເສດກໍຕ້ອງໜ້ອຍກວ່າ 3 ຣາສີ ຕົ້ນສະເໝີ

ຕົວຢ່າງ ທວາທະສະມົນທົນ	11	ຣາສີ	29	ອົງສາ	60	ລິບດາ
ເກນທີ່ຄຳນວນໄດ້	9	"	9	"	2	"
ເສດ	2	ຣາສີ	20	ອົງສາ	58	ລິບດາ

ອັນ ຕັ້ງຣາສີແຫ່ງເສດນັ້ນລົງ ເອົາ 2 ຄູນ ໄດ້ລັບທີ່ໃດຕາໄວ້ຄື: 2 × 2 = 4

ຕັ້ງອົງສາລົງ ເອົາ 15 ຫານ ຖ້າຫານໄດ້ເອົາລັບ 1 ສົມກັບຜົນແຫ່ງບົດຄູນຂ້າງເທິງນີ້ສຳເລັດແລ້ວ ເປັນ ອັນ: 20 / 15 = 1 ເສດ 5

1 + 4 = 5 ເປັນອັນ

ຖ້າຈຳນວນອົງສາບໍ່ເຖິງ 15 ເອົາ 15 ຫານບໍ່ໄດ້ ຜົນແຫ່ງບົດເລກເອົາ 2 ຄູນລາສີນັ້ນເປັນອັນເລີຍ ສະນັ້ນ ອັນກໍມີຂະໜາດແຕ່ເຄິ່ງຣາສີ ຫຼື 15 ອົງສາທີ່ນັ້ນເອງ.

ພຸດຊະລົບ ສ່ວນອົງສາເຊິ່ງເຫຼືອຈາກບົດເລກຫານດ້ວຍ 15 ນັ້ນ ເອົາ 60 ຄູນເປັນລິບດາແລ້ວເອົາສົມກັບຈຳນວນລິບດາແຫ່ງເກນ ໄດ້ລັບເປັນ ພຸດຊະລົບ ຄື:

5 × 60 = 300

300 + 58 = 358 ເປັນພຸຊະລົບ

ສະນັ້ນ ພຸດຊະລົບກໍເປັນລິບດາທີ່ເຫຼືອຈາກອັນເຕັມນັ້ນເອງ.

ຣະວິພຸດຊະຜົນ ເມື່ອຄຳນວນພຸດຊະລົບສຳເລັດແລ້ວ ກໍຕ້ອງຄຳນວນຫາ "ຣະວິພຸດຊະຜົນ"

ຫຼື "ຜົນ" ສຳຫຼັບຈະຄຳນວນຫາຣະວິພຸດຊະຜົນ ຈຳຕ້ອງອາໄສ "ສາຍາ" ພະອາທິດດັ່ງທີ່ເຫັນມາແລ້ວນັ້ນ.

ສາຍາພະອາທິດ

ອັນ	ເກນສົມ	ເກນຄູນ	ອະທິບາຍມູນຂອງເກນ
0		35	
1	35	32	67 - 35 = 32
2	67	27	94 - 67 = 27
3	94	22	116 - 94 = 22
4	116	13	129 - 116 = 13
5	129	5	134 - 129 = 5

ເມື່ອອັນເປັນຈຳນວນໃດ ກໍເອົາພຸດຊະລິບຄູນເກນແຖວຂວາສຸດແຫ່ງສາຍາ ເຊິ່ງຢູ່ແຖວດຽວກັນກັບອັນ ທີ່ກ່ຽວຂ້ອງນັ້ນແລ້ວຈຶ່ງເອົາ 900 ຫານ ຄື: ອັນເປັນ 5 ກໍຕ້ອງເອົາພຸດຊະລິບຄູນດ້ວຍ 5 ແລ້ວຈຶ່ງຫານດ້ວຍ 900 ຫຼື 358 × 5 / 900 = 1 ເສດ 890 ຖິ້ມເສຍ.

ບາດນີ້ເອົາລັບ 1 ສົມກັບເກນແຖວກາງເຊິ່ງຢູ່ແຖວດຽວກັນກັບອັນທີ່ກ່ຽວຂ້ອງ ແລ້ວຈຶ່ງເອົາ 60 ຫານ ໄດ້ ລັບເປັນອົງສາ ແລະ ເສດເປັນລິບດາແຫ່ງຣະວິພຸດຊະຜົນ ຄື:

(1 + 129) / 60 = 2 ອົງສາ 10 ລິບດາ ເປັນຣະວິພຸດຊະຜົນ.

ຄວາມເຫັນ ເມື່ອຣະວິພຸດຊະຜົນເປັນຈຳນວນອົງສາ ແລະ ລິບດາຢ່າງນັ້ນ ຈຳນວນເກນຕ່າງໆແຫ່ງສາຍາກໍຕ້ອງເປັນລິບດາທັງໝົດ ແລະ ເມື່ອເອົາ 60 ຫານ ລັບຈຶ່ງເປັນອົງສາ ສ່ວນເສດກໍຄົງເປັນລິບດາຕາມເດີມສະເໝີ.

ແຕ່ເກນສົມນັ້ນຈະເອົາມາຈາກອັນໃດ ຂ້າພະເຈົ້າຍັງບໍ່ຮູ້ໄດ້ ສ່ວນເກນຄູນນັ້ນເຫັນວ່າເປັນເສດແຫ່ງເກນ "ສົມ" ເຊິ່ງລົບເປັນລຳດັບກັນແຕ່ອັນ 5 ຂຶ້ນໄປເຖິງອັນ 0 ຕາມທີ່ໄດ້ອະທິບາຍໄວ້ແລ້ວນັ້ນ. ສ່ວນເກນ 800 ເຊິ່ງເປັນຕົວຫານນັ້ນ ເປັນຈຳນວນລິບດາເຊິ່ງມີຢູ່ໃນອັນນີ້ງ:

15 ອົງສາ × 60 ລິບດາ = 900 ລິບດາ.

ຄ. ສຳຜຸດພະອາທິດ

ຕຳຣາບັນຍັດວ່າ: ຖ້າເກນເປັນຣາສີແຕ່ 0 ໄປເຖິງ 5 ເປັນເກນລົບ ໃຫ້ເອົາຣະວິພຸດຊະຜົນລົບ ມັດທະຍົມພະອາທິດ ຖ້າເກນເປັນລາສີແຕ່ 6 ຂຶ້ນໄປເຖິງ 11 ເປັນເກນສົມ ໃຫ້ເອົາຣະວິພຸດຊະ

ຜົນສົມມັດທະຍົມພະອາທິດ, ເສດແລະລັບແຫ່ງເລກລົບ ແລະ ສົມນັ້ນເປັນສຳຜຸດພະອາທິດ.

ເກນທີ່ຄຳນວນມາແລ້ວເປັນ 9 ຣາສີກໍຕ້ອງເອົາຣະວິພຸດຊະຜົນ ສົມກັບມັດທະຍົມພະອາທິດຄື:

ມັດທະຍົມພະອາທິດ		11	ຣາສີ	29	ອົງສາ	2	ລິບດາ
ຣະວິພຸດຊະຜົນ	ສົມ (+)			2	ອົງສາ	10	ລິບດາ
ສຳຜຸດພະອາທິດ	=	11	ຣາສີ	31	ອົງສາ	12	ລິບດາ

ແຕ່ 31 ອົງສາເປັນ 1 ຣາສີກັບ 1 ອົງສາ ຈຶ່ງຕ້ອງຍົກອອກ 30 ອົງສາ ແລ້ວຕື່ມຣາສີຂຶ້ນ 1 ຈຶ່ງເປັນ 12 ຣາສີ 1 ອົງສາ 12 ລິບດາ. ຣາສີເປັນຈຳນວນ 12 ກໍຄົບຮອບນຶ່ງຕ້ອງຍົກອອກ ດັ່ງນັ້ນ ສຳຜຸດພະອາທິດ ຈຶ່ງເປັນ 0 ຣາສີ 1 ອົງສາ 12 ລິບດາ.

ຄວາມຮູ້ຂອງຂ້າພະເຈົ້າທີ່ກ່ຽວກັບມູນແຫ່ງເກນ ເຊິ່ງໃຊ້ຄຳນວນມັດທະຍົມ ແລະ ສຳຜຸດພະອາທິດຍັງຂາດເຂີນຢູ່ຫຼາຍ ເຖິງຢ່າງໃດກໍດີ ຜົນແຫ່ງການຄົ້ນຄວ້າມາແລ້ວນັ້ນ ອາດເປັນປະໂຫຍດບໍ່ຫຼາຍກໍໜ້ອຍແກ່ຜູ້ທີ່ສົນໃຈຈະສຶກສາວິຊາຊໍ່ນີ້ຕໍ່ໄປ.

24 / VII
ຫ້າມຈຳໜ່າຍ

ຕອນທີຫ້າ

ປີອະທິກະສຸຣະທິນ-ອະທິກະມາດ-ອະທິກະວານ ສັງຂານ ເນົາສອງວັນ

ກ່ຽວກັບປີອະທິກະສຸຣະທິນ, ອະທິກະມາດ, ອະທິກະວານ ແລະ ສັງຂານ ເນົາ 2 ວັນນັ້ນ ໄດ້ກ່າວເຖິງມາແລ້ວ ແຕ່ຫາກໄດ້ກ່າວໄວ້ພຽງເລັກນ້ອຍທໍ່ນັ້ນ ເຊິ່ງຂາດເຂີນຢູ່ຫຼາຍປະການ, ອີກປະການນຶ່ງກໍໄດ້ກ່າວໄວ້ໃນຫຼາຍໆແຫ່ງດ້ວຍ ເຊິ່ງເປັນການລຳບາກທີ່ຈຳຊອກຄົ້ນຫາ ເພາະສະນັ້ນຈຶ່ງເອົາມາກ່າວອີກ ເພື່ອໃຫ້ເປັນການຖ້ວນຖີ່ ແລະ ໂດຍຄວາມຫວັງຈະໃຫ້ສະດວກແກ່ຜູ້ທີ່ສົນໃຈໃນເລື່ອງປີພິເສດ 3 ຢ່າງ ແລະໃນເລື່ອງສັງຂານພິເສດມີວັນເນົາເຖິງສອງວັນນັ້ນ ຈຶ່ງໄດ້ເອົາມາໂຮມໄວ້ໃນຕອນດຽວກັນນະທີ່ນີ້.

1. ປີອະທິກະສຸຣະທິນ

ທ່ານເຫັນມາແລ້ວວ່າ ປີອະທິກະສຸຣະທິນ ເປັນປີພິເສດເຊິ່ງມີ 366 ວັນ ແລະ ວຽນມາເຖິງທຸກ 3 ປີ ຫຼື ທຸກ 4 ປີແລ້ວແຕ່ຈຳນວນກຳມັດຊະພົນຖະເຫຼີງສົກຈະກຳໜົດໄວ້ ຄືປີໃດກຳມັດຊະພົນຖະເຫຼີງສົກເປັນຈຳນວນ ບໍ່ກາຍ 207 ແລ້ວ ປີນັ້ນກໍຕ້ອງເປັນອະທິກະສຸຣະທິນ ເພາະເປັນປີນຶ່ງໃນຈຳນວນ 207 ປີອະທິກະສຸຣະທິນ ເຊິ່ງຕຳຣາໂຫຣາສາດຕັ້ງເປັນຫຼັກໄວ້ໃນຮອບ 800 ປີ ເຊິ່ງມີ 292207 ວັນ.

ຕາມປົກກະຕິ ປີອະທິກະສຸຣະທິນ ວຽນມາເຖິງທຸກ 4 ປີ ເພາະເສດ 207 ⁄ 800 ແຫ່ງກຳໜົດປີນຶ່ງ (365 ວັນ) ນັ້ນ ຄັນເຖິງ 4 ປີ ຈຶ່ງຄົບກຳໜົດ 24 ຊົ່ວໂມງ ຫຼື 1 ວັນເຕັ້ມຄື:

(207 + 207 + 207 + 207) ⁄ 800 = 828 ⁄ 800 ຫຼື 1 ວັນເສດ 28 ⁄ 800

ແຕ່ເນື່ອງຈາກເສດວັນໄປອີກ 28 ⁄ 800 ນັ້ນຢ່າງນຶ່ງ ແລະ ອີກຢ່າງນຶ່ງ ຈາກເກນ 1 ວັນເຊິ່ງໃຊ້ຄຳນວນ ທໍຣະຄຸນນັ້ນເອງ ລາງເທື່ອເຖິງ 3 ປີ ຈຶ່ງເປັນອະທິກະສຸຣະທິນອີກເທື່ອນຶ່ງ.

ຕໍ່ໄປນີ້ຈະໄດ້ສະເໜີລຳດັບແຫ່ງຮອບປີອະທິກະສຸຣະທິນ ເຊິ່ງມີຢູ່ໃນຈຳນວນ 400 ປີ ທີ່ຂ້າພະເຈົ້າໄດ້ຄຳນວນອັດຕາຖະເຫຼີງສົກໄວ້ແລ້ວນັ້ນ ພ້ອມດ້ວຍຂໍ້ສັງເກດມາໃຫ້ທ່ານຊົມນະສູດຕໍ່ໄປ.

ປີອະທິກະ ສຸຣະທິນ	ອະທິ ກະມາດ	ອະທິ ກະວານ	ກຳມັດ ຊະພົນ	ອັ້ນ ຈັກປີ	ປີອະທິກະ ສຸຣະທິນ	ອະທິ ກະມາດ	ອະທິ ກະວານ	ກຳມັດ ຊະພົນ	ອັ້ນ ຈັກປີ
1250	+		77	3	1312	+		43	3
1254			49	3	1316			15	2
1258	+	+	21	2	1319			194	3
1261	+		200	3	1323	+		166	3
1265			172	3	1327			138	3
1269	+		144	3	1331	+		110	3
1273		+	116	3	1335		+	82	3
1277	+		88	3	1339			54	3
1281			60	3	1343			26	3
1285	+		32	3	1346		+	205	3
1289		+	4	2	1350	+		177	3
1292			183	3	1354			149	3
1296	+		155	3	1358	+		121	3
1300			127	3	1362			93	3
1304	+	+	99	3	1366	+	+	65	3
1308			71	3	1370			37	3

ປີອະທິກະສຸຣະທິນ	ອະທິກະມາດ	ອະທິກະວານ	ກຳມັດຊະພົນ	ຂັ້ນຈັກປີ	ປີອະທິກະສຸຣະທິນ	ອະທິກະມາດ	ອະທິກະວານ	ກຳມັດຊະພົນ	ຂັ້ນຈັກປີ
1374	+		9		1435			182	
				2					3
1377	+		188		1439			154	
				3					3
1381			160		1443			126	
				3					3
1385	+		132		1447			98	
				3					3
1389			104		1451			70	
				3					3
1393	+		76		1455			42	
				3					3
1397		+	48		1459	+	+	14	
				3					2
1401			20		1462			193	
				2					3
1404			199		1466			165	
				3					3
1408			171		1470			137	
				3					3
1412	+		143		1474			109	
				3					3
1416			115		1478	+		81	
				3					3
1420			87		1482			53	
				3					3
1424			59		1486	+		25	
				3					2
1428		+	31		1489			204	
				3					3
1432			3		1493			176	
				2					3

ປີອະທິກະ ສຸຣະທິນ	ອະທິ ກະມາດ	ອະທິ ກະວານ	ກຳມັດ ຊະພົນ	ຂັ້ນ ຈັກປີ	ປີອະທິກະ ສຸຣະທິນ	ອະທິ ກະມາດ	ອະທິ ກະວານ	ກຳມັດ ຊະພົນ	ຂັ້ນ ຈັກປີ
1497			148	3	1559	+		114	3
1501			120	3	1563			86	3
1505	+		92	3	1567	+	+	58	3
1509			64	3	1571			30	3
1513	+		36	3	1575	+		2	2
1517			8	2	1578	+	+	181	3
1520			187	3	1582			153	3
1524	+		159	3	1586	+		125	3
1528			131	3	1590			97	3
1532	+		103	3	1594	+		69	3
1536		+	75	3	1598		+	41	3
1540	+		47	3	1602			13	2
1544			19	2	1605	+		192	3
1547		+	198	3	1609		+	164	3
1551	+		170	3	1613	+		136	3
1555			142	3	1617			108	3

ປີອະທິກະ ສຸຣະທິນ	ອະທິ ກະມາດ	ອະທິ ກະວານ	ກຳມັດ ຊະພົນ	ອັ້ນ ຈັກປີ	ປີອະທິກະ ສຸຣະທິນ	ອະທິ ກະມາດ	ອະທິ ກະວານ	ກຳມັດ ຊະພົນ	ອັ້ນ ຈັກປີ
1621	+		80		1636			175	
				3					3
1625			52		1640	+	+	147	
				3					3
1629	+	+	24		1644			119	
				2					3
1632	+		203		1648	+		91	
				3					3

ໂຮມ : 104 ປີ, 45 ປີ, 18 ປີ.

ຂໍ້ສັງເກດ ໃນຈຳນວນ 400 ປີ ຫຼື ເຄິ່ງຮອບແຫ່ງຫຼັກໂຫຣາສາດຂອງບູຮານນັ້ນ ເປັນປີອະທິກະສຸຣະທິນ 104 ປີ ແລະໃນຈຳນວນ 104 ປີນັ້ນ ເປັນປີອະທິກະມາດນຳ 45 ປີ ແລະເປັນປີອະທິກະວານນຳ 18 ປີ ອີກປະການນຶ່ງ ອັດຕາຖະເຫຼີງສົກໝາຍໄວ້ວ່າ ປີທີ່ເປັນອະທິກະມາດ ແລະ ອະທິກະວານນຳກັນມີ 9 ປີ.

ກຳມັດຊະພົນແຫ່ງປີອະທິກະສຸຣະທິນໃດກໍດີ ໜ້ອຍກວ່າກຳມັດຊະພົນແຫ່ງປີອະທິກະວານທີ່ລ່ວງໄປແລ້ວນັ້ນ 28 ຕົວເປັນປົກກະຕິ ຕົວຢ່າງ ກຳມັດຊະພົນ 21 ແຫ່ງປີ 1258 ໜ້ອຍກວ່າກຳມັດຊະພົນ 49 ແຫ່ງ ປີ 1254 ໄປ 28 ຕົວແລະກຳມັດຊະພົນ 200 ແຫ່ງປີ 1261 ໜ້ອຍກວ່າກຳມັດຊະພົນ 21 ແຫ່ງປີ 1258 ໄປ 28 ຕົວ ແຕ່ໃນທີ່ນີ້ຕ້ອງເຂົ້າໃຈເລກດັ່ງນີ້ 207 + 21 = 228. 228 - 28 = 200 ແລ້ວກໍຕັ້ງຮອບໃໝ່ອີກ.

ເມື່ອປີອະທິກະສຸຣະທິນໃດມີກຳມັດຊະພົນຖະເຫຼີງສົກຕ່ຳກວ່າ 28 ແລ້ວ ກໍມີປີ 365 ວັນມາອັ້ນຮອບ ປີອະທິກະສຸຣະທິນຢູ່ພຽງ 2 ປີທີ່ນັ້ນ ແລະ ເມື່ອປີອະທິກະສຸຣະທິນໃດ ມີກຳມັດຊະພົນຖະເຫຼີງສົກແຕ່ຈຳນວນ 28 ຂຶ້ນໄປ ແລ້ວຈຶ່ງມີປີ 365 ວັນມາອັ້ນຮອບປີອະທິກະສຸຣະທິນຢູ່ເຖິງ 3 ປີສະເໝີ.

2. ປີອະທິກະມາດ

ປີອະທິກະມາດເປັນປີພິເສດອີກຢ່າງນຶ່ງ ເພາະມີ 13 ເດືອນ ຄືມີເດືອນ 8 ເຖິງສອງເດືອນ. ໄດ້ກ່າວມາແລ້ວວ່າ: ເດືອນທາງຈັນທຣະຄະຕິ 12 ເດືອນ ມີພຽງ 354 ວັນ ຄືໜ້ອຍກວ່າຈຳ

ນວນວັນແຫ່ງ 12 ເດືອນທາງສຸຣິຍະຄະຕິໄປ 11 ວັນ ແລະ ຖ້າບໍ່ແກ້ໄຂການຂາດກັນປີລະ 11 ວັນນັ້ນ ວັນຖະເຫຼີງສົກ ຈະເລື່ອນໄປຕົກໃສ່ມື້ໃດຂອງເດືອນໃດກໍໄດ້ ອີກປະການນຶ່ງ ລະດູກໍຈະເລື່ອນໄປຕົກຢູ່ໃນທຸກໆເດືອນດ້ວຍແລ້ວກໍຈະບໍ່ເປັນ ປົກກະຕິໄດ້ເລີຍ ໂດຍເຫດນັ້ນບູຮານຈຶ່ງບັນຍັດໃຫ້ມີປີອະທິກະມາດຕື່ມເຂົ້າທຸກ 2 ປີ ຫຼື ທຸກ 3 ປີ ເອົາແຕ່ດິຖີ ຖະເລີງສົກເປັນປະມານຄື:

ຖ້າປີໃດດິຖີຖະເຫຼີງສົກມີຈຳນວນແຕ່ 25 ຂຶ້ນໄປເຖິງ 29 ຫຼື ແຕ່ 0 ຂຶ້ນໄປເຖິງ 5 ແລ້ວ ປີນັ້ນຕ້ອງເປັນ ອະທິກະມາດ ເພາະປີອະທິກະມາດນັ້ນ ສັງຂານຂຶ້ນຢູ່ໃນຂອບເຂດແຕ່ເດືອນ 5 ແຮມ 10 ຄ່ຳ (ດິຖີ 25) ໄປເຖິງ ເດືອນ 6 ຂຶ້ນ 5 ຄ່ຳທ່ນັ້ນ (ຍົກເວັ້ນແຕ່ 2 ປີທີ່ຕິດກັນ ຫາກມີດິຖີຖະເຫຼີງສົກເປັນ 24 ແລະ 6 ດັ່ງຈະ ກ່າວຕໍ່ໄປນີ້)

ສ່ວນໄດ້ກ່າວມາແລ້ວນັ້ນຍັງບໍ່ຄົບຖ້ວນ ເທື່ອນີ້ຈະໄດ້ສະເໜີສ່ວນທີ່ຂາດເຂີນນັ້ນໃຫ້ຊາບຄື:

(1) ຖ້າປີໃດດິຖີຖະເຫຼີງສົກເປັນແຕ່ 25 ຂຶ້ນໄປເຖິງ 29 ແລ້ວ ປີນັ້ນວັນສັງຂານຂຶ້ນກໍຕົກຢູ່ໃນເດືອນ 5 ແລະ ຖ້າປີໃດດິຖີຖະເລີງສົກເປັນແຕ່ 0 ຂຶ້ນໄປເຖິງ 5 ແລ້ວ ປີນັ້ນວັນສັງຂານຂຶ້ນກໍຕົກຢູ່ໃນເດືອນ 6 (ອັນນີ້ເວົ້າ ຈຳເພາະແຕ່ປີທີ່ເປັນອະທິກະມາດ).

(2) ຂອບເຂດແຫ່ງວັນສັງຂານຂຶ້ນຂອງປີອະທິກະມາດທີ່ຈຳກັດໄວ້ນັ້ນ ເປັນຫຼັກແນ່ນອນໄດ້ ແຕ່ໃນເວລາປົກກະຕິ ຈະຖືເອົາເປັນຫຼັກຕະຫຼອດໄປບໍ່ໄດ້ ຕ້ອງຍົກເວັ້ນໂດຍພິເສດໃນຄາວທີ່ດິຖີແຫ່ງ 2 ປີຕິດກັນມີ 24 ແລະ 6 ລຽນກັນຢູ່ນັ້ນ ເມື່ອດິຖີຖະເຫຼີງສົກເປັນແບບນີ້ ວັນສັງຂານຂຶ້ນແຫ່ງປີອະທິກະມາດກໍຕ້ອງເລື່ອນໄປຕົກຢູ່ຕາມທີ່ດິຖີກຳໜົດໄວ້ນັ້ນ ຄືຕ້ອງເຄື່ອນຕົກ ຢູ່ເດືອນ 5 ແຮມ 9 ຄ່ຳ(ດິຖີ 24) ຫຼື ເດືອນ 6 ຂຶ້ນ 6 ຄ່ຳ (ດິຖີ 6) ໂດຍພິເສດ, ດັ່ງຕົວຢ່າງຕໍ່ໄປນີ້:

ປີ ຈ.ສ 1374 ດິຖີເປັນ 24 (ອະທິກະມາດ) ວັນສັງຂານຂຶ້ນຕົກຢູ່ເດືອນ 5 ແຮມ 9 ຄ່ຳວັນອັງຄານ. ປີ ຈ.ສ 1375 ດິຖີເປັນ 6. ປີ ຈ.ສ 1393 ດິຖີເປັນ 24. ປີ ຈ.ສ 1394 ດິຖີເປັນ 6 (ອະທິກະມາດ) ວັນສັງຂານຂຶ້ນຕົກຢູ່ເດືອນ 6 ຂຶ້ນ 6 ຄ່ຳ ວັນສຸກ.

ດິຖີຖະເຫຼີງສົກເປັນຈຳນວນ 24 ແລະ 6 ແຫ່ງ 2 ປີຕິດກັນດັ່ງນີ້ ຜາກົດວ່າເທິງໆ ຈຶ່ງຈະມີເທື່ອນຶ່ງ ເພາະໃນຈຳນວນ 500 ປີຕິດກັນທີ່ຂ້າພະເຈົ້າໄດ້ທຳອັດຕາຖະເຫຼີງສົກໄວ້ນັ້ນ ກໍເຫັນມີແຕ່ 2 ຄູ່ປີທີ່ເອົາມາເປັນຕົວຢ່າງຂ້າງເທິງນີ້.

(3) ເພື່ອຈະຊາບໄດ້ວ່າໃນຈຳນວນ 2 ປີທີ່ຕິດກັນ ເຊິ່ງມີດິຖີຖະເລີງສົກເປັນ 24 ແລະ 6 ນັ້ນ ປີໃດຈະເປັນ ອະທິກະມາດ ກໍຕ້ອງສັງເກດເບິ່ງຈຳນວນມາສະເກນເປັນຫຼັກ ດັ່ງຈະອະທິບາຍໃຫ້ຊາບຕໍ່ໄປນີ້.

(4) ຖ້າປີອະທິກະມາດໃດ ສັງຂານຫາກຂຶ້ນເດືອນ 5 ແລ້ວມາສະເກນແຫ່ງປີນັ້ນກໍໜ້ອຍກວ່າມາສະເກນ ແຫ່ງປີຈະມາເຖິງນັ້ນ 13 ເດືອນ ຕົວຢ່າງ:

ປີອະທິກະມາດ 1312 ດິຖີເປັນ 28 ແລະມາສະເກນເປັນ 16227 ກໍໜ້ອຍກວ່າມາສະເກນ 16240 ແຫ່ງປີ 1313 ທີ່ຈະມາເຖິງນັ້ນ 13 ເດືອນ.

ປີອະທິກະມາດ 1374 ດິຖີເປັນ 24 ແລະມາສະເກນເປັນ 16994 ໜ້ອຍກວ່າມາສະເກນ 17007 ແຫ່ງປີ 1375 ທີ່ຈະມາເຖິງນັ້ນ 13 ເດືອນ.

(5) ຖ້າປີອະກະທິກະມາດໃດ ສັງຂານຂຶ້ນເດືອນ 6 ແລ້ວມາສະເກນແຫ່ງປີນັ້ນກໍຕ້ອງໜ້ອຍກວ່າມາສະເກນ ແຫ່ງປີຈະມາເຖິງ 12 ເດືອນ ແຕ່ຫຼາຍກວ່າມາສະເກນແຫ່ງປີທີ່ລ່ວງໄປແລ້ວ 13 ເດືອນ ຄືກົງກັນຂ້າມກັບປີທີ່ສັງຂານຂຶ້ນເດືອນ 5 ຕົວຢ່າງ:

ປີອະທິກະມາດ 1307 ດິຖີເປັນ 3 ແລະມາສະເກນເປັນ 16166 ກໍໜ້ອຍກວ່າມາສະເກນ 16178 ແຫ່ງປີ 1308 ທີ່ຈະມາເຖິງນັ້ນ 12 ເດືອນ ແຕ່ຫຼາຍກວ່າມາສະເກນຈຳນວນ 16153 ແຫ່ງປີ 1306 ທີ່ລ່ວງໄປແລ້ວ 13 ເດືອນ.

ປີອະທິກະມາດ 1394 ດິຖີເປັນ 6 ແລະມາສະເກນ ເປັນ 17242 ກໍໜ້ອຍກວ່າມາສະເກນຈຳນວນ 17254 ແຫ່ງປີ 1395 ທີ່ຈະມາເຖິງນັ້ນ 12 ເດືອນແຕ່ຫຼາຍກວ່າມາສະເກນ 17229 ແຫ່ງປີ 1393 ທີ່ລ່ວງ ມາແລ້ວ 13 ເດືອນ.

(6) ປີອະທິກະມາດວຽນມາເຖິງທຸກ 2 ຫຼື 3 ປີຕາມລຳດັບທີສະເໜີໄວ້ໃນຕາລາງຕໍ່ໄປນີ້:

ປີອະທິກະ ມາດ	ອະທິກະ ສຸຣະທິນ	ອະທິ ກະວານ	ດິຖີ	ຂັ້ນ ຈັກປີ	ປີອະທິກະ ມາດ	ອະທິກະ ສຸຣະທິນ	ອະທິ ກະວານ	ດິຖີ	ຂັ້ນ ຈັກປີ
1250			2		1269	+		3	
	+			1					1
1252			25		1271			25	
				2					2
1255			28		1274	+		1	
				2					2
1258	+	+	1		1277			4	
				2					1
1261	+		4		1280			27	
				1					2
1263		+	27		1282	+		29	
				2					2
1266			0		1285			3	
				2					1

ປີອະທິກະ ມາດ	ອະທິກະ ສຸຣະທິນ	ອະທິ ກະວານ	ດິຖີ	ອັ້ນ ຈັກປີ	ປີອະທິກະ ມາດ	ອະທິກະ ສຸຣະທິນ	ອະທິ ກະວານ	ດິຖີ	ອັ້ນ ຈັກປີ
1290			25		1334			2	
				2					2
1293			29		1337			5	
				2					1
1296	+		1		1339	+		27	
				2					2
1299		+	5		1342			0	
				1					2
1301			27		1345			4	
				2					1
1304	+	+	0		1347			26	
				2					2
1307			3		1350	+		29	
				1					2
1309		+	26		1353			2	
				2					1
1312	+		28		1355			25	
				2					2
1315		+	2		1358	+		27	
				2					2
1318			5		1361		+	1	
				1					2
1320		+	28		1364			4	
				2					1
1323	+		0		1366	+	+	26	
				2					2
1326			3		1369			29	
				1					2
1328			26		1372			2	
				2					1
1331	+		28		1374	+		24	
				2					2

ປີອະທິກະມາດ	ອະທິກະສຸຣະທິນ	ອະທິກະວານ	ດິຖີ	ອັ້ນຈັກປີ	ປີອະທິກະມາດ	ອະທິກະສຸຣະທິນ	ອະທິກະວານ	ດິຖີ	ອັ້ນຈັກປີ
1377	+		28		1421			5	
				2					1
1380			1		1423		+	27	
				2					2
1383			4		1426			0	
				1					2
1385	+		26		1429			3	
				2					1
1388			29		1431			25	
				2					2
1391			3		1434			28	
				1					2
1393			24		1437			2	
				2					2
1396			28		1440			5	
				2					1
1399			1		1442			25	
				2					2
1402		+	5		1445			0	
				1					2
1404	+		26		1448			4	
				2					1
1407		+	0		1450			25	
				2					2
1410			3		1453			29	
				1					2
1412	+		25		1456			2	
				2					2
1415			28		1459	+	+	5	
				2					1
1418		+	2		1461			27	
				2					2

ປີອະທິກະມາດ	ອະທິກະສຸຣະທິນ	ອະທິກະວານ	ດິຖີ	ອັ້ນຈັກປີ	ປີອະທິກະມາດ	ອະທິກະສຸຣະທິນ	ອະທິກະວານ	ດິຖີ	ອັ້ນຈັກປີ
1551	+		3		1594	+		28	
				1					2
1553			25		1597			2	
				2					2
1556			29		1600			5	
				2					1
1559	+		1		1602	+		27	
				2					2
1562		+	5		1605	+		0	
				1					2
1564			27		1608			4	
				2					1
1567	+	+	0		1610			26	
				2					2
1570			3		1613	+		29	
				1					2
1572			26		1616			2	
				2					1
1575	+		28		1618			25	
				2					2
1578	+	+	2		1621	+		27	
				2					2
1581			5		1624		+	1	
				1					2
1583		+	28		1627			4	
				2					1
1586	+		0		1629	+	+	26	
				1					2
1589			3		1632	+		29	
				1					2
1591			26		1635			2	
				2					1

24/VII ห้ามจำหน่าย

ອະທິກະມາດ	ອະທິກະສຸຣະທິນ	ອະທິກະວານ	ດິຖີ	ອັ້ນຈັກປີ	ອະທິກະມາດ	ອະທິກະສຸຣະທິນ	ອະທິກະວານ	ດິຖີ	ອັ້ນຈັກປີ
1637			25		1647			4	
				2					1
1640	+	+	28		1648	+		26	
				2					
1643			1						
				2					

ໂຮມ ປີອະທິກະມາດ 148 ປີ, 45 ປີ, 27 ປີ.

ຂໍ້ສັງເກດ ໃນຈຳນວນ 400 ປີ ຫຼື ເຄິ່ງຮອບແຫ່ງຫຼັກໂຫຣາສາດບູຮານນັ້ນ ເປັນປີອະທິກະມາດ 148 ປີແລະໃນຈຳນວນ 148 ປີນັ້ນ ເປັນອະທິກະສຸຣະທິນນຳ 45 ປີ ແລະອະທິກະວານນຳ 27 ປີ.

ອີກປະການນຶ່ງ ປີທີ່ເປັນອະທິກະມາດ, ອະທິກະສຸຣະທິນ ແລະ ອະທິກະວານທັງ 3 ຢ່າງຢູ່ນຳກັນ ມີ 9 ປີ.

ດິຖີຈະເຫຼືອສິກອັນເປັນຫຼັກແຫ່ງປີອະທິກະມາດບໍ່ຫຼຸດ ຫຼື ທະວີຈຳນວນເປັນປີກະຕິຄືກັນກັບຈຳນວນກຳມັດຊະພົນ ອັນເປັນຫຼັກແຫ່ງປີອະທິກະສຸຣະທິນຕາມທີ່ເຫັນມາແລ້ວນັ້ນ.

3. ປີອະທິກະວານ

ປີອະທິກະວານເປັນປີພິເສດອີກຢ່າງນຶ່ງ ເພາະມີເດືອນ 7 ເຕັມ 30 ວັນ ທີ່ກັນກັບເດືອນທີ່ໝາຍເລກຄູ່ ກ່ຽວກັບປີອະທິກະວານນັ້ນໄດ້ກ່າວມາແລ້ວວ່າ:

(ກ) ເດືອນທາງຈັນທຣະຄະຕິ 12 ເດືອນມີແຕ່ 354 ວັນ ຄືຂາດຈາກຈຳນວນ 365 ວັນແຫ່ງ 12 ເດືອນ ທາງສຸຣິຍະຄະຕິໄປ 11 ວັນ ເພາະສະນັ້ນຕຳຣາຈຶ່ງບັນຍັດໃຫ້ມີປີອະທິກະມາດມາຕື່ມເຂົ້າທຸກ 2 ປີຫຼື 3 ປີຕາມ ທີ່ເຫັນມາແລ້ວເພື່ອໃຫ້ຈຳນວນວັນທາງຈັນທຣະຄະຕິ ທີ່ກັບຈຳນວນວັນທາງສຸຣິຍະຄະຕິທຸກໆປີເປັນປີກະຕິສະເໝີ.

(ຂ) ເມື່ອຕື່ມອະທິກະມາດເຂົ້າດັ່ງນັ້ນແລ້ວ ຈຳນວນວັນທັງສອງທາງກໍທີ່ກັນ ແຕ່ຖ້າຄຶດລະອຽດກວ່ານັ້ນໄປແລ້ວ ກໍເຫັນໄດ້ວ່າລະຍະເວລາປີທາງຈັນທຣະຄະຕິຍັງຂາດຈາກລະຍະເວລາແຫ່ງປີທາງສຸຣິຍະຄະຕິໄປອີກ 6 ຊົ່ວໂມງເສດ.

ເມື່ອຈະແກ້ໄຂລະຍະເວລາທັງ 2 ນັ້ນໃຫ້ຖືກຕ້ອງກັນໄດ້ໂດຍກົງ ຕຳຣາຈຶ່ງບັນຍັດໃຫ້ມີປີອະທິກະວານເຂົ້າມາຂັ້ນທຸກ 4 ປີ, 5 ປີ ຫຼື 6 ປີ ແລ້ວແຕ່ຈຳນວນອະວະມານຖະເຫຼີງສົກເປັນປະມານຄື:

ເມື່ອປີປົກກະຕິສຸຣະທິນໃດມີອະວະມານຖະເຫຼີງສົກແຕ່ 1ຂຶ້ນໄປເຖິງ 137ແລ້ວປີນັ້ນກໍຕ້ອງເປັນອະທິກະວານ ແລະເມື່ອປີອະທິກະສຸຣະທິນໃດມີອະວະມານຖະເຫຼີງສົກແຕ່ 1 ຂຶ້ນໄປເຖິງ 126 ແລ້ວ ປີນັ້ນກໍຕ້ອງເປັນອະທິກະວານຄືກັນ ແຕ່ຖ້າດີຖີຖະເຫຼີງສົກ ໝາຍໄວ້ວ່າ ເປັນອະທິກະມາດ ແລະອະວະມານຖະເຫຼີງສົກ ໝາຍອີກວ່າເປັນອະທິກະວານນຳ ແລ້ວຕຳຣາບັນຍັດວ່າ ປີນັ້ນໃຫ້ເປັນໄດ້ແຕ່ອະທິກະມາດຢ່າງດຽວ ສ່ວນອະທິກະວານ ຫຼື ເດືອນ 7 ເຕັມ 30 ວັນນັ້ນໃຫ້ຍ້າຍໄປໃສ່ປີຈະມາເຖິງ ຫຼື ປີທີ່ຢູ່ຂ້າງໜ້າ ທັງນີ້ສຸດແລ້ວແຕ່ຈະຖືກຕ້ອງຕາມລຳດັບວັນແຫ່ງສັບປະດາສຸດທ້າຍຂອງປີໃດປີນຶ່ງໃນຈຳນວນສອງປີນັ້ນເປັນປະມານ.

ການທີ່ໄດ້ກ່າວມາພຽງທໍ່ນີ້ ຍັງຂາດເຂີນຢູ່ຫຼາຍປະການ ດັ່ງຈະນຳມາສະເໜີຕໍ່ໄປນີ້.

ກ. ຫຼັກໃສ່ປີອະທິກະວານທາງໄທ

ຕຳຣາໂຫຣາສາດເຮົາຖືເອົາຈຳນວນອະວະມານຖະເຫຼີງສົກດັ່ງກ່າວມາແລ້ວນັ້ນເປັນຫຼັກສຳຫຼັບໃສ່ປີອະທິກະວານ ແຕ່ໂຫນໄທຖືເອົາຣຶກວັນເຂົ້າພັນສາ ເປັນຫຼັກສຳຫຼັບໃສ່ປີອະທິກະວານດັ່ງ ຈະສະເໜີຕໍ່ໄປນີ້:

ປະຕິທິນໂຫຣາສາດ ຂອງຫຼວງອັດຖວາທີທັມມະປະຫວັດ (ວິຊຽນ ຈັນທອມ) ກ່າວໄວ້ໃນໜ້າ 76 ວ່າ:

ອະທິກະມາດ ອະທິກະວານ ນອກຈາກຈະຕ້ອງຕື່ມຂຶ້ນ ເພື່ອໃຫ້ປີທາງຈັນທຣະຄະຕິກັບປີທາງສຸຣິຍະຄະຕິ ທັນກັນດັ່ງກ່າວມາແລ້ວນັ້ນ ຍັງມີເຫດສຳຄັນອີກປະການນຶ່ງ ຄືການຈຳພັນສາແຫ່ງພິກຂຸສົງໃນພຸດທະສາສະໜາ ພະສາສະດາຫົງອະນຸຍາດໃຫ້ພິກຂຸສົງຈຳພັນສາໃນວະສັນຕະລະດູ ໂດຍມີພະບາລີວ່າໄວ້ໃນພະວິໄນປີດົກ ມະຫາວັກວັດສູປະນາຍິກະຂັນທະກະ ໜ້າ 272 - 273 ວ່າ "ພິກຂຸທັງຫຼາຍ ວັນເຂົ້າພັນສາມີສອງຢ່າງຄືວັນເຂົ້າພັນສາຕົ້ນ 1 ວັນເຂົ້າພັນສາຫຼັງ 1 ວັນເຂົ້າພັນສາຕົ້ນເພິ່ນເຂົ້າຈຳເມື່ອພະຈັນເພັງສະເວີຍລຶກອາສາລະທະລ່ວງໄປແລ້ວວັນນຶ່ງ (ຄືເດືອນ 8 ແຮມຄ່ຳ 1) ວັນເຂົ້າວັດສາຫຼັງເພິ່ງເຂົ້າຈຳເມື່ອພະຈັນເພັງສະເຫວີຍຣຶກອາສາລະທະລ່ວງໄປແລ້ວເດືອນນຶ່ງ ພິກຂຸທັງຫຼາຍ ເພິ່ງຈຳພັນສາຕົ້ນ ຫຼື ພັນສາຫຼັງຢູ່ຕະຫຼອດໄຕມາດ (3 ເດືອນ) ບໍ່ເພິ່ງທ່ຽວຈາຣຶກໄປ ພິກຂຸໃດເພິ່ງທ່ຽວຈາຣຶກໄປ ພິກຂຸນັ້ນຕ້ອງອາບັດທຸກກົດ.

ແລະກ່າວໄວ້ໃນໜ້າ 23 ອີກວ່າ ເລື່ອງອະທິກະວານ ພະບາດສົມເດັດພະຈຸລະຈອມເກົ້າ

ຫົງ ອະທິບາຍໄວ້ໃນຕຳຣາອະທິກະວານຕອນນຶ່ງວ່າ:

"ລາວປີໃຫນເຂົາເຫັນວ່າ ວັນເຂົ້າພັນສາ ດິຖີຍັງບໍ່ເຕັມ 15 ຫຼື ເພິ່ງເຕັມ ນາທີອ່ອນ ຫຼື ຣືກວັນເຂົ້າພັນສາບໍ່ເຖິງ 20 (ຣືກອາສາລະຫະ) ແລ້ວມັກຕື່ມເດືອນ 7 ເປັນເດືອນເຕັມ ລ້ວນຮຽກວ່າ ອະທິກະວານ ມີລະຍະ 5 ປີ 6 ປີ ຫຼື ກ້າວລ່ວງມາເຖິງ 7 ປີຈຶ່ງມີຕໍ່ໄປອີກ 3 ປີ ເຂົາກໍວາງເດືອນ 7 ເຕັມ ແລະ ຕໍ່ໆໄປ"

ການທີ່ໂຫນໄທເອົາຣືກເປັນຫຼັກສຳຫຼັບໃສ່ອະທິກະວານ ເພື່ອໃຫ້ຖືກຕ້ອງກັບວັນເຂົ້າພັນສານັ້ນ ຂ້າພະເຈົ້າເຫັນວ່າຜິດຈາກຕຳຣາໂຫຣາສາດໄປ ເພາະທຳໃຫ້ປະຕິທິນເຄື່ອນໄຫວ ບໍ່ກົງກັບດິຖີຖະເຫຼີງສົກ ທີ່ຄຳນວນໄດ້ຕາມຫຼັກຂໍ້ບັນຍັດຂອງຕຳຣາໂຫຣາສາດ ດັ່ງຂ້າພະເຈົ້າຈະສະເໜີຫຼັກຖານໃຫ້ຊັບນະສູດຕໍ່ໄປນີ້:

ຈ.ສ	ອະວະມານ	ເດືອນ 7 ເຕັມ		ດິຖີ	ວາຣະ	ວັນຖະເຫຼີງສົກຕາມປະຕິທິນໄທ ເຊິ່ງຜິດຈາກດິຖີຖະເຫຼີງສົກ 1 ຄ່ຳ
		ໄທ	ລາວ			
1253	28	...	ເຕັມ	6	3	
1254	583	ເຕັມ	...	16	4	ເດືອນ 5 ແຮມ 2 ຄ່ຳ(ແຮມຄ່ຳ1ຈຶ່ງກົງກັບດິຖີ)
1258	46	ເຕັມ	ເຕັມ	1	2	" 6 ຂຶ້ນ 2 ຄ່ຳ(ຂຶ້ນ 1 ຈຶ່ງກົງກັບດິຖີ)
1259	612	...	...	12	4	" 5 " 13 ຄ່ຳ(ຂຶ້ນ 12 ")
1260	535	ເຕັມ	...	23	5	" 5 " 9 ຄ່ຳ (ຂຶ້ນ 8 ")
1263	75	...	ເຕັມ	27	2	
1265	493	ເຕັມ	...	18	4	" 5 ແຮມ 4 ຄ່ຳ(ແຮມ 3 ")
1268	93	...	ເຕັມ	22	1	
1269	648	...	...	3	2	" 6 " 4 ຄ່ຳ (ແຮມ 3 ")
1270	522	ເຕັມ	...	14	4	" 5 ຂຶ້ນ 15 " (ຂຶ້ນ 14 ")
1273	111	...	ເຕັມ	17	7	
1274	677	...	...	28	2	" 5 ແຮມ 14 " (ແຮມ 13 ")
1275	540	...	...	9	3	" 5 ຂຶ້ນ 10 ຄ່ຳ(ຂຶ້ນ 9 ")
1276	403	ເຕັມ	...	20	4	" 5 ແຮມ 6 " (ແຮມ 5 ")
1279	3	ເຕັມ	ເຕັມ	24	1	
1284	21	...	ເຕັມ	19	7	
1285	576	...	...	29	1	" 6 ຂຶ້ນ 1 ຄ່ຳ (ເດືອນ 5 ແຮມ 14 ຄ່ຳຈຶ່ງຖືກ)
1286	450	...	...	11	1	" 5 " 12 " (ຂຶ້ນ 11 ຄ່ຳຈຶ່ງກົງກັບ ດິຖີ)

ຕົວຢ່າງຂ້າງເທິງນີ້ສະແດງໃຫ້ເຫັນວ່າການຖືເອົາຣຶກສຳຫຼັບໃສ່ປີອະທິກະວານນັ້ນ ທຳໃຫ້ວັນສັງຂານຂຶ້ນ ຫຼື ວັນຖະເຫຼີງສົກຜິດຈາກດິຖີຖະເຫຼີງສົກໄປຫຼາຍປີຕິດໆກັນໄດ້ ເຊິ່ງຜິດຈາກຂໍ້ບັນຍັດຂອງໂຫຣາສາດ ອີກປະການນຶ່ງຈັງຫວະແຫ່ງຮອບປີອະທິກະວານກໍບໍ່ມີລະບຽບແຕ່ຢ່າງໃດເລີຍ ດັ່ງຈະສັງເກດໄດ້ຕໍ່ໄປນີ້:

ຈັງຫວະແຫ່ງປີທີ່ມີ ເດືອນ 7 ເຕັມ							
ປີອະທິກະວານທາງໄທ				ປີອະທິກະວານທາງລາວ			
1254				1253			
	ອັ້ນ	3	ປີ		ອັ້ນ	4	ປີ
1258				1258			
	"	1	"		"	4	"
1260				1263			
	"	4	"		"	4	"
1265				1268			
	"	4	"		"	4	"
1270				1273			
	"	5	"		"	5	"
1276							
	"	2	"				
1279				1279			
	"	7	"		"	4	"
1287				1284			
	"	3	"		"	4	"
1291				1289			
	"	3	"		"	4	"
1295				1294			

ຈັງຫວະແຫ່ງຮອບປີອະທິກະວານທາງລາວ ເຊິ່ງຖືເອົາອະວະມານຖະເຫຼີງສົກເປັນຫລັກ ວຽນມາເຖິງມາ 4 ປີ ຫຼື 5 ປີສະເໝີ ແຕ່ປີອະທິກະວານທາງໄທເຊິ່ງຖືເອົາຣຶກ ແຫ່ງວັນເຂົ້າພັນສາເປັນຫຼັກນັ້ນ ວຽນມາເຖິງໂດຍບໍ່ເປັນປົກກະຕິ ຄືອັ້ນປີດຽວກໍມີອັ້ນ 2 ປີກໍມີ ອັ້ນ 3 ປີກໍມີ ອັ້ນເຖິງ 7 ປີກໍມີ.

ໂດຍເຫດນີ້ຂ້າພະເຈົ້າຈຶ່ງເຂົ້າໃຈວ່າ ການທີ່ໂຫນໄທຖືເອົາເກນແຫ່ງວັນເຂົ້າພັນສາມາ ເປັນຫຼັກໃສ່ປີອະທິກະວານນັ້ນ ຜິດຈາກຂໍ້ບັນຍັດຂອງໂຫຣາສາດໄປ ອີກປະການນຶ່ງຫຼັກຂອງໂຫນໄທນັ້ນເຫັນຈະບໍ່ແນ່ນອນພໍທໍ່ໃດ ເພາະຜາກົດວ່າໂຫນໄທ ໄດ້ໃສ່ປີອະທິກະວານຜິດໄປຫຼາຍເທື່ອມາແລ້ວ ດັ່ງມີຫຼັກຖານຢູ່ໃນຈົດໝາຍເຫດໂຫນນັ້ນເອງ (ປະຊຸມພົງສາວະດານພາກທີ 8) ຄື:

(1) ໜ້າ 5: ປີຊວດ ຈ.ສ 1094 ໃນທີ່ນີ້ຕື່ມອະທິກະວານອີກ 2 ປີ ຄຽງກັນ.

(2) ໜ້າ 7: ປີກຸນ ຈ.ສ 1129 ປີນີ້ມີອະທິກະວານໂຫນບໍ່ໄດ້ຈົດໝາຍ.

(3) ໜ້າ11: ປີຊວດ ຈ.ສ 1154 ຂຸນຍານໂຍກໃສ່ອະທິກະວານຜິດ ໝູ່ໂຫນປະຕິທິນຕິຕຽນ.

ເພື່ອຈະໃຫ້ສັງເກດຮອບປີອະທິກະວານໄດ້ໂດຍກວ້າງຂວາງ ຂ້າພະເຈົ້າໄດ້ເອົາປີທີ່ເປັນອະທິກະວານ ຕາມຫຼັກໂຫຣາສາດເຊິ່ງມີຢູ່ໃນ 400 ປີມາໄວ້ໃຫ້ພິຈາລະນາຕໍ່ໄປນີ້:

ອະທິກະວານ ຈ.ສ	ອະທິກະ ສຸຣະທິນ	ອະທິກະ ມານ	ອະວະ ມານ	ອັ້ນ ຈັກປີ	ອະທິກະວານ ຈ.ສ	ອະທິກະ ສຸຣະທິນ	ອະທິກະ ມານ	ອະວະ ມານ	ອັ້ນ ຈັກປີ
				3					4
1253			28		1304			104	
		+		4					4
1258	+		46		1309		+	133	
		+		4					5
1263			75		1315		+	14	
				4					4
1268			93		1320		+	43	
				4					4
1273	+		111		1325			61	
				5					4
1279			3		1330			79	
				4					4
1284			21		1335	+		97	
				4					4
1289	+		39		1340			126	
				4					5
1294			68		1346	+		7	
				4					4
1299		+	86		1351			36	

ອະທິກະວານ ຈ.ສ	ອະທິກະ ສຸຣະທິນ	ອະທິກະ ມານ	ອະວະ ມານ	ອັ້ນ ຈັກປີ	ອະທິກະວານ ຈ.ສ	ອະທິກະ ສຸຣະທິນ	ອະທິກະ ມານ	ອະວະ ມານ	ອັ້ນ ຈັກປີ
				4					4
1356			54		1438			123	
				4					5
1361		+	72		1444			15	
				4					4
1366	+	+	90		1449			33	
				4					4
1371			119		1454			51	
				4					4
1376			137		1459	+	+	69	
				5					4
1382			29		1464		+	98	
				4					4
1387			47		1469		+	116	
				4					5
1392			65		1475		+	8	
				4					4
1397	+		83		1480		+	26	
				4					4
1402		+	112		1485			44	
				4					4
1407		+	130		1490			73	
				5					4
1413			22		1495			91	
				4					4
1418		+	40		1500			109	
				4					5
1423			58		1506			1	
				4					4
1428	+		76		1511			19	
				4					4
1433			105		1516			37	

ອະທິກະວານ ຈ.ສ	ອະທິກະ ສຸຣະທິນ	ອະທິກະ ມານ	ອະວະ ມານ	ອັ້ນ ຈັກປີ	ອະທິກະວານ ຈ.ສ	ອະທິກະ ສຸຣະທິນ	ອະທິກະ ມານ	ອະວະ ມານ	ອັ້ນ ຈັກປີ
1521		+	66	4	1588			70	4
1526		+	84	4	1593			88	4
1531			102	4	1598	+		106	4
1536	+		120	4	1603			135	4
1542			12	5	1609	+		16	5
1547	+		30	4	1614			45	4
1552			59	4	1619			63	4
1557			77	4	1624		+	81	4
1562		+	95	4	1629	+	+	99	4
1567	+	+	113	4	1634			128	4
1573			5	5	1640	+	+	9	5
1578	+	+	23	4	1645			38	4
1583		+	52	4	1650			56	4

ໂຮມ: 77 ປີ 18 ປີ 27 ປີ

ຂໍ້ສັງເກດ

ໃນຈຳນວນ 77 ປີອະທິກະວານແຫ່ງຮອບ 400 ປີນັ້ນມີປີອະທິກະສຸຣະທິນນຳ 18 ປີ ແລະ ເປັນອະທິກະມາດນຳ 27 ປີ ອີກປະການນຶ່ງ ໃນຈຳນວນປີທີ່ເປັນອະທິກະມາດ 26 ປີ ນັ້ນ ມີ 9 ປີທີ່

ອັດຕາຖະເຫຼິງສົກພາຍໄວ້ວ່າ ເປັນປີອະທິກະສຸຣະທິນ, ອະທິກະມາດ ແລະ ອະທິກະວານ ທັງ 3 ຢ່າງພ້ອມກັນ.

ປີອະທິກະວານວຽນມາເຖິງຕາມຈັງຫວະດັ່ງນີ້ (ນັບແຕ່ປີຈຸລະສັກຣາດ 1279 ໄປ)

ອັ້ນ	4	ປີ	6	ເທື່ອແລ້ວອັ້ນ	5	ປີ	1	ເທື່ອ	(1309 - 1315)
ອັ້ນ	4	ປີ	5	ເທື່ອແລ້ວອັ້ນ	5		1	ເທື່ອ	(1340 - 1346)
ອັ້ນ	4	ປີ	5	ເທື່ອແລ້ວອັ້ນ	5		1	ເທື່ອ	(1347 - 1377)
ອັ້ນ	4	ປີ	5	ເທື່ອແລ້ວອັ້ນ	5		1	ເທື່ອ	(1407 - 1413)
ອັ້ນ	4	ປີ	5	ເທື່ອແລ້ວອັ້ນ	5		1	ເທື່ອ	(1438 - 1444)
ອັ້ນ	4	ປີ	5	ເທື່ອແລ້ວອັ້ນ	5		1	ເທື່ອ	(1469 - 1475)
ອັ້ນ	4	ປີ	5	ເທື່ອແລ້ວອັ້ນ	5		1	ເທື່ອ	(1500 - 1506)
ອັ້ນ	4	ປີ	6	ເທື່ອແລ້ວອັ້ນ	5		1	ເທື່ອ	(1536 - 1543)
ອັ້ນ	4	ປີ	5	ເທື່ອແລ້ວອັ້ນ	5		1	ເທື່ອ	(1467 - 1573)
ອັ້ນ	4	ປີ	5	ເທື່ອແລ້ວອັ້ນ	5		1	ເທື່ອ	(1603 - 1609)
ອັ້ນ	4	ປີ	5	ເທື່ອແລ້ວອັ້ນ	5		1	ເທື່ອ	(1634 - 1640)

ໂດຍສ່ວນຫຼາຍປີອະທິກະວານວຽນມາເຖິງທຸກ 5 ປີ ແຕ່ເຫິງໆ ກໍມີຮອບ 6 ປີເອົ້າມາອັ້ນເທື່ອນຶ່ງ ຮອບ 6 ປີນັ້ນ ຜາກົດວ່າເນື່ອງມາຈາກຈຳນວນອະວະມານຖະເຫຼິງສົກ ຄືປີອະທິກະວານໃດອະວະມານຖະເຫຼິງສົກ ເປັນຈຳນວນແຕ່ 109 ຂຶ້ນໄປແລ້ວ ຈຶ່ງມີປີທີ່ບໍ່ເປັນອະທິກະວານອັ້ນຢູ່ 5 ປີສະເໝີ ສ່ວນຈຳນວນອະວະມານຖະເຫຼິງສົກ 109 ຕົວນັ້ນ ຕ່ຳກວ່າຂີດສູງສຸດແຫ່ງອະວະມານທີ່ພາຍປີອະທິກະວານ 137 ຕົວ ໄປ 28 ຕົວ.

ອະວະມານແຫ່ງປີອະທິກະວານໃດໆກໍດີ ມີຈຳນວນມາກກວ່າອະວະມານແຫ່ງປີອະທິກະວານທີ່ລ່ວງໄປແລ້ວນັ້ນ 18 ຫຼື 29 ຕົວສະເໝີ ດັ່ງອະວະມານ 46 ແຫ່ງປີ 1258 ຫຼາຍກວ່າອະວະມານ 28 ແຫ່ງປີອະທິກະວານ 1253 ໄປ 18 ຕົວສ່ວນອະວະມານຫຼາຍຂຶ້ນ 29 ຕົວນັ້ນ ສ່ວນຫຼາຍມັກຈະໄດ້ແກ່ປີ ອະທິກະວານເຊິ່ງຢູ່ຫຼັງປີອະທິກະວານທີ່ເປັນອະທິກະສຸຣະທິນນຳ ດັ່ງອະທິກະມາດ 75 ແຫ່ງປີ ຈ.ສ 1263 ຫຼາຍກວ່າອະວະມານ 46 ແຫ່ງປີອະທິກະວານ ແລະ ອະທິກະສຸຣະທິນ 1258 ໄປ 29 ຕົວ ດັ່ງນີ້ເປັນຕົ້ນ.

ຂ. ວິທີຍ້າຍເດືອນ 7 ເຕັມຈາກປີທີ່ເປັນອະທິກະມາດໄປເອົ້າປີອື່ນ

ການຍ້າຍເດືອນ 7 ເຕັມ ຫຼື ອະທິກະວານຈາກປີທີ່ເປັນອະທິກະມາດ ໄປເອົ້າປີອື່ນນັ້ນຖື ເອົາວັນເດືອນ 5 ຂຶ້ນ 1 ຄໍ່າແຫ່ງສັງຂານ ປີທີ່ຢູ່ກ່ອນໜ້າ ແລະ ແຫ່ງສັງຂານ ປີທີ່ຢູ່ຫຼັງປີທີ່ເປັນອະທິກະມາດນັ້ນເປັນຫຼັກພິຈາລະນາ.

ແຕ່ຖ້າສັງຂານ ດັ່ງກ່າວຫາກຕົກໃນເດືອນ 6 ແລ້ວ ເດືອນ 5 ທີ່ກ່າວອ້າງນັ້ນກໍແມ່ນເດືອນ 5 ເຊິ່ງຢູ່ກ່ອນໜ້າສັງຂານນັ້ນ.

ເພື່ອຈະຮູ້ໄດ້ວ່າເດືອນ 5 ແຫ່ງສັງຂານປີໃດຈະຂຶ້ນ 1 ຄໍ່າວັນໃດນັ້ນໃຫ້ສັງເກດເບິ່ງເດືອນ 5 ເຊິ່ງຢູ່ກ່ອນໜ້າວ່າ ສັງຂານແຫ່ງປີນັ້ນຂຶ້ນ 1 ຄໍ່າວັນໃດເສຍກ່ອນ ເມື່ອຮູ້ແລ້ວໃຫ້ນັບ 1 ແຕ່ວັນຂຶ້ນຄໍ່າ 1 ນັ້ນໄປຕາມຈໍານວນທີ່ສະເໜີຕໍ່ໄປນີ້ຄື:

(1) ສໍາຫຼັບປີທີ່ບໍ່ເປັນອະທິກະມາດ ຫຼື ອະທິກະວານ

ເຖິງວ່າຈະເປັນປີອະທິກະສຸຣະທິນກໍຕາມ: ໃຫ້ນັບ 1 ໄປເຖິງ 5 ເມື່ອວັນຖ້ວນ 5 ກົງກັບວັນໃດ ເດືອນ 5 ແຫ່ງ ສັງຂານປີຈະມາເຖິງກໍຂຶ້ນ 1 ຄໍ່າວັນນັ້ນ.

<u>ຕົວຢ່າງ:</u> ເດືອນ 5 ແຫ່ງສັງຂານປີ 1312 ຈະຂຶ້ນ 1 ຄໍ່າ ວັນໃດ? ຕ້ອງເບິ່ງວ່າເດືອນ 5 ແຫ່ງສັງຂານ ປີ 1311 ຂຶ້ນ 1 ຄໍ່າ ວັນໃດເສຍກ່ອນປີ 1311 ບໍ່ເປັນອະທິກະມາດ ເພາະດິຖີຖະເຫຼືອສິກ ເປັນ 17 ຕໍ່າກວ່າ 25 ແລະ ສູງກວ່າ 5 ທັງບໍ່ເປັນອະທິກະວານ ເພາະອະວະມານຖະເຫຼືອສິກ 511 ສູງກວ່າ 137 ສ່ວນດິຖີ 17 ແລະ ວາຣະ 6 ນັ້ນ ໝາຍຄວາມວ່າ ສັງຂານປີ 1311 ຂຶ້ນເດືອນ 5 ແຮມ 2 ຄໍ່າວັນ ສຸກ.

ດັ່ງນັ້ນ ເດືອນ 5 ກໍຂຶ້ນຄໍ່າ 1 ວັນພຸດ ເຮົາກໍຕ້ອງນັບ 1 ວັນພຸດ, 2 ວັນພະຫັດ, 3 ວັນສຸກ, 4 ວັນເສົາ ແລະ 5 ວັນອາທິດ. ເດືອນ 5 ແຫ່ງສັງຂານປີ 1312 ກໍຂຶ້ນຄໍ່າ 1 ວັນອາທິດ ເມື່ອກວດເບິ່ງປະຕິທິນກໍເຫັນວ່າເດືອນ 5 ແຫ່ງ ສັງຂານປີ 1312 ນັ້ນຂຶ້ນຄໍ່າ 1 ວັນອາທິດແທ້ (ກົງກັບວັນທີ 19 ມີນາ)

(2) ສໍາຫຼັບປີອະທິກະວານ ໃຫ້ນັບ 1 ໄປເຖິງ 6 ເມື່ອວັນຖ້ວນ 6 ກົງກັບວັນໃດ ເດືອນ 5 ແຫ່ງສັງຂານ ປີຈະມາເຖິງ ກໍຂຶ້ນ 1 ຄໍ່າໃນວັນນັ້ນ.

ຕົວຢ່າງ ເດືອນ 5 ແຫ່ງວັນສັງຂານປີ 1295 ຈະຂຶ້ນ 1 ຄໍ່າວັນໃດ?

ຕ້ອງເບິ່ງວ່າເດືອນ 5 ແຫ່ງສັງຂານປີ 1294 ຂຶ້ນ 1 ຄໍ່າວັນໃດເສຍກ່ອນ. ປີ 1294 ເປັນອະທິກະວານ ເພາະອະວະມານຖະເຫຼືອສິກ 68 ນ້ອຍກວ່າກໍາໜົດ 137 ທີ່ກ່າວມາແລ້ວ ດິຖີຖະເຫຼືອສິກ 10 ແລະ ວາຣະ 6 ໝາຍຄວາມວ່າສັງຂານແຫ່ງປີ 1294 ຕົກຢູ່ໃນເດືອນ 5 ຂຶ້ນ 10 ຄໍ່າວັນສຸກ ເດືອນ 5 ນັ້ນກໍຂຶ້ນຄໍ່າ 1 ວັນພຸດ ສະນັ້ນຕ້ອງນັບ 1 ວັນພຸດ, 2 ວັນພະຫັດ, 3 ວັນສຸກ, 4 ວັນເສົາ,

5 ວັນອາທິດ ແລະ 6 ວັນຈັນ. ເດືອນ 5 ແຫ່ງສັງຂານປີ 1295 ກໍຂຶ້ນ 1 ຄ່ຳວັນຈັນ ເມື່ອກວດເບິ່ງປະຕິທິນແລ້ວ ກໍເຫັນວ່າເປັນວັນຈັນແທ້ (ວັນທີ 27 ມີນາ)

(3) ສຳຫຼັບປີອະທິກະມາດ ໃຫ້ນັບແຕ່ 1 ໄປເຖິງ 7 ເມື່ອວັນຖ້ວນ 7 ກົງກັບວັນໃດ ເດືອນ 5 ແຫ່ງ ສັງຂານ ປີຈະມາເຖິງກໍຂຶ້ນ 1 ຄ່ຳໃນວັນນັ້ນ.

ຕົວຢ່າງ ເດືອນ 5 ແຫ່ງສັງຂານ ປີ 1302 ຈະຂຶ້ນ 1 ຄ່ຳວັນໃດ? ປີ 1301 ເປັນອະທິກະມາດ ເພາະດິຖີຖະເຫຼືອສິກເປັນ 27 ສູງກວ່າ 25 ວາຣະຖະເຫຼືອສິກ 1 ໝາຍຄວາມວ່າສັງຂານຂຶ້ນວັນອາທິດ ເດືອນ 5 ແຣມ 12 ຄ່ຳ. ສະນັ້ນເດືອນ 5 ກໍຂຶ້ນຄ່ຳ 1 ວັນອັງຄານ ເຮົາຕ້ອງນັບ 1 ວັນອັງຄານ 2 ວັນພຸດ, 3 ວັນພະຫັດ, 4 ວັນສຸກ, 5 ວັນເສົາ, 6 ວັນອາທິດ, 7 ວັນຈັນ ສັງຂານແຫ່ງປີ 1302 ກໍຂຶ້ນຄ່ຳ 1 ວັນຈັນ ເມື່ອກວດເບິ່ງປະຕິທິນແລ້ວ ກໍເຫັນວ່າເປັນວັນຈັນແທ້ (ວັນທີ 18 ເມສາ).

ເພື່ອຄວາມສະດວກ ວິທີການຍ້າຍເດືອນ 7 ເຕັມນີ້ຈະໄດ້ເອົາປີ 1299 ມາພິຈາຣະນາເປັນຕົວຢ່າງ

ປີ 1299 ເປັນທັງອະທິກະມາດ ແລະ ອະທິກະວານ ເພາະດິຖີຖະເຫຼືອສິກເປັນ 5 ໝາຍວ່າເປັນອະທິກະມາດ ແລະ ອະວະມານຖະເຫຼືອສິກ ເປັນ 86 ໝາຍວ່າເປັນອະທິກະວານ ວາຣະຖະເຫຼືອສິກເປັນ 5 ໝາຍອີກວ່າ ສັງຂານຂຶ້ນວັນພະຫັດ ກົງກັບເດືອນ 6 ຂຶ້ນ 5 ຄ່ຳ (ດິຖີ 5) ເມື່ອອັດຕາຖະເຫຼືອສິກ ເປັນດັ່ງນີ້ຕຳຣາໂຫຣາສາດ ບັນຍັດໃຫ້ປີນັ້ນ ເປັນໄດ້ແຕ່ອະທິກະມາດຢ່າງດຽວ ສ່ວນອະທິກະວານຄືເດືອນ 7 ເຕັມນັ້ນໃຫ້ຍ້າຍໄປ ໃສ່ປີທີ່ຢູ່ກ່ອນໜ້າ ຫຼື ປີທີ່ຢູ່ຫຼັງ ທັງນີ້ ແລ້ວແຕ່ລຳດັບວັນແຫ່ງສັບປະດາຂອງປີໃດໃນຈຳນວນ 2 ປີນັ້ນ ຈະຖືກຕ້ອງເປັນປົກກະຕິເປັນປະມານ.

ເພື່ອຈະຮູ້ໄດ້ວ່າ ສ່ວນ 2 ປີທີ່ຕິດກັບປີ 1299 ນັ້ນຈະຄວນຍ້າຍເດືອນ 7 ເຕັມ 30 ວັນໄປໃສ່ປີໃດນັ້ນ ຈຳຕ້ອງພິຈາຣະນາດັ່ງຕໍ່ໄປນີ້:

(ກ) ຈະຍ້າຍເດືອນ 7 ເຕັມ 30 ວັນໄປເຂົ້າປີ 1298 ຈະໄດ້ ຫຼື ບໍ່?

1. ຂັ້ນຕອນ ຕ້ອງເບິ່ງວ່າເດືອນ 5 ແຫ່ງປີ 1298 ນັ້ນຂຶ້ນຄ່ຳ 1 ວັນໃດເສຍກ່ອນ ປີ 1298 ດິຖີເປັນ 24 ແລະ ວາຣະເປັນ 4 ເຊິ່ງໝາຍຄວາມວ່າສັງຂານຂຶ້ນເດືອນ 5 ແຣມ 9 ຄ່ຳວັນພຸດ ສະນັ້ນ ເດືອນ 5 ປີນັ້ນກໍຂຶ້ນ ຄ່ຳ 1 ວັນຈັນ.

2. ບາດນີ້ຕ້ອງສັງເກດເບິ່ງວ່າເດືອນ 5 ແຫ່ງສັງຂານປີ 1299 ຈະຂຶ້ນຄ່ຳ 1 ວັນໃດ? ສຳຫຼັບປີ 1299 ນີ້ເຮົາເຫັນມາຂ້າງເທິງແລ້ວວ່າສັງຂານຂຶ້ນເດືອນ 6 ອອກໃໝ່ 5 ຄ່ຳວັນພະຫັດ ເພື່ອຈະຮູ້ໄດ້ວ່າເດືອນ 5 ທີ່ຢູ່ກ່ອນເດືອນ 6 ແຫ່ງສັງຂານນັ້ນຈະຂຶ້ນ 1 ຄ່ຳວັນໃດ ຈະຕ້ອງນັບກັບຫຼັງດັ່ງນັ້ນ:

24/7NH ຫ້າມຈຳໜ່າຍ

ເດືອນ	6	ຂຶ້ນ	5	ຄ່ຳ	ເປັນວັນພະຫັດ
ເດືອນ	6	ຂຶ້ນ	1	ຄ່ຳ	ເປັນວັນອາທິດ
ເດືອນ	5	ແຮມ	14	ຄ່ຳ	ເປັນວັນເສົາ
ເດືອນ	5	ແຮມ	7	ຄ່ຳ	ເປັນ ວັນເສົາ
ເດືອນ	5	ຂຶ້ນ	15	ຄ່ຳ	ເປັນວັນເສົາ
ເດືອນ	5	ຂຶ້ນ	8	ຄ່ຳ	ເປັນວັນເສົາ
ເດືອນ	5	ຂຶ້ນ	1	ຄ່ຳ	ເປັນວັນເສົາ

3. ດັ່ງນັ້ນແລ້ວຕ້ອງນັບເບິ່ງວ່າປີ 1298 ຈະມີຈຳນວນວັນຄົບ 365 ວັນຕາມກຳມັດຊະພົນຖະເຫຼືອສິກ 541 ໝາຍໄວ້ນັ້ນແທ້ ຫຼື ບໍ່? ແລະ ເດືອນ 5 ນັ້ນຂຶ້ນ 1 ຄ່ຳ ກົງກັບວັນເສົາຕາມຜົນແຫ່ງການນັບມາແລ້ວນັ້ນ ຫຼື ບໍ່ ?.

ການນັບຈຳນວນວັນນັ້ນ ກໍຕ້ອງນັບແຕ່ວັນສັງຂານຂຶ້ນແຫ່ງປີ 1298 ໄປຈົນເຖິງວັນເນົາແຫ່ງສັງຂານ ປີ 1299 ຄືຕ້ອງນັບແຕ່ວັນພຸດເດືອນແຮມ 9 ຄ່ຳເປັນຕົ້ນໄປ ຈົນເຖິງວັນພຸດເດືອນ 6 ຂຶ້ນ 5 ຄ່ຳແຫ່ງສັງຂານປີ 1299 ຄື:

ເດືອນ	5	ແຮມ	9	ຄ່ຳ	ເຖິງແຮມ	14	ຄ່ຳມີ	6	ວັນ
ເດືອນ	6						ຄ່ຳມີ	30	ວັນ
ເດືອນ	7						ຄ່ຳມີ	29	ວັນ
ເດືອນ	8						ຄ່ຳມີ	30	ວັນ
ເດືອນ	9						ຄ່ຳມີ	29	ວັນ
ເດືອນ	10						ຄ່ຳມີ	30	ວັນ
ເດືອນ	11						ຄ່ຳມີ	29	ວັນ
ເດືອນ	12						ຄ່ຳມີ	30	ວັນ
ເດືອນ	1						ຄ່ຳມີ	29	ວັນ
ເດືອນ	2						ຄ່ຳມີ	30	ວັນ
ເດືອນ	3						ຄ່ຳມີ	29	ວັນ
ເດືອນ	4						ຄ່ຳມີ	30	ວັນ
ເດືອນ	5						ຄ່ຳມີ	29	ວັນ
ເດືອນ	6	(ເຖິງວັນຂຶ້ນ 4 ຄ່ຳ)			ມີ			5	ວັນ
						ໂຮມ	=	364	ວັນ

ຜົນແຫ່ງການນັບຈຳນວນວັນສະແດງໃຫ້ເຫັນວ່າປີ 1298 ມີແຕ່ 364 ວັນທີ່ນັ້ນ ຈຶ່ງຄວນຈະຍ້າຍອະທິກະວານມາໃສ່ປີ 1298 ນີ້ ເພື່ອໃຫ້ຈຳນວນວັນຄົບ 265 ວັນ ຕາມກຳໜົດທີ່ຕຳຣາໂຫຣາສາດ ບັນຍັດໄວ້ນັ້ນ.

5. ເພື່ອຈະໃຫ້ເປັນການແນ່ນອນໂດຍເດັດຂາດໄດ້ ຕ້ອງກວດຫາຊື່ວັນແຫ່ງປີ 1298 ໂດຍນັບແຕ່ວັນສັງຂານຂຶ້ນ ຄືແຕ່ວັນພຸດເດືອນ 5 ແຮມ 9 ຄ່ຳ ໄປຈົນເຖິງເດືອນ 5 ຂຶ້ນ 1 ຄ່ຳ ແຫ່ງທ້າຍປີ 1299 ນັ້ນແລ້ວ ຈຶ່ງສັງເກດເບິ່ງວ່າວັນນັ້ນ ຈະກົງກັບວັນເສົາຕາມທີ່ເຮົານັບມາແລ້ວນັ້ນ ຫຼື ບໍ່? ຄື:

ເດືອນ	5	ແຮມ	9	ຄ່ຳ	ວັນພຸດ
ເດືອນ	6	ຂຶ້ນ	1	ຄ່ຳ	ວັນອັງຄານ
ເດືອນ	7	ຂຶ້ນ	1	ຄ່ຳ	ວັນພະຫັດ
ເດືອນ	8	ຂຶ້ນ	1	ຄ່ຳ	ວັນສຸກ
ເດືອນ	9	ຂຶ້ນ	1	ຄ່ຳ	ວັນອາທິດ
ເດືອນ	10	ຂຶ້ນ	1	ຄ່ຳ	ວັນຈັນ
ເດືອນ	11	ຂຶ້ນ	1	ຄ່ຳ	ວັນພຸດ
ເດືອນ	12	ຂຶ້ນ	1	ຄ່ຳ	ວັນພະຫັດ
ເດືອນ	1	ຂຶ້ນ	1	ຄ່ຳ	ວັນເສົາ
ເດືອນ	2	ຂຶ້ນ	1	ຄ່ຳ	ວັນອາທິດ
ເດືອນ	3	ຂຶ້ນ	1	ຄ່ຳ	ວັນອັງຄານ
ເດືອນ	4	ຂຶ້ນ	1	ຄ່ຳ	ວັນພຸດ
ເດືອນ	5	ຂຶ້ນ	1	ຄ່ຳ	ວັນສຸກ

ການທີ່ເດືອນ 5 ຂຶ້ນ 1 ຄ່ຳເປັນວັນສຸກນັ້ນ ບໍ່ກົງກັບວັນເສົາຕາມຜົນແຫ່ງການນັບແຕ່ວັນສັງຂານຂຶ້ນ ປີ 1299 ຍ້ອນກັບຫຼັງໄປນັ້ນ ຄືຂາດໄປ 1 ວັນ.

6. ດ້ວຍເຫດນີ້ ຖ້າຕື່ມ 1 ວັນເຂົ້າເດືອນ 7 ໃຫ້ເຕັມ 30 ວັນຄືເປັນອະທິກະວານໂດຍພິເສດເດືອນ 5 ທີ່ກ່ຽວຂ້ອງນັ້ນຈຶ່ງຈະຂຶ້ນ 1 ຄ່ຳກົງກັບວັນເສົາໄດ້ ແລ້ວຈຳນວນຂອງປີ 1298 ຈຶ່ງຈະຄົບ 365 ວັນໄດ້.

ອີກປະການນຶ່ງ ຖ້າຫາກບໍ່ຕື່ມເດືອນ 7 ໃຫ້ເຕັມ 30 ວັນສຳຫຼັບໃຫ້ປີ 1298 ເປັນອະທິກະວານແລ້ວ ລຳດັບວັນຂອງສັບປະດາສຸດທ້າຍແຫ່ງປີນັ້ນ ກໍຈະຄາດເຄື່ອນຈາກປົກກະຕິໄປຄື:

ປີ	1298	ເມື່ອເດືອນ	5	ຂຶ້ນຄ່ຳ 1	ເປັນວັນສຸກດັ່ງນັ້ນ
		ເມື່ອເດືອນ	5	ຂຶ້ນ 8 ຄ່ຳ	ກໍເປັນວັນສຸກ
		ເມື່ອເດືອນ	5	ຂຶ້ນ 15 ຄ່ຳ	ກໍເປັນວັນສຸກ
		ເມື່ອເດືອນ	5	ແຮມ 7 ຄ່ຳ	ກໍເປັນວັນສຸກ
		ເມື່ອເດືອນ	5	ແຮມ 14 ຄ່ຳ	ກໍເປັນວັນສຸກ
		ເມື່ອເດືອນ	6	ຂຶ້ນ 5 ຄ່ຳ	ກໍເປັນວັນພຸດ ເຊິ່ງຜິດຈາກອັດຕາຖະ

ເຫຼິງສົກແຫ່ງປີ 1299 ໄປ 1 ວັນ ເພາະອັດຕາຖະເຫຼິງສົກນັ້ນເປັນດິຖີ 5 ແລະ ວາຣະ 5 ຄື ສັງຂານແມ່ນ ວັນພະຫັດ ເດືອນ 6 ຂຶ້ນ 5 ຄ່ຳ.

ດັ່ງນັ້ນສັບປະດາແຫ່ງປີ 1298 ແລະ 1299 ຕໍ່ກັນກໍຂາດວັນພຸດໄປ ເຊິ່ງເປັນການຜິດປົກກະຕິໄດ້ ໂດຍເຫດນີ້ ຕ້ອງຍ້າຍເດືອນ 7 ເຕັມ 30 ວັນມາໃສ່ປີ 1298 ໃຫ້ເປັນອະທິກະວານ ໂດຍພິເສດ ຈຶ່ງຈະຖືກຕ້ອງຕາມກົດເກນ ຂອງຕຳຣາໂຫຣາສາດ ຄື ປີ 1298 ຈຶ່ງຈະມີ 365 ວັນ ນັ້ນປະການທີ 1, ປະການທີ 2 ເດືອນ 5 ແຫ່ງທ້າຍປີ 1298 ນັ້ນ ຈຶ່ງຈະຂຶ້ນ 1 ຄ່ຳ ກົງກັບວັນເສົາໄດ້ ແລະປະການທີ 3 ສັບປະດາແຫ່ງທ້າຍປີ 1298 ແລະ ຕົ້ນປີ 1299 ຈຶ່ງຈະຖືກຕ້ອງຕາມລຳດັບວັນໄດ້.

ຖ້າຫາກເຫັນວ່າ ການຍ້າຍເດືອນ 7 ເຕັມ 30 ວັນ ມາໃສ່ປີເຊິ່ງຢູ່ກ່ອນໜ້າ ດັ່ງຕົວຢ່າງທີ່ກ່າວມານີ້ ບໍ່ເປັນການຖືກຕ້ອງແລ້ວ ກໍຕ້ອງຍ້າຍໄປເຂົ້າປີເຊິ່ງຈະມາເຖິງ ເປັນແນວໃດ ກໍຄືຖືກຕ້ອງກັບຈຳນວນວັນ ທັງລຳດັບວັນແຫ່ງສັບປະດາສະເໝີ.

ໝາຍເຫດ ວິທີຍ້າຍເດືອນ 7 ເຕັມ 30 ວັນ ຕາມທີ່ດຳເນີນເປັນຕົວຢ່າງມານັ້ນ ຍືດຍາວຫຼາຍ ແຕ່ຂ້າພະເຈົ້າເຫັນວ່າ ເປັນການແນ່ນອນກວ່າວິທີອື່ນໆທັງໝົດ ອີກປະການນຶ່ງ ເນື່ອງຈາກການຍ້າຍເດືອນ 7 ເຕັມ 30 ວັນ ເປັນການຍືດຍາວດັ່ງນັ້ນ ເມື່ອຄຳນວນອັດຕາຖະເຫຼິງສົກ ສຳຫຼັບຈະທຳປະຕິທິນແລ້ວ ຄວນມີຄວາມພາກພຽນ ຄຳນວນອັດຕາຖະເຫຼິງສົກແຫ່ງປີທີ່ຕິດກັບປີທີ່ກ່ຽວຂ້ອງນັ້ນອີກນຳສະເໝີ ເພື່ອໃຫ້ຮູ້ລ່ວງໜ້າໄວ້ວ່າ ຖ້າຈຳເປັນຕ້ອງຍ້າຍເດືອນ 7 ເຕັມແລ້ວຄວນຈະຍ້າຍໄປເຂົ້າປີໃດ ຈຶ່ງຈະຖືກຕ້ອງຕາມບັນຍັດຂອງໂຫຣາສາດ ບໍ່ດັ່ງນັ້ນອາດຈະມີການເຄື່ອນຄາດກໍເປັນໄດ້

ຄ. ຕາລາງສຳຫຼັບຫາວັນຂຶ້ນ 1 ຄ່ຳແຫ່ງເດືອນຈັນທຣະຄະຕິ

ເພື່ອຄວາມສະດວກສຳຫຼັບການກວດຫາວັນທາງເດືອນຈັນທຣະຄະຕິ ວ່າຈະຂຶ້ນຄ່ຳ 1 ວັນໃດນັ້ນ ຂ້າພະເຈົ້າໄດ້ທຳຕາລາງໄວ້ ສຳຫຼັບຊອກຫາດັ່ງຕໍ່ໄປນີ້ ເມື່ອຮູ້ວ່າເດືອນ 5 ແຫ່ງສັງຂານປີໃດ ຂຶ້ນ 1 ຄ່ຳ ວັນໃດແລ້ວ ເດືອນຕໍ່ໄປຂຶ້ນ 1 ຄ່ຳ ວັນໃດກໍຮູ້ໄດ້ຢ່າງງ່າຍໆ ດັ່ງນີ້:

ສຳຫຼັບປີປົກກະຕິ ສຸຣະທິນແລະອະທິກະສຸຣະທິນ

ເດືອນ 5 ຂຶ້ນ ວັນ 1 ຄ່ຳ	ວັນ	ວັນ 1	ວັນ 2	ວັນ 3	ວັນ 4	ວັນ 5	ວັນ 6	ວັນ 7
ເດືອນ	6	2	3	4	5	6	7	1
"	7	4	5	6	7	1	2	3
"	8	5	6	7	1	2	3	4
"	9	7	1	2	3	4	5	6
"	10	1	2	3	4	5	6	7
"	11	3	4	5	6	7	1	2
"	12	4	5	6	7	1	2	3
"	1	6	7	1	2	3	4	5
"	2	7	1	2	3	4	5	6
"	3	2	3	4	5	6	7	1
"	4	3	4	5	6	7	1	2
ເດືອນ 5 ປີຕໍ່ໄປ ຂຶ້ນ 1 ຄ່ຳວັນ		5	6	7	1	2	3	4

ສຳຫຼັບປີອະທິກະວານ

ເດືອນ 5 ຂຶ້ນ 1 ຄ່ຳວັນ	ວັນ 1	ວັນ 2	ວັນ 3	ວັນ 4	ວັນ 5	ວັນ 6	ວັນ 7
ເດືອນ 6 ຂຶ້ນ 1 ຄ່ຳ	2	3	4	5	6	7	1
" 7 "	4	5	6	7	1	2	3
" 8 "	6	7	1	2	3	4	4
" 9 "	1	2	3	5	5	6	7
" 10 "	2	3	4	4	6	7	1
" 11 "	4	5	6	7	1	2	3
" 12 "	5	6	7	1	2	3	4
" 1 "	7	1	2	3	4	5	6
" 2 "	1	2	3	4	5	6	7
" 3 "	3	4	5	6	7	1	2
" 4	4	6	6	7	1	2	3
ເດືອນ 5 ປີ ຕໍ່ໄປ ຂຶ້ນ 1 ຄ່ຳ ວັນ	6	7	1	2	3	4	5

ສຳຫຼັບປີອະທິກະມາດ

ເດືອນ 5 ຂຶ້ນ 1 ຄ່ຳວັນ	ວັນ 1	ວັນ 2	ວັນ 3	ວັນ 4	ວັນ 5	ວັນ 6	ວັນ 7
ເດືອນ 6 ຂຶ້ນ 1 ຄ່ຳ	2	3	4	5	6	7	1
" 7 "	4	5	6	7	1	2	3
" 8/1 "	5	6	7	1	2	3	4
" 8/2 "	7	1	2	3	4	5	6
" 9 "	1	3	4	5	6	7	1
" 10 "	3	4	5	6	7	1	2
" 11 "	5	6	7	1	2	3	4
" 12 "	6	7	1	2	3	4	5
" 1 "	1	1	3	4	5	6	7
" 2 "	2	3	4	5	6	7	1
" 3 "	4	5	6	7	1	2	3
" 4 "	5	6	7	1	2	3	4
ເດືອນ 5 ປີຕໍ່ໄປ ຂຶ້ນ 1 ຄ່ຳວັນ	7	1	2	3	4	5	6

ສຳຫຼັບເດືອນສຸຣິຍະຄະຕິ ຂ້າພະເຈົ້າກໍໄດ້ເຮັດຕາລາງໝາຍວັນແຫ່ງຕົ້ນເດືອນໄວ້ ດັ່ງດຽວກັນ ດັ່ງສະເໜີຕໍ່ໄປນີ້:

ສຳຫຼັບປີປົກກະຕິ ສຸຣະທິນ

ວັນທີ 1 ມັງກອນ ເປັນວັນ 1	2	3	4	5	6	7
" 1 ກຸມພາ " 4	5	6	7	1	2	3
" 1 ມີນາ " 4	5	6	7	1	2	3
" 1 ເມສາ " 7	1	2	3	4	5	6
" 1 ພຶດສະພາ " 2	3	4	5	6	7	1
" 1 ມິຖຸນາ " 5	6	7	1	2	3	4
" 1 ກໍລະກົດ " 7	1	2	3	4	5	6
" 1 ສິງຫາ " 3	4	5	6	7	1	2
" 1 ກັນຍາ " 6	7	1	2	3	4	5
" 1 ຕຸລາ " 1	2	3	4	5	6	7
" 1 ພະຈິກ " 4	5	6	7	1	2	3
" 1 ທັນວາ " 6	7	1	2	3	4	5
ວັນທີ 1 ມັງກອນ ປີຕໍ່ໄປ ເປັນວັນ 2	3	4	5	6	7	1

ສຳຫຼັບປີອະທິກະສຸຣະທິນ

ວັນທີ 1 ມັງກອນ ເປັນວັນ 1	2	3	4	5	6	7
" 1 ກຸມພາ " 4	5	6	7	1	2	3
" 1 ມີນາ " 5	6	7	1	2	3	4
" 1 ເມສາ " 1	1	3	4	5	6	7
" 1 ພຶດສະພາ " 3	4	5	6	7	1	2
" 1 ມິຖຸນາ " 6	6	1	1	3	4	5
" 1 ກໍລະກົດ " 1	2	3	4	5	6	7
" 1 ສິງຫາ " 4	5	6	7	1	2	3
" 1 ກັນຍາ " 7	1	2	3	4	5	6
" 1 ຕຸລາ " 1	3	4	5	6	7	1
" 1 ພະຈິກ " 5	6	7	1	2	3	4
" 1 ທັນວາ " 7	1	1	3	4	5	6
ວັນທີ 1 ມັງກອນ ປີຕໍ່ໄປ ເປັນວັນ 3	4	5	6	7	1	2

ຂໍ້ສັງເກດ

(1) ສຳຫຼັບປີປົກກະຕິສຸຣະທິນ ເມື່ອຮູ້ວ່າ ວັນທີ 1 ມັງກອນເປັນວັນໃດແລ້ວ ຕ້ອງນັບ 1 ແຕ່ວັນນັ້ນໄປເຖິງ 2 ຖ້າຄົບຈຳນວນ 2 ໃນວັນໃດ ວັນນັ້ນກໍເປັນວັນທີ 1 ມັງກອນແຫ່ງປີຕໍ່ໄປ.

(2) ສຳຫຼັບປີ ອະທິກະສຸຣະທິນ ເມື່ອຮູ້ວ່າວັນທີ 1 ມັງກອນເປັນວັນໃດແລ້ວ ຕ້ອງນັບ 1 ແຕ່ວັນນັ້ນໄປເຖິງ 3 ຖ້າຄົບຈຳນວນ 3 ໃນວັນໃດ ວັນນັ້ນກໍເປັນວັນທີ 1 ມັງກອນແຫ່ງປີຕໍ່ໄປ.

4. ສັງຂານເນົາ 2 ວັນ

ໄດ້ກ່າວໄວ້ໃນຕອນທີ່ກ່ຽວກັບ "ປີ" ແລະໃນຕອນທີ່ກ່ຽວກັບ "ກຳມັດຊະພົນ" ມາແດ່ແລ້ວວ່າ ຖ້າປີໃດ ມີກຳມັດຊະພົນຈຳນວນແຕ່ 668 ຂຶ້ນໄປ ສັງຂານແຫ່ງປີນັ້ນຕ້ອງເນົາ 2 ວັນສະເໝີ ແລະໄດ້ກ່າວອີກວ່າ ກຳໜົດຈຳນວນກຳມັດຊະພົນ 668 ນີ້ ຂ້າພະເຈົ້າໄດ້ສັງເກດເຫັນມາດ້ວຍຕົນເອງໃນເວລາທຳສຳຜຸດພະອາທິດ ແຕ່ປີຈ.ສ 1250 ຈົນເຖິງປີ 1650 ທີ່ຂ້າພະເຈົ້າໄດ້ຄຳນວນມາແລ້ວນັ້ນ.

ເພື່ອຈະໃຫ້ເປັນການໝົດສົງໄສໃນຂໍ້ນີ້ ຈະໄດ້ເອົາສຳຜຸດພະອາທິດແຫ່ງສັງຂານປີ 1309, 1347 ແລະ 1537 ມາເປັນຕົວຢ່າງ:

(ກ) ປີ ຈ.ສ 1309 ກຳມັດຊະພົນຖະເຫຼີງສົກເປັນຈຳນວນ 664 ຍັງບໍ່ເຖິງ 668 ສັງຂານຈຶ່ງມີເນົາແຕ່ວັນດຽວ. ເພື່ອຈະຮູ້ໄດ້ວ່າ ສັງຂານຈະເນົາຈັກວັນແທ້ ຂັ້ນຕົ້ນຕ້ອງນັບສຸຣະທິນ ຄືນັບແຕ່ວັນຢູ່ຫຼັງວັນສັງຂານ ແຫ່ງປີ 1308 ມາຈົນເຖິງວັນເນົາແຫ່ງສັງຂານ 1309 ຄືຈົນເຖິງວັນທີ່ຢູ່ໜ້າວັນສັງຂານຂຶ້ນປີ 1309 ນັ້ນເອງ. ປີ 1308 ເປັນປີອະທິກະສຸຣະທິນ ສະນັ້ນ ສຸຣະທິນສຳຫຼັບຈະຄຳນວນສຳຜຸດພະອາທິດແຫ່ງສັງຂານ ປີ 1309 ຈຶ່ງ ມີຈຳນວນດັ່ງນີ້:

ວັນກ່ອນສັງຂານໄປ	ສຸຣະທິນມີຈຳນວນ	362	ວັນ
ວັນສັງຂານໄປ	ສຸຣະທິນມີຈຳນວນ	363	ວັນ
ວັນເນົາທີ 1	ສຸຣະທິນມີຈຳນວນ	364	ວັນ
ວັນເນົາທີ 2	ສຸຣະທິນມີຈຳນວນ	365	ວັນ
ວັນສັງຂານຂຶ້ນ	ສຸຣະທິນມີຈຳນວນ	0	ວັນ

ຜົນແຫ່ງການຄຳນວນສຳຜຸດພະອາທິດແຕ່ລະວັນຂ້າງເທິງນີ້ ມີດັ່ງຕໍ່ໄປນີ້ຄື:

ຈ.ສ 1309	ສຳຜຸດພະ ອາທິດ	ສຸຣະທິນ				
		362	363	364	365	0
ກຳມັດຊະພົນ	ລາສີ	11	11	0	0	0
	ອົງສາ	29	29	0	1	2
664	ລິບດາ	0	59	58	57	54

ປີ 1309 ນີ້ ກຳມັດຊະພົນບໍ່ເຖິງ 668 ຕົວ ເພາະສະນັ້ນ ວັນສັງຂານໄປເຊີ່ງຕາມປົກກະຕິ ສຳຜຸດພະອາທິດເປັນຣາສີ 0 ແລະ ອົງສາ 0 ຈຶ່ງບໍ່ຕົກຢູ່ໃນວັນເຊີ່ງມີສຸຣະທິນ 363 ແຕ່ຣາສີ 0 ແລະ ອົງສາ 0 ໄປຢູ່ໃນວັນ ເຊີ່ງມີສຸຣະທິນ 364 ຄືໄປຕົກຢູ່ກ່ອນວັນສັງຂານຂຶ້ນ ພຽງແຕ່ວັນດຽວ ດ້ວຍເຫດນີ້ ສັງຂານປີ 1309 ຈຶ່ງມີວັນເນົາໄດ້ແຕ່ 1 ວັນທໍ່ນັ້ນ ຄືວັນເຊີ່ງມີສຸຣະທິນເປັນຈຳນວນ 365 ວັນ.

(ຂ) ປີ ຈ.ສ 1347 ແລະ 1537 ສຸຣະທິນແຫ່ງສອງປີນີ້ກໍຄືກັນກັບສຸຣະທິນປີ 1309 ດ້ວຍເຫດວ່າປີ 1346 ແລະ 1536 ທີ່ຢູ່ກ່ອນນັ້ນ ກໍເປັນປີອະທິກະສຸລະທິນຄືກັນກັບປີ 1308 ສະນັ້ນສຸຣະທິນ ສຳຫຼັບຈະຄຳນວນ ສຳຜຸດພະອາທິດແຫ່ງສັງຂານ ປີ 1347 ແລະ ປີ 1537 ຈຶ່ງມີຈຳນວນດັ່ງຕໍ່ໄປນີ້:

ກ່ອນວັນສັງຂານ ໄປ	ສຸຣະທິນ ມີຈຳນວນ	362	ວັນ
ວັນສັງຂານ ໄປ	ສຸຣະທິນ ມີຈຳນວນ	363	ວັນ
ວັນເນົາທີ 1	ສຸຣະທິນ ມີຈຳນວນ	364	ວັນ
ວັນເນົາທີ 2	ສຸຣະທິນ ມີຈຳນວນ	365	ວັນ
ວັນສັງຂານ	ສຸຣະທິນ ມີຈຳນວນ	0	ວັນ

ຜົນແຫ່ງການຄຳນວນສຳຜຸດພະອາທິດສຳຫຼັບແຕ່ລະວັນຂ້າງເທິງນີ້ມີດັ່ງຕໍ່ໄປນີ້ ຄື:

ຈ.ສ 1309	ສຳຜຸດພະ ອາທິດ	ສຸຣະທິນ				
		362	363	364	365	0
ກຳມັດຊະພົນ	ລາສີ	11	0	0	0	0
	ອົງສາ	29	0	1	2	3
664	ລິບດາ	12	10	10	7	10
ຈ.ສ	ລາສີ	11	0	0	0	0
1537	ອົງສາ	29	0	1	2	2
ກຳມັດຊະພົນ	ລິບດາ	10	0	59	49	54
668						

ກຳມັດຊະພົນ 668 ແລະ 798 ແຫ່ງສອງປີນີ້ ຢູ່ໃນກຳໜົດທີ່ສັງຂານ ຕ້ອງມີວັນເນົາເຖິງ 2 ວັນ ຕາມທີ່ກ່າວມາແລ້ວ ສະນັ້ນວັນສັງຂານໄປເຊິ່ງມີສຸຣະທິນ 363 ວັນ ຕາມປົກກະຕິນັ້ນ ຈຶ່ງມີສຳຜຸດພະອາທິດເປັນຣາສີ 0 ແລະ ອົງສາ 0 ອີກປະການນຶ່ງວັນສັງຂານໄປຕົກຢູ່ກ່ອນວັນສັງຂານຂຶ້ນ 3 ວັນ ດ້ວຍເຫດນີ້ສັງຂານ ຈຶ່ງມີເນົາເຖິງ 2 ວັນ ຂັ້ນວັນສັງຂານໄປກັບວັນສັງຂານຂຶ້ນ ຄືກົງກັບຫຼັກທີ່ຂ້າພະເຈົ້າໄດ້ເຫັນມານັ້ນ.

ຖ້າທ່ານຫາກຍັງມີຄວາມສົນໃຈຢູ່ອີກແລ້ວ ເຊີນຄຳນວນສຳຜຸດພະອາທິດແຫ່ງປີກຳມັດຊະພົນຖະເຫຼືອສົກມີຈຳນວນແຕ່ 667 ລອງເບິ່ງເອງ ຄົງຈະເຫັນວ່າສັງຂານ ມີວັນເນົາວັນດຽວເປັນແນ່ ແລະຈະເຫັນໄດ້ ໂດຍແຈ່ມແຈ້ງວ່າ ກຳມັດຊະພົນຈຳນວນ 668 ທີ່ຂ້າພະເຈົ້າຖືເປັນຫຼັກນັ້ນເປັນກຳໜົດຢ່າງຕ່ຳເປັນທີ່ສຸດສຳຫຼັບປີສັງຂານ ເນົາ 2 ວັນຢ່າງແນ່ນອນ.

ຕາມຫຼັກກຳມັດຊະພົນຈຳນວນຢ່າງຕ່ຳ 668 ຕົວນີ້ ສັງຂານ ເນົາ 2 ວັນກໍວຽນມາເຖິງທຸກໆ 4 ປີ ເປັນປົກຕິ ແຕ່ເຫິງໆຈຶ່ງມີຮອບ 11 ປີ ແລະ 15 ປີມາຂັ້ນເທື່ອນຶ່ງ ດັ່ງຈະສັງເກດໄດ້ໃນຕາລາງ ລຳດັບປີທີ່ມີສັງຂານ ເນົາ 2 ວັນທີ່ສະເໜີຕໍ່ໄປນີ້:

ລຳດັບປີສັງຂານເນົາ 2 ວັນ (ຕາມຫຼັກທີ່ກຳມັດຊະພົນມີຈຳນວນແຕ່ 668 ຂຶ້ນໄປ)

ຈ.ສ	ອະທິກະ			ກຳມັດ ຊະພົນ	ອັ້ນ ຈັກປີ	ຈ.ສ	ອະທິກະ			ກັມມັດ ຊະພົນ	ອັ້ນ ຈັກປີ
	ສຸຣະທິນ	ມາດ	ວານ				ສຸຣະທິນ	ມາດ	ວານ		
1251				670		1297				748	
					10						3
1262				793		1301		+		720	
					3						3
1266		+		765		1305				692	
					3						14
1270				737		1320		+	+	787	
					3						3
1274		+		709		1324				759	
					3						3
1278				681		1328		+		731	
					14						3
1293		+		776		1332				703	
					3						3

ຈ.ສ	ອະທິກະ			ກັມມັດ	ອັ້ນ	ຈ.ສ	ອະທິກະ			ກັມມັດ	ອັ້ນ
	ສຸຣະທິນ	ມາດ	ວານ	ຊະພົນ	ຈັກປີ		ສຸຣະທິນ	ມາດ	ວານ	ຊະພົນ	ຈັກປີ
1336				675		1436				775	
					10						3
1347		+		798		1440		+		747	
					3						3
1351			+	770		1444			+	719	
					3						3
1355		+		742		1448		+		691	
					3						14
1359				714		1463				786	
					3						3
1363				686		1467		+		758	
					14						3
1378				781		1471				730	
					3						3
1382			+	753		1475		+	+	702	
					3						3
1386				725		1479				674	
					3						10
1390				697		1490			+	797	
					3						3
1394				669		1494		+		769	
					10						3
1405				792		1498				741	
					3						3
1409				764		1502		+		713	
					3						3
1413			+	736		1506			+	685	
					3						14
1417				708		1521		+	+	780	
					3						3
1421		+		680		1525				752	
					14						3

24 / VII
ຫ້າມຈຳໜ່າຍ

ຈ.ສ	ອະທິກະ			ກັມມັດ	ອັນ	ຈ.ສ	ອະທິກະ			ກັມມັດ	ອັນ
	ສຸຣະທິນ	ມາດ	ວານ	ຊະພົນ	ຈັກປີ		ສຸຣະທິນ	ມາດ	ວານ	ຊະພົນ	ຈັກປີ
1529		+		724		1591		+		690	
					3						14
1533				696		1606				785	
					3						3
1537		+		668		1610		+		757	
					10						3
1548		+		791		1614			+	729	
					3						3
1552			+	763		1618		+		701	
					3						3
1556		+		735		1622				673	
					3						10
1560				707		1633				796	
					3						3
1564		+		679		1637		+		76	
					14						3
1579				774		1641				740	
					3						3
1583		+	+	746		1645			+	712	
					3						3
1587				718		1649				684	
					3						

ສັງຂານ ເນົາ 2 ວັນມີຈຳນວນ 68 ປີ ໃນຮອບ 400 ປີ ແລະ ໃນຈຳນວນ 68 ປີນັ້ນເປັນອະ ທິກະມາດຢູ່ 26 ປີແລະເປັນອະທິກະວານຢູ່ນຳ 13 ປີ. ອີກປະການນຶ່ງໃນຈຳນວນ 13 ປີ ທີ່ເປັນອະທິ ກະວານມີ 4 ປີ ທີ່ເປັນອະທິກະມາດນຳ.

ຂໍ້ສັງເກດ ສັງຂານເນົາ 2 ວັນວຽນມາຄົບຮອບຕາມລຳດັບດັ່ງນີ້ຄື:

ກ/. ເນົາ 2 ວັນທຸກ 4 ປີ ເຖິງ 4 ຄັ້ງຕິດໆກັນ.

ຂ/. ແລ້ວຈຶ່ງເຖິງຮອບ 15 ປີຄັ້ງນຶ່ງ (1278 - 1293)

ຄ/. ກັບເປັນຮອບລະ 4 ປີອີກ 3 ຄັ້ງຕິດໆກັນ

ງ/. ແລ້ວຈຶ່ງເຖິງຮອບ 15 ປີອີກຄັ້ງ 1 (1305 - 1312)

ຈ/. ກັບເປັນຮອບລະ 4 ປີອີກ 4 ຄັ້ງຕິດໆກັນ

ສ/. ແລ້ວຈຶ່ງເຖິງຮອບລະ 11 ປີມາອັ້ນຄັ້ງ 1 (1336 - 1347)

ຕໍ່ນັ້ນໄປກໍຕັ້ງຕົ້ນໃໝ່ອີກ ຄືຕັ້ງແຕ່ຮອບ ກ,ຂ,ຄ,ງ,ຈ ຈົນເຖິງ ສ ອີກດັ່ງນີ້ສະເໝີໄປ.

ປະກາບນຶ່ງ ປີຢູ່ກ່ອນໜ້າປີມີວັນເນົາ 2 ວັນນັ້ນເປັນປີອະທິກະສຸຣະທິນສະເໝີ ເພາະສະນັ້ນ ໃນຕາລາງ ປີທີ່ສັງຂານ ມີວັນເນົາ 2 ວັນອ້າງເທິງນີ້ ຈຶ່ງບໍ່ມີປີໃດເປັນອະທິກະສຸຣະທິນເລີຍ.

ຕອນທີຫົກ

ທວາຍມະຫາສັງຂານ

ຕາມທຳນຽມທີ່ເຮົາຖືສືບມາຈາກບູຮານນັ້ນ ເມື່ອຄຳນວນອັດຕາຖະເຫຼີງສົກ (ຄູນສັງຂານ) ສຳເລັດແລ້ວ ກໍອາໄສຜົນແຫ່ງການຄຳນວນ ຄືວັນແລະເວລາແຫ່ງສັງຂານໄປ ແລະສັງຂານຂຶ້ນປີໃໝ່ເປັນຫຼັກເກນ ເພື່ອຄຳນວນຫາ ຟ້າ,ຝົນ,ລົມ,ເຂົ້າ,ນໍ້າ,ປູປາ, ອາຫານ ແລະ ສິ່ງອື່ນໆອີກຫຼາຍຢ່າງ ວ່າຈະຮ້າຍ ຫຼື ຈະດີ ຈະຫຼາຍ ຫຼື ຈະໜ້ອຍ ຄັນຄຳນວນສຳເລັດແລ້ວຈຶ່ງລົງຜົນແຫ່ງຄຳທວາຍໃສ່ປະຕິທິນ ກ່ອນຈະລົງຕາລາງລຳດັບເດືອນ ແລະ ວັນສຳຫຼັບປີໃໝ່ນັ້ນ.

ເພື່ອຈະໃຫ້ເປັນການສະດວກແກ່ຜູ້ທີ່ສົນໃຈໃນເລື່ອງນີ້ ຂ້າພະເຈົ້າຈຶ່ງເກັບເອົາຕຳຣາທີ່ກ່ຽວກັບຄຳທວາຍທັງຫຼາຍ ທີ່ຂ້າພະເຈົ້າໄດ້ເຄີຍໃຊ້ ມາໂຮມໄວ້ໃນຕອນນີ້ ທັງໄດ້ຄຳນວນເປັນຕົວຢ່າງໄວ້ພ້ອມ. ແຕ່ຕຳຣານີ້ ຈະທວາຍຄື້ວແນ່ພໍປານໃດ ຂ້າພະເຈົ້າບໍ່ອາດລົງຄວາມເຫັນໄດ້ເພາະຜົນແຫ່ງການສັງເກດກ່ຽວກັບເລື່ອງ ນີ້ທີ່ຂ້າພະເຈົ້າໄດ້ບັນທຶກໄວ້ແຕ່ປີ ຈ.ສ 1294 ຈົນເຖິງປີ1307 ນັ້ນ ຂ້າພະເຈົ້າບໍ່ໄດ້ເອົາຕິດຕົວມານຳ[1].

1. ທວາຍຕາມວັນ ແລະເວລາຂອງສັງຂານ

ກ. ນາມນາງສັງຂານ

(1) ສັງຂານໄປວັນອາທິດ ນາງເທບທິດາທີ 1 ທົງພະນາມ "ທຸງສະເທວີ" ທົງພາຫຸລັດທັດດອກພິລາ ອາພອນລ້ວນໄປດ້ວຍແກ້ວປັດທະມະລາດ (ແກ້ວແດງ) ພັກສາຫານອຸທຸມພອນ (ໝາກເດື່ອ) ພະຫັດຂວາທົງຈັກ ພະຫັດຊ້າຍທົງສັງ ສະເດັດນັ່ງເໜືອຫຼັງຄຸດເປັນພາຫະນະ.

(2) ສັງຂານໄປວັນຈັນ ນາງເທບທິດາທີ 2 ທົງພະນາມວ່າໂຄຣາຄະເທວີ ທົງພາຫຸລັດທັດດອກກາງຂອງ ອາພອນລ້ວນໄປດ້ວຍແກ້ວມຸກດາຫານ (ແກ້ວໝິ່ນ) ພັກສາຫານນໍ້າມັນ ພະຫັດຂວາທົງພະຂັນ (ດາບ) ພະຫັດຊ້າຍຖືໄມ້ເທົ້າ ສະເດັດໄສຍາດ(ນອນ) ມືນພະເນດ ມາເໜືອຫຼັງພະຍັກ (ເສືອໂຄ່ງ) ເປັນພາຫະນະ.

(3) ສັງຂານໄປວັນອັງຄານ ນາງເທບທິດາທີ 3 ທົງພະນາມວ່າ "ຣາກສະເທວີ" ທົງພາຫຸລັດທັດດອກບົວຫຼວງ ອາພອນລ້ວນໄປດ້ວຍແກ້ວໂມລາ (ແກ້ວລາຍ) ພັກສາຫານ ໂລຫິດ (ເລືອດ) ພະຫັດຂວາທົງຕຣີສູນ(ຫອກ ສາມງ່າມ) ພະຫັດຊ້າຍທົງທະນູ ສະເດັດໄສຍາດຫຼັບພະເນດມາເໜືອຫຼັງວະຣາຫະ(ໝູ) ເປັນພາຫະນະ.

---

1. ເຈົ້າເພັຊຣາຊ ທົງຮຽບຮຽງປຶ້ມເລື່ອງນີ້ຢູ່ທີ່ປະເທດໄທ ເມື່ອຄັ້ງພະອົງຊົງລີ້ໄພການເມືອງ, ທັງສຳເລັດແລະຈັດພິມໃນປີ ຄ.ສ 1951, ມະຫາສີລາ ໄດ້ສຶກສາແລະນຳມາແປ ລິດຈະນາເປັນພາສາລາວ ພິມອອກໃນປີ 1973

(4) ສັງຂານໄປວັນພຸດ ນາງເທບທິດາທີ 4 ທົງພະນາມວ່າ "ມຸນທາເທວີ" ທົງພາຫຸລັດທັດດອກຈຳປາ ອາພອລ້ອນໄປດ້ວຍແກ້ວພິທູນ (ແກ້ວສີຕາແມວ ຫຼື ສີໄມ້ໄຜ່ເຫຼືອງ) ພັກສາຫານນົມເນີຍ ພະຫັດຂວາທົງເຫຼັກແຫຼມ ພະຫັດຊ້າຍຖືໄມ້ເທົ້າ ສະເດັດໄສຍາດມືນພະເນດມາເໜືອຫຼັງ ຄັດທຣະພະ (ມ້າລໍ) ເປັນພາຫະນະ.

(5) ສັງຂານໄປວັນພະຫັດ ນາງເທບທິດາທີ 5 ທົງພະນາມວ່າ "ກິຣິນີເທວີ" ທົງພາຫຸລັດທັດດອກມົນທາ ອາພອນລ້ອນໄປດ້ວຍແກ້ວມໍລະກົດ (ແກ້ວຂຽວ) ພັກສາຫານຖົ່ວງາ ພະຫັດຂວາທົງຂໍຊ້າງ ພະຫັດຊ້າຍທົງປືນ ສະເດັດຢືນມາເໜືອຫຼັງຄະຊາ(ຊ້າງ) ເປັນພາຫະນະ.

(6) ສັງຂານໄປວັນສຸກ ນາງເທບທິດາທີ 6 ທົງພະນາມວ່າ "ກິມິທາເທວີ" ທົງພາຫຸລັດທັດດອກຈັນຈົງກອນ (ຈົງກົນລະນິດອກບົວແບ້) ອາພອນລ້ອນໄປດ້ວຍແກ້ວບຸສຣາຄັມ (ແກ້ວເຫຼືອງ) ພັກສາຫານກ້ວຍນ້ຳ ພະຫັດຂວາທົງພະຂັນ ພະຫັດຊ້າຍທົງພິນ ສະເດັດນັ່ງມາເໜືອຫຼັງ ມະຫິງສາ (ຄວາຍ) ເປັນພາຫະນະ

(7) ສັງຂານໄປວັນເສົາ ນາງເທບທິດາທີ 7 ທົງພະນາມວ່າ "ມະໂຫທອນເທວີ" ທົງພາຫຸລັດທັດດອກຜັກຕົບ ອາພອນແລ້ວໄປດ້ວຍແກ້ວ ນິລະລັດ (ສີດອກຜັກຕົບ) ພັກສາຫານຊີ້ນກວາງ ພະຫັດຂວາທົງຈັກ ພະຫັດຊ້າຍທົງຕີສູນ ສະເດັດນັ່ງມາເໜືອຫຼັງ ມະຍູຣະປັກສີ (ນົກຍູງ) ເປັນພາຫະນະ.

ເລື່ອງນາມຂອງນາງສັງຂານນີ້ ຈະເນື່ອງມາຈາກມູນເຫດເດີມປະການໃດ ຕຳນານລາວເຮົາບໍ່ໄດ້ກ່າວເຖິງ ຕາມທີ່ໄດ້ເຫັນຢູ່ໃນ "ວັນນະຄະດີໄທ" ຂອງທ້າວຫຣິດ ເຮືອງຣິດ ຜາກົດວ່າມີມູນເຫດດັ່ງຕໍ່ໄປນີ້ (ໜ້າ 222)

ຂ. ນິທານນາງສັງຂານ

"ນິທານເລື່ອງນາງສັງຂານ ເລົ່າກັນແຕກແຍກອອກເປັນຫຼາຍສາຍ ຈະເລົ່າໃນທີ່ນີ້ແຕ່ພໍໃຫ້ຮູ້ຕຳນານໄວ້ຈັກໜ່ອຍທໍ່ນັ້ນ".

ເມື່ອຕົ້ນພັດທະກັບນີ້ ມີບຸດເສດຖີຊື່ທຳມະປາລະກຸມມານ ປຸກຜາສາດ 7 ຊັ້ນຢູ່ໃກ້ຝັ່ງນ້ຳທ້າວທຳມະປາລະ ຮຽນຈົບໄຕເພດ ແລະ ຮຽນຮູ້ພາສານົກນຳຕັ້ງຕົນເປັນຄະນາຈານບອກມຸງຄຸນແກ່ຄົນທັງຫຼາຍ ຄັ້ງນັ້ນ ຊາວໂລກຍັງນັບຖືພະພົມຢູ່ ກະບິນລະພົມໄດ້ລົງມາຫາທຳມະປາລະ ສັນຍາວ່າ ຈະຖາມບັນຫາຈັກ 3 ຂໍ້ ຖ້າທ່ານ ແກ້ໄດ້ເຮົາຈະຕັດສີສະຂອງເຮົາເອງບູຊາ ຖ້າແກ້ບໍ່ໄດ້ເຮົາຈະຕັດສີສະທ່ານເສຍ. ທຳມະປາລະຂໍຜັດໄປຄຶດ 7 ວັນ ຄັນເຖິງວັນຖ້ວນ 6 ກໍຍັງຄຶດບໍ່ອອກ ເລີຍຄຶດວ່າເຮົາຈະຕາຍຍ້ອນອາຊະຍາຂອງກະບິນລະພົມເພື່ອປະໂຫຍດອັນໃດ ຕາຍເສຍເອງດີກວ່າ ຈຶ່ງລົງຈາກຜາສາດໄປນອນລີ້ຢູ່ໃຕ້ຕົ້ນຕານ ເຊິ່ງມີນົກອິນຊີຜົວເມຍເຮັດຮັງຢູ່ ນົກໂຕເມຍຖາມຜົວວ່າ

ມື້ອື່ນເຊົ້ານີ້ ເຮົາຈະໄດ້ອັນໃດມາກິນ ນົກຜົວບອກວ່າຈະໄດ້ກິນຊາກສົບຂອງທຳມະປາລະກຸມມານ ທີ່ບິນລະພົມຈະຂ້າເສຍ ເພາະແກ້ບັນຫາບໍ່ໄດ້ ນົກເມຍຖາມວ່າບັນຫານັ້ນແມ່ນຫຍັງ ແລະແກ້ວ່າຢ່າງໃດ? ນົກຜົວບອກວ່າ ບັນຫາເລື່ອງສິຣິທັງ 3 ແລະແກ້ວ່າ ຍາມເຊົ້າສິຣິຢູ່ໜ້າ ຄົນທັງຫຼາຍຈຶ່ງເອົານ້ຳສວ່າຍໜ້າ ຍາມທ່ຽງສິຣິຢູ່ເອິກ ຄົນທັງຫຼາຍຈຶ່ງເອົານ້ຳລູບເອິກ ແລະ ເອົາຂອງຫອມທາເອິກ ຕອນຄ່ຳສິຣິຢູ່ຕີນ ຄົນທັງຫຼາຍຈຶ່ງເອົານ້ຳລ້າງຕີນ. ທຳມະປາລະກຸມມານໄດ້ຍິນກໍຈື່ເອົາແລ້ວຟ້າວກັບຄືນໄປຜາສາດ.

ຕື່ນເຊົ້າມາ ກະບິນລະພົມກໍມາຖາມບັນຫາ ທຳມະປາລະກຸມມານກໍແກ້ໄດ້ ກະບິນລະພົມຈຶ່ງຮຽກລູກສາວຂອງຕົນທັງ 7 ຄົນມາບອກວ່າ ພໍ່ຈະຕັດສີສະບູຊາທຳມະປາລະກຸມມານ ຖ້າຈະເອົາຫົວນັ້ນວາງໄວ້ແຜ່ນດິນ ໄຟກໍຈະໄໝ້ໂລກ ຖ້າຈະຊັດຂຶ້ນໄປເທິງອາກາດ ຟ້າຝົນກໍຈະແຫ້ງແລ້ງ ຖ້າຈະຖິ້ມລົງໄປໃນມະຫາສະມຸດ ນ້ຳມະຫາສະມຸດກໍຈະແຫ້ງ ດັ່ງນັ້ນເຈົ້າທັງເຈັດຄົນຈຶ່ງເອົາພາພານມາ ຮອງສີສະຂອງພໍ່ໄວ້ ແລ້ວເຊີນໄປຕັ້ງໄວ້ທີ່ມົນດົບໃນຖ້ຳຄັນທະທຸລີພູເຂົາໄກລາດບູຊາດ້ວຍເຄື່ອງ ທິບສັກກາຣະຕ່າງໆເຖີ້ນ ຄັນແລ້ວ ພະວິສຸກຳມະເທວະບຸດ ຈຶ່ງມານິລະມິດໂຮງແກ້ວຊື່ພະຄະວະດີໃຫ້ເປັນບ່ອນປະຊຸມເທວະດາ ຄັນຄົບຖ້ວນປີນຶ່ງແລ້ວເຖິງວັນທີ່ໂລກສົມມຸດວ່າສັງຂານຄື ຂຶ້ນປີໃໝ່ ລູກສາວກະບິນລະພົມທັງ 7 ນາງ ທີ່ຖືກເວນກັນ ໂດຍລຳດັບປີ ກໍພາບໍລິວານແລະເທວະດາທັງຫຼາຍ ມາເຊີນພະສຽນ ຂອງກະບິນລະພົມ ອອກແຫ່ປະທັກຂິນວຽນອ້ອມເຂົາພະສຸເມນ ກະທຳໜ້າທີ່ສຳເລັດແລ້ວ ກໍກັບໄປເທວະໂລກ.

ນາງສັງຂານ ຕາມຕຳຣານີ້ກ່າວວ່າ:

ວັນອາທິດ ຊື່ ທຸງສະ ທັດດອກພິລາ ເຄື່ອງປະດັບ ແກ້ວປັດທະມະຣາດ ອາຫານໝາກເດື່ອ ອາວຸດ ມືຂວາຖືຈັກ ມືຊ້າຍຖືສັງ ພາຫະນະແມ່ນຄຸດ.

ວັນຈັນ ຊື່ ໂຄຣາຄະ ທັດດອກກາງຂອງ ເຄື່ອງປະດັບ ແກ້ວມຸກດາ ໂລຫິດ ອາວຸດ ພະຫັດຂວາຖືພະອັນ ພະຫັດຊ້າຍຖືໄມ້ເທົ້າ ພາຫະນະແມ່ນເສືອ.

ວັນອັງຄານ ຊື່ ຣາກສະ ທັດດອກບົວຫຼວງ ເຄື່ອງປະດັບ ແກ້ວໂມຣາ ພັກສາຫານ ໂລຫິດ ອາວຸດ ມືຂວາຖື ຕຣີສູນ (ຫອກສາມງ່າມ) ມືຊ້າຍຖືທະນູ ພາຫະນະແມ່ນໝູ.

ວັນພຸດ ຊື່ ມຸນທາ ທັດດອກຈຳປາ ເຄື່ອງປະດັບ ແກ້ວພິທູນ ພັກສາຫານນົມເນີຍ, ອາວຸດ ມືຂວາຖືເຂັມ ຊ້າຍຖືໄມ້ເທົ້າ ພາຫະນະແມ່ນ ມ້າລໍ.

ວັນພະຫັດ ຊື່ ກິຣິນີ ທັດດອກມົນທາ ເຄື່ອງປະດັບ ແກ້ວມໍຣະກົດ ພັກສາຫານ ຖົ່ວງາ ອາວຸດ ພະຫັດຂວາຖືຂໍ ພະຫັດຊ້າຍຖືປືນ ພາຫະນະແມ່ນຊ້າງ.

ວັນສຸກ ຊື່ ກິມິທາ ທັດດອກຈົງກອນ ເຄື່ອງປະດັບ ແກ້ວບຸດສະຣາຄັມ ພັກສາຫານ ກ້ວຍ

ນ້ຳ ອາວຸດ ພະຫັດຂວາຖືພະຂັນ ພະຫັດຊ້າຍຖືພິນ ພາຫະນະແມ່ນຄວາຍ.

ວັນເສົາ ຊື່ ມະໂຫທອນ ທັດດອກຜັກຕົບ ເຄື່ອງປະດັບ ແກ້ວນິນ ພັກສາຫານ ຊີ້ນຊາຍ ອາວຸດ ພະຫັດຂວາຖືຈັກ ພະຫັດຊ້າຍຖືຕີສູນ ພາຫະນະແມ່ນນົກຍູງ.

ນາງເທບທິດາທັງ 7 ນີ້ ສະເດັດມາໃນທ່າແປກໆຕ່າງກັນ ຄືພະອາທິດຂຶ້ນຕັ້ງແຕ່ເຊົ້າຫາທ່ຽງ ຢືນມາເທິງຫຼັງພາຫະນະທັງໝົດ ຕັ້ງແຕ່ທ່ຽງໄປຫາຄ່ຳ ສະເດັດນັ່ງມາເທິງຫຼັງພາຫະນະ ຕັ້ງແຕ່ຄ່ຳໄປຫາທ່ຽງຄືນ ນອນມືນຕາມາເທິງຫຼັງພາຫະນະ ແຕ່ທ່ຽງຄືນໄປຫາແຈ້ງ ນອນຫຼັບຕາມາເທິງຫຼັງພາຫະນະທັງໝົດ.

ແຕ່ປາງບູຮານປະຕິບັດກັນສືບມາ ຄັນເຖິງວັນສັງຂານແລ້ວ ຍາມເຊົ້າພວກພຸດທະສາສະນິກະຊົນ ພາກັນອາບນ້ຳອົບນ້ຳຫອມ ນຸ່ງຫົ່ມຜ້າໃໝ່ອອກໄປຕັກບາດຢູ່ວັດຖວາຍຈັງຫັນ ບູຊາພະພຸດທະຣູບ ພະທາດ ເຈດີ ດ້ວຍດອກໄມ້ທູບທຽນ ຄັນເຖິງເວລາສັງຂານໄປກໍນິມົນເອົາພະພຸດທະຣູບລົງມາປະດິດສະຖານໄວ້ທີ່ໂຮງຫົດສົງ ແລ້ວພາກັນຫົດສົງພະພຸດທະຣູບດ້ວຍນ້ຳຫອມ ແລະ ບູຊາດ້ວຍດອກໄມ້ທູບທຽນຕ່າງໆ ເຖິງເວລາຄ່ຳຄືນມາກໍພາກັນຫຼິ້ນມະໂຫສົບຄົບວັນຖ້ວນສາມວັນສາມຄືນ ໃນລະຫວ່າງວັນສັງຂານເນົານີ້ກໍພາກັນກໍ່ພະເຈດີຊາຍ ແລະ ເຮັດບຸນໃຫ້ທານຟັງທຳມະເທດສະໜາ ເຮັດບັງສຸກຸນ ທານຫາຜູ້ຕາຍໄປກ່ອນເປັນຕົ້ນ ຕາມສັດທາຂອງໃຜລາວ.

2. ທວາຍຕາມວັນສັງຂານ

ກ. ວັນສັງຂານໄປ

(1) ສັງຂານ ໄປວັນອາທິດ ປີນັ້ນໄຮ່ນາຮົ້ວສວນບໍ່ສູ້ຈະດີ.

(2) ສັງຂານ ໄປວັນຈັນ ຈະແພ້ທ້າວພະຍາເສນາຜູ້ໃຫຍ່ທັງຫຼາຍ.

(3) ສັງຂານ ໄປວັນອັງຄານ ແລະ ວັນເສົາ ຈະເກີດອັນຕະລາຍຂຶ້ນກາງເມືອງ ຈະເກີດໄຟ ແລະ ໂຈນຜູ້ຮ້າຍ ມີການເຈັບໄຂ້ໄດ້ພະຍາດເປັນອັນມາກ.

(4) ສັງຂານ ໄປວັນພຸດ ທ້າວພະຍາ ຈະໄດ້ບັນນາການຈາກຕ່າງເມືອງ ແຕ່ຈະແພ້ຜູ້ນ້ອຍ.

(5) ສັງຂານ ໄປວັນພະຫັດ (ສຳມະນະພຣາມຈະຢູ່ເຢັນເປັນສຸກ ປາສະຈາກໂຈນມານຜູ້ຮ້າຍ).

(6) ສັງຂານ ໄປວັນສຸກ ເຂົ້າປາອາຫານພືນລະປູກລູກໄມ້ຈະອຸດົມສົມບູນ ຝົນ ແລະ ພາຍຸຈະແຮງ ແຕ່ຈະແພ້ເດັກນ້ອຍ ຈະເຈັບຕາກັນມາກນັກ.

ຂ. ວັນເນົາ

(1) ເນົາ ວັນອາທິດ ຕົ້ນເຂົ້າຈະຕາຍແລ້ງ ຈະໄດ້ຍິນສຽງຕ່າງພາສາ ທ້າວພະຍາ ຈະຮ້ອນໃຈ.

(2) ເນົາ ວັນຈັນ ເກືອຈະແພງ ນາງພະຍາຈະຮ້ອນໃຈ.

(3) ເນົາ ວັນອັງຄານ ໝາກ,ພູ,ເຂົ້າ,ປາ ຈະແພງ ຈະແພ້ອຳມາດມຸນຕີທັງປວງ.

(4) ເນົາ ວັນພຸດ ພືດຜົນຈະແພງ ຄົນທັງຫຼາຍຈະໄດ້ຮັບຄວາມຮ້ອນໃຈເປັນອັນຍິ່ງ.

(5) ເນົາ ວັນພະຫັດພືດຜົນຈະແພງ ຄົນທັງຫຼາຍຈະໄດ້ຮັບຄວາມຮ້ອນໃຈນັກ.

(6) ເນົາ ວັນສຸກ ໝາກເຜັດຈະແພງ ແຮ້ງກາຈະຕາຍຮ່ຳ ສັດປ່າເກີດອັນຕະລາຍ ແມ່ພ້າຍຈະໄດ້ລາບ.

(7) ເນົາ ວັນເສົາ ເຂົ້າປາຈະແພງ ຈະເກີດໄຟກາງເມືອງ ຂຸນນາງຈະຕ້ອງໂທດ ນ້ຳຈະນ້ອຍກວ່າທຸກປີ ສຳມະນະຊີພາມຈະຮ້ອນໃຈ.

ຄ. ວັນສັງຂານຂຶ້ນ

(1) ສັງຂານຂຶ້ນວັນອາທິດ ພະມະຫາກະສັດຈະຮຸ່ງເຮືອງ ພະເດຊານຸພາບຈະມີໄຊຊະນະແກ່ສັດຕູທົ່ວທຸກທິດ.

(2) ສັງຂານຂຶ້ນວັນຈັນ ພະລາຊະເທວີ ສາວສະໜົມນາຣີ ຈະມີຄວາມສຸກ.

(3) ສັງຂານຂຶ້ນວັນອັງຄານ ອຳມາດມົນຕີຈະຢູ່ເຢັນເປັນສຸກ ແມ່ນຈະຕໍ່ຍຸດດ້ວຍປັດຈາມິດ(ຕໍ່ສູ້ກັບຂ້າເສິກສັດຕູ) ໃນທິດໃດໆກໍຈະມີໄຊຊະນະ.

(4) ສັງຂານຂຶ້ນວັນພຸດ ລາຊະບັນດິດປຸໂຣຫິຕາຈານ ຈະມີຄວາມສຸກກະເສີມສຳຮານເປັນອັນມາກ.

(5) ສັງຂານຂຶ້ນວັນພະຫັດ ສຳມະນະພາມ ຈະປະຕິບັດຊອບ ດ້ວຍທຳອັນປະເສີດ.

(6) ສັງຂານຂຶ້ນວັນສຸກ ພໍ່ຄ້າພານິດໄປຄ້າຂາຍໃນຕ່າງປະເທດຈະໄດ້ພັດສະດຸເງິນຄຳເປັນອັນມາກ.

(7) ສັງຂານ ຂຶ້ນວັນເສົາ ເສນາໂຍທາຫານຈະມີຄວາມສຸກ ປະກອບດ້ວຍວິຊາການຕ່າງໆ ແມ່ນຈະຕໍ່ຍຸດສົງຄາມກັບປະເທດໃດໆກໍຈະໄດ້ໄຊຊະນະ.

ງ. ທວາຍເວລາສັງຂານໄປ

ຖ້າຢາກຮູ້ວ່າພະອາທິດເດີນຈາກລາສີເມດໃນເວລາໃດແລ້ວ ໃຫ້ເອົາລົບດາແຫ່ງສຳຜຸດໃນວັນທີ່ມີຣາສີ 0 ອົງສາ 0 (ວັນສັງຂານໄປ) ຕັດກາກະບາດເບິ່ງແລ້ວທວາຍຕາມນີ້:

(1) ແຕ່ອຸໄທເຖິງທ່ຽງວັນ ພະອາທິດເດີນໄປ ປະຊາຊົນທັງຫຼາຍຈະມີຄວາມວິປະຫຼົດຜິດແຜກຕ່າງຕ່າງນາໆເປັນອັນມາກ.

(2) ແຕ່ທ່ຽງວັນເຖິງສົນທະຍາ (ທົ່ວຄ່ຳ) ພະອາທິດນັ່ງໄປ ປະຊາຊົນທັງຫຼາຍຈະມີມະຣະນະໄພ

(ໄພພິບັດເຖິງຕາຍ.

(3) ແຕ່ສິບທະຍາເຖິງທ່ຽງຄືນ ພະອາທິດນອນຕື່ນໄປ ປະຊາຊົນທັງຫຼາຍຈະຢູ່ເຢັນເປັນສຸກ.

(4) ແຕ່ທ່ຽງຄືນເຖິງຮຸ່ງ ພະອາທິດນອນຫຼັບໄປ ພະມະຫາກະສັດທັງພະຈະເລີນໄມຕີສະວັດດີແລ.

3. ທວາຍນາກໃຫ້ນ້ຳ ຝົນ ແລະ ລົມ

ກ. ນາກໃຫ້ນ້ຳ

ຖ້າຢາກຮູ້ວ່າປີໃດປີນຶ່ງກໍດີ ນາກຈະໃຫ້ນ້ຳຈັກຕົວ ໃຫ້ຕັ້ງຈຸລະສັກຣາດປີນັ້ນ ລົງເອົາ 12 ຄູນ ແລ້ວເອົາ 7 ຫານ ລັບຖິ້ມເສຍ ເສດທໍ່ໃດ ນາກກໍໃຫ້ນ້ຳທໍ່ນັ້ນຕົວ ແລ້ວທວາຍຝົນຕາມຈຳນວນນາກໃຫ້ນ້ຳນັ້ນຄື:

ນາກໃຫ້ນ້ຳ	1	ຕົວ	ທວາຍວ່າ	ຝົນຈະສະເໝີຕະຫຼອດປີ
ນາກໃຫ້ນ້ຳ	2	ຕົວ	ທວາຍວ່າ	ຝົນຈະມີແຕ່ກາງປີ
ນາກໃຫ້ນ້ຳ	3	ຕົວ	ທວາຍວ່າ	ຝົນຈະມີພໍສົມຄວນ
ນາກໃຫ້ນ້ຳ	4-5-6	ຕົວ	ທວາຍວ່າ	ຝົນຈະມີອຸດົມທຸກແຫ່ງ
ນາກໃຫ້ນ້ຳ	0 (7)		ທວາຍວ່າ	ຝົນຈະແລ້ງ

ຕົວຢ່າງ ປີ ຈ.ສ 1311 ນາກຈະໃຫ້ນ້ຳຈັກຕົວ?

1311 × 12 / 7 = 2247 ເສດ 3 ນາກໃຫ້ນ້ຳ 3 ຕົວ

ຂ. ທວາຍນາກໃຫ້ນ້ຳ ແລະ ຝົນຕາມນາມປີ

ປີໃຈ້ (ຊວດ) ນາກໃຫ້ນ້ຳ 3 ຕົວ ຝົນຈະມີໜ້ອຍ ກາງປີຈະງາມ ປາຍປີຈະມີມາກ.

ປີເປົ້າ (ສະຫຼູ) ນາກໃຫ້ນ້ຳ 5 ຕົວ ຝົນຈະສະເໝີກັນຕະຫຼອດປີ.

ປີຍີ່ (ຂານ) ນາກໃຫ້ນ້ຳ 3 ຕົວ ຝົນຕົ້ນປີດີ ກາງປີຈະນ້ອຍ ປາຍປີອຸດົມ.

ປີເໝົ້າ (ເຖາະ) ນາກໃຫ້ນ້ຳ 2 ຕົວ ຝົນຈະງາມຕະຫຼອດປີ.

ປີສີ (ມະໂຮງ) ນາກໃຫ້ນ້ຳ 3 ຕົວ ຝົນຕົ້ນປີ ແລະ ກາງປີຈະງາມ ປາຍປີຈະມີໜ້ອຍ.

ປີໃສ້ (ມະເສັງ) ນາກໃຫ້ນ້ຳ 1 ຕົວ ຝົນຈະງາມຕະຫຼອດປີ.

ປີສະງ້າ (ມະເມັຽ) ນາກໃນນ້ຳ 5 ຕົວ ຝົນຕົ້ນປີ ແລະ ກາງປີຈະງາມ ປາຍປີຈະນ້ອຍ.

ປີມົດ (ມະແມ) ນາກໃຫ້ນ້ຳ 3 ຕົວ ຝົນສະເໝີກັນຕະຫຼອດປີ.

ປີສັນ (ວອກ) ນາກໃຫ້ນ້ຳ 2 ຕົວ ຝົນຕົ້ນປີຈະງາມ ປາຍປີຈະມາກ.

ປີເຣົ້າ (ຣະກາ) ນາກໃຫ້ນ້ຳ 4 ຕົວ ຝົນຕົ້ນປີນ້ອຍ ກາງປີງາມ ປາຍປີຈະມາກ.

ປີເສັດ (ຈໍ) ນາກໃຫ້ນ້ຳ 0 ຕົວ ຝົນຕົ້ນປີນ້ອຍ ກາງປີງາມ ປາຍປີຈະມາກ.

ປີໃຄ້ (ກຸນ) ນາກໃຫ້ນ້ຳ 5 ຕົວ ຝົນຕົ້ນປີຈະງາມ ກາງປີຈະນ້ອຍ ປາຍປີຈະມາກ.

ໝາຍເຫດ ຕຳຣານີ້ ເຮັດໃຫ້ມີຄວາມສົງໄສ 2 ປະການຄື:

(1) ນາກໃຫ້ນ້ຳ 6 ຕົວ ບໍ່ມີຄືບິດກ່ອນ.

(2) ນາກໃຫ້ນ້ຳ 3 ຕົວມີເຖິງ 4 ຄັ້ງ ຂ້າພະເຈົ້າຄຶດວ່າຕຳຣານີ້ຈະກ່າຍຜິດມາຈາກສະບັບເດີມແຕ່ໃນຊັ້ນຕົ້ນ.

ຄ/. ເກນພິຣຸນສາດ (ຝົນ)

(1) ຈຳນວນຝົນ

ຖ້າຢາກຮູ້ວ່າປີໃດຈະມີຝົນຈັກຫ່າ ດັ່ງນັ້ນ ໃຫ້ຕັ້ງຈຸລະສັກຣາດປີນັ້ນລົງ ເອົາ 4 ລຶບແລ້ວເອົາ 7 ຫານ ລັບຖິ້ມເສຍ ເສດເປັນອະທິບໍດີຝົນ ຄື:

ເສດ	1	(ພະອາທິດ)	
ເສດ	0	(ພະເສົາ)	ເປັນອະທິບໍດີບັນດານໃຫ້ຝົນຕົກ 400 ຫ່າ.
ເສດ	2	(ພະຈັນ)	
ເສດ	5	(ພະຫັດ)	ເປັນອະທິບໍດີບັນດານໃຫ້ຝົນຕົກ 500 ຫ່າ.
ເສດ	3	(ພະອັງຄານ)	ເປັນອະທິບໍດີບັນດານໃຫ້ຝົນຕົກ 300 ຫ່າ.
ເສດ	4	(ພະພຸດ)	
ເສດ	6	(ພະສຸກ)	ເປັນອະທິບໍດີບັນດານໃຫ້ຝົນຕົກ 600 ຫ່າ.

ຕົວຢ່າງ ປີ 1311 ຈະມີຝົນຈັກຫ່າ?

(1311 - 4) / 7 = 186 ເສດ 5 ພະຫັດເປັນອະທິບໍດີ ຝົນ 500 ຫ່າ

(2) ແຈກຝົນ

ຈຳນວນຫ່າຝົນແຫ່ງ ພິຣຸນສາດ ນັ້ນຕ້ອງແຈກອອກເປັນ 10 ສ່ວນຄື:

ຕົກໃນຈັກກະວານ	4	ສ່ວນ
ຕົກໃນປ່າຫິມພານ	3	ສ່ວນ
ຕົກໃນມະຫາສະມຸດ	2	ສ່ວນ

ຕົກໃນມະນຸດໂລກ 1 ສ່ວນ

ຕົວຢ່າງ ປີ 1311 ມີຝົນ 500 ຫ່າ ຕົກໃນຈັກກະວານ 500 × 4 / 10 = 200 ຫ່າ

ປ່າຫິມມະພານ	500 × 3 / 10 = 150 ຫ່າ	
ມະຫາສະມຸດ	500 × 2 / 10 = 100 ຫ່າ	
ມະນຸດໂລກ	500 × 1 / 10 = 50 ຫ່າ	
	ໂຮມ = 500 ຫ່າ	

໑. ເກນຫາຣາທິຄຸນ

ເພື່ອຈະຮູ້ວ່າ ນ້ຳຈະມາກ ຫຼື ນ້ອຍ ມີວິທີຄຳນວນຢູ່ 2 ຢ່າງຄື:

(1) ໃຫ້ຕັ້ງຈຸລະສັກຣາດປີທີ່ຕ້ອງການນັ້ນລົງ ເອົາ 12 ຫານ ລັບຖິ້ມເສັຽ ເສດເປັນ ຣາສີ ແລະ ທວາຍຕາມຈຳນວນເສດດັ່ງນີ້:

ເສດເປັນຣາສີ	0-4-8	ຮຽກວ່າ ຣາສີເຕໂຊ	ນ້ຳຈະນ້ອຍ
ເສດເປັນຣາສີ	1-5-9	ຮຽກວ່າ ຣາສີປະຖະວີ	ນ້ຳຈະອຸດົມດີ
ເສດເປັນຣາສີ	2-6-10	ຮຽກວ່າ ຣາສີວາໂຍ	ນ້ຳຈະພໍສົມຄວນ
ເສດເປັນຣາສີ	3-7-11	ຮຽກວ່າ ຣາສີວາໂປ	ນ້ຳຈະມາກ.

ຕົວຢ່າງ ປີ 1311 ນ້ຳຈະເປັນຢ່າງໃດ?

1311 / 12 = 109 ເສດ 3 ເປັນຣາສີ ອາໂປ ທວາຍວ່ານ້ຳຈະມາກ.

(2) ອີກແບບນຶ່ງໃຫ້ຕັ້ງເກນ 480,000 ລົງເອົາຈຸລະສັກຣາດປີທີ່ຕ້ອງການຫານ ລັບຖິ້ມເສັຽ ເສດເປັນເກນຕາໄວ້.

ຕັ້ງເກນນັ້ນລົງ ເອົາກຳລັງປີສົມເອົ້າ ແລ້ວເອົາ 16 ຫານ ລັບຖິ້ມເສັຽແລ້ວທວາຍຕາມເສດ ດັ່ງນີ້ຄື:

ເສດເປັນ0	ທວາຍວ່າປີນັ້ນ	ນ້ຳຈະມາກ
ເສດເປັນ 1-2-3-4-5	"	ນ້ຳຈະນ້ອຍ
ເສດເປັນ 6-7-8-9-10	"	ນ້ຳຈະພໍຄວນ
ເສດເປັນ11-12-13-14-15	"	ນ້ຳຈະມາກນັກ

24/VII ຫ້າມຈຳໜ່າຍ

ຕົວຢ່າງ ປີ 1311 ເປັນປີກັດເປົ້າ (ສຫູ) ມີກຳລັງ 15

480000 / 1311	=	366 ເສດ 174 ເປັນເກນ ຕາໄວ້
(174 + 15) / 16	=	11 ເສດ 13 ທວາຍວ່າ ນ້ຳຈະມາກ.

ຈ. ທວາຍລົມແຮງ ຫຼື ຄ່ອຍ

ຢາກຮູ້ວ່າລົມຈະແຮງ ຫຼື ຄ່ອຍໃຫ້ຕັ້ງກຳລັງລົມ 960,000 ລົງ ເອົາຈຸລະສັກຣາດປີ ທີ່ຕ້ອງການນັ້ນຫານ ເສດເປັນເກນຕາໄວ້.

ຕັ້ງເກນນັ້ນລົງ ເອົາກຳລັງປີບວກເຂົ້າ ແລ້ວເອົາ 16 ຫານ ລັບຖິ້ມເສັຽ ແລ້ວທວາຍຕາມເສດດັ່ງນີ້:

ຖ້າເສດ	1-2-3-4-5	ຈະມີລົມພັດລາງຄາວ
ຖ້າເສດ	6-7-8-9-10	ຈະມີລົມພັດສະເໝີກັນ
ຖ້າເສດ	11-12-13-14-15	ຈະມີລົມພັດມາກ
ຖ້າເສດ	0	ຈະມີລົມພັດມາກທີ່ສຸດ

ຕົວຢ່າງ ປີ 1311 ເປັນປີກັດເປົ້າ ມີກຳລັງ 15

960,000 / 1311	=	732 ເສດ 348
(348 + 15)/ 16	=	22 ເສດ 11 ທວາຍວ່າຈະມີລົມພັດມາກ.

4. ທວາຍເລື່ອງເຂົ້າຜົນປູກ

ກ. ທັນຍາຫານ (ເຂົ້າ)

ເມື່ອຢາກຮູ້ວ່າທັນຍາຫານຈະເປັນປະການໃດ ໃຫ້ຕັ້ງຈຸລະສັກຣາດປີທີ່ຕ້ອງການນັ້ນລົງ ເອົາເກນທັກສາເມືອງ (ເກນ 12) ສົມ ແລ້ວເອົາ 7 ຫານ ລັບຖິ້ມເສັຽ ແລ້ວໃຫ້ສັງ ເກດເບິ່ງເສດໄປຕາມນີ້:

ເສດ 1-6 ຊື່ວ່າ ລາພະ ເຂົ້າກ້າໄຮ່ນາຈະໄດ້ຜົນ 10 ສ່ວນ ເສັຽແຕ່ສ່ວນດຽວ ປະຊາຊົນຈະມີຄວາມສຸກສະຫວັດດີ ທັນຍາຫານຈະມີບໍຣິບູນອຸດົມດີ.

ເສດ 3-5 ຊື່ວ່າ ປັດສິມະ ເຂົ້າກ້າໄຮ່ນາຈະໄດ້ຜົນ 1 ສ່ວນ ເສັຽ 5 ສ່ວນ ໂພຊະນີຍາຫານພໍສົມຄວນ ປະຊາຊົນສຸກແດ່ທຸກແດ່.

ເສດ 2-5 ຊື່ວ່າ ວິບັດ ເຂົ້າກ້າໄຮ່ນາຈະມີດ້ວງບົ້ງແມງກິນ ຈະໄດ້ຜົນແຕ່ເຄິ່ງດຽວ.

ເສດ 0 ຊື່ວ່າ ປາປະ ເຂົ້າກ້າໄຮ່ນາຈະໄດ້ຜົນແຕ່ສ່ວນ 1 ເສັຽໄປ 10 ສ່ວນ ຈະເກີດທຸພິຂະໄພ

ຕ່າງໆ ປະຊາຊົນຈະໄດ້ລຳບາກ ເພາະທັນຍາຫານແພງ ລາງແຫ່ງກໍເກີດເສັຽຫາຍເປັນອັນມາກ ທັນຍາຫານຈະຂາດແຄນບໍ່ພໍໃຊ້.

ຕົວຢ່າງ ທັນຍາຫານປີ 1311 ຈະເປັນປະການໃດ?

(1311 + 12) / = 331 ເສດ 6 ເປັນ ລາພະ ເຂົ້າກ້າໄຮ່ນາຈະໄດ້ຜົນດີຫຼາຍ

ຂ. ທວາຍການທຳນາ

ເພື່ອຈະຊາບວ່າ ນາທີ່ຢູ່ລຸ່ມ ຫຼື ນາທີ່ຢູ່ເທິງ (ນາດອນ) ຈະໄດ້ຜົນດີ ຫຼື ປະການໃດໃຫ້ຕັ້ງ ຈຸລະສັກຣາດປີທີ່ຕ້ອງການນັ້ນລົງ ເອົາ 27 ຫານ ລັບຖິ້ມເສັຽ ເສດໃຫ້ຕາໄວ້.

ຕັ້ງຈຸລະສັກຣາດລົງອີກ ເອົາ 5 ຫານ ລັບຖິ້ມເສັຽ ສ່ວນເສດໃຫ້ເອົາບວກເຂົ້າກັບເສດທີ່ຕາໄວ້ກ່ອນນັ້ນ ລັບເປັນຣືກໃຫ້ຕາໄວ້. ຖ້າຈຳນວນຣືກ ຫາກເກີນ 27 ໃຫ້ເອົາ 27 ລົບອອກ ເຫຼືອທໍ່ໃດເປັນ ຣືກ ແລ້ວໃຫ້ສັງເກດເບິ່ງຣືກ ຕໍ່ໄປນີ້ຄື:

ເສດເປັນ1-2-3-4	ນາເທິງນາລຸ່ມຈະດີທັງສອງແຫ່ງ
ເສດເປັນ5-6-7-8-9	ນາເທິງແລະນາລຸ່ມຈະດີທຸກແຫ່ງ
ເສດເປັນ10-12-15-16	ນາເທິງນາລຸ່ມຈະດີທັງສອງແຫ່ງ
ເສດເປັນ11-13-22	ນາລຸ່ມຈະດີແຕ່ນາເທິງບໍ່ດີ
ເສດເປັນ14-15-16-17-20	ທັງນາລຸ່ມແລະນາເທິງບໍ່ດີ
ເສດເປັນ18-19	ນາເທິງດີນາລຸ່ມໄດ້ຜົນພໍຄວນ
ເສດເປັນ21-23-24-0	ນາລຸ່ມດີນາເທິງພໍສົມຄວນ

ຄ. ທວາຍເລື່ອງໝາກໄມ້

ເພື່ອຈະຮູ້ວ່າໝາກໄມ້ຈະອຸດົມດີ ຫຼື ປະການໃດ ໃຫ້ຕັ້ງກຳລັງ 240.000 ລົງເອົາຈຸລະສັກຣາດ ປີທີ່ຕ້ອງການນັ້ນຫານ ລັບຖິ້ມເສັຽ ເສດເປັນເກນຕາໄວ້ ຕັ້ງເກນນັ້ນລົງ ເອົາກຳລັງປີທີ່ຄຳນວນນັ້ນ ສົມເຂົ້າແລ້ວຈຶ່ງເອົາ 16 ຫານ ລັບເສັຽແລ້ວທວາຍຕາມເສດດັ່ງຕໍ່ໄປນີ້:

ເສດເປັນ1-2-3-4-5	ພືດຜົນຈະບໍ່ດີກ
ເສດເປັນ6-7-8-9-10	ພືດຜົນຈະມີພໍສົມຄວນ
ເສດເປັນ11-12-3-14-15	ພືດຜົນດົກຫຼາຍ
ເສດເປັນ 0	ພືດຜົນຈະເປັນດ້ວງເປັນແມງ

ຕົວຢ່າງ ປີ 1309 ພືດຜົນຈະເປັນປະການໃດ?

ປີ 1309 ນີ້ເປັນປີເມີງໃຄ້ (ກຸນ) ມີກຳລັງ 19

240000 / 1309	=	183	ເສດ	453	ຕາໄວ້
(453 + 19) / 16	=	29	ເສດ	8	ພິດຜີນຈະພໍຄວນ

ງ. ກຳລັງປີ

ກຳລັງປີທີ່ກ່າວເຖິງໃນການຄຳນວນຂ້າງເທິງນີ້ມີດັ່ງນີ້:

ປີໃຈ້ ແລະ ປີມົດ (ຊວດ ແລະ ມະແມ)	ມີກຳລັງ	6
ປີເປົ້າ ແລະ ປີສັນ (ສຫູ ແລະ ວອກ)	ມີກຳລັງ	15
ປີຍີ່ ແລະ ເຮົ້າ (ຂານ ແລະ ຣະກາ)	ມີກຳລັງ	8
ປີເໝົ້າ ແລະ ເສັດ (ເຖາະ ແລະ ຈໍ)	ມີກຳລັງ	17
ປີສີ່ ແລະ ໃຄ້ (ມະໂຮງ ແລະ ກຸນ)	ມີກຳລັງ	19
ປີໃສ້ (ມະເສັງ)	ມີກຳລັງ	13
ປີສະງ້າ (ມະເມັຽ)	ມີກຳລັງ	10

5. ກາລະໂຍກ

ກ. ທຸງໄຊ

ໃຫ້ຕັ້ງຈຸລະສັກຣາດປີທີ່ຕ້ອງການນັ້ນລົງ ເອົາ 10 ຄູນ ແລ້ວຈິ່ງເອົາ 3 ສົມ ລັບເປັນເກນ ຕາໄວ້.

ຕັ້ງເກນນັ້ນລົງເອົາ 7-8-12-27 ແລະ 30 ຫານເປັນລຳດັບໄປ ລັບຖິ້ມເສັຽເພາະຄົບຮອບພໍດີ ແລ້ວສ່ວນເສດເປັນ ວັນ-ຍາມ-ຣາສີ-ຣຶກ ແລະ ດິຖີ ທຸງໄຊແລ.

<u>ຕົວຢ່າງ</u> ຄຳນວນຫາທຸງໄຊປີ 1312

(1312 × 10) + 3 = 13123

13123 / 7	=	1874	ເສດ	5	ວັນພະຫັດ ເປັນທຸງໄຊ
13123 / 8	=	1640	ເສດ	3	ຄືຍາມສຸຣິຍະ ທຸງໄຊ
13123 / 12	=	1093	ເສດ	7	ຄືຣາສີພະຈິກ ທຸງໄຊ
13123 / 27	=	486	ເສດ	1	ຄືຣຶກ ອັດສະວະນີ ທຸງໄຊ

13123 / 30 = 437 ເສດ 13 ຄືດິຖີ 13 ທຸງໄຊ.

ຂ. ອະທິບໍດີ

ຕັ້ງຈຸລະສັກຣາດປີທີ່ຕ້ອງການນັ້ນລົງ ເອົາ 498 ຫານ ລັບຖິ້ມເສັຽ ເສດເປັນເກນຕາໄວ້.

ຕັ້ງເກນລົງ ເອົາ 7-8-12-27 ແລະ 30 ຫານເປັນລຳດັບກັນໄປ ລັບຖິ້ມເສັຽ ເສດເປັນ ວັນ-ຍາມ-ຣາສີ-ຣຶກ ແລະ ດິຖີ ອະທິບໍດີແລ.

<u>ຕົວຢ່າງ</u> ຄຳນວນຫາອະທິບໍດີ ປີ 1312

1312 / 498	=	2	ເສດ	316	ຕາໄວ້
316 / 7	=	45	ເສດ	1	ວັນອາທິດເປັນອະທິບໍດີ
316 / 8	=	39	ເສດ	4	ຍາມຈັນເທົາເປັນອະທິບໍດີ
316 / 12	=	26	ເສດ	4	ຣາສີສິງ ເປັນອະທິບໍດີ
316 / 11	=	11	ເສດ	19	ຣຶກ ມູລະເປັນອະທິບໍດີ
316 / 30	=	10	ເສດ	16	ດິຖີ 16 ເປັນອະທິບໍດີ

ຄ. ອຸບາດ

ຕັ້ງຈຸລະສັກຣາດປີທີ່ຕ້ອງການນັ້ນລົງເອົາ 30 ຄູນແລ້ວຈິ່ງເອົາ 12 ສົມ ລັບເປັນເກນຕາໄວ້, ຕັ້ງເກນນັ້ນລົງເອົາ 7-8-12-27 ແລະ 30 ຫານຕາມລຳດັບໄປ ເສດເປັນ ວັນ-ຍາມ-ຣາສີ-ຣຶກ ແລະ ດິຖີ ອຸບາດ

<u>ຕົວຢ່າງ</u> ຄຳນວນຫາອຸບາດ ປີ 1312

(1312 × 30) + 12 = 13132

13132 / 7	=	1876	ເສດ	0	ວັນເສົາເປັນ	ອຸບາດ
13132 / 8	=	1641	ເສດ	4	ຍາມພຸທະ	ອຸບາດ
13132 / 12	=	1094	ເສດ	4	ຣາສີກໍຣະກົດ	ອຸບາດ
13132 / 27	=	486	ເສດ	10	ຣຶກ ມາຄະ	ອຸບາດ
13132 / 30	=	437	ເສດ	22	ດິຖີ 22	ເປັນອຸບາດ

ງ. ໂລກວິບາດ

ຕັ້ງຈຸລະສັກຣາດປີທີ່ຕ້ອງການນັ້ນລົງເອົາ 1120 ສົມ ລັບໃຫ້ຕາໄວ້, ຕັ້ງລັບນັ້ນລົງເອົາ

7-8-12-27 ແລະ 30 ຫານເປັນລຳດັບໄປ ເສດເປັນ ວັນ-ຍາມ-ຣາ-ຣືກ ແລະ ດິຖີ ອຸບາດ

ຕົວຢ່າງ ຄຳນວນຫາໂລກວິບາດປີ 1312

1312 + 1120 = 2432

2432 / 7	=	347	ເສດ	3	ວັນອັງຄານ ເປັນ ໂລກວິບາດ	
2432 / 8	=	304	ເສດ	0	ຍາມກຸມພະ	ໂລກວິບາດ
2432 / 12	=	202	ເສດ	8	ຣາສີທະນູ	ໂລກວິບາດ
2432 / 27	=	90	ເສດ	2	ຣືກ ພໍຣະນີ	ໂລກວິບາດ
2432 / 30	=	81	ເສດ	2	ດິຖີ 2	ໂລກວິບາດ

ໝາຍເຫດ: ຕຳຣາທວາຍກ່ຽວກັບສັງຂານ ຍັງມີອີກຫຼາຍຢ່າງແຕ່ບໍ່ຜາກົດວ່າສຳຄັນທີ່ໃດ ທັງບໍ່ຄ່ອຍແນ່ນອນດ້ວຍ ເພາະສະນັ້ນຈຶ່ງບໍ່ໄດ້ເອົາມາໂຮມໄວ້ນະທີ່ນີ້.

ສ່ວນເກນ 7-8-12-27-30 ທີ່ເປັນຕົວຫານໃນການຄຳນວນກາລະໂຍກນີ້ ເນື່ອງມາຈາກມູນດັ່ງຕໍ່ໄປນີ້ຄື:

ເກນ	7	ເປັນຈຳນວນ	ວັນໃນສັບປະດາ
ເກນ	8	ເປັນຈຳນວນ	ຍາມໃນກາງເວັນ
ເກນ	12	ເປັນຈຳນວນ	ຣາສີໃນຈັກກະຣາສີ
ເກນ	27	ເປັນຈຳນວນ	ຣືກ ໃນພື້ນຟ້າ
ເກນ	30	ເປັນຈຳນວນ	ດິຖີຣືກ ໃນຣືກ ນຶ່ງ

ດ້ວຍເຫດນີ້ເມື່ອເອົາເກນເຫຼົ່ານັ້ນຫານແລ້ວລັບ ຈຶ່ງຖີ້ມເສັຽເພາະຄົບຮອບພໍດີຂອງສັບປະດາ, ຍາມ, ລາສີ, ຣືກ ແລະ ດິຖີ ນັ້ນ ແລ້ວຈຶ່ງເອົາແຕ່ເສດຂອງບົດຫານມາພິຈາຣະນາທວາຍ.

ຖ້າເສດເປັນ 0 ໃຫ້ເອົາເກນຕົວຫານນັ້ນເປັນເສດມາພິຈາລະນາ ຍົກເວັ້ນແຕ່ສຳຫຼັບຣາສີ (ເກນ 12) ເມື່ອເສດເປັນ 0 ໝາຍຄວາມວ່າຣາສີເມດສະເໝີ.

ຕອນທີເຈັດ

ຄູນສັງຂານ ໂດຍໃຊ້ພຸດທະສັກຣາດ ຫຼື ມະຫາສັກຣາດ

1. ໃຊ້ພຸດທະສັກຣາດ

ເພື່ອຄວາມສະດວກແກ່ຜູ້ທີ່ຕ້ອງການທຳອັດຕາຖະເຫຼີງສົກໂດຍໃຊ້ພຸດທະສັກຣາດສຳຫຼັບກວດ ວັນ, ເດືອນ, ແລະ ປີ ທີ່ມີຢູ່ຕາມຈາຣຶກບູຮານ ຂ້າພະເຈົ້າໄດ້ເອົາເກນ ແລະ ວິທີຄຳນວນໂຫຣາສາດ ຂະເໝນບັບຍັດໄວ້ມາຄຳນວນເປັນຕົວຢ່າງຕໍ່ໄປນີ້ ໂດຍສະເໜີຄວາມເຫັນກ່ຽວກັບເກນເຫຼົ່ານັ້ນດ້ວຍ.

ການຄຳນວນເປັນຕົວຢ່າງນັ້ນ ຈະທຳອັດຕາຖະເຫຼີງສົກປີພຸດທະສັກຣາດ 2493 (ຈ.ສ 1312) ເປັນແບບໄວ້:

<u>ຫໍຣະຄຸນ</u> ຕັ້ງເກນ 292207 ລົງເອົາ ພຸດທະສັກຣາດ 2493 ຄູນ ແລ້ວຈຶ່ງເອົາເກນ 499 ສົມເຂົ້າ ເສັດແລ້ວເອົາເກນ 800 ຫານ ລັບຕາໄວ້ ເອົາເກນ 4 ສົມເຂົ້າກັບລັບ ເປັນຫໍຣະຄຸນ.

292207 × 2493	=	728472051
728472051 + 499	=	728472550
72842550 / 800	=	910590 ເສດ 550
910590 + 4	=	910594 ເປັນຫໍຣະຄຸນ

<u>ກຳມັດຊະພົນ</u> ຕັ້ງເກນ 800 ລົງ ເອົາເສດແຫ່ງບົດຫານດ້ວຍ 800 ລົບເຫຼືອທໍ່ໃດເປັນກຳມັດຊະພົນຄື:

800 - 550 = 250 ເປັນ ກຳມັດຊະພົນ

<u>ອຸດຈະພົນ</u> ຕັ້ງຫໍຣະຄຸນລົງເອົາເກນ 728 ສົມແລ້ວເອົາເກນ 3232 ຫານເສດເປັນ ອຸດຈະພົນ:

910594 + 728	=	911322
911322 / 3232	=	281 ເສດ 3130 ເປັນອຸດຈະພົນ

<u>ອະວະມານ</u> ຕັ້ງຫໍຣະຄຸນລົງເອົາ 11 ຄູນ, ເອົາເກນ 25 ສົມເຂົ້າແລ້ວຈຶ່ງເອົາເກນ 692 ຫານ ເສດເປັນອະວະມານ.

910594 × 11	=	10016534
10016534 + 25	=	10016559

10016559 / 692 = 14474 ເສດ 551 ເປັນອະວະມານ.

<u>ມາສະເກນ</u> ຕັ້ງລັບແຫ່ງບິດຫານດ້ວຍ 692 ລົງ ເອົາເກນ 29 ສົມເຂົ້າ ແລ້ວເອົາຫໍຣະຄຸນສົມເຂົ້າອີກ ແລ້ວຈຶ່ງເອົາເກນ 30 ຫານ ລັບເປັນມາສະເກນ:

14474 + 29 = 14503

14503 + 910594 = 924097

925097 / 30 = 30836 ເປັນມາສະເກນ ເສດ 17

<u>ດິຖີ</u> ເສດແຫ່ງບິດ ຫານດ້ວຍ 30 ເປັນດິຖີ ຕົວຢ່າງໃນບິດນີ້ ດິຖີເປັນ 17.

<u>ວາຣະ</u> ຕັ້ງຫໍຣະຄຸນລົງເອົາເກນ 7 ຫານ ລັບຖິ້ມເສັຽ ເສດເປັນວາຣະ ຄື:

910594 / 7 = 130084 ເສດ 6 ເປັນວາຣະ.

<u>ຂໍ້ສັງເກດ</u> ຫໍຣະຄຸນແຫ່ງອັດຕາຖະເຫຼີງສົກພຸດທະສັກຣາດ ມີຈຳນວນສູງເກີນກຳໜົດຂອງປີສຸຣິຍະຄະຕິໄປ 3 ວັນເປັນປົກຕິ ດັ່ງຈະເຫັນໄດ້ຕໍ່ໄປນີ້ ຄືຫໍຣະຄຸນປີພຸດທະສັກຣາດທີ 1 ມີ ຫໍຣະຄຸນ ເປັນຈຳນວນເຖິງ 369 ວັນ.

((292207 × 1) + 499) / 800 = 365 ວັນ ເສດ 706

365 + 4 = 369 ວັນ ແຕ່ທີ່ຈິ່ງປີພຸດທະສັກຣາດທີ 1 ມີພຽງ 366 ວັນທໍ່ນັ້ນ ເພາະເປັນປີອະທິກະສຸຣະທິນ ດັ່ງຈຳນວນກຳມັດຊະພົນ 94 ເຊິ່ງຕ່ຳກວ່າ 207 ສະແດງໄວ້ນັ້ນ (800-706 = 94).

ການທີ່ຫໍຣະຄຸນສູງເກີນກຳໜົດໄປ 3 ວັນນັ້ນເນື່ອງມາຈາກເກນ 4 ທີ່ສົມເຂົ້າກັບລັບແຫ່ງບິດທີ່ຫານດ້ວຍ 800 ນັ້ນເອງ ເພາະເກນ 4 ສູງກວ່າທີ່ໃຊ້ຈຸລະສັກຣາດໄປ 3 ວັນ.

ອັດຕາຖະເຫຼີງສົກແຫ່ງພຸດທະສັກຣາດ ຜິດຈາກອັດຕາຖະເຫຼີງສົກແຫ່ງຈຸລະສັກຣາດໄປ 1 ປີ. ອີກປະການນຶ່ງຕາມທີ່ຂ້າພະເຈົ້າໄດ້ທຳອັດຕາຖະເຫຼີງສົກພຸດທະສັກຣາດ ເພື່ອກວດເບິ່ງສັກຣາດແຫ່ງຈາຣຶກເກົ່າແກ່ມານັ້ນ ໄດ້ເຫັນວ່າ ອັດຕາຖະເຫຼີງສົກແຫ່ງພຸດທະສັກຣາດປີໃດໆ ກໍຄາດ

ອັດຕາຖະເຫຼີງສົກ	ພ.ສ 1183	ພ.ສ 1184	ພ.ສ 2490	ພ.ສ 2491	ພ.ສ 2492	ພ.ສ 2493
ຫໍຣະຄຸນ	432105	432471	909498	909864	910229	910594
ກຳມັດຊະພົນ	220	13	71	664	457	250
ອຸດຈະພົນ	1977	110	2034	2400	2765	3130
ອະວະມານ	524	387	259	133	688	551
ມາສະເກນ	14633	14645	30799	30811	30824	30836
ດິຖີ	12	23	14	26	6	17
ວາຣະ	2	3	2	4	5	6

ອັດຕາຖະເຫຼີງສົກ	ຈ.ສ 1	ຈ.ສ 2	ຈ.ສ 1309	ຈ.ສ 1310	ຈ.ສ 1311	ຈ.ສ 1312
ຫໍຣະຄຸນ	366	731	478125	478490	478855	479220
ກຳມັດຊະພົນ	220	13	664	457	250	43
ອຸດຈະພົນ	2977	110	2400	2765	3130	263
ອະວະມານ	524	387	133	688	551	414
ມາສະເກນ	12	24	16190	18203	16215	16227
ດິຖີ	12	23	26	6	17	28
ວາຣະ	2	3	4	5	6	0

ເຄື່ອນຈາກອັດຕາຖະເຫຼີງສົກແຫ່ງປີຈຸລະສັກຣາດທີ່ປະຕິທິນລົງວ່າກົງກັນນັ້ນໄປ 1 ປີເປັນປີກກະຕິ ດັ່ງຈະສັງເກດໄດ້ໃນຕາລາງຕໍ່ໄປນີ້:

ຈຳນວນກຳມັດຊະພົນອຸດຈະພົນ ອະວະມານ ດິຖີ ແລະ ວາຣະ ແຫ່ງພຸດທະສັກຣາດ ແລະ ແຫ່ງ ຈຸລະສັກຣາດ ປີທີ່ກົງກັນໃນປະຕິທິນນັ້ນ ບໍ່ຖືກຕ້ອງກັນຈັກປີເລີຍ ດັ່ງອັດຕາຖະເຫຼີງສົກປີ ພ.ສ 2491 ທີ່ເປັນຄູ່ກັບປີ ຈ.ສ 1310 ດັ່ງນັ້ນເປັນຕົ້ນ ແຕ່ອັດຕາຖະເລີງສົກ ພ.ສ 2491 ຫາກກົງກັບ ອັດຕາຖະເຫຼີງສົກ ແຫ່ງປີ ຈ.ສ 1309 ເຊິ່ງເປັນຄູ່ກັບ ພ.ສ 2490 ຫຼັກຖານນີ້ສະແດງໃຫ້ເຫັນວ່າ ຄຳທີ່ກ່າວກັນວ່າຈຸລະສັກຣາດໄດ້ຕັ້ງຕົ້ນເມື່ອປີ ພ.ສ 1181 ຫຼື 1182 ດັ່ງສະເໜີມາແລ້ວໃນຕອນທີ່ ກ່ຽວກັບສັກຣາດນັ້ນ ຜາກົດວ່າຜິດໄປຢ່າງແນ່ນອນ ເມື່ອຖືເອົາອັດຕາຖະເຫຼີງສົກເປັນຫຼັກແລ້ວ ກໍ ເຫັນວ່າຈຸລະສັກຣາດ ໄດ້ຕັ້ງຕົ້ນເວລາສັງຂານປີພຸດທະສັກຣາດ 1183 ເພາະອັດຕາຖະເຫຼີງສົກ ແຫ່ງປີທັງ 2 ນີ້ຖືກ ຕ້ອງ ກັນ ໂດຍກົງດັ່ງຈຳນວນ ກຳມັດຊະພົນ, ອຸດຈະພົນ, ອະວະມານ, ມາສະເກນ, ດິຖີ ແລະ ວາຣະ ທີ່ຄຳນວນໄວ້ບົນນີ້ສະແດງເປັນຫຼັກຖານນັ້ນ.

2. ໃຊ້ມະຫາສັກຣາດ

ການຄູນສັງຂານ ໂດຍໃຊ້ມະຫາສັກຣາດກໍດຳເນີນແບບດຽວກັນກັບການໃຊ້ ຈຸລະສັກຣາດ ແລະ ພຸດທະສັກຣາດ ທຸກປະການ ແຕ່ລາງເກນຕ່າງຈຳນວນກັນທໍ່ນັ້ນ.

ສຳຫຼັບຄຳນວນເປັນຕົວຢ່າງ ຈະທຳອັດຕາຖະເຫຼີງສົກປີມະຫາສັກຣາດ 1870 ເຊິ່ງປະຕິທິນ ໝາຍເອົາກົງກັບປີຈຸລະສັກຣາດ 1311 ແລະ ພ.ສ 2492.

ຫໍຣະຄຸນ ຕັ້ງເກນ 292207 ລົງ ເອົາມະຫາສັກຣາດ 1870 ຄູນ ເອົາເກນ 453 ສົມເຂົ້າແລ້ວ ຈຶ່ງເອົາ ເກນ 800 ຫານ ລັບເອົາເກນ 3 ສົມເຂົ້າເປັນຫໍຣະຄຸນ:

292207 × 1870 = 547427090

547427090 + 453 = 547427543

547427543 / 800 = 683034 ເສດ 343

683034 + 3 = 683037 ເປັນຫໍຣະຄຸນ

ກຳມັດຊະພົນ ຕັ້ງເກນ 800 ລົງເອົາເສດແຫ່ງ ທີ່ຫານດ້ວຍ 800 ລົບ ເຫຼືອທໍ່ໃດເປັນ ກຳມັດຊະພົນຄື:

800 - 343 = 457 ເປັນ ກຳມັດຊະພົນ.

ອຸດຈະພົນ ຕັ້ງຫໍຣະຄຸນລົງເອົາເກນ 1680 ສົມເຂົ້າແລ້ວເອົາເກນ 3232 ຫານ ລັບຖິ້ມເສັຽ ເສດເປັນອຸດຈະພົນ ຄື:

683037 + 1680 = 684717

684717 / 3232 = 211 ເສດ 2765 ເປັນອຸດຈະພົນ

ອະວະມານ ຕັ້ງຫໍຣະຄຸນລົງເອົາ 11 ຄູນເອົາເກນ 325 ສົມເຂົ້າແລ້ວເອົາເກນ 692 ຫານ ລັບຕາໄວ້, ເສດເປັນອະວະມານ ຄື:

683037 × 11 = 7513407

7513407 + 325 = 7513732

7513732 / 692 = 10857 ເສດ 688 ເປັນອະວະມານ

ມາສະເກນ ຕັ້ງລັບແຫ່ງບົດຫານດ້ວຍ 692 ອ້າງເທິງນີ້ລົງ ເອົາເກນ 12 ສົມເຂົ້າ ເອົາຫໍຣະຄຸນສົມ ເຂົ້າອີກແລ້ວຈຶ່ງເອົາ 30 ຫານ ລັບເປັນມາສະເກນເສດຕາໄວ້

10857 + 12 + 683037 = 693906

693906 / 692 = 23130 ເປັນມາສະເກນ ເສດ 6

ດິຖີ ເສດແຫ່ງບົດຫານດ້ວຍ 30 ເປັນດິຖີ ຄືໃນທີ່ນີ້ ດິຖີເປັນ 6

ວາຣະ ຕັ້ງຫໍຣະຄຸນລົງ ເອົາ 7 ຫານ ລັບຖິ້ມເສັຽ ເສດເປັນ ວາຣະ ຄື:

683037 / 7 = 57576 ເສດ 5 ເປັນວາຣະ

ຂໍ້ສັງເກດ ຫໍຣະຄຸນແຫ່ງອັດຕາຖະເຫຼິງສົກມະຫາສັກຣາດມີຈຳນວນສູງກວ່າກຳໜົດວັນຂອງປີສຸຣິຍະຄະຕິໄປ 3 ວັນເປັນປົກຕິ ດັ່ງຈະເຫັນໄດ້ຕໍ່ໄປນີ້ ຄື ຫໍຣະຄຸນ ປີທີ 1 ແຫ່ງມະຫາສັກຣາດ ມີຈຳນວນເຖິງ 368 ວັນ.

(292207 × 1) + 453 / 800 = 365 ວັນເສດ 343

365 + 3 = 368 ວັນ ແຕ່ທີ່ຈິງປີມະຫາສັກຣາດທີ 1 ມີພຽງແຕ່ 365 ວັນທໍ່ນັ້ນ ເພາະເປັນປີ

ປົກກະຕິສຸຣະທິນ ດັ່ງຈຳນວນກຳມັດຊະພົນ 457 ເຊິ່ງສູງກວ່າ 207 ສະແດງໄວ້ນັ້ນ (800 - 343 = 457)

ການທີ່ຫໍຣະຄຸນສູງເກີນໄປ 3 ວັນນີ້ເນື່ອງມາຈາກເກນ 3 ທີ່ສົມເຂົ້າກັບລັບແຫ່ງບິດທີ່ຫານດ້ວຍ 800 ນັ້ນເອງ.

ອັດຕາຖະເຫຼີງສົກແຫ່ງມະຫາສັກຣາດ ຜິດອັດຕາຖະເຫຼີງສົກແຫ່ງຈຸລະສັກຣາດໄປ 1 ປີ. ອີກປະການນຶ່ງຜາກົດວ່າອັດຕາຖະເຫຼີງສົກແຫ່ງມະຫາສັກຣາດປີໃດໆກໍຄາດເຄື່ອນຈາກ ອັດຕາຖະເຫຼີງສົກແຫ່ງປີຈຸລະສັກຣາດ ທີ່ປະຕິທິນລົງວ່າກົງກັບນັ້ນໄປ 1 ປີເປັນປົກກະຕິ ດັ່ງຈະສັງເກດໄດ້ໃນຕາລາງຕໍ່ໄປນີ້:

ອັດຕາຖະເຫຼີງສົກ	ມ.ສ 561	ມ.ສ 462	ມ.ສ 1868	ມ.ສ 1869	ມ.ສ 1870	ມ.ສ 1871
ຫໍຣະຄຸນ	204913	205278	682306	682672	683037	683402
ກຳມັດຊະພົນ	220	13	71	664	457	250
ອຸດຈະພົນ	2977	110	2034	2400	2765	3130
ອະວະມານ	524	387	183	133	688	550
ມາສະເກນ	6936	6951	23105	23117	23130	23142
ດິຖີ	12	23	14	26	6	17
ວາຣະ	2	3	2	4	5	6
ອັດຕາຖະເຫຼີງສົກ	**ຈ.ສ 1**	**ຈ.ສ 2**	**ຈ.ສ 1309**	**ຈ.ສ 1310**	**ຈ.ສ 1311**	**ຈ.ສ 1312**
ຫໍຣະຄຸນ	366	731	478125	478490	478855	479220
ກຳມັດຊະພົນ	220	13	664	457	250	43
ອຸດຈະພົນ	2977	110	2400	2765	3130	263
ອະວະມານ	524	387	133	688	551	414
ມາສະເກນ	12	24	16190	16203	16215	16227
ດິຖີ	12	23	26	6	17	28
ວາຣະ	2	3	4	5	6	0

ຈຳນວນກຳມັດຊະພົນ, ອຸດຈະພົນ, ອະວະມານ, ດິຖີ ແລະ ວາຣະ ແຫ່ງມະຫາສັກຣາດ ແລະ

24/VII ຫ້າມຈຳໜ່າຍ

ແຫ່ງຈຸລະສັກຣາດ ປີທີ່ກົງກັບໃນປະຕິທິນນັ້ນ ບໍ່ຖືກຕ້ອງກັບຈັກປີເລີຍ ດັ່ງອັດຕາຖະເລິງສົກປີ ມ.ສ 1870 ທີ່ເປັນຄູ່ກັບປີ ຈ.ສ 1311 ດັ່ງນັ້ນເປັນຕົ້ນ ແຕ່ອັດຕາຖະເຫຼີງສົກປີ ມ.ສ 1870 ຫາກກົງກັບອັດຕາຖະເລິງສົກແຫ່ງປີ ຈ.ສ 1310 ທີ່ຢູ່ກ່ອນໜ້າແລະເປັນຄູ່ກັບປີ ມ.ສ 1869 ນັ້ນ ຫຼັກຖານນີ້ສະແດງໃຫ້ເຫັນວ່າ ຄຳທີ່ກ່າວກັນວ່າຈຸລະສັກຣາດໄດ້ຕັ້ງຕົ້ນຂຶ້ນເມື່ອປີມະຫາສັກຣາດ 561 ນັ້ນ (ທ່ານຟາໂຣ) ເປັນທີ່ຖືກຕ້ອງ ແຕ່ວ່າການລຳດັບປີໃນພາຍຫຼັງ ຜິດໄປ 1 ປີຢ່າງແນ່ນອນ.

ຮຽບຮຽງສຳເລັດແລ້ວເມື່ອ ພ.ສ 2494 ຄ.ສ 1951

ໜັງສືນີ້ ເຈົ້າເພັຊຣາຊ ໄດ້ທຳການຄົ້ນຄວ້າມາເຫິງນານກວ່າ 20 ປີ ຈາກ:

1. ຈາກຕຳຣາໂຫຣາສາດໄທ:
    - ກ. ປະຕິທິນໂຫຣາສາດຂອງຫຼວງອັດຕະຖະວາທີ
    - ຂ. ໜັງສືພົງສາວະດານໂຍນົກ ຂອງພະຍາ ປະຊາກິຈກອນຈັກ
    - ຄ. ໜັງສືວັນນະຄະດີໄທ ຂອງນາຍທຣິດ
2. ຕຳຣາໂຫຣາສາດຂະເໝນ ຂຽນໂດຍ ທ່ານ ຟາໂຣຄ໌ (ຄົນຝຣັ່ງ)
3. ຕຳຣາປະຕິທິນໂຫຣາສາດ ແລະ ຕຳນານດາວ ຂອງຝຣັ່ງ
4. ຕຳຣາໂຫຣາສາດລາວ (ຈາກໜັງສືໃບລານ)

ພາກເສີມ

ການທຳ ອັດຕາຖະເຫຼີງສິກ

ໂດຍ ຄຳສິງ ໂງ່ນວໍຣະຣາທ



1 - ວັນຂຶ້ນປີໃໝ່

ຊຶ່ງຮຽກອີກວ່າ ວັນສັງຂານ (ສ. ສັງກຣານຕະ ປ. ສັງກັນຕະ ແປວ່າ ກ້າວຂຶ້ນ) ຫຼື ວັນຖະເຫຼີງສົກ: ເມື່ອພະອາທິດເດີນມາຄົບຮອບທີ່ ຂີດຂັ້ນ ຣາສີມີນ ກັບ ຣາສີເມດ.

2 - ສຸຣະທິນແມ່ນ

ຈຳນວນວັນຊຶ່ງມີຢູ່ນັບແຕ່ຫຼັງວັນສັງຂານຂຶ້ນມາ ຈົນເຖິງວັນທີ່ເຮົາຕ້ອງການຈະຄຳນວນ ມັດທະຍົມ ແລະສຳຜຸດ ພະເຄາະດວງໃດດວງໜຶ່ງ. (ນັບ 1 ມາແຕ່ວັນທີ່ຢູ່ຫຼັງ ວັນສັງຂານຂຶ້ນ).

3 - ປີ

ປີລາວຂອງເຮົາ ເປັນປີສຸຣິຍະຄະຕິ ຖືເອົາລະຍະເວລາທີ່ພະອາທິດເດີນຄົບຮອບນຶ່ງ ຄືຈາກຂີດຂັ້ນ ຣາສີມີນ ກັບຣາສີເມດ ວຽນມາເຖິງຂີດນີ້ໃໝ່ ໂດຍໃຊ້ເວລາ 365 ວັນ 6 ຊົ່ວໂມງ 12 ນາທີ ແລະ 36 ວິນາທີ. ແຕ່ປົກກະຕິຖືເອົາ 365 ວັນ ແລ້ວກໍຮຽກປີດັ່ງກ່າວ ປີປົກກະຕິ ສຸຣະທິນ.

ປີ ອະທິກະສຸຣະທິນ ມີ 366 ວັນ ລື່ນປີປົກກະຕິສຸຣະທິນ 1 ວັນ ເນື່ອງຈາກແຕ່ລະປີມີເສດ 6 ຊົ່ວໂມງ 12 ນາທີ 36 ວິນາທີ ເມື່ອສະສົມໄດ້ຄົບ 24 ຊົ່ວໂມງ ກໍເທົ່າກັບວັນນຶ່ງເມື່ອໃດ (ທຸກ 2, 3 ຫຼື 4 ປີ). ປີໃດມີ ກຳມັດຊະພົນຖະເຫຼີງສົກ ແຕ່ 1 ຫາ 207 ປີນັ້ນຕ້ອງເປັນປີອະທິກະ ສຸຣະທິນ.

4 - ເດືອນ ປະຕິທິນລາວຖືເອົາເດືອນທາງຈັນທຣະຄະຕິເປັນຫຼັກ ພະຈັນເດີນຮອບໂລກ 1 ຮອບ ເປັນກຳໜົດ 1 ເດືອນ ເປັນໄລຍະ 29 ວັນ 12 ໂມງ 44 ນາທີ 2.39 ວິນາທີ. (ຝຣັ່ງກຳນົດ 29 ວັນ 12 ໂມງ 44 ນາທີ 2.86 ວິນາທີ)

5 - ວັນຂຶ້ນປີໃໝ່ ຕົກຢູ່ລະວ່າງ ເດືອນຈັນທຣະຄະຕິ ທີ 5 ຂຶ້ນ 6 ຄ່ຳ ແລະເດືອນ 6 ຂຶ້ນ 5 ຄ່ຳ

6 - ຮອບຈັນທຣະຄະຕິ (Moon period) ທຸກໆ ຮອບ 19 ປີ ວັນຂຶ້ນ 1 ຄ່ຳ ເດືອນ 5 ເດືອນຈັນທຣະຄະຕິ ກໍວຽນມາຄົບວັນທີເດີມ ແຫ່ງເດືອນສຸຣິຍະຄະຕິອີກສະເໝີ ຕົວຢ່າງ ປີ ຈ.ສ 1282 ເດືອນ 5 ຂຶ້ນ 1 ຄ່ຳ ກົງ ກັບວັນທີ່ 8 ເມສາ ຄ.ສ 1921 ຕໍ່ມາອີກ 19 ປີ ຄື ປີຈ.ສ 1301 ເດືອນ 5 ກໍກັບມາຂຶ້ນ 1 ຄ່ຳ ກົງກັບວັນທີ 8 ເມສາ ຄ.ສ 1940 ອີກຄັ້ງນຶ່ງ.

7 - ທໍຣະຄຸນ ເປັນຈຳນວນວັນຊຶ່ງລ່ວງມາແລ້ວ ແຕ່ວັນຕັ້ງຕົ້ນສັກຣາດ ຈົນເຖິງວັນສຸດທ້າຍແຫ່ງປີທີ່ເຮົາຄູນສັງຂານ.

8 - ສັກຣາດ

<u>ກ- ພຸດທະສັກຣາດ</u>

ຕັ້ງຂຶ້ນເມື່ອພະພຸດທະເຈົ້າ ດັບຂັນປະຣິນິບພານໄປ.

F.G Faraut ກ່າວວ່າວັນຕັ້ງຕົ້ນ ພຸດທະສັກຣາດ ຫຼື ວັນສັງຂານຂຶ້ນກົງກັບ ວັນພະຫັດ ເດືອນ 5 ຂຶ້ນ 11 ຄ່ຳ ປີ ມະເສັງ (ເມິ່ງໃສ້)

<u>ຂ- ມະຫາສັກຣາດ</u>

F.G Faraut ກ່າວວ່າວັນຕັ້ງຕົ້ນ ມະຫາສັກຣາດ ຫຼື ວັນສັງຂານຂຶ້ນກົງກັບ ວັນພຸດ ເດືອນ 5 ຂຶ້ນ 11 ຄ່ຳ ປີ ເຖາະ

(ກັດເໝົ້າ). ມະຫາສັກຣາດ ຕັ້ງຂຶ້ນເມື່ອ ພຸດທະສັກຣາດ -ພ.ສ.- ໄດ້ 622 ປີ.

1- ຕຳນານລາວ ກ່າວວ່າ ປີເຖາະ ກົງກັບ ພ.ສ. 623;

2- ຕຳນານຂະເໝນ ກ່າວວ່າ ປີເຖາະ ກົງກັບ ພ.ສ 622;

3- ປະຕິທິນໂຫຣາສາດ ຂອງຫຼວງອັດຖະອາທິທັມມະປະວັດ (ວິຊຽນ ຈັນທອມ) ກ່າວວ່າ: ມະຫາສັກຣາດ -ມ.ສ.- ນັບ 1 ແຕ່ປີພະເຈົ້າ ສາລີວາຫນະຣາດສາກຍະວົງ ທີ່ງມີມະຫາໄຊຕໍ່ຣາຊສັດຕູ ໃນ ປີເຖາະ ພ.ສ 622, ກາລີຍຸກສັກຣາດ - ກ.ລ.ຍ. ໄດ້ 3179 ປີ.

4- ພົງສາວະດານໂຍນົກຂອງ ພະຍາ ປະຊາກິຈກອນຈັກ (ແຊ່ມ ບຸນນາກ) ກ່າວວ່າ: ລຸພຸດທະສັກຣາດ 621 ວັດສາ "ມີພະຣາຊາສາກຍະຣາດ ອົງນຶ່ງ ທີ່ງນາມ ສາລີວາຫນະລາດ ຜາບແພ້ປະເທດອິນເດັຽຝ່າຍໃຕ້ ຈຶ່ງຕັ້ງ ສັກຣາດໃໝ່ ຮຽກວ່າ ສັກກະສະລິຫນະສຳວັດ ບ້າງ ສັກກະສຳວັດ ບ້າງ ສັກຣາດນີ້ແມ່ນ ມະຫາສັກຣາດ ຕັ້ງຂຶ້ນເມື່ອ ສົງການແຫ່ງ ປີກາລີຍຸກໄດ້ 3180, ຄຣິຕສັກຣາດ -ຄ.ສ. - ໄດ້ 79 ປີ ແຕ່ໃຊ້ 78 ເປັນເກນລົບແລະບວກ."

ຄ- ຈຸລະສັກຣາດ:

1- F.G Faraut ກ່າວວ່າ ຈຸລະສັກຣາດ ໄດ້ຕັ້ງຂຶ້ນເມື່ອປີ ພ.ສ. 1181 ແລະ ພ.ສ. 561, ວັນສັງຂານ ຂຶ້ນກົງກັບ ວັນຈັນ ເດືອນ 5 ຂຶ້ນ 12 ຄ່ຳ ປີກຸນ (ກັດໄຄ້) ວັນທີ 22 ມີນາ ຄ.ສ. 639

2- ປະຕິທິນໂຫຣາສາດ ຂອງຫຼວງອັດຖະອາທິທັມມະປະວັດ (ວິຊຽນ ຈັນທອມ) ກ່າວວ່າ: ຈຸລະສັກຣາດ ພະເຈົ້າແຜ່ນດິນພະມ້າ ນາມວ່າ ສັງຄະຣາດ ບຸພະໂສທັນ ເຊິ່ງສຶກອອກຊົງເອົາ ຣາຊສົມບັດໄດ້ ໃນປະເທດພະມ້າ ເປັນຜູ້ຕັ້ງ ເມື່ອ ກາລີຍຸກ ໄດ້ 3739 ປີ ໜ້ອຍກວ່າມະຫາສັກຣາດ 560 ປີ.

3- ສະມຸດ ສະຫຍາມ ຂອງທ່ານ W.A Graham ກ່າວວ່າ: ເຣື່ອງການໃຊ້ ຈຸລະສັກຣາດ ພະເຈົ້າ ແຜ່ນດິນຂະເໝນແລະພະມ້າ ຕ່າງກໍອ້າງວ່າໄດ້ທົ່ງຄຶດຂຶ້ນ ພະເຈົ້າອະນຸຣາດຣ່ວງກໍວ່າຕົນທົ່ງຄຶດຂຶ້ນອີກ ບໍ່ມີຫຼັກຖານວ່າ ຈຸລະສັກຣາດ ໄດ້ໃຊ້ທົ່ວໄປໃນອິນເດັຽ ແຕ່ຕາມພົງສາວະດານພະມ້າ ແລະເຣື່ອງທີ່ເລົ່າກັນສືບຕໍ່ມາໃນເມືອງລາວ ຈຸລະສັກຣາດໄດ້ເລີ່ມໃຊ້ໃນເມືອງລາວກ່ອນໃນສໄໝມອນໄດ້ຄອບຄອງເມືອງລາວ ແລ້ວຈຶ່ງນຳໄປໃຊ້ໃນ ສຸໂຂໄທ ສະຫວັນຄະໂລກ ແລະ ຫຼາຍປີຕໍ່ ມາໃນທົ່ວສະຫຍາມ ເມື່ອ ພ.ສ. 2140.

4 - ພົງສາວະດານໂຍນົກຂອງ ພະຍາ ປະຊາກິຈກອນຈັກ (ແຊ່ມ ບຸນນາກ) ກ່າວວ່າ:

ກ-ຈຸລະສັກຣາດ ເປັນສັກຣາດໂຫຣາ ເຊິ່ງຕັດອອກມາຈາກ ປີກາລີຍຸກ ລ່ວງໄດ້ 2339 ແລ້ວ ເພື່ອໃຊ້ເປັນເກນສຳລັບລົບບວກ ຮຽກວ່າ ນະອະຕິສັນຕິ ສັກຣາດ ຕັ້ງຂຶ້ນໃນປະເທດພຸກາມ (ພະມ້າຊື່ເກົ່າ) ເມື່ອສັງຄະຣາດບຸພະໂສທັນປະຣິວັດຈາກເພດຊີ ອອກຊົງ ຣາຊສົມບັດ ເປັນກະສັດ ລຳດັບທີ 19 ໃນວົງສະມຸດຣິດທິ ພະພຸດທະສາສະນາການລ່ວງໄດ້ 1182 ວັດສາ ແຕ່ຫລຸດລົງປີນຶ່ງ ເປັນເກນ ກະທັນປາຍາ 1181 ສຳລັບລົບບວກ ຈຸລະສັກຣາດ.

ຂ - ຂຸນສຸດທີ ເຖິງແກ່ກັນ ຂຸນສຸກຂະຄອງເມືອງຕໍ່ຈົນເຖິງ ພ.ສ. 599 (ປີຈໍ) ໂຮມ 15 ຊົ່ວ ເຈົ້າເມືອງ ຕັ້ງແຕ່ ພ.ສ. 1110 ເຖິງ ພ.ສ. 1181 ຈຶ່ງເຖິງສະໄໝ ພະເຈົ້າກຣຸງພຸກາມ ທີ່ງນາມວ່າ ອະນຸຣຸທະທັມມິກຣາດ ຕັ້ງ ຈຸລະສັກຣາດ ຂຶ້ນໃໝ່ໃນປີກຸນ ວັນອາທິດ ເດືອນ 5 ແຮມ 13 ຄ່ຳ.

ຄ - ອະນຸຣຸທະທັມມິກຣາດ ລົບສັກຣາດອັນ ພະຍາ ຕີຣຈັກຊຸ ຕັ້ງໄວ້ ແຕ່ໃນຕຳນານຊຽງໃໝ່ ວ່າ ພະຍາ ພັນທຸມັດ ກຣຸງລັງກາ ຕັ້ງໄວ້ໄດ້ 560 ປີນັ້ນເສັຽ ຕັ້ງຈຸລະສັກຣາດ ໃນປີກົດໃຄ້ (ປີກຸນ) ຍາມຮຸ່ງແຈ້ງ ວັນຈັນ ເດືອນ 5 ຂຶ້ນ 2 ຄ່ຳ ເປັນກຳໜົດ. ເຈົ້າເພັຊຣາດ ເຫັນວ່າຜູ້ຕັ້ງ ຈຸລະສັກຣາດອາດຈະແມ່ນ ພະສັງຄະຣາດ ບຸພະໂສທັນ ຫຼື ຂຸນສຸກຂະ ຫຼາຍກວ່າທີ່ຈະເປັນພະອະຣຸນຣາດຣ່ວງ ແຫ່ງສຸໂຂໄທ ຫຼື ພະອະນຸຣຸທະທັມມິກຣາດ ແລະຈຸລະສັກກຣາດ ໄດ້ໃຊ້ໃນປະເທດພະມ້າກ່ອນ ແລ້ວປະເທດລາວ ແລະລຸນມາຈຶ່ງໃນສະຫຍາມ. ພະອົງທັມພິສູດຜົນຂອງການຄຳນວນ ໄດ້ບັນທຶກໄວ້ ຄື: ວາຣະ

1 ເປັນວັນອາທິດ; ດິຖີ 1 ເປັນວັນ ຂຶ້ນ 1 ຄ່ຳ; ມາສະເກນ 0 ເປັນເດືອນ 5; ທໍຣະຄູນ 1 ເປັນ ວັນທີ 1 ແຫ່ງ ຈຸລະສັກຣາດ ແລະ ວັນນີ້ກົງກັບວັນທີ 22 ມີນາ ຄ.ສ. 638. ເຈົ້າເພັຊຣາດ ທົງມີຄວາມເຫັນສຳຄັນວ່າ: "ວັນຖະເຫຼີງສົກແຫ່ງປີ ຈຸລະສັກຣາດ 0 ຕົກວັນຂຶ້ນ 1 ຄ່ຳ ແຫ່ງເດືອນ 5" ນັ້ນເຖິງວ່າຈະກົງກັບຜົນແຫ່ງການຄຳນວນເລກກໍ່ດີ ແຕ່ຜິດກັບຫຼັກ ຂອງຕຳຣາໂຫຣາສາດຊຶ່ງບັນຍັດໄວ້ວ່າ: "ວັນຖະເຫຼີງສົກຕົກຢູ່ແຕ່ລະຫວ່າງ ວັນຂຶ້ນ 6 ຄ່ຳ ເດືອນ 5 ກັບ ວັນຂຶ້ນ 5 ຄ່ຳ ເດືອນ 6 ເທົ່ານັ້ນ"

ສັກຣາດຕ່າງໆ ພົວພັນກັນຍັງບໍ່ຊັດເຈນ ແຕ່ສ່ວນມາກ ກໍຄົງຖືການພົວພັນດັ່ງຕໍ່ໄປນີ້:

ກ.ລ.ຍ.(ກາລີຍຸກສັກຣາດ) = ຈ.ສ. + 3739 = ຄ.ສ. + 3101 = ມ.ສ. + 3180 = ພ.ສ. + 2558

9 – ມູນແຫ່ງເກນຕ່າງໆ

ກ - ເກນ 292207 ເປັນເກນສຳຄັນ:

ຫຼັກກຳໜົດຂອບປີລາວ ກຳໜົດເອົາບ່ອນຂີດຂັ້ນຣາສີມີນ ແລຣາສີເມດ ເປັນຫຼັກຕັ້ງຕົ້ນຮອບແຫ່ງການເດີນຂອງພະອາທິດ ແລະເປັນຈຸດຕັ້ງຕົ້ນປີໃໝ່ນຳອີກ ເມື່ອພະອາທິດເດີນຈາກຂີດດັ່ງກ່າວກັບວຽນມາເຖິງຂີດນີ້ໃໝ່ເວລາໃດ ກໍຄົບບໍຣິບູນ ປີເວລານັ້ນແລ້ວ ກໍຕັ້ງຮອບໃໝ່ ຫຼືປີໃໝ່ຕໍ່ໄປ ປີລາວມີເວລາ 365 ວັນ 6 ຊ.ມ. 12 ນາທີ 36 ວິນາທີ.

ເມື່ອພະອາທິດໂຄຈອນໄດ້ 800 ຮອບ ຊຶ່ງເປັນເວລາ 292207 ວັນເຕັມພໍດີ.

ແຕ່ໃນການປະຕິບັດໂຫນບູຮານເຮົາຖືເອົາແຕ່ 290000 ວັນ ຄື 365ວັນ ຕໍ່ປີ ຊຶ່ງຮຽກວ່າປີປົກະຕິສຸຣະທິນ. ສ່ວນເສດ 207 ວັນ ຊຶ່ງແມ່ນຜົນຮ່ວມ 6 ຊົ່ວໂມງ 12 ນາທີ 36 ວິນາທີ ຕໍ່ປີ ພາຍໃນ 800 ປີ ເມື່ອຮວມສ່ວນເສດ 6 ຊົ່ວໂມງ 12 ນາທີ 36 ວິນາທີ ນີ້ຄົບເຕັມ 24 ຊົ່ວໂມງ (ຄື 1 ວັນ) ໃນປີໃດ ປີນັ້ນ ກໍຈະມີ 366 ວັນ ແລະຮຽກວ່າ ປີ ອະທິສຸຣະທິນ.

ດັ່ງນັ້ນ ພາຍໃນ 800 ປີ ຈະມີ:

207 ປີ ອະທິກະສຸຣະທິນ	:	207 x 366 = 75762
593 ປີ ປົກະຕິ ສຸຣະທິນ	:	593 x 365 = 216445
		292207

ຂ - ເກນ 373:

373 ຫານ 800 ໄດ້ 0,46625 ວັນ ຫຼື 40248 ວິນາທີ ຫຼື 11 ຊົ່ວໂມງ 11 ນາທີ 24 ວິນາທີ ເປັນລະຍະເວລາເຊິ່ງພະອາທິດລ່ວງກາຍຂີດຂັ້ນ ຣາສີມີນ ແລະ ຣາສີເມດໄປ ໃນຄາວຕັ້ງ ຈຸລະສັກຣາດ.

ຄ - ເກນ 1:

ຜົນສະແດງ ທໍຣະຄູນ ເປັນຈຳນວນມີເສດ ເມື່ອຕື່ມ 1 ໃສ່ຈຳນວນພາກສ່ວນເຕັມກໍໄດ້ ທໍຣະຄູນເປັນຈຳນວນ ເຕັມ ຊຶ່ງຫຼາຍກວ່າທໍຣະຄຸນຈິງ ແລະ ເວລາສັງຂານຂຶ້ນກໍຈະເລີຍ 0 ໂມງໄປ ດັ່ງນັ້ນຈຶ່ງມີຂໍ້ບັນຍັດວ່າ ເມື່ອຄຳນວນແລ້ວ ໃຫ້ພິຈາຣະນາເບິ່ງສຳຜຸດພະອາທິດຈຳເພາະວັນ ເຊິ່ງພະອາທິດມີຣາສີ 0 ແລະ ອົງສາ 1 ແລະໃຫ້ນັບແຕ່ 1 ນາລິກາແຫ່ງວັນໃໝ່ ໄປຈົນຊົ່ວໂມງ ນາທີ ແລະວິນາທີ ທີ່ຕາໄວ້ນັ້ນ ເຊິ່ງມັກ ຈະຕົກຢູ່ໃນວັນທີ່ມີຣາສີ 0 ແລະ ອົງສາ 2.

ງ - ກຳມັດຊະພົນ:

ໝາຍເຖິງ ເສດວັນ ເຊິ່ງເກີນກຳນົດວັນເຕັມແຫ່ງຈຳນວນທໍຣະຄຸນໄປ. ກຳມັດຊະພົນ ຫຼຸດລົງແຕ່ລະປີ 207

ຕົວສະເໜີ. ກັມມັດຊະພົນເປັນຫຼັກສຳຄັນ 3 ປະການ:

"ເປັນເກນບວກກັບສຸຣະທິນ ສຳຫຼັບຄຳນວນ ມັດທະຍົມ ແລະ ສຳພຸດ ພະອາທິດ,

"ເປັນຫຼັກກຳໜົດປີ ອະທິກະສຸຣະທິນ (366 ວັນ) ເມື່ອ ກຳມັດຊະພົນຖະເຫຼີງສົກຂອງປີນັ້ນໆ ບໍ່ເກີນ 207,

"ເປັນຫຼັກກຳນົດສັງຂານເນົາ 2 ວັນ ເມື່ອ ກຳມັດຊະພົນຖະເຫຼີງສົກຂອງປີນັ້ນໆ ມີຈຳນວນແຕ່ 688 ໄປ ເຖິງ 779,

(ໝາຍເຫດ ຖ້າລົບອອກ ຜົນຕິດລົບ ໃຫ້ເອົາ 800 ບວກກັບຜົນ)

ຈ- <u>ອະວະມານ:</u>

ໝາຍເຖິງ ຈຳນວນລິບດາ ແຫ່ງການເດີນຂອງພະຈັນ ໃນວັນທີ່ເຮົາຄຳນວນ (ອະວະມານຖະເຫຼີງສົກ = ຈຳນວນລິບດາຂອງພະຈັນ ໃນວັນຖະເຫຼີງສົກ) ເປັນເກນສຳຫຼັບຄຳນວນ ມັດທະຍົມ ແລະສຳພຸດພະຈັນ.

"ເກນ 11 - ເມື່ອເດີນຈາກຈຸດດຽວໄປພ້ອມກັນ ໃນໄລຍະ 1 ວັນ ພະຈັນ ເດີນໄວເລີຍພະອາທິດ 11:692 ວັນ (ຄືໃນເວລາ 692 ວັນ ພະຈັນເດີນໄວເກີນພະອາທິດໄປ 11 ວັນ)

"ເກນ 650:

650:11 ວັນ ຫຼື 59 ວັນ 2 ຊົ່ວໂມງ 10 ນາທີ 54 ວິນາທີ ເປັນລະຍະເວລາເຊິ່ງພະຈັນລ່ວງເລີຍຂີດຂັ້ນ ຣາສີມີນ ແລະຣາສີເມດ ໃນຄາວຕັ້ງຕົ້ນ ຈຸລະສັກຣາດ,

"ເກນ 692 - ເກນຕົວນີ້ເປັນຈຳນວນວັນເຕັມ ແຫ່ງຮອບໜຶ່ງຂອງ ອະວະມານ "ອະວະມານຂອງປີ ປົກກະຕິສຸຣະທິນເປັນຈຳນວນໜ້ອຍກວ່າ ອະວະມານແຫ່ງປີທີ່ລ່ວງໄປແລ້ວນັ້ນ 137 ຕົວ, "ອະວະມານ ຂອງປີ ອະທິກະສຸຣະທິນ ເປັນຈຳນວນໜ້ອຍກວ່າ ອະວະມານແຫ່ງປີທີ່ລ່ວງໄປແລ້ວນັ້ນ 126 ຕົວ.

"ປີ ປົກກະຕິສຸຣະທິນ ມີອະວະມານຖະເຫຼີງສົກ ແຕ່ 1 ຂຶ້ນໄປເຖິງ 137.

ປີ ອະທິສຸຣະທິນ ມີອະວະມານຖະເຫຼີງສົກ ແຕ່ 1 ຂຶ້ນໄປເຖິງ 126.

"ຖ້າເປັນປີ ປົກກະຕິສຸຣະທິນ ປີຈະມາເຖິງຈະມີ ອະວະມານ ສູງກວ່າ 555 ຕົວ ສະເໜີ.

"ຖ້າເປັນປີ ອະທິສຸຣະທິນ ປີຈະມາເຖິງຈະມີອະວະມານ ສູງກວ່າ 566 ຕົວ ສະເໜີ, (ໝາຍເຫດ ຖ້າລົບອອກຜົນຕິດລົບ ໃຫ້ເອົາ 692 ບວກກັບຜົນ)

ສ- <u>ມາສະເກນ</u> = ຈຳນວນເດືອນຈັນທຣະຄະຕິ ເຊິ່ງລ່ວງມາຕັ້ງແຕ່ວັນຕັ້ງຕົ້ນ ຈຸລະສັກຣາດຈົນເຖິງເດືອນທີ່ທຳອັດຕາຖະເຫຼີງສົກ "ມາສະເກນທະວີຈຳນວນຂຶ້ນ 12 ເດືອນທຸກໆປີທີ່ບໍ່ເປັນອະທິກະມາດ; "ມາສະເກນແຫ່ງປີ ອະທິກະມາດທະວຈຳນວນຂຶ້ນ 13 ເດືອນ ເປັນໄປໄດ້ 2 ຢ່າງຄື: "ຖ້າປີ ອະທິກະມາດໃດ ສັງຂານຕົກໃນເດືອນ 5 ແຕ່ແຮມ 10 ຄ່ຳ ຫາແຮມ 14 ຄ່ຳ (ດິຖີ ແຕ່ເປັນ 25 ເຖິງ 29) ມາສະເກນ ກໍທະວີຂຶ້ນ 13 ເດືອນ; "ຖ້າປີ ອະທິກະມາດໃດສັງຂານຕົກໃນ ເດືອນ 6 ແຕ່ຂຶ້ນ 1 ຄ່ຳ ຫາ 5 ຄ່ຳ (ດິຖີ ແຕ່ເປັນ 0 ເຖິງ 5) ມາສະເກນ ຈະທະວີຂຶ້ນພຽງແຕ່ 12 ເດືອນເໝືອນກັນກັບປີທຳມະດາ ແຕ່ວ່າ ປີທີ່ລ່ວງໄປແລ້ວ ເຊິ່ງບໍ່ເປັນ ອະທິກະມາດ ຊ້ຳມີ 13 ເດືອນ!

ຊ- <u>ດິຖີ</u> = ຈຳນວນວັນເຊິ່ງເຫຼືອຈາກເດືອນເຕັມແຫ່ງມາສະເກນ ທັງໝາຍວັນຂ້າງຂຶ້ນ ຫຼືຂ້າງແຮມແຫ່ງວັນຕັ້ງຕົ້ນປີໃໝ່ຕາມປະເພນີ ເມື່ອ ດິຖີ ຖະເຫຼີງສົກເປັນຈຳນວນແຕ່ 6 ຂຶ້ນໄປເຖິງ 29 ສັງຂານຂຶ້ນ ເດືອນ 5, ຄັນ ດິຖີ ຖະເຫຼີງສົກ ເປັນຈຳນວນແຕ່ 0 ຂຶ້ນໄປເຖິງ 5 ສັງຂານຂຶ້ນ ເດືອນ 6.

"ໝາຍເຫດ- ລາງປີ ດິຖີ ຖະເຫຼິງສົກ ຜິດຈາກລຳດັບວັນເຊິ່ງວາຣະຖະເຫຼິງ ສົກກຳນົດໄວ້ໄປ 1 ຄ່ຳ ເມື່ອ ດິຖີ ຖະເຫຼິງສົກ ບໍ່ຖືກກັບວາຣະຄັ້ງໃດ ຕຳຣາໂຫຣາສາດ ບັນຍັດໃຫ້ຖືເອົາວາຣະຖະເຫຼິງສົກ ເປັນຫຼັກສະເໝີ ແລະໃຫ້ຕື່ມ ດິຖີ ຖະເຫຼິງສົກ ຂຶ້ນ 1 ຄ່ຳ"

ຍ- <u>ອຸຈະພົນ</u> = ຈຸດແຫ່ງວິຖີທາງຂອງ ພະຈັນໃນຄາວທີ່ຢູ່ຫ່າງໄກສຸດຈາກ ພະອາທິດ (apogée) ໂຫຣາບູຣານເຮົາ ສັງເກດການເດີນຂອງ ພະຈັນ ຕາມການເຄື່ອນຍ້າຍຂອງ ອຸຈະພົນ ຄື 3232 ວັນ ຈຶ່ງວຽນຮອບ 12 ຣາສີ (ວິຖີທາງຂອງພະຈັນຮອບໜຶ່ງ 3232 ວັນຫຼື 8 ປີ 312 ວັນ) ອຸຈະພົນທະວີຈຳນວນຂຶ້ນທ່ຳກັບການທະວີຂຶ້ນຂອງ ຫໍຣະຄຸນ ທຸກໆປີເປັນປົກກະຕິສະເໝີ ຄືທະວີຂຶ້ນ 365 ຫຼື 366 ວັນ (ໝາຍເຫດ ຖ້າລົບອອກ ຜົນຕິດລົບ ໃຫ້ເອົາ 3232 ບວກກັບຜົນ)

ດ- <u>ວາຣະ</u> ຖະເຫຼິງສົກ ເປັນວັນແຫ່ງສັບປະດາທີ່ສັງຂານຈະຖະເຫຼິງສົກ.

ວາຣະອັດຕາ = 0 ເປັນ ວັນເສົາ

ວາຣະອັດຕາ = 1 ເປັນ ວັນອາທິດ

ວາຣະອັດຕາ = 2 ເປັນ ວັນຈັນ

ວາຣະອັດຕາ = 3 ເປັນ ວັນອັງຄານຣ

ວາຣະອັດຕາ = 4 ເປັນ ວັນພຸດ

ວາຣະອັດຕາ = 5 ເປັນ ວັນພະຫັດ

ວາຣະອັດຕາ = 6 ເປັນ ວັນສຸກ

ໝາຍເຫດສຳຄັນ:

1. ປີອະທິກະມາດທີ່ສາມາດໄປຕົກໃນເດືອນ 5 ແຮມ 9 ຄ່ຳ (ດິຖີ 24) ຫຼືເດືອນ 6 ຂຶ້ນ 6 ຄ່ຳ (ດິຖີ 6) ອີກໃນກໍລະນີ ຊຶ່ງມີ 2 ປີລຽນຕິດກັນ ໂດຍດິຖີເປັນ 24 ແລະ 6 ລຽນຕິດກັນ. ການຈຳແນກປີໃດໃນຊຸມຄູ່ປີດັ່ງກ່າວ ຈະເປັນອະທິກະມາດ ເປັນການຍາກສົມຄວນ.

2. ການຄູນສັງຂານ ບໍ່ແມ່ນການເຮັດປະຕິທິນ ຄູນສັງຂານ ອາດວ່າໄດ້ພຽງແຕ່ການຊອກຫາວັນເວລາຖະເຫຼິງສົກຂອງປີໃດປີໜຶ່ງເທົ່ານັ້ນ - ສ່ວນປະຕິທິນຂອງປີໃດໜຶ່ງນັ້ນ ຈະເຮັດຂຶ້ນໄດ້ ກໍຕ້ອງສວຍໃຊ້ອັດຕາຕ່າງໆທີ່ການຄູນສັງຂານຄຳນວນມາໄດ້ເປັນຕົ້ນຕໍ ສົມທົບກັບການວິໄຈອັດຕາເຫຼົ່ານັ້ນ ໃຫ້ຖືກ້ອນສອດຄ່ອງກັບຕົວຈິງ ແລະການຄຳນວນມັດທະຍົມ ແລະສັນຜຸດພະອາທິດ ພ້ອມທັງການທວາຍມະຫາສັງຂານ ແລະອື່ນໆອີກດ້ວຍ.

ແຜນຫລັກ ປີ ຫລື ມື້ ບູຮານ

ແມ່ປີ	ກາບ	ຮັບ	ຮວາຍ	ເມີງ	ເປີກ	ກັດ	ກົດ	ຮ້ວງ	ເຕົາ	ກາ
ລູກປີ	ໃຈ້	ເປົ້າ	ຍີ	ເໝົ້າ	ສີ	ໃສ້	ສະງ້າ	ມົດ	ສັນ	ເຮົ້າ
ລູກປີ	ເສັດ	ໃຄ້	ໃຈ້	ເປົ້າ	ຍີ	ເໝົ້າ	ສີ	ໃສ້	ສະງ້າ	ມົດ
ລູກປີ	ສັນ	ເຮົ້າ	ເສັດ	ໃຄ້	ໃຈ້	ເປົ້າ	ຍີ	ເໝົ້າ	ສີ	ໃສ້
ລູກປີ	ສະງ້າ	ມົດ	ສັນ	ເຮົ້າ	ເສັດ	ໃຄ້	ໃຈ້	ເປົ້າ	ຍີ	ເໝົ້າ
ລູກປີ	ສີ	ໃສ້	ສະງ້າ	ມົດ	ສັນ	ເຮົ້າ	ເສັດ	ໃຄ້	ໃຈ້	ເປົ້າ
ລູກປີ	ຍີ	ເໝົ້າ	ສີ	ໃສ້	ສະງ້າ	ມົດ	ສັນ	ເຮົ້າ	ເສັດ	ໃຄ້

ຈຳນວນ ສຸຣະທິນ ແທນດ້ວຍ ສ ລະຫວ່າງວັນຖະເຫຼີງສົກຂອງປີນຶ່ງ ຫາວັນຖະເຫຼີງສົກຂອງປີທີ່ຈະມາເຖິງ

ປີ ກ		ປີ ຂ		ກ ປີທີ່ເຮົາຄຳນວນ; ຂ ປີທີ່ຈະມາເຖິງ	ໝາຍເຫດ
ດິຖີ	ເດືອນ	ດິຖີ	ເດືອນ	ສູດ	ຈຳນວນ ສຸຣະທິນ
ພ	5	ຜ	5	ສ1 = 354 + ຜ -ພ	ໃຫ້ສົມໃສ່ ສ1, ສ2, ສ4
ພ	5	ຜ	6	ສ2 = 354 + 29 + ຜ -ພ	1 ຖ້າ ກ ເປັນປີອະທິກະວານ
ພ	6	ຜ	5	ສ3 = 354 - 29 + ຜ -ພ	30 ຖ້າ ກ ເປັນປີອະທິກະມາດ

ຕົວຢ່າງ ຈຳນວນວັນຂອງປີ ຈສ 1312 (ໂຫຣາສາລາວ - ໜ້າ 70)

ປີ ກ = 1312		ປີ ຂ = 1313	
ດິຖີ ພ	ເດືອນ	ດິຖີ ຜ	ເດືອນ
28	5	10	5
ສ 1 = 35H + ຜ - ພ			

ເຮົາຕ້ອງນຳໃຊ້ສູດ ສ 1 ທີ່ກ່ຽວກັບເດືອນ 5 ແລະ 5

ສ1 = 354 + 10 -28 = 336

ກ ເປັນປີອະທິກະມາດ ເນື່ອງວ່າ ດິຖີ ຫຼາຍກວ່າ 25 ແລະເປັນປີອະທິສຸຣະທິນນຳ ເພາະກຳມັດຊະພົນໜ້ອຍກວ່າ 207; ດັ່ງນັ້ນ: ສ 1 = 336 + 30 = 366 ວັນ ຖືກຕ້ອງດີກັບຜົນໃນຕາລາງ.

3 - ດິຖີ ແຕ່ 1 ຫາ 15 ໃຫ້ຖືເປັນມື້ເດືອນຂຶ້ນ 1 ຫາ 15 ໃຫ້ຖືເປັນມື້ເດືອນຂຶ້ນ 1 ຫາ 15 ຄ່ຳ; ດິຖີແຕ່ 16 ຫາ 29 ໃຫ້ຖືເປັນມື້ເດືອນແຮມ ໂດຍເອົາ 15 ລົບອອກ ເຊັ່ນ ດິຖີ 16 ແມ່ນ 16-15 = 1 ເປັນແຮມ 1 ຄ່ຳ; ດິຖີ 23 ແມ່ນ 23 - 15 = 8 ເປັນແຮມ 8 ຄ່ຳ.

4 - ຖ້າຈະທຳອັດຕາຖະເຫຼີງສົກກ່ຽວກັບປີໃດນຶ່ງ ຄວນເຮັດສຳລັບ 2 ປີ ທີ່ຜ່ານມາ ແລະ 2 ປີ ທີ່ຈະມາເຖິງອີກ ເພື່ອເປັນການສະດວກໃນການວິໄຈ.

5 - ການທຳອັດຕາຖະເຫຼີງສົກໃນຫຼັກການ ເຮົາຖື ປ ແທນ ປີ ຈ.ສ. ທີ່ເຮົາຈະທຳອັດຕາຖະເຫຼີງສົກ ຜ ແທນຜົນຫານ; ສ ເສດຫານ.

ກ. ຫໍຣະຄຸນ ອັດຕາ =

(292207 X ປ + 373):800 = ຜ1; ສ 1

ຫ = ຫໍຣະຄູນ = ຜ1 + 1

ຂ. ກຳມັດຊະພົນ ອັດຕາ =

ກ = ກຳມັດຊະພົນ = 800 - ສ1

ຄ. ອະວະມານ ອັດຕາ:

(ຫ X 11 + 650) : 692 = ຜ2; ສ2

ອ = ອະວະມານ = ສ2

ງ. ມາສະເກນ ອັດຕາ:

(ຫ + ຜ2): 30 = ຜ3 ; ສ3

ມ = ມາສະເກນ = ຜ3

ຈ.ດິຖີ ອັດຕາ: ດ = ດິຖີ = ສ3

ສ. ອຸດຈະພົນ ອັດຕາ :

(ຫ - 621) : 3232 = ຜ4; ສ4

ຈ = ອຸດຈະພົນ = ສ4

ຊ. ວາຣະ ອັດຕາ

ຫ:7 = ຜ5; ສ5

ວ : ວາຣະ = ສ5

ແຜນປີບູຮານ ສໍາລັບ ຈຸລະສັກຣາດ

ເສດ	0	1	2	3	4	5	6	7	8	9
ແມ່ປີ	ເປີກ	ກັດ	ກົດ	ຮ້ວງ	ເຕົ່າ	ກາ	ກາບ	ຮັບ	ຮວາຍ	ເມີງ
ລູກປີ	ເສັດ	ໃຄ້	ໃຈ້	ເປົ້າ	ຍີ່	ເໝົ້າ	ສີ	ໃສ້	ສະງ້າ	ມົດ
ເສດ	10	11	12	13	14	15	16	17	18	19
ແມ່ປີ	ເປີກ	ກັດ	ກົດ	ຮ້ວງ	ເຕົ່າ	ກາ	ກາບ	ຮັບ	ຮວາຍ	ເມີງ
ລູກປີ	ສັນ	ເຮົ້າ	ເສັດ	ໃຄ້	ໃຈ້	ເປົ້າ	ຍີ່	ເໝົ້າ	ສີ	ໃສ້
ເສດ	20	21	22	23	24	25	26	27	28	29
ແມ່ປີ	ເປີກ	ກັດ	ກົດ	ຮ້ວງ	ເຕົ່າ	ກາ	ກາບ	ຮັບ	ຮວາຍ	ເມີງ
ລູກປີ	ສະງ້າ	ມົດ	ສັນ	ເຮົ້າ	ເສັດ	ໃຄ້	ໃຈ້	ເປົ້າ	ຍີ່	ເໝົ້າ
ເສດ	30	31	32	33	34	35	36	37	38	39
ແມ່ປີ	ເປີກ	ກັດ	ກົດ	ຮ້ວງ	ເຕົ່າ	ກາ	ກາບ	ຮັບ	ຮວາຍ	ເມີງ
ລູກປີ	ສີ	ໃສ້	ສະງ້າ	ມົດ	ສັນ	ເຮົ້າ	ເສັດ	ໃຄ້	ໃຈ້	ເປົ້າ
ເສດ	40	41	42	43	44	45	46	47	48	49
ແມ່ປີ	ເປີກ	ກັດ	ກົດ	ຮ້ວງ	ເຕົ່າ	ກາ	ກາບ	ຮັບ	ຮວາຍ	ເມີງ
ລູກປີ	ຍີ່	ເໝົ້າ	ສີ	ໃສ້	ສະງ້າ	ມົດ	ສັນ	ເຮົ້າ	ເສັດ	ໃຄ້
ເສດ	50	51	52	53	54	55	56	57	58	59
ແມ່ປີ	ເປີກ	ກັດ	ກົດ	ຮ້ວງ	ເຕົ່າ	ກາ	ກາບ	ຮັບ	ຮວາຍ	ເມີງ
ລູກປີ	ໃຈ້	ເປົ້າ	ຍີ່	ເໝົ້າ	ສີ	ໃສ້	ສະງ້າ	ມົດ	ສັນ	ເຮົ້າ

24/VII
ຫ້າມຄ້າຂາຍ

ຕົວຢ່າງ ຊອກຫາຊື່ປີບູຮານຂອງປີ ຈສ 1372 (ຄສ 2010)

ຕັ້ງ 1372 ຫານ 60 ໄດ້ຮັບ 22 ຖິ້ມເສຍ ເສດເປັນ 52 ແຖວຕັ້ງເສດຂອງຕາລາງ ບອກແມ່ປີ:ກົດ ແລະລູກປີ:ຍີ່.

ດັ່ງນີ້ ປີ ຈສ 1372 ມີຊື່ບູຮານວ່າ ກົດຍີ່. ຖ້າປີຢູ່ໃນສັກຣາດອື່ນ ກໍຕ້ອງປ່ຽນມາເປັນປີໃນຈຸລະສັກຣາດ

(ຈສ = ພສ-1811 = ມສ - 559 = ຄສ-638)

ແຜນມື້ບູຮານ ສຳລັບ ຈຸລະສັກຣາດ

ເສດ	0	1	2	3	4	5	6	7	8	9
ແມ່ປີ	ກົດ	ຮ້ວງ	ເຕົາ	ກາ	ດາບ	ຮັບ	ຮວາຍ	ເມີງ	ເປີກ	ກັດ
ລູກປີ	ສີ	ໃສ້	ສະງ້າ	ມົດ	ສັນ	ເຮົ້າ	ເສັດ	ໃຄ້	ໃຈ້	ເປົ້າ
ເສດ	10	11	12	13	14	15	16	17	18	19
ແມ່ປີ	ກົດ	ຮ້ວງ	ເຕົາ	ກາ	ດາບ	ຮັບ	ຮວາຍ	ເມີງ	ເປີກ	ກັດ
ລູກປີ	ຍີ	ເໝົ້າ	ສີ	ໃສ້	ສະງ້າ	ມົດ	ສັນ	ເຮົ້າ	ເສັດ	ໃຄ້
ເສດ	20	21	22	23	24	25	26	27	28	29
ແມ່ປີ	ກົດ	ຮ້ວງ	ເຕົາ	ກາ	ດາບ	ຮັບ	ຮວາຍ	ເມີງ	ເປີກ	ກັດ
ລູກປີ	ໃຈ້	ເປົ້າ	ຍີ	ເໝົ້າ	ສີ	ໃສ້	ສະງ້າ	ມົດ	ສັນ	ເຮົ້າ
ເສດ	30	31	32	33	34	35	36	37	38	39
ແມ່ປີ	ກົດ	ຮ້ວງ	ເຕົາ	ກາ	ດາບ	ຮັບ	ຮວາຍ	ເມີງ	ເປີກ	ກັດ
ລູກປີ	ເສັດ	ໃຄ້	ໃຈ້	ເປົ້າ	ຍີ	ເໝົ້າ	ສີ	ໃສ້	ສະງ້າ	ມົດ
ເສດ	40	41	42	43	44	45	46	47	48	49
ແມ່ປີ	ກົດ	ຮ້ວງ	ເຕົາ	ກາ	ດາບ	ຮັບ	ຮວາຍ	ເມີງ	ເປີກ	ກັດ
ລູກປີ	ສັນ	ເຮົ້າ	ເສັດ	ໃຄ້	ໃຈ້	ເປົ້າ	ຍີ	ເໝົ້າ	ສີ	ໃສ້
ເສດ	50	51	52	53	54	55	56	57	58	59
ແມ່ປີ	ກົດ	ຮ້ວງ	ເຕົາ	ກາ	ດາບ	ຮັບ	ຮວາຍ	ເມີງ	ເປີກ	ກັດ
ລູກປີ	ສະງ້າ	ມົດ	ສັນ	ເຮົ້າ	ເສັດ	ໃຄ້	ໃຈ້	ເປົ້າ	ຍີ	ເໝົ້າ

ຢາກຮູ້ຊື່ບູຮານຂອງວັນໃດນຶ່ງ ເຮົາກໍຫານຈຳນວນແຫ່ງວັນນັ້ນ ໃຫ້ 60, ຈຶ່ເອົາແຕ່ເສດ ຊຶ່ງກົງກັບເລກຊື່ມື້ໂລດ. ຕົວຢ່າງ ປີ ຈສ 1372 (ຄສ 2010) ວັນຖະເຫຼີງສົກແມ່ນວັນສຸກ ຂຶ້ນ 3 ຄ່ຳ ເດືອນ 6 ຊຶ່ງຈຳນວນນີ້ແມ່ນອນ ເທົ່າກັບ ຫໍຣະຄຸນ ຄື 501136. ຫານມັນໃຫ້ 60 ຮັບເທົ່າໃດ ຖິ້ມເສຍ, ເສດ ເປັນ 16 ຈຶ່ງອ່ານຕາລາງ 16 ໄດ້ ແມ່ມື້: ຮວາຍ ແລະລູກມື້: ສັນ ດັ່ງນີ້ ວັນຖະເຫຼີງສົກປີ ຈສ 1372 ມີຊື່ບູຮານວ່າຮວາຍສັນ. ເຮົາສາມາດຮູ້ຊື່ວັນອື່ນໆແບບບູຮານ ເມື່ອເຮົາຮູ້ຈຳນວນວັນແຕ່ເລີ່ມຕົ້ນ ຈ.ສ. ມາຈົນເຖິງວັນດັ່ງກ່າວ. ເພື່ອສະດວກໃນການຄິດໄລ່ຫາຈຳນວນວັນ ເຮົາອາດອີງໃສ່ຫໍຣະຄຸນຂອງວັນສັງຂານຂອງປີທີ່ກ່ຽວຂ້ອງ ເປັນທີ່ຕັ້ງ.

ອັດຕາຖະເຫຼີງສົກ

ປີ ພສ	ປີ ຄສ	ປີ ຈສ	ແມ່ປີ	ລູກປີ	ຫໍຣະຄູນ	ກຳມັດຊະພົນ	ອະວະມານ	ມາສະເກນ	ດິຖີ	ດິຖີແກ້	ອຸດຈະພົນ	ວາຣະ	ຊື່ວັນຖະເຫຼີງສົກບູຮານ	
1181	*638*	*0*	ເປີກ	ເສັດ	*1*	*427*	*661*	*0*	*1*	*2*	*2612*	*1*	*ຮ້ວງ*	*ໃສ້*
1182	639	1	ກັດ	ໃຄ້	366	220	524	12	12	12	2977	2	ຮວາຍ	ເສັດ
1183	640	2	ກົດ	ໃຈ້	731	13	387	24	23	23	110	3	ຮ້ວງ	ເໝົ້າ
1184	641	3	ຮ້ວງ	ເປົ້າ	1097	606	261	37	5	5	476	5	ເມິງ	ເຮົ້າ
1185	642	4	ເຕົ່າ	ຍີ່	1462	399	124	49	16	16	841	6	ເຕົ່າ	ຍີ່
1186	643	5	ກາ	ເໝົ້າ	1827	192	679	61	26	26	1206	0	ເມິງ	ມົດ
1187	644	6	ກາບ	ສີ	2193	785	553	74	8	8	1572	2	ກາ	ເປົ້າ
1188	645	7	ຮັບ	ໃສ້	2558	578	416	86	19	19	1937	3	ເປີກ	ສະງ້າ
1189	646	8	ຮວາຍ	ສະງ້າ	2923	371	279	99	0	1	2302	4	ກາ	ໃຄ້
1190	647	9	ເມິງ	ມົດ	3288	164	142	111	11	11	2667	5	ເປີກ	ສີ
1191	648	10	ເປີກ	ສັນ	3654	757	16	123	23	23	3033	0	ກາບ	ເສັດ
1192	649	11	ກັດ	ເຮົ້າ	4019	550	571	136	3	4	166	1	ກັດ	ເໝົ້າ
1193	650	12	ກົດ	ເສັດ	4384	343	434	148	14	14	531	2	ກາບ	ສັນ
1194	651	13	ຮ້ວງ	ໃຄ້	4749	136	297	160	25	25	896	3	ກັດ	ເປົ້າ
1195	652	14	ເຕົ່າ	ໃຈ້	5115	729	171	173	7	7	1262	5	ຮັບ	ມົດ
1196	653	15	ກາ	ເປົ້າ	5480	522	34	185	18	18	1627	6	ກົດ	ໃຈ້
1197	654	16	ກາບ	ຍີ່	5845	315	589	197	28	28	1992	0	ຮັບ	ໃສ້
1198	655	17	ຮັບ	ເໝົ້າ	6210	108	452	210	9	9	2357	1	ກົດ	ເສັດ
1199	656	18	ຮວາຍ	ສີ	6576	701	326	222	21	21	2723	3	ຮວາຍ	ສີ
1200	657	19	ເມິງ	ໃສ້	6941	494	189	235	2	3	3088	4	ຮ້ວງ	ເຮົ້າ
1201	658	20	ເປີກ	ສະງ້າ	7306	287	52	247	13	13	221	5	ຮວາຍ	ຍີ່
1202	659	21	ກັດ	ມົດ	7671	80	607	259	23	23	586	6	ຮ້ວງ	ມົດ
